ຄວາມເປັນມາຂອງລາວ

ຫລື

ເລົ່າເຣື່ອງຊາດລາວ

ໂດຍ

ທ້າວອູ່ຄຳ ພົມວົງສາ

ພິມເທື່ອທີ ໖ ຈຳນວນ ໑,໐໐໐ ສະບັບ

ຈັດພິມໂດຍ
ອັຖນິບາລີຊ່ວຍວ່າການກະຊວງການຄັງເຫ່ງພະຣາຊອານາຈັກລາວ
ສງວນລິຂສິທຕາມກິດໝາຍ

ຄຳນຳ ໃນການຈັດຖ່າຍສຳເນົາ

* ໜັງສື ຄວາມເປັນມາຂອງລາວ ຫລື ເລົ່າເຣື່ອງຊາດລາວ ຂອງ ທ້າວອູຄຳ ພົມວົງສາ ຫົວນີ້ ເປັນໜັງສື ປວັດສາດລາວ ຊຶ່ງ ບອກເຖິງ ຄວາມເປັນມາແລະຖິ່ນກຳເນີດຂອງລາວ ນັບຕັ້ງແຕ່ຈຸດ ເລີ່ມຕົ້ນ ແຖບພູເຂົາ ອັນໄຕ ມົງໂກເລັຍ ແລະ ການອົພຍົບເຄື່ອນ ຍ້າຍລົງມາທາງຕອນໃຕ້ຂອງທະວີບອາຊີເລື້ອຍໆ ຈົນເຂົ້າສູ່ດິນແດນ ອັນທີ່ເອີ້ນວ່າ ສຸວັນນະພູມປະເທດ ຄື ປະເທດລາວ...ໃນປັດຈຸບັນ.

* ເຫັນວ່າ ເປັນໜັງສືສາຣະຄະດີທາງປວັດສາດ ອັນມີຄຸນຄ່າ ຄວນແກ່ການສຶກສາຄົ້ນຄວ້າຫາຄວາມຮູ້ ຄວາມເຂົ້າໃຈໄດ້ເປັນຢ່າງ ດີ ຈຶ່ງໄດ້ຈັດຖ່າຍສຳເນົາອອກໄວ້ ໂດຍບໍ່ມີການປ່ຽນແປງແກ້ໄຂໃດໆ ທັງສິ້ນ ເພື່ອເປັນການຮັກສາ ວັນນະກັມຊິ້ນນີ້ໄວ້ ບໍ່ໃຫ້ສູນຫາຍ ແລະ ຈະໄດ້ເປັນມໍຣະດົກ ແກ່ກຸລບຸດ ອະນຸຊົນລູກຫລານຕາມພາຍຫລັງ.

* ຫວັງວ່າ ທ່ານທີ່ໃຊ້ໜັງສືຫົວນີ້ ຄົງຈະໄດ້ຮັບປໂຍດ ແລະຄວາມ ຮູ້ໄດ້ດີພໍສົມຄວນ.

<u>ຖ່າຍສຳເນົາ ໂດຍ</u>

ວິລຽມ ພຣະໄຊຍະວົງ

ຊິດນີ ວັນທີ 14 ເມສາ 2533

ຄຳອຸທິສ

ຂ້າພະເຈົ້າຂໍອຸທິສ ສ່ວນທີ່ເປັນບຸນກຸສົນ ໃນການຮວບຮວມ "ໜັງສືຄວາມເປັນມາຂອງລາວ ຫລື ເລົ່າເຣື່ອງຊາດລາວ" ນີ້ ແກ່ພໍ່ແມ່ຜູ້ບັງເກີດເກົ້າຂອງຂ້າພະເຈົ້າ ແລະແກ່ວິນຍານຂອງພີ່ນ້ອງຮ່ວມຊາດ ທີ່ໄດ້ສູນເສັຽຊີວິດ ໃນການກອບກູ້ເອກະຣາຊຂອງລາວ ທຸກປາງທຸກ ສໄໝໂດຍທົ່ວກັນເທີ້ນ.

– ຜູ້ຮວບຮວມ –

ລາວລຳລຶກ

ບູລົມຣາຊາເຈົ້າ ໂຄຕໝູ່ລາວເຮົາ
ຟ້າງຶ່ມລືເລີສຫລ້າ ໂຮມລາວໃຫ້ເປັນເອກ
ໄຊເຊດຖາທິຣາຊ ປົກເປົ້າປ້ອງລາວໄວ້
ຈັ່ງບໍ່ສູນ
ສຸຣິຍະວົງສາ ພາໄພ່ສ້າງເມືອງລາວ
ວິໄລຍິ່ງ
ລາວປັດຈຸບັນ ໃຫ້ຊ່ວຍກັນກູ້
ລາວນັ້ນຈັ່ງສິເຮືອງ ແທ້ດາຍ.

ຄຳຂອງຜູ້ຈັດພິມເທື່ອທີ່ ໒

ທ້າວອູ່ຄຳ ພົມວົງສາ ຜູ່ແຕ່ງໜັງສືຄວາມເປັນມາ ຂອງ ລາວ ຫລື ເລົ່າເຣື່ອງຊາດລາວ ໄດ້ມາປຶກສາຂ້າພະເຈົ້າ ໃນ ເຣື່ອງ ການ ຈັດ ພິມໜັງສື ຄວາມ ເປັນ ມາຂອງລາວອອກແຜ່ພາຍ ແລະໄດ້ແຈ້ງວັດຖຸປະສົງໃຫ້ກະຊວງການຄັງຈັດພິມເພື່ອເປັນອະນຸສອນທີ່ຣະລຶກ ໃນການຈັດຕັ້ງຣັຖບາລປະສົມແຫ່ງຊາດ ແຕ່ທາງກະຊວງການຄັງ ບໍ່ມີເງິນ ງົບປະມານພໍ ທີ່ຈະພິມ ແຈກຢາຍ ຕາມຄວາມປະສົງຂອງຜູ້ແຕ່ງໄດ້.

ຂ້າພະເຈົ້າ ໄດ້ອ່ານໜັງສື ຄວາມເປັນມາຂອງລາວທີ່ໄດ້ຈັດພິມເທື່ອຕຳອິດແລ້ວ ໄດ້ເຫັນຄວາມສຳຄັນໃນການທີ່ຈະໃຫ້ໜັງສືນີ້ໄດ້ແຜ່ຫລາຍ ເພື່ອເປັນໜັງສືອ່ານໃນການສຶກສາ ປະວັຕສາດ ຄວາມເປັນມາ ຂອງ ຊາດລາວແກ່ປະຊາຊົນ ເພາະວ່າການຮຽນຮູ້ປະວັດສາດສອນໃຫ້ເກີດຄວາມຮັກຊາດ, ເສັຽສລະເພື່ອຊາດ ແລະເພື່ອເປັນການສົ່ງເສີມ ວັນນະກັມ ຂອງຊາດໃຫ້ ແຜ່ຫລາຍ ອີກດ້ວຍຂ້າພະເຈົ້າ ຈຶ່ງໄດ້ຮັບເປັນ ຜູ້ອຸປກາຣະ ຈັດພິມໜັງສືນີ້ຂຶ້ນ

ແຜ່ພາຍ ເປັນ ເທື່ອ ທີ ສອງ ຮ່ວມ ກັບ ທ່ານ ອິນແປງ ສຸຣິຍະໄທ ອະດີດຣັຖມົນຕີວ່າການກະຊວງການຄັງ ຊຶ່ງ ເປັນຜູ່ຈັດພິມເທື່ອທີໜຶ່ງມາແລ້ວນັ້ນ.

(ພວງເພັຊ ພັນນະເຣສ)

ຄໍາຂອງຜູ່ແຕ່ງ

ໃນການຈັດພິມເທື່ອທີ່ສອງ ຂ້າພະເຈົ້າໄດ້ແກ້ໄຂພາກໜຶ່ງ ວ່າດ້ວຍລາວປາງສມັຍເດີກດໍາບັນໃຫ້ພິສດານກວ້າງຂວາງຂຶ້ນ ແລະໄດ້ນໍາເອົາພາກທີ່ໜຶ່ງເກົ່ານັ້ນ ໄປພິມໄວ້ຕໍ່ທ້າຍເປັນພາກທີແປດ ທັງນີ້ເພື່ອຈະໄດ້ຮູ້ວ່າ ໃນການພິມເທື່ອທີ່ສອງນີ້ໄດ້ແກ້ໄຂຂຶ້ນກວ່າເກົ່າພຽງໃດ.

ການຈັດພິມເທື່ອນີ້ ຂ້າພະເຈົ້າໄດ້ຮັບຄວາມອຸປກາຣະຈາກ ພຣະທ່ານພວງເພັຊ ພັນນະເຣສ ຣັຖມົນຕີຊ່ວຍວ່າການກະຊວງການຄັງ ຂອງຣັຖບານປະສົມແຫ່ງຊາດ ແລະ ພຣະທ່ານ ອິນແປງ ສຸຣິຍະໄທ ອະດີດຣັຖມົນຕີວ່າການກະຊວງການຄັງ ໜັງສືນີ້ຈຶ່ງສໍາເຣັດເປັນເຫລັ້ມດັ່ງທີ່ທ່ານຜູ້ອ່ານທັງຫລາຍໄດ້ເຫັນຢູ່ໃນບັດນີ້ ຈຶ່ງຂໍຂອບພຣະຄຸນພຣະທ່ານພວງເພັຊ ພັນນະເຣສ ແລະພຣະທ່ານອິນແປງສຸຣິຍະໄທ ໄວ້ນະທີ່ນີ້ດ້ວຍ.

(ທ້າວອູ່ຄໍາ ພົມວົງສາ)

ສໍານັກງານໜັງສືພິມຍຸວະຊົນກິລາ ນະຄອນວຽງຈັນ

ປະເທດລາວ

ວັນທີ່ ໑໕ ເມສາ ໒໕໐໓

ຣາຊອານາຈັກລາວ ວຽງຈັນທນ໌, ວັນທີ ໑໔ ມິຖຸນາ

ພ.ສ. ๒๕๐๐

ກອງວັນຄະດີ ປະທານກັມມະການກອງວັນຄະດີ

ຮຽນທ່ານອະທິບໍດີກົມຖແລງຂ່າວ

ເລກທີ ໔ປີ/ເຊແອລ ແລະໂຄສະນາການ

ທີ່ວຽງຈັນທນ໌

ໜັງສືຂອງທ່ານເລກທີ ໑໗໗/ກ.ຂ.ຄ. ລົງວັນທີ ໑໖ ຊວງ ໑໙໕໗ ກ່ຽວເຣື່ອງສົ່ງບົດຄວາມປວັດສາດລາວ ໄປໃຫ້ຂ້າພະເຈົ້າ ກວດສອບນັ້ນ ຂ້າພະເຈົ້າໄດ້ກວດສອບເບິ່ງແລ້ວ ເຫັນວ່າບົດຄວາມເຣື່ອງນີ້ມີປະໂຍດມາກ ເພາະເປັນເຣື່ອງກ່ຽວແກ່ປວັດສາດ ລາວເຮົາ ໂດຍແທ້ ເຖິງວ່າຈະເປັນເຣື່ອງສັ້ນໆ ເຊິ່ງຜູ້ຄົ້ນຄວ້າບໍ່ໄດ້ອະທິບາຍຢ່າງພິສດານກວ້າງຂວາງກໍຕາມກໍຍັງດີກວ່າບໍ່ມີຜູ້ຄົ້ນຄວ້າ ແລະສົນໃຈອວບຮວມໄດ້.

ຂ້າພະເຈົ້າໄດ້ແກ້ໄຂ ແລະ ຕື່ມ ແຖມ ໃສ່ ແດ່ ເລັກ ນ້ອຍ ເປັນ ລາງບ່ອນທີ່ນັ້ນ ຈຶ່ງໄດ້ສົ່ງຄືນມາ ຮຽນທ່ານພ້ອມໜັງສືນີ້.

ຂໍສະແດງຄວາມນັບຖືຢ່າງສູງ.

ຕ. ປະທານກັມມະການອັນຄະດີ

ເກນ

ທ້າວເກນ

ສຳເນົາຖືກຕ້ອງຕາມຕົ້ນສບັບເດີມແລ້ວ

(ຜູ້ສຳເນົາ)

ຄຳຂອງສົມເດັດເຈົ້າ
ມະຫາອຸປຣາຊເພັຊຣາຊ

ຄວາມຮູ້ໃນທາງປະວັດສາດ ເປັນປັດໃຈສຳຄັນ ສຳຫຣັບທຸກຊາດທຸກພາສາ ເພາະເຫດນີ້ທຸກຊາດຈຶ່ງ ໄດ້ຈັດໃຫ້ມີການສອນປະວັດສາດ ຫລືພົງສາວະດາຣ ກັນຂຶ້ນໃນໂຮງຮຽນແຕ່ຫ້ອງປະຖົມສຶກສາເປັນຕົ້ນໄປ.

ຊາດລາວເປັນຊາດທີ່ໃຫຍ່ແລະເກົ່າແກ່ຊາດໜຶ່ງ ໃນໂລກນີ້ ທັງເປັນຊາດທີ່ເຄີຍມີຄວາມຮຸ່ງເຮືອງມາແຕ່ ກ່ອນແລ້ວອີກດ້ວຍ.

ຄຳວ່າ ລາວ ເປັນຊາດທີ່ໃຫຍ່ ແລະ ເກົ່າແກ່ ຊາດ ໜຶ່ງໃນໂລກ ກໍເພາະມີຫລັກຖານໃນພົງສາວະດາຣຈີນ ແຕ່ເມື່ອກ່ອນພຸທະສັກຣາຊ ໒໒໐໐ ປີມາແລ້ວ ປາງ ນັ້ນຊາວຈີນເອີ້ນເຮົາວ່າ "ມົງໃຫຍ່" ຊຶ່ງມີພູມລຳເນົາ ຢູ່ຕາມລຳແມ່ນ້ຳປາງເຊກັຽງ ໃນປະເທສຈີນເວລານີ້ ແລະປາງນັ້ນ ກໍເປັນສະໄມດຽວກັນກັບ ຄາວສ້າງ ປະເທສ "ເອຊິປ ສໄມບູຮານ ຄື ສໄມສ້າງເຈດີ "ປີຣາມິດ"

ແລະສ້າງມະຫານະຄອນ "ບາບີໂລນ" ແຫ່ງປະເທສ "ກັລເດ" ພາຍຫລັງນັ້ນມາປະມານ ໕໐໐ ປີ ຊາວຈີນ ຈຶ່ງເອີ້ນເຮົາວ່າ "ລາວ" ຕາມຊື່ຂອງຊາດເຮົາອັນເປັນຊາດທີ່ໃຫຍ່ຫລາຍ ແຕ່ເນື່ອງຈາກການຮຸກຮານຂອງຊາວຈີນ ຊາດລາວຈຶ່ງໄດ້ແຕກກັນໜີລົງມາທາງທິສຕາເວັນຕົກສຽງໃຕ້ເປັນລຳດັບມາ ໂດຍແຕກແຍກຈາກກັນໄປຕັ້ງຢູ່ຫລາຍແຫ່ງຫລາຍຫົນ ແລະພ້ອມກັນນັ້ນກໍ່ປ່ຽນຊື່ໄປເປັນຫລາຍຊື່ ແລ້ວແຕ່ພູມລຳເນົາເປັນປະມານ ເຊັ່ນຊື່ຂະຫມຶນ, ໄທ, ລື້, ນວນ, ເປັນຕົ້ນ ຍັງຄົງຮັກສາຊື່ຂອງຊາດເດີມຢູ່ ກໍ່ສະເພາະ ແຕ່ ພວກທີ່ມາຕັ້ງພູມລຳເນົາຢູ່ຕອນກາງລຳແມ່ນ້ຳຂອງດີ ພວກລາວເຮົາທຸກວັນນີ້ແຕ່ທີ່ນັ້ນ.

ສ່ວນຄ່າວ່າຊາດລາວເຄີຍມີຄວາມຮຸ່ງເຮືອງມາແຕ່ກ່ອນແລ້ວນັ້ນ ກໍ່ເພາະນັກປຣາຊຊາວນິວຊາວຫຼາຍຄົນເປັນຕົ້ນວ່າ "ດົກເຕີຣດົດ" ໄດ້ຫລັກຖານຈາກພົງສາວະດານຈີນວ່າ ໃນເມື່ອ ໒໒໐໐ ປີກ່ອນພຸທທະສັກກະຣາຊນັ້ນ ຊາວລາວເຮົາຮູ້ຈັກລ້ຽງມ້ອນເຮັດໄໝແລະຕ່ຳຜ້າ

ເປັນດອກເປັນດວງມາແລ້ວ ທັງຍັງຮູ້ເອົາຂີ້ຊາຍມາເຮັດແກ້ວອີກດ້ວຍ.

ເຖິງວ່າພາຍຫລັງປາງນັ້ນ ມາເປັນເວລາເຫິງປະມານ ປີ ພັນປີ ຊາວລາວກໍ່ຍັງກ້າວໜ້າກວ່າຊາວຜິວຂາວຢູ່ສເໝີ ໂດຍປ່າງຍິ່ງໃນດ້ານວິຊາເຮັດອາວຸດປືນ ດັ່ງມີຫລັກຖານໃນ ພົງສາວະດາຣຝຣັ່ງເສສ ແລະພົງສາວະດາຣປະເທດລາວເຮົານັ້ນ ຄືວ່າປາງທ້າວຟ້າງຸ່ມຍົກຣີພົນເມືອຣົບພະຍາຍີ່ຫີນ ເຈົ້າເມືອງພວນ ເມື່ອປີ ພ.ສ. ໑໘໙໕ (ຄ.ສ. ໑໓໕໒)ນັ້ນ ກອງທັພລາວທັງສອງໄດ້ໃຊ້ປືນໃຫຍ່ແລະປືນນ້ອຍຍິງໂຕ້ຕອບກັນເປັນສາມາດຢູ່ແລ້ວ ແຕ່ໃນຂນະດຽວກັນນັ້ນ ຊາວຜິວຂາວຍັງຫາປະດິສປືນໃຫຍ່ຂຶ້ນໃໝ່ ໆ ສ່ວນປືນນ້ອຍນັ້ນຍັງບໍ່ມີເທື່ອ ແລະຍັງຫາ ປະດິສຂຶ້ນ ເມື່ອປີ ຄ.ສ. ໑໕໑໐ (ພ.ສ. ໒໐໕໓) ນີ້ເອງ ຄືພາຍຫລັງເສິກທີ່ເມືອງພວນໄປ ໑໕໘ ປີ.

ແຕ່ເນື່ອງ ຈາກ ລາວ ເຮົາໄດ້ເສັຽ ເອກຣາຊໄປ ຕົກເປັນເມືອງຂຶ້ນ ຂອງຊາຕອື່ນ ເປັນເວລາ ໒໔໒ ປີ ມາແລ້ວ

(ແຕ່ ພ.ສ. ໒໒໕໐ ເຖິງ ໒໔໙໒ ຫລື ຄ.ສ. ໑໗໐໗ ເຖິງ ໑໙໔໙) ປະຊາຊົນ ລາວ ທັງຫລາຍ ຈຶ່ງບໍ່ສູ້ໄດ້ຮູ້ເຖິງ ປະວັຕສາຕຂອງຊາດຕົນເອງຢ່າງກວ້າງຂວາງ ດ້ວຍເຫດວ່ານານາຊາດທີ່ມາເປັນນາຍເຮົານັ້ນ ຂັດຂວາງບໍ່ຢາກໃຫ້ພົລເມືອງທີ່ຢູ່ໃຕ້ອຳນາດ ໄດ້ສຶກສາປະວັຕສາຕຂອງຊາດຕົນເອງໄດ້ຢ່າງເຕັມເມັດເຕັມໜ່ວຍ ໂດຍປ້ານວ່າຊາວລາວຈະຕື່ນຕົວຂຶ້ນໄດ້ ຊຶ່ງສາມາດຈະເຮັດໃຫ້ກາຣປົກຄອງ ພວກເຮົາ ຍາກແລະ ລຳບາກມາກຂຶ້ນ ສຳຫຣັບຜູ້ເປັນນາຍ.

ອັນທີ່ຈິງ ປະວັຕສາຕ ຫລືພົງສາວະດາຣຂອງຊາດລາວນັ້ນ ມີຢູ່ແລ້ວຫລາຍເຫລັ້ມ ເປັນຕົ້ນວ່ານິທານຂຸນບຸລົມ, ພົງສາວະດາຣລ້ານຊ້າງ, ພົງສາວະດາຣເມືອງຫລວງພຣະບາງ, ພົງສາວະດາຣນະຄອນຈຳປາສັກ ແຕ່ໜັງສືເຫລົ່ານັ້ນບໍ່ກ່າວຣອດຕົ້ນປະວັຕຂອງຊາດລາວຈັກເຫລັ້ມ ເພາະເປັນເຣືອງທີ່ແຕ່ງຂຶ້ນພາຍຫລັງ ສະນັ້ນໃນເບື້ອງຕົ້ນຈຶ່ງເປັນນິທານສ່ວນຫລາຍເຊັ່ນເຣືອງເຈົ້າຣືສີແລະຜີຟ້າຜີແຖນ ຄັນມາກ່າວເຖິງ

ປະວັດສາດຂອງຊາດລາວ ກໍ່ຕັ້ງຕົ້ນເອົາແຕ່ຂຸນບຸລົມມາ ຄືແຕ່ເມື່ອຣະຫວ່າງພຸທທະສັກຣາຊ ໑໖໐໐ ປີນີ້ເອງ ເຖິງຢ່າງນັ້ນກໍ່ຍັງມັກຈະເປັນນິທານແກມຢູ່ອີກ ສ່ວນປະວັດສາດໂດຍແທ້ນັ້ນ ກໍ່ມີແຕ່ປາງພະຍາລັງມາ ຄື ແຕ່ເມື່ອປີ ພ.ສ. ໑໘໑໔ (ຄ.ສ. ໑໒໗໑) ນອກນັ້ນ ໜັງສືດັ່ງກ່າວແຕ່ລະເຫລັ້ມກໍ່ມັກຂ້າມລາງຕອນຕ່າງ ໆ ກັນໄປອີກດ້ວຍ.

ດ້ວຍເຫດນີ້ຂ້າພະເຈົ້າຈຶ່ງຂໍຊົມເຊີຍ ທ້າວອູ່ຄໍາ ພົມວົງສາ ທີ່ໄດ້ມີຄວາມພາກພຽນອົດສາຄົ້ນຄວ້າສືບຫາຕົ້ນປະວັດຂອງຊາດລາວ ແລະໄດ້ພະຍາຍາມຮວບຮວມເນື້ອຄວາມຂອງພົງສາວະດາຣຫລາຍເຫລັ້ມມາລຽບລຽງໜັງສື "ຄວາມເປັນມາຂອງລາວ" ຂຶ້ນຄາວນີ້ ເຖິງໜັງສືລຽບລຽງໂດຍທ້າວອູ່ຄໍາ ພົມວົງສາເຫລັ້ມນີ້ເປັນແຕ່ພຽງສັງເຂບ ບໍ່ກວ້າງຂວາງພິສດາຣກໍ່ຍັງນັບໄດ້ວ່າເປັນປະໂຍດແກ່ການສຶກສາເຣື່ອງຂອງເຮົາຫລາຍຢູ່ ແລະໃນໂອກາດດຽວກັນນີ້ຂ້າພະເຈົ້າຂໍຊົມເຊີຍ ທ້າວອິນແປງ ສຸຣິຍະໄທ ຜູ້ເປັນປະທານ

ສະມາຄົມຍຸວະຊົນແຫ່ງປະເທດລາວ ທີ່ໄດ້ຈັດພິມໜັງສື ເຫລັ້ມນີ້ອອກແຜ່ຜາຍໃຫ້ພີ່ນ້ອງຮ່ວມຊາດທັງຫລາຍໄດ້ ຮູ້ເຖິງຄວາມເປັນໄປມາຂອງຊາດລາວເຮົາ ເພື່ອຈັກໄດ້ ພ້ອມກັນແລະຊ່ວຍກັນຮັກສາຊາດ ແລະຊື່ລາວອັນຍັງ ເຫລືອຢູ່ ຈໍາເພາະ ແຕ່ໃນ ປະເທດ ຂອງ ເຮົາເວລານີ້ ນັ້ນ ໃຫ້ໝັ້ນຄົງຢູ່ຊົ່ວຟ້າດິນສລາຍເທີນ.

ວຽງຈັນທນ໌, ວັນຈັນ ຂຶ້ນ ໖ ຄ່ຳ ເດືອນຍີ່
ປີເມີງເຮົ້າ ໒໕໐໑
ກົງກັບວັນທີ ໗ ເດືອນມົກຣາ ຄ.ສ. ໑໙໕໘
ສົມເດັດເຈົ້າມະຫາອຸປຣາຊແຫ່ງປະເທດລາວ



ເພັຊຣາຊ ຣັຕນະວົງສາ

ຄຳຂອງສເດັດເຈົ້າບຸນອຸ້ມ
ເຈົ້ານະຄອນຈຳປາສັກ

ການຮຽນຮູ້ປະວັຕສາດຂອງຊາດນັ້ນ ເປັນຂອງສຳຄັນ ແລະຈຳເປັນຂອງທຸກຊາດທຸກພາສາ ຊາດລາວເຄີຍເປັນຊາດໃຫຍ່ ແລະເຄີຍຈະເຣີນຮຸ່ງເຮືອງມາແລ້ວພໍ່ພຽງໃດນັ້ນ ຄວນທີ່ປະຊາຊົນຊາວລາວທັງຫລາຍຈັກພາກັນຊອກຄົ້ນຫາເບິ່ງ ແລ້ວນຳອອກມາແຜ່ພາຍໃຫ້ນານາຊາດທັງຫລາຍໃນໂລກໄດ້ຮູ້ເຫັນ.

ໜັງສືຄວາມເປັນມາຂອງລາວ ຫລືເລົ່າເຣື່ອງຊາດລາວ ຮວບຮວມໂດຍທ້າວອຸ່ຄຳ ພົມວົງສານີ້ ໄດ້ເວົ້າເຖິງຄວາມເປັນມາຂອງຊາດລາວ ແຕ່ປາງດຶກດຳບັນມາຮອດ ສໄມປັດຈຸບັນນີ້ຢ່າງສັງເຂບ ຂ້າພະເຈົ້າຈຶ່ງຫວັງວ່າໜັງສືນີ້ຈັກເປັນຫຼຸບເຫລັ້ມໜຶ່ງ ສຳຫລັບໃຊ້ສ່ອງເບິ່ງຊາດປາງຫລັງ ຂອງລາວເຮົາໄດ້ເປັນຢ່າງດີ.

ສເດັດເຈົ້າບຸນອຸ້ມ ນະ ຈຳປາສັກ

ເຈົ້ານະຄອນຈຳປາສັກ ຜູ້ກວດຣາຊການຕາງ

ສົມເດັດເຈົ້າມະຫາຊີວິດ

(ເຈົ້າບຸນອຸ້ມ ນະ ຈຳປາສັກ)

ວັນທີ ໒໐ ມັກະຣາຄົມ ພ.ສ. ໒໕໐໑

ວຽງຈັນທນ໌, ປະເທດລາວ

ສຳນັກນາຍົກຣັຖມົນຕີ

ວຽງຈັນ, ປະເທດລາວ

ວັນທີ ໒໑ ເດຊາມ ໑໙໕໗

ເຣື່ອງ ຕອບຮັບ ໜັງສືນຳສົ່ງສເບີຮ່າງປຶ້ມໜຶ່ງເຫລັ້ມ
ກ່ອນຈະສົ່ງໄປພິມແຈກຢາຍ

ມາຍັງ ທ້າວອູ່ຄຳ ພົນວົງສາ ບ້ານຄຸ້ມຕາກແດດ
ຕາແສງສີຖານເໜືອ

ໜັງສືຂອງທ່ານ ລົງວັນທີ ໖ ເດຊາມ ໑໙໕໗ ສເບີຮ່າງປຶ້ມຊື່ວ່າ "ຄວາມເປັນມາຂອງລາວ ຫລື ເລົ່າເຣື່ອງຊາດລາວ" ນັ້ນ ສເດັດອົງນາຍົກໄດ້ຮັບແລ້ວແລະ ຊົງສັ່ງວ່າ ໃຫ້ແຈ້ງຄວາມຂອບຄຸນເປັນອັນມາກ ໃນ ຄວາມປາຖນາດີຂອງທ່ານ ມານະທີ່ນີ້

ຂໍສແດງຄວາມນັບຖື

ຈ. ບຸນຍະວັດ ອຸ່ນແກ້ວ

(ເຈົ້າບຸນຍະວັດ ອຸ່ນແກ້ວ)
ເລຂາທິການນາຍົກຣັຖມົນຕີ
ແຫ່ງຣາຊອານາຈັກລາວ

ຄຳຂອງຜູ້ຈັດພິມ

ທ້າວອູ່ຄຳ ພົມວົງສາ ຜູ້ຮວບຮວມໜັງສືຄວາມເປັນມາຂອງລາວ ໄດ້ມາປຶກສາຂ້າພະເຈົ້າໃນເຣື່ອງການພິມໜັງສືນີ້ອອກແຜ່ຜາຍ ຂ້າພະເຈົ້າເຫັນວ່າການຮຽນຮູ້ປະວັດສາດ ຫລືພົງສາວະດານ ຂອງຊາດນັ້ນ ເປັນຂອງສຳຄັນ ແລະຈຳເປັນສຳຫລັບຊາດລາວຂອງເຮົາ ຈຶ່ງໄດ້ຮັບເປັນຜູ້ຈັດພິມ ໃນນາມຂອງບຸວະສມາຄົມ ແຫ່ງປະເທດລາວ ເພື່ອເຜີຍແຜ່ຈຳໜ່າຍຂາຍແຈກໃຫ້ແກ່ປະຊາຊົນຊາວລາວທັງຫລາຍ ໃຫ້ໄດ້ຮູ້ເຫັນວ່າຊາດລາວນັ້ນ ເຄີຍເປັນຊາດໃຫຍ່ ແລະເຄີຍຈະເຣີນຮຸ່ງເຮືອງມາແລ້ວພໍພຽງໃດ !

ເນື່ອງຈາກໂຮງພິມສຳຫລັບພິມປຶ້ມ ໃນປະເທດລາວບໍ່ສາມາດພິມໜັງສືປຶ້ມເປັນເຫລັ້ມປົກແຂງຫຸ້ມຜ້າໂຕຄຳໄດ້ຕ້ອງສົ່ງໄປຈ້າງຕ່າງປະເທດພິມ ຈຶ່ງເປັນເຫດໃຫ້ການພິມໜັງສືເຫລັ້ມນີ້ ຕ້ອງເສັຽເວລາຫລາຍ

ຂ້າພະເຈົ້າ ຈຶ່ງ ຂໍອະໄພຈາກທ່ານຜູ້ອ່ານທັງຫລາຍໂດຍ
ທົ່ວກັນ.

(ອິນແປງ ສຸຣິຍະໄທ)
ປະທານຍຸວະສມາຄົມແຫ່ງປະເທດລາວ
ນະຄອນວຽງຈັນ ປະເທດລາວ
໒໐ - ໑ - ໒໕໐໑

ຄຳນຳ

ເຣື່ອງຄວາມເປັນມາຂອງລາວນີ້ ຂ້າພະເຈົ້າມີຄວາມສົນໃຈ ແລະໄດ້ສຶກສາຄົ້ນຄວ້າມາເປັນເວລາສິບກວ່າປີແລ້ວ ໄດ້ເຫັນການກູ້ເອກະຣາຊຂອງລາວຢ່າງໃກ້ຊິດຜູ້ໜຶ່ງ ໃນຖານະຜູ້ສັງເກດເບິງເຫດການແລະຊ່ອຍເຫລືອຢູ່ພາຍນອກ ໜັງສືຄວາມເປັນມາຂອງຊາດລາວນີ້ ຂ້າພະເຈົ້າເຄີຍໄດ້ຂຽນຢ່າງສັ້ນ ໆ ມອບໃຫ້ທ່ານໂມຣິສອາລາ ເມື່ອ ພ.ສ. ໒໔໙໑ (ຄ.ສ. ໑໙໔໘) ແລະມອບໃຫ້ທ້າວບົງ ສີຣັຕນະກຸນ ເມື່ອ ພ.ສ. ໒໔໙໓ (ຄ.ສ. ໑໙໕໐) ມາແລ້ວເທື່ອໜຶ່ງ ຫາກແຕ່ບໍ່ໄດ້ນຳອອກແຜ່ພາຍ.

ບັດນີ້ ລາວໄດ້ເອກະຣາຊສົມບູນມາ ເປັນເວລາ ໔ ປີປາຍແລ້ວ ເພື່ອໃຫ້ລາວທັງຫລາຍໄດ້ຊາບວ່າຊາດລາວນີ້ ເຄີຍເປັນຊາດໃຫຍ່ ແລະມີຄວາມປ່ຽນແປງເປັນມາຢ່າງໃດແດ່? ເຄີຍຈະເຣີນຮຸ່ງເຣືອງມາແລ້ວພໍພຽງໃດ? ຂ້າພະເຈົ້າຈຶ່ງໄດ້ຂຽນເຣື່ອງນີ້ຂຶ້ນໃໝ່ອີກ ແລະໄດ້ນຳເຜີຍແຜ່ອອກອາກາດ ທາງສຖານີວິທຍຸກະຈາຍສຽງແຫ່ງປະເທດລາວ ແລະພິມໂຄສະນາໃນໜັງສື

ຂ່າວໂຄສະນາການລາວ ເຣີ່ມແຕ່ວັນທີ່ ໒໙ ມິຖຸນາຍົນ ພ.ສ. ໒໕໐໐ ມາເປັນລຳດັບ ກໍປາກົດວ່າ ໄດ້ຮັບຄວາມສົນໃຈຈາກພີ່ນ້ອງລາວດ້ວຍດີ ເຖິງກັບບາງທ່ານໄດ້ມີໜັງສືມາຂໍຮ່າງຈາກ ກົມຖແລງຂ່າວໂຄສະນາການ ແລະເກັບເຣື່ອງທີ່ໄດ້ນຳລົງພິມແລ້ວຈົນຄົບຖ້ວນກໍມີ.

ໃນການທີ່ຄວາມເປັນມາຂອງລາວ ໄດ້ອອກອາກາດແລະລົງພິມໄປຈົນຈົບບໍຣະບວນນີ້ ຂ້າພະເຈົ້າຂໍຂອບພະຄຸນທ່ານເຫລື້ອມ ທັມໂຊດ ແຫ່ງກອງຖແລງຂ່າວ ແລະ ໂຄສະນາການລາວ ຊຶ່ງໄດ້ເປັນຜູ້ຊ່ວຍເຫລືອຂ້າພະເຈົ້າ ໃນການຄັດກ່າຍແກ້ໄຂຕື່ມເຕີມບັນທຶກຂອງກອງວັນນະຄະດີໃຫ້ ແລະຂໍຂອບພະຄຸນກອງວັນນະຄະດີທີ່ໄດ້ກະຣຸນາກວດແກ້ ແລະບັນທຶກຕື່ມເຕີມຫລັກຖານຂໍ້ບົກພ່ອງຂາດຫາຍໃຫ້ ທັງນີ້ເພື່ອເປັນຫລັກຖານໃນການຄົ້ນຄວ້າຂອງຊາວລາວທັງຫລາຍຕລອດຈົນລູກຫລານເຫລັນຮຸ່ນຕໍ່ ໆ ໄປໃນພາຍພາກໜ້າ ຈະໄດ້ຮູ້ເຫັນວ່າຊາດລາວນັ້ນເຄີຍເປັນຊາດໃຫຍ່ ແລະເຄີຍຈເຣີນຮຸ່ງເຣືອງມາແລ້ວພໍປານໃດ! ເພື່ອຈະໄດ້ເປັນຂໍ້ເຕືອນໃຈໃຫ້ລາວພ້ອມພຽງສາມັກຄີກັນ ຊ່ວຍກັນສ້າງ

ຊາດແລະຮັກສາຊາດຊຶ່ງໄດ້ເອກະຣາຊຄືນມາແລ້ວນີ້ ໃຫ້ດົງມີຊີວິດ ຍືນຍາວຢູ່ຮ່ວມໂລກ ກັບຊາດທັງຫລາຍ ສືບຕໍ່ໄປ ຈົນຕາບເທົ່າຊົ່ວຟ້າດິນທະລາຍ.

ອັນໜຶ່ງ ຂ້າພະເຈົ້າຂໍວິງວອນຕໍ່ ພະວິນຍານຂອງສົມເດັດພະເຈົ້າຟ້າງຸ້ມມະຫາຣາຊ, ສົມເດັດພະເຈົ້າໄຊເຊດຖາມະຫາຣາຊ ແລະສົມເດັດພະເຈົ້າອນຸວົງ (ສົມເດັດພະເຈົ້າໄຊເຊດຖາທິຣາຊທີສາມ) ຈົ່ງຊົງດົນບັນດານໃຫ້ຈິດໃຈຂອງຊາວລາວທັງຊາດ ໃຫ້ຊ່ອຍກັນຮັກສາຊາດຊຶ່ງໄດ້ສູນເສັຽເອກະຣາຊໄປຕັ້ງຮ້ຽແປດສິບປີ ແລະ ບັດນີ້ ໄດ້ກັບຕ່າວຄືນ ຊີວິດ ມາຢູ່ຮ່ວມໂລກ ກັບຊາດອື່ນໆ ທັງຫລາຍແລ້ວນັ້ນ ໃຫ້ຍືນຍາວຕລອດໄປ ແລະຂໍວິງວອນໃຫ້ນັກການເມືອງທັງຫລາຍ ຕລອດປະຊາຊົນຊາວລາວທັງຊາດ ໃຫ້ຊ່ອຍກັນກອບກູ້ແລະຮັກສາຊາດລາວໃຫ້ຄືກັນກັບ ຮັກສາຊີວິດ ຂອງໝົດທຸກຄົນ ຫັ້ນທ້ອນເຖິງເວລາແລ້ວ ທີ່ລາວທັງຊາດ ຈະຕ້ອງສາມັກຄີຮັກແພງກົມກຽວກັນ ແລະຊ່ອຍກັນສ້າງສາປະເທດຊາດບ້ານເມືອງແລ້ວ.

ໃນທີ່ສຸດ ຂ້າພະເຈົ້າຂໍອະໄພໃນຂໍ້ຂາດບົກຕົກຫລົ່ນຈາກທ່ານຜູ້ອ່ານທັງຫລາຍໂດຍທົ່ວກັນ ແລະ

ຂໍຂອບພະຄຸນ ທ່ານອິນແປງ ສຸຣິຍະໄທ ປະທານບຸວະສມາຄົມແຫ່ງປະເທດລາວ ທີ່ໄດ້ເປັນຜູ້ຈັດພິມໜັງສືນີ້ເທື່ອຕໍ່າອິດ ເພື່ອຈຳໜ່າຍເຜີຍແຜ່ໃຫ້ຊາວລາວທັງຫລາຍໄດ້ຊາບ ແລະຂໍແຈ້ງວ່າ ຄວາມເປັນມາຂອງລາວທີ່ຈັດພິມນີ້ເປັນພຽງສັງເຂບທໍ່ນັ້ນ ແລະຈະໄດ້ຈັດການແກ້ໄຂຕື່ມເຕີມໃຫ້ພິສດານກວ້າງຂວາງຂື້ນ ແລ້ວຈັດພິມໃໝ່ເປັນເທື່ອທີ່ສອງອີກໃນໂອກາດຕໍ່ໄປ.

ອູ່ຄຳ ພົມວົງສາ

ບ້ານເຈົ້າສອນ ບຸຕະໂຮບັນ

ທົ່ງຕາກແດດນະຄອນວຽງຈັນທນ໌, ປະເທດລາວ

໑ ມົກະຣາຄົມ ພ.ສ. ໒໕໐໑

(ຄ.ສ. ໑໙໕໘)

ສາລະບານ

—

<u>ພາກໜຶ່ງ</u> : ວ່າດ້ວຍລາວ ສໄມດຶກດຳບັນ

໑. ຊົນຊາດລາວ

໒. ຄຳວ່າ "ລາວ" ມາແຕ່ໃສ?

໓. ລາວ ສໄມເມືອງລຸງ, ເມືອງປາ, ເມືອງງ້ວ

໑. ເມືອງລຸງ, ເມືອງປາ, ເມືອງງ້ວ

໒. ຈີນພໍ້ລາວ

໓. ລາວເສັຽເມືອງລຸງ, ເມືອງປາ, ເມືອງງ້ວ.

໔. ລາວ ສໄມອານາຈັກແຖນ ຫລື ອ້າຍລາວ

໕. ລາວ ສໄມອານາຈັກອິສຣະ ຫົກນະຄອນ

໖. ລາວ ສໄມອານາຈັກໜອງແສ ຫລື ນ່ານເຈົ້າ

໗. ການອົພຍົບຂອງລາວ

໘. ລາວຈັດຕັ້ງອານາຈັກລານນາ

໙. ລາວແຍກອອກເປັນ "ໄທກັບລາວ"

<u>ພາກສອງ</u> : ວ່າດ້ວຍອານາຈັກລ້ານຊ້າງ ແລະ ຊົນຊາດເຈົ້າຄອງລ້ານຊ້າງ

໑. ດິນແດນລ້ານຊ້າງ

໒. ຊົນຊາດລະວ້າ ຫລື ລົວະ

໓. ຊົນຊາດຂອມ (ຂະເມນ)

໔. ຊົນຊາດລາວ

໕. ຂຸນບູຣົມສັ່ງຣາຊໂອຣົດໄປຄອງເມືອງໃດແດ່ ?

໑. ພົງສາວະດານລ້ານຊ້າງ

໒. ປະຊຸມພົງສາວະດານພາກທີ ໑໑

໓. ປ. ເລີບູລັງເຢ

໔. ຄວາມເຫັນຜູ້ຮວບຮວມ

໖. ຣາຊໂອຣົດຂຸນບູຣົມສັ່ງເມືອງ.

໑. ຂຸນລໍສັ່ງເມືອງ

໒. ບີ່ຍາລານສັ່ງເມືອງ

໓. ສາມຈູສົງ ສັ່ງເມືອງ

໔. ໄສຜົງ ສັ່ງເມືອງ

໕. ງົວອິນ ສັ່ງເມືອງ

໖. ລັກກົນ ສັ່ງເມືອງ

<u>ພາກສາມ</u>: ວ່າດ້ວຍລາວ ສໄມລ້ານຊ້າງ (ຫຼວງພະບາງ
ແລະວຽງຈັນທນ໌)

໑. ຂຸນລໍ (ຂຸນຊະວາ) ເຖິງອັບດັບທີ ໒໐ ທ້າວ
ຫວ່າງ

໒໑. ທ້າວລັງ (ພະຍາຣາຊທິຣາຊ)

໒໒ ພະຍາສູວັນຄຳຜົງ

໒໓. ພະເຈົ້າຟ້າງຸ່ມມະຫາຣາຊ

໒໔. ພະເຈົ້າສາມແສນໄທ

໒໕. ພະເຈົ້າລ້ານຄຳແດງ

໒໖. ພະຍາພົມະທັດ

໒໗. ພະຍາປາກຫ້ວຍຫຼວງ

໒໘. ທ້າວໃສ

໒໙. ພະຍາໄຕ

໓໐. ພະຍາຊຽງສາ

໓໑. ພະເຈົ້າບຸຄົລ

໓໒. ພະຍາຄຳເກີດ

໓໓. ພະເຈົ້າໄຊຈັກພັດ

໓໔. ພະຍາສູວັນບັນລັງ

໓໕. ພະຍາຫຼ້າບ້ຳແສນໄທ

໓໖. ທ້າວຊູມພູ

໓໗. ພະເຈົ້າວິຊູນຣາຊທິປັດ

໓໘. ພະເຈົ້າໂພທິສາຣາຊ
(ວຽງລ້ານຊ້າງ ສໄນວຽງຈັນທບ໌)

໓໙. ພະເຈົ້າໄຊຍະເຊດຖາມະຫາຣາຊ

໔໐. ພະຍາແສນສຸຣິນຖ່ວງຟ້າ
໔໑. ເຈົ້າອຸປະຣາຊວໍຣະວັງໃສ
໔໒. ພະຍາແສນສຸຣິນຖ່ວງຟ້າເທື່ອທີ ໒
໔໓. ພະຍາບະຄອບນ້ອຍ
໔໔. ພະໝໍ່ແກ້ວກຸມມານ
໔໕. ພະເຈົ້າທັມມິກະຣາຊ
໔໖. ເຈົ້າອຸປະບຸວະຣາຊ
໔໗. ພະເຈົ້າບໍ່ເກີດໂພທິສານ
໔໘. ເຈົ້າຕ່ອນຄໍາ
໔໙. ເຈົ້າສຸຣິຍະວົງສາ
໕໐. ເຈົ້າອິງຫຼໍ່
໕໑. ເຈົ້າບັນທະຣາຊ
໕໒. ເຈົ້າໄຊອົງເວ້

ອານາຈັກລ້ານຊ້າງ
ແຍກອອກເປັນສອງປະເທດ ຄື

ລ້ານຊ້າງຫຼວງພະບາງແລະລ້ານຊ້າງວຽງຈັນແຕ່ ປີ ພ.ສ. ໒໒໕໐ ຕໍ່ມາ ພ.ສ. ໒໒໕໓ ອານາຈັກລ້ານ

ຊ້າງວຽງຈັນແຍກອອກໄປຕັ້ງອານາຈັກຈຳປາສັກຂຶ້ນອີກ. ອານາຈັກລ້ານຊ້າງຈຶ່ງໄດ້ແບ່ງອອກເປັນສາມປະເທດ ຄື ລ້ານຊ້າງຫຼວງພະບາງ, ລ້ານຊ້າງວຽງຈັນແລະລ້ານຊ້າງ ນະຄອນຈຳປາສັກ.

<u>ພາກສີ່</u> : ວ່າດ້ວຍອານາຈັກຫຼວງພະບາງ

໑. ເຈົ້າກິງກິສຣາຊ
໒. ເຈົ້າອົງນົກ ຫຼື ອົງຄຳ
໓. ເຈົ້າອິນທະໂສມ
໔. ເຈົ້າໂຊຕິກະ
໕. ເຈົ້າສຸຣິຍະວົງສາ
໖. ເຈົ້າອະນຸຣຸທ
໗. ເຈົ້າມັນທາຕຸຣາຊ
໘. ເຈົ້າສຸກເສີມ
໙. ເຈົ້າຈັນທາຣາຊ (ເຈົ້າຈັນທຣະເທບປະພາ ຄຸນະສຸທອນທັມະທາດາ)
໑໐. ເຈົ້າອຸ່ນຄຳ (ເຈົ້າມະຫິທອນເທັບນິພາກອນ)
໑໑. ເຈົ້າຄຳສຸກ (ເຈົ້າສັກະຣິນຣິດ)
໑໒. ເຈົ້າສີສວ່າງວົງ (ອົງປັຈຈຸບັນ)

ປະເທດລາວ ຫລື ອານາຈັກລ້ານຊ້າງທັງໝົດໄດ້ຮັບເອກຣາຊ ໂຮມເຂົ້າເປັນອານາຈັກດຽວກັນ ເອີ້ນວ່າ "ຣາຊອານາຈັກລາວ" ເມື່ອ ພ.ສ. ໒໔໘໘ (ຄ.ສ. ໑໙໔໕)

ພາກຫ້າ : ວ່າດ້ວຍອານາຈັກວຽງຈັນ

໑. ເຈົ້າໄຊອົງເວ້
໒. ເຈົ້າໄຊຍະກຸມມານ
໓. ເຈົ້າສິຣິບຸນສານ
໔. ເຈົ້າບັນທະເສນ
໕. ເຈົ້າອິນທະວົງ
໖. ເຈົ້າອະນຸວົງ

ພາກຫົກ : ວ່າດ້ວຍອານາຈັກນະຄອນຈຳປາສັກ.

໑. ເຈົ້າສ້ອຍສີສະມຸດພຸດທາງກູນ
໒. ເຈົ້າໄຊຍະກຸມມານ
໓. ເຈົ້າວິໄຊຂັດຕິຍະຣາຊວົງສາ
໔. ເຈົ້າໜານ້ອຍ
໕. ເຈົ້າຣາຊບຸດໂຍ້
໖. ເຈົ້າຮຸຍ
໗. ເຈົ້ານາກ

໙. ເຈົ້າຄຳໃຫຍ່ (ເຈົ້າບຸດີຫັມສຸບທອນ)

໑. ເຈົ້າຄຳສຸກ (ເຈົ້າບຸດີຫັມະທອນ)

໑໐. ເຈົ້າຣາຊດາໄບ

໑໑. ເຈົ້າບຸນອຸ້ມ

ພາກເຈັດ : ວ່າດ້ວຍພະຣາຊສານ

ພະຣາຊສານໂຕ້ຕອບຂອງພະເຈົ້າຕາກສິນ
ເຈົ້າກຸງທົນບຸຣີ ແລະພະຣາຊສານຂອງພະ
ເຈົ້າສິຣິບຸນສານ ເຈົ້າກຸງສີສັດຕນາຄນາຫຸດ.

ພາກແປດ : ຄືພາກທີ ໑ ໃນການຈັດພິມເທື່ອທຳອິດ.

ວ່າດ້ວຍລາວສໄມເດີມດຳບັນ ຄື :–

໑. ລາວສໄມນະຄອນລຸງ, ນະຄອນປາ, ນະຄອນ
ງົ້ວ (ອານາຈັກລຸງ, ປາ, ງົ້ວ,)

໒. ລາວສໄມນະຄອນເພງາຍ (ອານາຈັກອ້າຍ
ລາວຫລືແຖນ)

໓. ລາວສໄມນະຄອນໜອງແສ (ອານາຈັກ
ໜອງແສຫລືນ່ານເຈົ້າ)

໔. ລາວແຍກອອກໄປເປັນໄທແລະລາວ.

໕. ດິນແດນລານຊ້າງຫລືລ້ານຊ້າງ

ບັນຊີໜັງສືທີ່ໃຊ້ຄົ້ນຄວ້າ

໑. ພຣະຣາຊພົງສາວະດານ ສະບັບພຣະຣາຊຫັດຖະເລຂາ ສົມເດັດພຣະເຈົ້າບໍຣົມວົງເທີກົມພະຍາດຳຣົງຣາຊານຸພາບ ຊົງແຕ່ງອະທິບາຍປະກອບ.

໒. ພົງສາວະດານໂຍນົກ ຂອງພະຍາປະຊາກິດກໍຣະຈັກ (ແຊ່ມ ບຸນນາກ).

໓. ພົງສາວະດານຊາດໄທຂອງພະບໍຣິຫານເທບທານີ

໔. ເຣື່ອງຂອງຊາດໄທ ຂອງໝໍວິນລຽມຄິບຕັນດອດ (ໝໍດອດ) THE THAI RACE THE ELDER BROTHER of the CHINESE.

໕. ພົງສາວະດານລ້ານຊ້າງ ສະບັບຂອງຂ້າຣາຊການກົມພະຄັງພິມແຈກ.

໖. ພົງສາວະດານລ້ານຊ້າງຂອງ ປ. ເລີບູລັງເຊ.

໗. ປະຊຸມພົງສາວະດານພາກຕ່າງໆ.

໘. ປະວັດສາດໄທ ຂອງນາຍໄຊ້ ເຣືອງສິນ.

໙. ປະວັດສາດໄທ ຂອງນາຍຈເຣີນ ໄຊຊະນະ.

໑໐. ວິເຄາະເຣື່ອງເມືອງໄທເດີມ ຂອງ ນ. ປະພາສິຣິ

໑໑. ໄທ – ຈີນ ຂອງພະຍາອະນຸມານຣາຊທົນ.

໑໒. ພົງສາວະດານພາກອີສານ ຂອງພະສຸນທອນທໍຣະຣາຊເດຊ (ແຂ້ ປະທຸມຊາດ).

໑໓. ປະຊຸມສິລາຈາຣຶກພາກໜຶ່ງ.

໑໔. ປະວັດສາດສາກົລຂອງຫລວງວິຈິດວາທການ.

໑໕. ປະຊຸມພົງສາວະດານສະບັບຄວາມສຳຄັນ ຂອງ ຫລວງວິຈິດວາທການ.

໑໖. ພົງສາວະດານຫລວງພຣະບາງ.

໑໗. ປະວັດເມືອງອຸບົນ.

໑໘. ພົງສາວະດານຈີນສາມກົກ.

໑໙. ກຳເນີດຊາດໄທ ຂອງພະຍາອະນຸຊິດ.

໒໐. ໄທ ຂອງຈຸລາລົງກອນມະຫາວິທຍາລັຍ.

໒໑. ລັດທິທັມນຽມຕ່າງໆ ພາກທີ ໑໘ ຂອງພະໂພທິ ວົງສາຈານ.

໒໒. ພົງສາວະດານກຸງຣັດນະໂກສິນ ຣັຊກາລທີ ໑, ໒, ໓, ໔, ໕.

໒໓. ໜັງສືຣາຊາທິຣາຊ.

໒໔. ຫລັກໄທຂອງຣອງອຳມາດຕຣີ ສງ່າ ການຈນະ ນາຄພັນ.

໒໕. ພະຣາຊພົງສາວະດານ ສະບັບສັງເຂບ ພ. ສ. ໒໔໘໒ ເຫລັ້ມ ໑.

໒໖. ພະຣາຊພົງສາວະດານ ສະບັບພິສດານ ພ. ສ. ໒໔໘໒ ເຫລັ້ມ ໒.

໒໗. ປະວັດສາດລາວ ຂອງມະຫາສິລາ ວີຣະວົງ.

໒໘. ສັງເຂບເອກະສານປະວັດສາດ ຣ.ສ. ໑໑໒ ຂອງ ກົມສາມັນສຶກສາ.

໒໙. ຝັ່ງຂວາແມ່ນ້ຳຂອງ ຂອງເຕີມ ສິງຫັສຖິດ.

໓໐. ອີສານປີທີ່ ໓ ສະບັບທີ່ ໓ ເດືອນມີນາຄົມ ໒໔໙໓

໓໑. ທີ່ຣະລຶກໃນການປຸ້ມຣາສດອນ ຈັງຫວັດເລີຍ ພ.ສ. ໒໔໙໘.

໓໒. ເພງດົນຕຣີປວັດສາດ ຂອງຫລວງວິຈິຕວາທະການ.

໓໓. ນິທານໂບຮານຄະດີ ຂອງສົມເດັດພຣະເຈົ້າບໍຣົມວົງເທີກົມພຣະຍາດຳຣົງຣາຊານຸພາບ.

໓໔. ສເດັງບັນຍາຍພົງສາວະດານສຍາມ ຂອງສົມເດັດ ພຣະເຈົ້າ ບໍຣົມວົງເທີ ກົມພຣະຍາ ດຳຣົງ ຣາຊານຸພາບ.

໓໕. ເຣື່ອງ "ລາວ" ຂອງ ພຣະຍາທັມທີຣະຣາຊມຸນີ ເຈົ້າອາວາສ ວັດຈັກະວັດຣາຊາວາສ (ວັດສາມປື້ມ) ບາງກອກ.

໓໖. ພຣະຣາຊວິຈານ ພຣະຣາຊນິພົນ ໃນພຣະບາດສົມເດັດພຣະຈຸລຈອມເກົ້າເຈົ້າຢູ່ຫົວ (ຣ. ໕)

໓໗. ເຣື່ອງຂອງອາເຊັຽ ຂອງ ສັງ ພັດທະໂນໄທ.

໓໘. ເຣື່ອງຂອງຊາດໄທ ຂອງ ສະຖຽນ ໂກເສດ.

ຯ ລ ຯ

ທຸງຊາດລາວ



ເພງຊາດລາວ

ຊາດລາວຕັ້ງແຕ່ເດີມມາ
ຂຶ້ນຊື່ລືຊາຢູ່ໃນອາຊີ
ຊາວລາວຜູກພັນໄມຕີ
ຮ່ວມສາມັກຄີຮັກຮໍ່ໃຣມກັນ
ຮັກຊາດຮັກປະເທດເຮົາ
ຮັກເຈົ້າປົກເກດເກສາ
ໃຣມຮັກຮ່ວມສາສນາ
ແຕ່ບູຮານມາຮັກສາດິນແດນ
ບໍ່ໃຫ້ຊາດໃດມາລວນ
ຮາວີຮີບກວນບາດແຍ່ງຊີງເອົາ
ໃຜຂືນເຂົ້າມາລູ່ວຸ່ນວາຍ
ສູ້ຈົນຕົວຕາຍຕ້ານທານສັດຕູ
ຊ່ວຍເຊີດຊູເລືອດເນື້ອເຊື້ອເຜົ່າ
ຟື້ນຟູກູ້ເອົາບັນເທົາທຸກກັນ.



ການອົພະຍົບ
ຂອງລາວ
ມອງໂກເລັຽ
ພູເຂົາອັນໄຕ
ຈີນ
ຈີນ
ອາສັມ
ອ່າວໄທ
ຊາດລາວ

ພາກໜຶ່ງ

ວ່າດ້ວຍລາວສໄມດຶກດຳບັນ

໑.- ຊົນຊາດລາວ

ຊາດລາວເປັນຊາດເກົ່າແກ່ບູຮານ ມີອາຍຸໄດ້ເຖິງທຸກວັນນີ້ ປະມານຫ້າພັນປີປາງ ກົກເຄົ້າເຫງົ້າກໍຂອງລາວນັ້ນພາກັນລົງມາແຕ່ພູເຂົາອັນໄຕ ຫລື ແອນໄຕ. ໃນປະເທດມອງໂກເລັຽຕອນເໜືອຂອງທວີບອາຊີ (ອາເຊັຽ) ໄດ້ລົງມາຕັ້ງຫລັກແຫລ່ງ ບ່ອນ ທຳນາຫາກິນຢູ່ໃນລຸ່ມຮູແມ່ນ້ຳຮວງໂຫຫລືແມ່ນ້ຳເຫລືອງ ແລະລຸ່ມຮູແມ່ນ້ຳແຍງຊີກຽງ ຄືບ່ອນເປັນປະເທດຈີນສູ່ນີ້ ເມື່ອກ່ອນພະພຸທສາສນາສາມພັນປີປາງ.

ເມື່ອລາວໄດ້ເສັຽບ້ານເມືອງແກ່ຈີນແລ້ວ ໄດ້ພາກັນຖອຍລົງມາທາງໃຕ້ຫລືເບື້ອງຫົວນອນເລື່ອຍ ໆ ເພາະເຫດວ່າ ພວກລາວ ໄດ້ສູນເສັຽ ບ້ານເມືອງ ໃຫ້ແກ່ຈີນເຖິງສາມເທື່ອ ພວກລາວທີ່ພາກັນຖອຍລົງມາທາງໃຕ້ ຈຶ່ງ

ໄດ້ເອົາຄຳວ່າ "ໄທ້" ມາປາກເວົ້າຈານັນ ເພື່ອເປັນເຄື່ອງສແດງໃຫ້ຮູ້ວ່າເປັນພວກມາຈາກດາວຫລືມາຈາກຟ້າ, ຈາກສວັນ ເຫດນີ້ລາວຈຶ່ງໄດ້ນັບຖືຜີແຖນ, ຜີໄທ້ ກັນມາແຕ່ປາງບູຮານ ທຸກວັນນີ້ລາວລາງພວກກໍ່ຍັງມີການນັບຖືຜີແຖນ ຜີໄທ້ກັບປູ່ເປັນລາງບ່ອນ. ເພາະພວກລາວເຮົາຖືວ່າມີກໍາເນີດສກຸນສືບເຊື້ອສາຍມາຈາກໄທ້ ຈາກແຖນ ເດັກນ້ອຍເກີດມາໃໝ່ກໍ່ຕ້ອງແຕ່ງເຄື່ອງ "ໄທ້" ໃຫ້ ຜູ້ໃຫຍ່ກໍ່ມີໝໍ "ໄທ້" ພວກລາວເຮົາຈຶ່ງໄດ້ເອີ້ນກັນວ່າ "ໄທ້" ແລະຕໍ່ໆ ມາໄດ້ກາຍເປັນ "ໄທ".

ສໃນລາວໄດ້ຖອຍລົງມາສູ່ດິນແດນແຫຼມທອງຫລືສວັນນະພູມ ລາວໄດ້ແຍກກັນອອກເປັນຫຼາຍພວກ, ຫຼາຍຈຸ້ມຫຼາຍຊຸມ ແລະໄດ້ພາກັນປະຖິ້ມຊື່ດັ້ງເດີມເກົ່າແກ່ເສັຽເອົາຊື່ສຳຫຼັບໃຊ້ເອີ້ນກັນ ເມື່ອຖອຍລົງມາທາງໃຕ້ນີ້ ເປັນຊື່ໃໝ່ ຊຶ່ງມີຫຼາຍພວກຫຼາຍຈຸ້ມ ຄື :-

໑. ພວກທີ່ຖອຍລົງໄປທາງມີນທີນ ອາສັມ ຫຼືອາຊັມ ກາຍເປັນໄທອາໜົມ.

໒. ພວກທີ່ຖອຍລົງໄປທາງເໜືອ (ເບື້ອງຕີນນອນ) ຂອງພະມ້າ ກາຍເປັນໄທໃຫຍ່ຫລືຊານແລະງ້ຽວ.

໓. ພວກທີ່ຖອຍລົງໄປທາງຮູແມ່ນ້ຳເຈົ້າພະຍາ ກາຍເປັນໄທສຍາມ ຊຶ່ງບັດນີ້ເອີ້ນວ່າ "ໄທ".

໔. ພວກທີ່ຍັງຕົກຄ້າງຢູ່ໃນດິນແດນຈີນຕອນໃຕ້ ຫລື ໃນມົນທົນຍູນ່ານ ກາຍເປັນໄທອິສຣະຫລືທີ່ເອີ້ນກັນວ່າ "ລື້ ຫລື ໄທລື້".

໕. ພວກທີ່ຖອຍລົງໄປທາງຮູແມ່ນ້ຳຂອງກາງເປັນ "ລາວ" ຊຶ່ງພວກເຮົາເອີ້ນໂຕເອງຫລືພວກອື່ນເອີ້ນເຮົາວ່າ "ໄທລາວ" ຊຶ່ງເປັນຊາດລາວ. ປະເທດລາວທຸກວັນນີ້.

ເປັນຫຍັງພວກລາວນີ້ຈຶ່ງມີຊື່ເອີ້ນວ່າ "ລາວ" ໃນເມື່ອຍາມເວົ້າກັບຫລືເອີ້ນໂຕເອງກໍໃຊ້ຄຳວ່າ "ໄທ" ຢູ່ ພວກອື່ນກໍ່ເອີ້ນລາວວ່າ "ໄທລາວ, ໄທລ້ານຊ້າງ, ໄທຫຼວງພະບາງ, ໄທວຽງຈັນ ຯລຯ" ແຕ່ລາວເອີ້ນຊື່ຊາດວ່າ "ລາວ" ແລະຊື່ປະເທດວ່າ "ປະເທດລາວ".

ການທີ່ເອີ້ນຊື່ຊາດຊື່ປະເທດວ່າ "ລາວ" ນັ້ນກໍ່ເພາະວ່າ :-

໑. ເພື່ອຈັກຮັກສາຊື່ເກົ່າແກ່ດັ້ງເດີມຂອງລາວປະການໜຶ່ງ.

໖. ແລະ ເພື່ອຈັກໃຫ້ ເຂົ້າກັບໄດ້ ກັບ ພວກ ລະວ້າ ຫລືລົວະ ຊຶ່ງເປັນເຈົ້າຂອງບ້ານເດີມເກົາແກ່ນັ້ນເປັນ ປະການທີ່ສອງ.

ເຫດນີ້ ພວກລາວສາຂາ ຣູແມ່ນ້ຳຂອງ ຈຶ່ງໄດ້ມີຊື່ ເອີ້ນວ່າ "ລາວ" ເປັນຊາດລາວ ປະເທດລາວມາຈົນ ສູ່ມື້ນີ້.

໖.- ຄໍາວ່າ "ລາວ" ມາແຕ່ໃສ?

ກົກເຄົ້າເຫງົ້າກໍຄໍາວ່າ "ລາວ" ນັ້ນມາແຕ່ໃສ? ເປັນຫຍັງຈຶ່ງເອີ້ນວ່າ "ລາວ" ນັກການສຶກສາແລະນັກ ປວັດສາດໄດ້ສັນນິດຖານໄປຫຼາຍຢ່າງຕ່າງໆ ກັບ ບາງ ທ່ານກ່ວ່າ "ລາວ" ມາຈາກຄໍາວ່າ "ເຫລົາບ້າງ, ລົວະ ຫລືລະວ້າບ້າງ, ລະວຸບ້າງ, ດາວບ້າງ, ຯ" ທັງນີ້ກໍ່ເປັນ ແຕ່ພຽງການສັນນິດຖານທ່ນັ້ນ ເພາະປະວັດສາດລາວ ກໍ່ບໍ່ໄດ້ບອກໄວ້ວ່າ "ລາວ" ແຕ່ກົກເຄົ້ານັ້ນມາແຕ່ໃສຄັກ ແທ້ແນ່ນອນ.

ມີແຕ່ພົງສາວະດານລ້ານຊ້າງວ່າ "ລາວ" ມາ ແຕ່ໝາກນ້ຳເຕົ້າ ການທີ່ນັກປາດບູຮານຂອງລາວໄດ້ ຂຽນໄວ້ວ່າ "ລາວ" ມາແຕ່ໝາກນ້ຳເຕົ້າປຸງນັ້ນ ເປັນນະ

ໃນບາງທາງການເມືອງການປົກຄອງຂອງຂຸນບູຣົມມະຫາຣາຊ. ເພື່ອປະສົງຈະໃຫ້ຄົນລາວກັບພວກເຈົ້າຂອງທີ່ເດີມໃນດິນແດນລ້ານຊ້າງໄດ້ອາໃສຢູ່ດ້ວຍກັນໂດຍຄວາມສງົບສຸກບໍ່ບຽດບຽນກັນ.

ຄຳວ່າ "ໜາກນ້ຳເຕົ້າ" ນັ້ນໝາຍເຖິງບົມ ຄືວ່າຄົນເຮົາພວກມາຈາກໜາກນ້ຳເຕົ້າໜ່ວຍດຽວກັນນັ້ນ ມີເລືອດເນື້ອເຊື້ອສາຍກົນນົມດຽວກັນຫລືອອກມາແຕ່ບ່ອນດຽວກັນ ຈຶ່ງໄດ້ເປັນພວກດຽວກັນ. ເພາະຄົນທີ່ອອກມາຈາກໜາກນ້ຳເຕົ້າໜ່ວຍດຽວກັນນັ້ນມີຫລາຍພວກ ເຫດນັ້ນ ພົງສາວະດານເມືອງແຖງຈຶ່ງໄດ້ເວົ້າວ່າ ຄົນພວກອອກມາແຕ່ໜາກນ້ຳເຕົ້າປຸງນັ້ນ ເປັນຊາດດຽວກັນ ຄືອອກມາຈາກໜາກນ້ຳເຕົ້ານັ້ນເປັນໄທ, ເປັນລາວ, ເປັນແກວ, ເປັນຫ, ແລະເປັນຂ້າ. ທັງນີ້ກໍ່ເພື່ອຈັກໃຫ້ຄົນພວກທີ່ອອກມາ ຈາກໜາກນ້ຳເຕົ້ານີ້ເຂົ້າໃຈວ່າເປັນພວກດຽວກັນ ຫລື ເປັນຊົນຊາດດຽວກັນນັ້ນເອງ.

ແຕ່ເອກະສານ ຈົດໝາຍເຫດ ທາງ ປວັດສາດເມື່ອ ສໄມລາວຢູ່ໃນດິນແດນຈີນນັ້ນ ປາກົດມີຄຳວ່າ "ອ້າຍລາວ" ໃນຈົດໝາຍເຫດຂອງຈີນ ໃນສໄມຕອນຕົ້ນພຸທະການແລະພາຍຫຼັງຈາກຕົ້ນພຸທະການ (ພຸທະ

ສາສນາ) ມາແລ້ວກໍ່ປາກົດມີຄຳວ່າ "ອ້າຍລາວ, ງາຍ ລາວ, ແຊບລາວ, (ຊາບລາວ) ໄກລາວ ຯລຯ.

ເຫດນີ້ຖ້າຈະປະມານ ຫລື ຕວງເອົາວ່າ "ລາວ" ຄຳນີ້ມາຈາກຄຳວ່າ "ດາວ" ຈີນເວົ້າສຽງ "ດ" ບໍ່ເປັນ (ບໍ່ຖືອງ) ຈຶ່ງໄດ້ກາຍມາເປັນສຽງ "ລ" ຄືຄຳວ່າ "ລາວ" ນັ້ນ ກໍ່ເປັນການສັນນິດຖານຫລືປະມານ (ຕວງ) ທີ່ມີເຫດຜົນເປັນທີ່ນ່າເຊື່ອຖືປູ່ຫາງ ແຕ່ເຖິງຈະຢ່າງໃດກໍ່ຕາມ ຄຳວ່າ "ລາວ" ຄຳນີ້ ກໍ່ໄດ້ມີປາກົດມາແລ້ວແຕ່ປາງບູຮານ ຖ້າບໍ່ຢ່າງນັ້ນກໍ່ຄົງຈະບໍ່ປາກົດໃນຈົດໝາຍເຫດຂອງຈີນ.

ແຕ່ກ່ອນຕົ້ນພຸທະການປະມານກ່ອນ ພ.ສ. ໖໐໐ ຂຶ້ນໄປນັ້ນ ໃນຈົດໝາຍເຫດຂອງຈີນ ປາກົດມີແຕ່ຊື່ເມືອງ ເຊັ່ນ ໃນຈົດໝາຍເຫດຂອງຈີນກ່ອນ ໆ ພຸທະການປະມານ ໑໔໑໗ ປີ ກະສັດຈີນໃນຣາຊວົງແຮ່ຫຼືເຮັງໄດ້ຈັດສົ່ງທູດໄປຍັງເມືອງປາ ນະຄອນຫລວງຂອງລາວໃນສໄມບູຮານນັ້ນ ທັງນີ້ກໍ່ນ່າຈະເປັນເພາະເຫດວ່າ ການເອີ້ນຊື່ຊາດໃນປາງນັ້ນບໍ່ທັນນິຍົມກັນ ຈຶ່ງພາກັນເອີ້ນຕາມຊື່ບ້ານຊື່ເມືອງ ເຊັ່ນເມືອງລຸງ, ເມືອງປາ, ເມືອງງ້ຽວ.

ຄຳວ່າ "ອ້າຍ" ນັ້ນ ເປັນພາສາລາວແທ້ ເປັນ

ຄຳສຳຫຼັບຍົກຍໍບັນດືຫລືຍົກຍ້ອງບັນດື ຈຶ່ງໄດ້ມາພໍ້ພວກ "ດາວ" (ລາວ) ເຂົາ ເຫັນວ່າພວກດາວ (ລາວ) ເປັນຊາດທີ່ຈະເຣີນຮຸ່ງເຣືອງມີການຢູ່ດີກິນດີ ມີຈາຣີດແບບແຜນປະເພນີ ມີວັທນະທັມ ຈຶ່ງໄດ້ຍົກຍໍຫລືໃຫ້ກຽດຍົກຍ້ອງບັນດືເອີ້ນວ່າ "ອ້າຍດາວ" (ອ້າຍລາວ) ແຕ່ເວົ້າບໍ່ເປັນຫລືບໍ່ຖ້ອງ (ບໍ່ຊັດແຈ້ງ) ຈຶ່ງເລີຍກາຍເປັນ "ອ້າຍລາວ" ໄປເສັຽ ຂໍຍົກຕົວຢ່າງເຫດການເຫັນຢູ່ໃນປັຈຈຸບັນນີ້ ຫລືທຸກມື້ນີ້ມາປຽບທຽບໃຫ້ເຫັນວ່າສຽງ "ດ" ນັ້ນກາຍມາເປັນສຽງ "ລ" ກໍ່ຄືຄົນຈີນ (ເຈັກ) ໃນເມືອງລາວ. ເມືອງໄທ ແລະຄົນລາວທາງໃຕ້ລາງບ່ອນ ກໍ່ເວົ້າສຽງ "ດ" ເປັນສຽງ "ລ" ໄປໝົດ ຄືຄຳວ່າ :

ດີ	ເປັນ	ລີ
ແດງ	,,	ແລງ
ແມງດາ	,,	ແມງລາ
ເດັກ	,,	ເຫັກ
ດິບ	,,	ລິນ

ຯ ລ ຯ

ປຽບທຽບກັບເຫດການທີ່ເຫັນຢູ່ໃນປັຈຈຸບັນນີ້ແລ້ວ ຄຳວ່າ "ດາວ" ໃນ ສໄມບູຮານເມື່ອສອງສາມພັນປີ ນັ້ນກາຽມາເປັນ "ລາວ" ໄດ້ດັ່ງນີ້.

ເມື່ອຈີນມາພົບພວກດາວເຂົ້າເຫັນວ່າພວກ "ດາວ ຫລືລາວ" ນີ້ ເປັນຊາດທີ່ຈະເຣີນຮຸ່ງເຮືອງແລ້ວ ຈຶ່ງ ໄດ້ໃຫ້ກຽດຍົກຍ້ອງນັບຖືເອີ້ນວ່າ "ອ້າຽ ດາວ/ລາວ" ຄວາມ ຈິງກໍ່ຄືອ້າຽດາວ ແຕ່ເວົ້າບໍ່ເປັນບໍ່ຖືອງຈຶ່ງກາຽເປັນ "ອ້າຽ ລາວ" ໄປເສັຽ.

ຄຳວ່າ "ອ້າຽ" ເປັນພາສາລາວໝາຽຄວາມວ່າ "ຜູ້ເກີດກ່ອນ ຫລື ຜູ້ທີ່ໜຶ່ງ ເປັນຕົ້ນວ່າ ເດືອນອ້າຽ ໝາຽ ຄວາມວ່າເດືອນທີ່ໜຶ່ງຂອງປີ, ອ້າຽເຂີຽ ໝາຽຄວາມວ່າ ຜົວຂອງເອື້ອຽ (ພີ່ເຂີຽ) ອ້າຽລາວຈຶ່ງໝາຽຄວາມວ່າ ຊາດລາວຄືຊາດທີ່ເປັນອ້າຽ (ພີ່) ເປັນຊາດທີ່ເກີດກ່ອນ, ມາຢູ່ກ່ອນ, "ລາວ" ເປັນຊື່ຊາດ.

"ອ້າຽ" ເປັນຄຳໃຫ້ກຽດຍົກຍໍຍົກຍ້ອງ ທຸກມື້ນີ້ຫລື ປັຈຈຸບັນນີ້ ຄົນຈີນ (ເຈັກ) ນັບຖືຄົນລາວ, ຄົນໄທ, (ໄທ, ລາວ) ມີສັກສະກຸນເປັນອ້າຽຂອງພໍ່ຫລືພີ່ຊາຽພໍ່ ໂດຽ ສອນໃຫ້ພວກເຮົາ (ໄທລາວ) ເອີ້ນເຂົາເຈົ້າວ່າ "ເຈັກ" ຊຶ່ງໝາຽຄວາມວ່າ "ນ້ອງພໍ່" ຄືຄົນລາວຄົນໄທ ມີ

ສັກສະກຸນເປັນອ້າຍ (ພີ່ຊາຍ) ຂອງພໍ່ ຄນເຈັກ (ຈີນ) ມີ ສັກສະກຸນເປັນນ້ອງພໍ່ ຫລືເວົ້າຢ່າງງ່າຍໆວ່າ "ໄທລາວ" ມີສັກສະກຸນເປັນ "ອ້າຍ" ພໍ່ຂອງຈີນ (ເຈັກ) ຈີນມີ ສັກສະກຸນເປັນ "ນ້ອງ" ພໍ່ຂອງໄທລາວ.

ແຕ່ພວກອ້າຍລາວ (ອ້າຍດາວ) ຄືພວກລາວຫລື ໄທລາວນີ້ ຖືສັກສະກຸນວ່າເປັນພວກ "ດາວ, ໄທ້, ແຖນ" ຈຶ່ງໄດ້ເອີ້ນໂຕເອງວ່າເປັນພວກ "ໄທ້" ຫລືໃຊ້ຄຳວ່າ "ໄທ້" ເປັນຊື່ກາງສຳຫລັບເອີ້ນກັນ (Common Noun) ແຕ່ ຊື່ຊາດ (Proper Noun) ນັ້ນຄືຄຳວ່າ "ດາວ" ຈີນເວົ້າ ຄຳວ່າ "ດາວ" ບໍ່ເປັນຈຶ່ງກາຍມາເປັນ "ລາວ" ແລະ ເວົ້າຄຳວ່າ "ໄທ້" ບໍ່ຖ້ອງບໍ່ຊັດຈຶ່ງກາຍມາເປັນ "ໄຕ, ຕ້າ" ເພາະວ່າ ພາສາຈີນມີຫລາຍພາສາ ແຕ່ສຳນຽງ ຈີນແຕະບ້ອງອອກສຽງເປັນ "ໄທ້ຫລືໄຖ" ປຸ. ຕົວ "ໄທ້" ນ້ໜັງສືຈີນຂຽນເປັນຮູບດັ່ງນີ້ (大).

ຄຳວ່າ "ໄທ້" ມີຄວາມໝາຍຕາມຮູບຄຳສັບດັ່ງນີ້ ໄທ້ = ມະຫາ ໝາຍຄວາມວ່າ ໃຫຍ່ຫລາຍຫລືຍິ່ງໃຫຍ່ ທຽບກັບພາສາອັງກິດວ່າ (The Great) ເຫດນີ້ວົງສະກຸນ ຂອງພວກລາວຫລືພວກໄທ້ນີ້ ຈຶ່ງໄດ້ຖືວ່າເປັນຊາດໃຫຍ່ ຊາດມີອຳນາດ ເປັນພວກສະກຸນ "ໄທ້" ບານເມືອ

ເອີ້ນກັນຈຶ່ງໄດ້ໃຊ້ຄຳວ່າ "ໄທ້, ໄທ" ແຕ່ນາມຊາດນັ້ນເອີ້ນວ່າ "ລາວ" ເປັນຕົ້ນວ່າຍາມຖາມກັນເວົ້າກັນວ່າ:-

ເຈົ້າແມ່ນໄທໃສ? ໝາຍຄວາມວ່າ ເຈົ້າເປັນຄົນບ້ານໃດເມືອງໃດ?" ຜູ້ຖືກຖາມຈະຕອບວ່າ "ຂ້ອຍ (ຂ້າເຈົ້າ) ແມ່ນໄທວຽງຈັນ, ໄທຫຼວງພະບາງ, ໄທບ້ານນັ້ນ . . . ເມືອງນັ້ນ . . . ໃສ່ຊື່ບ້ານຊື່ເມືອງລົງໄປ ເປັນໄທເມືອງສາລະວັນ, ໄທຈຳປາສັກ, ໄທທ່າແຂກ, ໄທບ້ານທ່າເດື່ອ, ໄທໜອງຄາຍ, ໄທອຸບົນ ຯລຯ".

ຄຳວ່າ "ໄທ" ທີ່ໃຊ້ເວົ້າຈາກັນທຸກວັນນີ້ຈຶ່ງມີຄວາມໝາຍແປວ່າ "ຄົນຫຼືມະນຸດ" ຄືຄົນພວກທີ່ສືບເຊື້ອສາຍມີສະກຸນກຳເນີດມາແຕ່ "ໄທ້ແຖນ" ຫລືເປັນພວກທີ່ສືບເຊື້ອສາຍມາແຕ່ ສໄມອານາຈັກແຖນ ຖ້າຢູ່ເທິງຟ້າ ສວັນກໍ່ເປັນພວກຜີທີ່ມີອຳນາດ ມີລິດມີເດດເອີ້ນວ່າ "ຜີໄທ້, ຜີແຖນ" ຖ້າລົງມາຢູ່ດິນກໍ່ເປັນຄົນຫລືມະນຸດພວກທີ່ມີອຳນາດຫລືລິດເດດນັ້ນເອງ ຖ້າເອົາໄປເອີ້ນເປັນຊື່ຊາດກໍ່ໄດ້ຊື່ວ່າ "ຊົນຊາດໄທ".

ເຫດນີ້ ພວກນັກການສຶກສາ ແລະ ນັກປະວັດສາດສໄມປັດຈຸບັນ ຈຶ່ງໄດ້ເອີ້ນຄົນພວກນີ້ເປັນຊື່ໂຮມຫຼືຊື່ກາງວ່າ "ຊົນຊາດໄທ" ເພາະພວກນີ້ໃຊ້ຄຳວ່າ "ໄທ້, ໄທ"

ເອີ້ນໂຕເອງ ຫລື ເອີ້ນກັນ ແຕ່ພວກລາວເອີ້ນວ່າເຮົາເປັນ "ຊົນຊາດລາວ" ຕາມຊື່ເກົ່າແກ່ມາແຕ່ປາງບູຮານ ຄວາມຈິງແລ້ວພວກທີ່ນັກປະວັດສາດເອີ້ນວ່າ "ຊົນຊາດ ໄທ" ນັ້ນກໍ່ແມ່ນ "ຊົນຊາດລາວ" ໃນສະໄໝບູຮານ ນັ້ນເອງ.

ຄຳວ່າ "ໄທ້" ຄຳນີ້ສັນນິດຖານວ່າ ຈີນເປັນຜູ້ ເອີ້ນລາວກ່ອນ (ຕົວໄທ້ຂຽນດັ່ງນີ້ 大) ຊຶ່ງມີຄວາມໝາຍ ແປວ່າ "ຄົນ".

ໝາຍເຫດ : ເຣື່ອງ "ລາວ" ນີ້ມາແຕ່ໃສ ? ໃຫ້ອ່ານເຣື່ອງ "ລາວ" ໂດຍພະທັມທິຣາຣາຊ ເຈົ້າອາວາດວັດສາມປື້ມ ບາງ ກອກ ພິມລົງໃນໜັງສືໂຍບົກ, ກາລະສົບສານ.

໓.– ລາວສໄໝນະຄອນລຸງ, ນະຄອນປາ, ນະຄອນງ້ຽວ

໑. ເມືອງລຸງ, ເມືອງປາແລະເມືອງງ້ຽວ ກ່ອນ ພຸທສາສນາ ໓໐໐໐ ປີປາຍ.

ປະວັດສາດບາງສະບັບກ່າວວ່າ ຊົນຊາດອ້າຍລາວ ຊຶ່ງຝຣັ່ງເອີ້ນວ່າ "ມຸງ" ນັ້ນ ເປັນຊາດເຜົ່າພັນຕູເຣນຽນ (Turanion) ບາງສະບັບກໍ່ວ່າ ເປັນເຜົ່າພັນຊາດມົງໂກນ (Mongol) ເພາະເຫັນວ່າ ເປັນເຜົ່າພັນ ຊາດມົງໂກນນັ້ນ

ເອງ   ພວກຝັ່ງຈຶ່ງໄດ້ເອີ້ນຊື່ຊົນຊາດອ້າຍລາວອີກຊື່ໜຶ່ງ ວ່າ "ມົງ ຫລື ມຸງ" ຊົນຊາດອ້າຍລາວຫລືລາວນີ້ຍັງມີ ເຊື້ອສາຍສືບຕໍ່ມາຮອດມື້ນີ້ ແລະມີບົດບາດອັນສຳຄັນເປັນ ເຈົ້າຂອງຢູ່ໃນ ດິນແດນ ແຫຼມທອງ ຫລື ສຸວັນະພູມ ມີຊື່ ເອີ້ນວ່າ "ລື້, ເຂີນ, ບວນ, ງ້ຽວ, ຊານ, ໄທແລະລາວ" ຫລື ພວກນັກການ ປວັດສາດ ທັງຫຼາຍ ເອີ້ນເປັນ ຊື່ໂຮມ ຫລື ຊື່ກາງວ່າ "ຊົນຊາດໄທ" ເພາະພວກນີ້ ໃຊ້ຄຳວ່າ "ໄທ້" ເອີ້ນໂຕເອງ.

ຊົນຊາດລາວນີ້ໄດ້ອົພະຍົບລົງມາ ຈາກເຂົາອັນໄຕ ຫລືແອນໄຕ ໃນມອງໂກເລັຽ ໄດ້ເຂົ້າມາຕັ້ງພູມລຳເນົາຢູ່ ໃນດິນແດນທີ່ເປັນປະເທດຈີນທຸກມື້ນີ້   ເມື່ອປະມານ ກ່ອນພຸທະການ ໓໐໐໐ ປີປາຍ.   ແລະຫຼັງຈາກນັ້ນມາ ຈີນໄດ້ຍ້າຍມາຈາກທະເລສາບແຄສະປຽນ (Caspian Sea) ເຂົ້າມາຢູ່ໃນດິນແດນຈີນຕອນເໜືອເມື່ອປະມານ ໒໓໐໐ ປີ ກ່ອນພຸທະສາສນາ ຂນະທີ່ຈີນເຂົ້າມານັ້ນປາກົດວ່າ ພວກລາວ ໄດ້ຕັ້ງໂຕ ສ້າງແປງ ບ້ານເມືອງ ເປັນ ປຶກແຜ່ນ ໝັ້ນຄົງແລ້ວ   ຈຶ່ງນັບວ່າລາວໄດ້ເຂົ້າມາຢູ່ໃນດິນແດນ ຕອນ ເໜືອ ຂອງ ທວີບ ອາເຊັຽ ຫລື ອາຊີ ນີ້ ກ່ອນ ຈີນ ເປັນ ເວລາຫຼາຍຮ້ອຍປີແລ້ວ.

ເມື່ອຈີນມາພໍ້ລາວເຂົ້າຈຶ່ງໄດ້ເອີ້ນວ່າ "ອ້າຽລາວ" ຄຳວ່າ "ລາວ" ເປັນຊື່ຊາດ ຄຳວ່າ "ອ້າຽ" ເປັນຄຳນັບຖືໃຫ້ກຽດ ຕໍ່ມາຈີນເອີ້ນລາວວ່າ "ເຫຼົາເກັ້ຽ" ໝາຽຄວາມວ່າ ຊາດເກົ່າແກ່ ສ່ວນຄຳວ່າ "ນິງຫລືນຸງ" ນັ້ນ ເປັນຊື່ທີ່ພວກນັກການສຶກສາ ປວັດສາດຊາດຜິວຂາວ (ຝຣັ່ງ) ເອີ້ນ ເພາະເຫັນວ່າລາວເປັນເຊື້ອຊາດເຜົ່າພັນມົງໂກນ ພວກລາວຈຶ່ງຖືກເອີ້ນຊື່ວ່າ "ນຸງຫລືນິງ" ສໃນທີ່ລາວ ລົງມາຕັ້ງປະເທດ ຢູ່ໃນ ດິນແດນ ຕອນເໜືອຂອງຈີນນັ້ນລາວເອີ້ນກັນຕາມຊື່ເມືອງໃນປາງນັ້ນມີເມືອງຫລືນະຄອນໃຫຍ່ໆ ຢູ່ສາມເມືອງຫລືສາມປະເທດ.

໑. ເມືອງລຸງ ຫລື ແຄວ້ນລຸງ ຢູ່ຕອນຕົ້ນແມ່ນ້ຳເຫຼືອງ ຫລືແມ່ນ້ຳຮວງໂຫ, ຈີນເອີ້ນວ່າ ລຸງເຈົາ.

໒. ເມືອງປາ ຫລື ແຄວ້ນປາ ຢູ່ໃຕ້ເມືອງລຸງລົງມາ ບັດນີ້ຈີນເອີ້ນວ່າ ຈຸງກິງ.

໓. ເມືອງງ້ຽວ ຫລື ແຄວ້ນງ້ຽວ ຢູ່ທາງຕອນກາງຂອງແມ່ນ້ຳແຍງຊີກຽງຫລືຍາງຊີກຽງ ຈີນເອີ້ນວ່າ "ຈາງຊາ".

ຊື່ເມືອງ ຫລື ຊື່ປະເທດທັງສາມຊື່ນີ້ລາວຍັງບໍ່ມາເອີ້ນເປັນຊື່ຂອງຊາດປຸ່ຈີນຮອດທຸກມື້ນີ້ກໍ່ມີຄື ລຸງເປ່ນ, ປາຍີ ຫລື ປາອີ້, ງ້ຽວ ເມື່ອຊົນຊາດລາວອົພະຍົບລົງມາທາງໃຕ້ໄດ້ແຍກຍ້າຍກັນໄປເປັນພວກເປັນໝູ່ເປັນຈຸ້ມ ມີຊື່ເອີ້ນແຕກຕ່າງກັນໄປ ເປັນຕົ້ນວ່າ “ຊາວລາວ, ແຊວລາວ, ງາງລາວ, ອ້າງລາວ, ໂກລາວ ຯ”

໒. ຈີນມາພໍ້ລາວ ກ່ອນພຸທະສາສນາປະມານ ໒໐໐໐ ປີປາງ.

ຝ່າຍຊົນຊາດຈີນ ຊຶ່ງສໄມນັ້ນເປັນພວກລ້ຽງສັດ ຕ້ອງຍ້າຍທ່ຽວໄປຕາມບ່ອນໃດມີຫຍ້າໃຫ້ສັດລ້ຽງກິນ ໄດ້ພາກັນອົພະຍົບມາທາງທິດຕະວັນອອກ (ຕາເວັນອອກ) ຂ້າມພູເຂົາຫຽບຊານລົງມາທາງທະເລຊາຍໂກບີ ມາຕັ້ງຫຼັກແຫຼ່ງຢູ່ຕາມຣິມແມ່ນ້ຳໄຫວ ຊຶ່ງເປັນສາຂາໜຶ່ງຂອງແມ່ນ້ຳຮວງໂຫ ຫລື ແມ່ນ້ຳເຫຼືອງ ເມື່ອປະມານກ່ອນພຸທະສາສນາ ໒໐໐໐ ປີປາງ ຕໍ່ມາເມື່ອສໄມພະເຈົ້າຟູຣິກະສັດອົງຕໍາອິດຂອງຈີນ. ໄດ້ເຂົ້າຢາດເອົາເມືອງເຊັນສີໄປຈາກລາວ. ເພາະສໄມພະເຈົ້າຟູຣີນີ້ຈີນໄດ້ໂຮມກັນເປັນປຶກແຜ່ນແໜ້ນໜາຂຶ້ນແລ້ວ.

ແລະຕໍ່ມາຮອດສໄມພະເຈົ້າອູເຕ້ ກະສັດຈີນແຫ່ງຣາຊວົງແຮ່ ຫລື ເຮັ່ງ ໄດ້ໃຫ້ສຳຣວດດິນແດນຈີນຂຶ້ນ ຈຶ່ງໄດ້ເຂົ້າມາພໍ້ກັບອານາຈັກຂອງລາວ ເມື່ອປະມານກ່ອນພະພຸທະສາສນາ ໑໖໓໗ ປີ ເຂດແດນຂອງລາວກັບຈີນຈຶ່ງຕິດຕໍ່ກັນຄື ຈີນຢູ່ໃນທາງຕົ້ນແມ່ນ້ຳເຫຼືອງຂຶ້ນໄປ ມີເມືອງເປັງປາງເປັນເມືອງຫຼວງ ຢູ່ໃນ[illegible] ສ່ວນອານາຈັກຂອງລາວຫລືອ້າຍລາວນັ້ນ ຢູ່ໃຕ້ຈີນລົງມາຄືເຂດມົນທົນເສສວນ, ຣູເປ, ຣູນານ, ແລອັນຣຽງຂອງຈີນທຸກວັນນີ້. ຣວມຄວາມວ່າ ລາວກັບຈີນມີອານາເຂດຕິດຕໍ່ກັນ ຈີນຢູ່ເທິງ (ທາງເໜືອ) ລາວຢູ່ທາງໃຕ້ (ທາງລຸ່ມ).

ປາກົດໃນເອກະສານຈົດໝາຍເຫດຂອງຈີນວ່າກະສັດຈີນໃນຣາຊວົງເຮັ່ງຫລືແຮ່ພະອົງໜຶ່ງ ໄດ້ຈັດສົ່ງຂຸນນາງຈີນຊື່ວ່າ "ນົງດູ" ເປັນທູດໄປເມືອງປາຫລືນະຄອນປາ ເມື່ອກ່ອນພະພຸທະສາສນາປະມານ ໑໔໒໘ ປີ ຈຶ່ງເຫັນໄດ້ວ່າການເອີ້ນຊື່ກັນໃນສໄມນັ້ນ ໄດ້ນິຍົມເອີ້ນກັນຕາມຊື່ເມືອງ ຍັງບໍ່ທັນໃຊ້ຊື່ຊາດ ຈຶ່ງບໍ່ປາກົດໃນຈົດໝາຍເຫດຂອງຈີນວ່າ "ລາວ" ເພາະວ່າ ສໄມນັ້ນເອີ້ນ

ກັບແຕ່ຊື່ເມືອງ ແລະຈີນກໍ່ຍັງບໍ່ທັນມີຊື່ເອີ້ນວ່າ "ຈີນ" ຈີນສໄມນັ້ນເອີ້ນວ່າ ພວກປັ້ກ ຫລືຫງຽງບູ້.

໗. <u>ລາວເສັຽເມືອງລຸງ ເມືອງປາ ເມືອງງ້ຽວໃຫ້ແກ່ຈີນ.</u> (ປະມານກ່ອນ ພ.ສ. ໗໐໐ ປາງ ເຖິງ ພ.ສ. ໗໖໕)

ລາວເປັນຊາດທີ່ມີອາຊີບໃນການປູກຝັງ (ການກະສິກັມ) ເປັນອາຊີບປະຈຳຊາດ ມີນິໄສຮັກສງົບໃຈບຸນ ເອື້ອເຟື້ອເພື່ອແຜ່ ເມັດຕາກະຣຸນາ ບໍ່ຊອບບຽດບຽນຜູ້ອື່ນ ຈີນເປັນພວກລ້ຽງສັດ ຈຶ່ງເປັນຊາດທີ່ຊອບໃນການລົບເລວ ແລະ ຣຸກຣານຜູ້ອື່ນຍາດແຍງ ແລະ ແຜ່ອຳນາດຢູ່ສເມີ ເມື່ອຈີນໄດ້ມາເພິ່ງພາອາໄສລາວ ແລະ ໄດ້ຄົບຫາສະມາຄົມກັນເປັນເວລາຫລາຍໆ ຮ້ອຍປີ ສໄມເມື່ອລາວຍັງຈະເຣີນຮຸ່ງເຣືອງຢູ່ແລະຈີນຍັງບໍ່ທັນຈະເຣີນຮຸ່ງເຣືອງທໍ່ລາວ ເພາະວ່າຈີນເປັນພວກມາທີຫລັງລາວ ຈີນໄດ້ເພິ່ງພາອາໄສລາວ ຈີນກໍ່ຍົກຍ້ອງນັບຖືລາວແລະເອີ້ນວ່າ "ອ້າຍລາວ".

ເມື່ອຈີນໄດ້ຕັ້ງຕົວເປັນປຶກແຜ່ນແໜ້ນໜາຈະເຣີນຮຸ່ງເຣືອງຂຶ້ນແລ້ວ ຈີນກໍ່ເຣີ່ມທຳການຣຸກຣານລາວຢ່າງ

ສງົບ (ຮຸກງານ) ໂດຍລາວບໍ່ຮູ້ໂຕ ໃນທີ່ສຸດຈີນກໍ່ໄດ້ແຍ່ງການອາຊີບແຍ່ງບ່ອນເຮັດປູ່ເຮັດກິນໄປຈາກລາວ ພວກລາວທີ່ເປັນເຈົ້າຂອງບ້ານເປັນພວກຮັກຄວາມສງົບກໍ່ພາກັນໜີການຍາດແຍ່ງບຽດບຽນຂອງຈີນ ແລະຖອຍລົງມາທາງໃຕ້ ຕໍ່ມາປະມານ ໔໐໐ ປີ ກ່ອນພຸທະສາສນາ ພວກຕາດ ຫຼື ພວກຕາຕ້າ (Tatar) ໄດ້ຍົກກອງທັບໃຫຍ່ຮຸກຮານເຂົ້າມາໃນດິນແດນຈີນ ຊາວຈີນໄດ້ຮັບຄວາມລຳບາກເດືອດຮ້ອນ ຈໍ່ງໄດ້ພາກັນອົພະຍົບໜີໄພຈາກພວກຕາດ ລົງມາໃນ ນະຄອນລຸງ ຂອງ ລາວ ເປັນຈຳນວນຫຼາຍ ແລະ ເມື່ອຈີນເຂົ້າມາຫຼາຍ ຈີນເປັນຜູ້ຂຍັນຂັນແຂງໝັ່ນດຸໃນການທຳນາຫາກິນ ຫລື ເຮັດວຽກ ກໍ່ໄດ້ຍາດແຍ່ງການທຳມາຫາກິນຂອງລາວ ແຍ່ງບ່ອນອຸດົມສົມບູນ ແຍ່ງບ່ອນປູ່ບ່ອນເຊົາ ລາວເປັນຊາດຮັກຄວາມສງົບກໍ່ພາກັນຖອຍລົງມາທາງໃຕ້ ຫາພວກລາວທາງເມືອງປາ, ແລະຍອມປະຖິ້ມດິນແດນນະຄອນລຸງໃຫ້ແກ່ຈີນເມື່ອປະມານກ່ອນພຸທະສາສນາ ໓໐໐ ປີປາຍ.

ເມື່ອຈີນໄດ້ດິນແດນນະຄອນລຸງຂອງລາວໄວ້ໃນອຳນາດໝົດແລ້ວ ກໍ່ເຣີ່ມຮຸກຮານລາວໃນເມືອງປາຢ່າງສງົບຫຼືຮຸກງານອີກ. ໂດຍເຂົ້າແຊກຊຶມຍາດເອົາການທຳ

ມາຫາກິນ ການຄ້າການຂາຍຊຶ່ງເອີ້ນວ່າການເສຖກິຈ ແລະທຳການຜະສົມພັນ ຄືແຕ່ງງານ (ແຕ່ງດອງ) ກັບຄົນລາວ ໄປເທື່ອລະນ້ອຍ ໆ ຈົນໃນທີ່ສຸດຄືບັ້ນປາຍ ດິນແດນ ອານາເຂດນະຄອນປາ ຂອງ ລາວ ກໍ່ຕົກໄປຢູ່ໃນອຳນາດຂອງຈີນອີກ ເມື່ອປະມານ ພ.ສ. ໒໐໕ ລາວພວກທີ່ຮັກຄວາມເປັນອິສຣະທົນການບຽດບຽນຂອງຈີນບໍ່ໄດ້ ກໍ່ພາກັນຖອຍລົງມາທາງໃຕ້ໂຮມກັນກັບພວກລາວໃນນະຄອນງ້ຽວອີກ.

ສ່ວນນະຄອນງ້ຽວຫຼືເມືອງ ຈາງຊາ ຊຶ່ງເປັນເມືອງອິສຣະຂອງລາວອັນສຸດທ້າຍ ໄດ້ຖືກກອງທັບໃຫຍ່ຂອງພະເຈົ້າຈີນຊີຮ່ອງເຕ້ຜູ້ສ້າງກຳແພງເມືອງຈີນ ຍົກມາຕີອານາຈັກງ້ຽວ ເມື່ອປະມານ ພ.ສ. ໓໖໘ ຊາວລາວພວກທີ່ຮັກຄວາມເປັນອິສຣະພາບ ບໍ່ພໍໃຈຢູ່ໃຕ້ອຳນາດຂອງຈີນກໍ່ພາກັນອົພະຍົບຖອຍລົງມາທາງໃຕ້ອີກ ສ່ວນພວກທີ່ມີຄວາມຈຳເປັນລົງມາບໍ່ໄດ້ ເຫິງນານເຂົ້າກໍ່ກາຍເປັນຈີນໄປ ສະໄມນີ້ເປັນສະໄມທີ່ຈີນຈະເຣີນຮຸ່ງເຮືອງຫຼາຍແລ້ວ ແລະໄດ້ພາກັນດູຖູກປຽດປາມພວກອ້າຍລາວ ແລະພວກຊາດອື່ນ ໆ ທັງຫຼາຍວ່າ " ຮວນ " ບໍ່ໄດ້ຍົກຍໍລາວຢ່າງແຕ່ກ່ອນແລ້ວ.

ສຣຸບແລ້ວ ລາວເສັຽດິນແດນ ທີ່ເປັນ ບ້ານເມືອງຂອງລາວໃຫ້ແກ່ຈີນເທື່ອທໍາອິດ ເມື່ອປະມານ ພ.ສ. ໗໖໘ ໂຮມເວລາທີ່ອານາຈັກລຸງ, ປາ, ງ້ຽວ (ເມືອງລຸງ, ເມືອງປາ, ເມືອງງ້ຽວ) ຂອງລາວ ມີອາຍຸຍືນຢູ່ໄດ້ປະມານ ສາມພັນປີປາງ. ການທີ່ລາວເສັຽນະຄອນລຸງແລະນະຄອນປາຂອງລາວໃຫ້ແກ່ຈີນນັ້ນ. ເພາະເຫດການຮຸກຮານງຽບຂອງຈີນ ຄືການແຍ່ງເອົາບ່ອນທໍາມາຫາກິນ ແຍ່ງເອົາບ່ອນຢູ່ບ່ອນເຊົາ ແຍ່ງເອົາການຄ້າການຂາຽທີ່ເອີ້ນວ່າການຮຸກຢ່າງສງົບ ຫລືການຮຸກງຽບ. ຊຶ່ງເຮົາເອີ້ນໃນບັດນີ້ວ່າ "ຍາດເອົາການເສຖກິຈແລະທໍາການຜະສົມພັນ" ຄືຜູ້ຊາຽຈີນເອົາຜູ້ຍິງລາວເປັນເມັຽ (ແຕ່ງດອງຫລືແຕ່ງງານ) ລູກຫຼານທີ່ເກີດມາກໍ່ກາຽເປັນຈີນໄປ ແຕ່ຜູ້ຍິງຈີນເຂົາບໍ່ຍອມແຕ່ງງານກັບຜູ້ຊາຽລາວ ສ່ວນການເສັຽນະຄອນງ້ຽວຂອງລາວນັ້ນ ເພາະການຮຸກຮານທາງອາວຸດ (ການເສິກ) ຈາກພະເຈົ້າຈີນຊີຮ່ອງເຕ້ຂອງຈີນ.

ການຮຸກງຽບຫລືການຮຸກຢ່າງສງົບຂອງຈີນໃນສະໄມບູຮານ ຊຶ່ງປັດຈຸບັນນີ້ເຮົາເອີ້ນວ່າ "ສົງຄາມເຢັນຫລືສົງຄາມເສຖກິຈນັ້ນ" ກໍ່ຄົງຈະເໝືອນກັບການຮຸກງຽບ

ຂອງຈີນໃນເມືອງລາວສູ່ມື້ນີ້. ສໄໝສົງຄາມໂລກເທື່ອທີສອງແລ້ວໃໝ່ໆ ຈຶ່ງໄດ້ສແດງທ່າທີໃນການ ຈະຍຶດເອົາເມືອງລາວ (ປະເທດລາວ) ໄປເປັນເມືອງຂຶ້ນນັ້ນ ຫວັງວ່າ ພີ່ນ້ອງຊາວລາວ ທັງຫຼາຍຄົງ ຈະໄດ້ ເຫັນ ດ້ວຍ ສາຍຕາຂອງທ່ານແລ້ວ.

໔. ລາວສະໄໝ ອານາຈັກແຖນ ຫລື ອ້າຍລາວ ພ.ສ. ໔໖໑ – ໗໖໑

ເມື່ອລາວເສັຍນະຄອນລຸງ ນະຄອນປາແລະນະຄອນງ້ວໃຫ້ແກ່ຈີນປະມານ ພ.ສ. ໗໖໘ ແລ້ວ ກໍ່ພາກັນອົພະຍົບຖອຍລົງມາທາງໃຕ້ ຊອກຫາບ່ອນທຳນາຫາກິນບ່ອນຢູ່ບ່ອນເຊົາໃໝ່ທາງດິນແດນມົນທົນເສສວນຮຸນໜຳ ພວກທີ່ຖອຍລົງມາ ບໍ່ໄດ້ເທື່ອງນານເຂົ້າກໍ່ກາຍເປັນຈີນໄປ ພວກລາວທີ່ຖອຍລົງມາທາງໃຕ້ນີ້ໄດ້ມາໂຮມກັນສ້າງອານາຈັກລາວຂຶ້ນໃໝ່ອີກ ເມື່ອປະມານ ພ.ສ. ໔໖໑ ເອີ້ນວ່າ "ອານາຈັກແຖນຫລືອ້າຍລາວ" (ລາວແຖນຫລືລາວທຽນ) ມີນະຄອນເພງາຍຫລືຜາໄບເປັນເມືອງຫຼວງ ຊຶ່ງຕັ້ງຢູ່ໃນບໍຣິເວນມົນທົນຮຸນໜຳຂອງຈີນທຸກມື້ນີ້ ພະເຈົ້າແຜ່ນດິນລາວອົງທຳອິດແຫ່ງ

ຣາຊວົງເພງາຍຄືຂຸນເມືອງຫລືຂຸນເມັງ ຂຶ້ນຄອງຣາຊສົມບັຕ ເມື່ອ ພ.ສ. ໔໒໑.

ຝ່າງທາງຣາຊອານາຈັກ ຈີນປາງ ຣະໄມ ພະເຈົ້າອູ້ຕີ້ແຫ່ງຣາຊວົງຮັ່ນ ໄດ້ພະພຸທະຮູບທອງຄຳມາຈາກແຄວັ້ນຕູກິສຕັງ ພະອົງຊົງເຫລື້ອມໄສແລະຢາກຮູ້ລັດທິພະພຸທະສາສນາ ເພາະພະອົງຊົງເປີດໜ່າງໃນລັດທິເຕົ່າ ຈຶ່ງໄດ້ແຕ່ງຂຸນນາງເປັນຄນະທູຕໄປສືບພຸທະສາສນາໃນປະເທດອິນເດັຽ ຫລື ຊົມພູທະວີບ ເມື່ອ ພ.ສ. ໔໓໓ ແຕ່ຫົນທາງທີ່ຈະໄປຍັງປະເທດອິນເດັຽນັ້ນຕ້ອງຜ່ານອານາຈັກອ້າຍລາວ ແລະຂນະນັ້ນລາວກັບຈີນບໍ່ໄດ້ເປັນໄມຕີກັນ ຂຸນເມືອງກະສັດອານາຈັກແຖນເມືອງເພງາຍບໍ່ຍອມໃຫ້ຄນະທູດສືບສາສນາຂອງຈີນກາຍໄປ ເພາະປ້ານແມ່ນພວກສອດແນມຂອງຈີນມາສືບເຫດການບ້ານເມືອງຂອງລາວ ຄນະສືບສາສນາຂອງຈີນຕ້ອງຕ່າວຄືນໄປຍັງເມືອງຈີນ ຊຶ່ງເປັນເຫດໃຫ້ຈີນຍົກກອງທັບມາຕີລາວ.

ພະເຈົ້າອູ້ຕີ້ ຈຶ່ງໄດ້ຍົກກອງທັບມາຕີອານາຈັກແຖນຂອງລາວ ເມື່ອ ພ.ສ. ໔໕໓ ລາວໄດ້ທຳການຕໍ່ສູ້ປ້ອງກັນບ້ານເມືອງຢ່າງສາມາດ ການເສິກສົງຄາມ

ຣະຫວ່າງລາວກັບຈີນ ໄດ້ຕິດພັນກັນຢູ່ເປັນເວລາເຖິງສາມປີ ໃນທີ່ສຸດລາວສູ້ຈີນບໍ່ໄດ້ຕ້ອງຕົກໄປເປັນເມືອງຂຶ້ນຂອງຈີນເມື່ອ ພ.ສ. ໔໕ປີ ຈີນໄດ້ແບ່ງອານາຈັກແດນຂອງລາວອອກເປັນສອງພວກ ເພື່ອສດວກໃນການປົກຄອງ ແລະເພື່ອຕັດກຳລັງບໍ່ໃຫ້ລາວໂຮມກັນຕໍ່ສູ້ກັບຈີນເພື່ອກູ້ເອກຣາຊຂຶ້ນອີກ ຄື :–

໑. ພວກທາງເໜືອ ເອີ້ນວ່າ "ງາຍລາວ"

໒. ພວກທາງໃຕ້ " "ອ້າຍລາວ"

ອານາຈັກແດນຂອງລາວ ຕົກຢູ່ໃນຄວາມປົກຄອງຂອງຈີນມາປະມານ ໑໐໐ ປີ ຈົນເຖິງ ພ.ສ. ໕໕໑ ຈີນເກີດການວຸ້ນວາຍກັນຂຶ້ນ ເພາະການຍາດແຍ່ງຣາຊສົມບັດກັນ ຂຸນວັງເມືອງກະສັດຣາຊວົງເພງາຍ ເຊື້ອສາຍຂຸນເມືອງຜູ້ຄອງນະຄອນເພງາຍ ໄດ້ປະກາດອິສຣະພາບຂຶ້ນເມື່ອ ພ.ສ. ໕໕໒ ບໍ່ຍອມເປັນເມືອງຂຶ້ນຂອງຈີນອີກຕໍ່ໄປ.

ທາງຝ່າຍອານາຈັກຈີນ ໄດ້ຫັນໄປນັບຖືພະພຸທະສາສນາ ໄດ້ສົ່ງຄນະສືບສາສນາໄປຍັງປະເທດອິນເດັຍສຳເຣັດ ໄດ້ນຳເອົາພະພຸທະສາສນາ ມາເຜີຍແຜ່ໃນປະເທດຈີນ ຂຸນຫຼວງເມົາກະສັດລາວແຫ່ງນະຄອນເພງາຍ ໄດ້ນຳເອົາພະພຸທະສາສນາເຂົ້າມາແຜ່ຜາຍໃນ

ອານາຈັກລາວ ທາງຝ່າຍຈີນໄດ້ປ່ຽນນະໂຍບາຍແຜ່ອຳນາດຂະຫຍາຍດິນແດນຈາກທາງແສນຍານຸພາບ ມາເປັນທາງພຸທານຸພາບ ພະເຈົ້າມິ່ງຕີ່ກະສັດຈີນໄດ້ດຳເນີນນະໂຍບາຍທາງການເມືອງເພື່ອຂະຫຍາຍອານາຈັກຈີນ ໂດຍສົ່ງຄນະທູດໄປແຜ່ຜາຍພຸທະສາສນາ ຖ້າປະເທດໃດ, ບ້ານໃດເມືອງໃດຮັບນັບຖືເອົາພະພຸທະສາສນາ ຈີນກໍ່ເຂົ້າໃຈວ່າປະເທດບ້ານເມືອງນັ້ນຍອມເປັນເມືອງຂຶ້ນຂອງຈີນ ເນື່ອງຈາກລາວຍອມນັບຖືພະພຸທະສາສນາ ຈີນຈຶ່ງສົ່ງຂ້າຫຼວງຈີນມາປົກຄອງລາວດ້ວຍການເຂົ້າໃຈວ່າລາວເປັນເມືອງຂຶ້ນຂອງຈີນ ຂຸນໄລລາວກະສັດລາວບໍ່ຍອມ ຈີນກັບລາວຈຶ່ງໄດ້ເກີດເສິກສົງຄາມກັນຂຶ້ນອີກ ລາວໄດ້ທຳການຕໍ່ສູ້ປ້ອງກັນບ້ານເມືອງຢ່າງສາມາດ ຂຸນໄລລາວກະສັດນະຄອນເພງາຍຕາຍໃນສນາມຮົບ ໃນທີ່ສຸດລາວກໍ່ເປັນຝ່າຍເພ່ຍແລະຕົກໄປເປັນເມືອງຂຶ້ນຂອງຈີນອີກ ເມື່ອພ.ສ. ໐໒໑.

ໂຮມເວລາທີ່ລາວຕັ້ງເປັນອິສຣະໃນ ສໄມນະຄອນເພງາຍເປັນຣາຊທານີນັ້ນນັບເວລາໄດ້ ໒໐໐ ປີ ອານາຈັກລາວຕ້ອງເສັຽເອກຣາຊໃຫ້ແກ່ຈີນອີກເປັນເທື່ອທີ່ສອງ

ພວກລາວທີ່ບໍ່ພໍໃຈຢູ່ໃຕ້ອຳນາດຈີນ ກໍ່ພາກັນອົພະຍົບແຕກກະຈ່າງກັນລົງມາທາງໃຕ້ອີກ.

ລາວໃນ ສໄມນະຄອນເພງາຍນີ້ ໄດ້ພາກັນນິຍົມເອີ້ນໂຕເອງວ່າ "ໄທ້" ເພາະຖືວ່າເປັນພວກມີສະກຸນມາຈາກແຖນ, ໄທ້ ອັນມີກຳເນີດສືບມາແຕ່ດາວ. ຈຶ່ງເອີ້ນໂຕເອງວ່າ "ໄທ້" ທັງນີ້ກໍ່ເພື່ອສແດງໃຫ້ພວກດຽວກັນໄດ້ຮູ້ວ່າ ເປັນພວກໄທ້ນຳກັນແລະເປັນພວກດຽວກັນ. ເຫດນີ້ຈຶ່ງປາກົດໃນ ຈົດໝາຍເຫດຂອງຈີນ ໃນເວລາພາຍລຸນມາວ່າ "ໄຕ້, ໄຕ່" ເພາະຈີນເວົ້າຄຳວ່າ "ໄທ້" ບໍ່ເປັນຈຶ່ງໄດ້ກາຍເປັນ "ໄຕ້ເປັນໄຕ່" ໄປ.

໕.- ລາວ ສໄມ ອານາຈັກ ອິສຣະ ທົກ ນະຄອນ

ພ.ສ. ໗໘໔ - ໑໑໙໑

ເມື່ອລາວ ເສັຽອານາຈັກແຖນ ສໄມ ນະຄອນ ເພງາຍໃຫ້ແກ່ຈີນແລ້ວ ໄດ້ພາກັນອົພະຍົບແຕກແຍກຍ້າຍກັນໄປ ລາງພວກກໍ່ຖອຍລົງໄປທາງເໜືອຂອງພະມ້າ. ລາງພວກກໍ່ຖອຍລົງໄປທາງ ຕັງເກັ໋ຍ ຫຼືຕອງກິນທາງໜຶ່ງ ລາງ ພວກ ກໍ່ ຖອຍ ລົງມາ ທາງໃຕ້ ຂອງ ມົນທົນ ຮູນໜ່ຳ ແລ້ວເລີຍ ເຂົ້າມາ ທາງພາກເໜືອ ຂອງ ແຫຼມທອງ ກໍ່ມີ

ສ່ວນພວກທີ່ອົພະຍົບລົງມາບໍ່ໄດ້ຕົກຄ້າງຢູ່ໃນອຳນາດຈີນອີກກໍ່ມີຈຳນວນຫລາຍ ຊຶ່ງເວລາພາຍຫລັງຕໍ່ມາພວກລາວທີ່ຕົກຢູ່ໃຕ້ອຳນາດຂອງຈີນນັ້ນກໍ່ກາຍເປັນຈີນໄປ.

ຕໍ່ມາລະຫວ່າງ ພ.ສ. ໗໖໓ ເຖິງ ພ.ສ. ໘໐໘. ເປັນສໄມສາມກົກໃນແຜ່ນດິນຈີນ ຈີນເກີດວຸ້ນວາຍອົນເລວກັນຂຶ້ນ ອານາຈັກຈີນເກີດແຕກແຍກກັນອອກເປັນສາມຈຸຫລືສາມກົກ ລາວພາຍໃຕ້ການປົກຄອງຂອງຈີນໄດ້ຮັບຄວາມເດືອດຮ້ອນຫລາຍ ຈຶ່ງໄດ້ພາກັນຖອຍລົງມາທາງໃຕ້ໂຮມກັນກັບພວກລາວທີ່ຖອຍລົງມາກ່ອນແລ້ວຫລາຍຂຶ້ນ ແລະຖືໂອກາດທີ່ຈີນເກີດວຸ້ນວາຍທຳເສິກອົນເລວກັນເອງນັ້ນ ປະກາດຕັ້ງເປັນອານາຈັກອິສຣະຂຶ້ນອີກຫລັກຫົວເມືອງ ທັງຫລັກຫົວເມືອງຕ່າງກໍ່ເປັນອິສຣະແກ່ກັນ ຂົງເບັ້ງຫລື ຈູກັດຫຼຽງທີ່ປຶກສາຂອງເລົ່າປີແຫ່ງແຄວ້ນເສສວນໄດ້ຍົກກອງທັບມາຕາມເບັ້ງເຮັກ (ລາວ) ເຖິງເຈັດເທື່ອ ຂນະທີ່ຂົງເບັ້ງຍົກກອງທັບມາຕາມລາວພວກເບັ້ງເຮັກນັ້ນ ພວກຈີນກໍ່ຍັງບໍ່ເຊົາຮົບເລວກັນ ພວກລາວທັງຫລັກຫົວເມືອງຈຶ່ງໄດ້ປະກາດອິສຣະບໍ່ຍອມເປັນເມືອງຂຶ້ນຂອງຈີນອີກຕໍ່ໄປ ອານາຈັກອິສຣະທັງຫລັກເມືອງຫລືຫລັກຮັຖນັ້ນຄື :-

໑) ໜົງໄຂວ່ເຈົ້າ

໒) ທບິດຊິກເຈົ້າ

໓) ເຖົ່ງບັນເຈົ້າ

໔) ຊິຫຼົງເຈົ້າ

໕) ຫຼົງກຸ້ງເຈົ້າ

໖) ໜົງເສເຈົ້າ

ໜົງ=ເມືອງ, ຫຼົງ=ຫຼວງ, ໜົງເສເຈົ້າ=ເມືອງເສ ຫລື ເຈົ້າເມືອງເສ ຄື ເມືອງໜອງແສນັ້ນເອງ.

໖.- ລາວ ສໄມອານາຈັກໜອງແສ ຫລື ນ່ານເຈົ້າ. ພ.ສ. ໑໑໙໒ – ໑໘໒໖

ສໄມລາວຕັ້ງອານາຈັກອິສຣະ ທິກບະຄອນ ແລະ ສໄມອານາຈັກໜອງແສນີ້ ເປັນ ສໄມທີ່ລາວນິຍົມພາກັນເອີ້ນໂຕເອງວ່າ "ໄທ້" ກັບຫຼາງທີ່ສຸດ ແມ້ແຕ່ຊື່ເມືອງກໍ່ຕັ້ງຊື່ວ່າ "ໄທ້" ເຫຕນັ້ນເອງ ສໄມອານາຈັກໜອງແສຈຶ່ງໄດ້ມີເມືອງຊື່ວ່າ "ໄທ້ຫຼີແລະໄທ້ຫວໍ່" ເມືອງໄທ້ຫຼີ ຈຶ່ງເອີ້ນວ່າ "ເມືອງໄຕ້ຫຼີ" ຄືເມືອງຕາລີຟູ ເມືອງໄທ້ຫວໍ່ ຄືເມືອງທໍແຕ ຈຶ່ງເອີ້ນວ່າ "ໄຕ້ຫວໍ່ຫລືຕ້າຫໍ່" ໝາຍຄວາມວ່າເມືອງທີ່ມີແຜ່ນດິນຮາບ.

ເມືອງທັງຫົກຕ່າງກໍ່ເປັນອານາຈັກອິສຣະເປັນຣັຖບ້ານພີ່ເມືອງນ້ອງຕໍ່ກັນ ຣັຖໜອງແສຫລືເມືອງໜອງແສເປັນຣັຖທີ່ມີພົລເມືອງຫຼາຍ ແລະຈະເຣີນຮຸ່ງເຣືອງກວ່າຣັຖອື່ນ ໆ ມີພະເຈົ້າແຜ່ນດິນທີ່ສາມາດໃນການເສິກສົງຄາມຊົງພະນາມວ່າ "ສິນຸໂລ" ສາມາດໂຮມເອົາຫົວເມືອງທັງຫົກເຂົ້າມາເປັນສະຫາພາບຫລືສະຫາອານາຈັກດຽວກັນໄດ້ ເມື່ອ ພ.ສ. ໑໑໘໖ ຕັ້ງຣາຊທານີຢູ່ທີ່ເມືອງໜອງແສຫລືຕາລີຟູ ຈຶ່ງໄດ້ເອີ້ນວ່າອານາຈັກໜອງແສ ຈີນເອີ້ນວ່າ "ນ່ານເຈົ້າຫລືນັນເຈົ້າ" ໝາຍຄວາມວ່າເຈົ້າແຫ່ງບູບ່ານຫລືເຈົ້າທາງທິດໃຕ້.

ລາວ ສໄໝອານາຈັກໜອງແສ ເປັນ ໄນທີ່ລາວມີຄວາມຈະເຣີນຮຸ່ງເຣືອງຫຼາຍ ມີອານາເຂດກວ້າງໃຫຍ່ ມີກອງທັບທີ່ເກັ່ງກ້າສາມາດ ໃນ ສໄໝແຜ່ນດິນຂອງ ພະເຈົ້າໂກະລ່ຜົງຫລືຂຸນບູລົມ ມະຫາຣາຊວິຣະກະສັດລາວທີ່ສາມາດເຂັ້ມແຂງ ເປັນນັກຣົບທີ່ສາມາດໃນການເສິກສົງຄາມ ແລະເປັນນັກປາດໃນທາງການເມືອງການປົກຄອງ ພະອົງໄດ້ຍ້າຍເມືອງຫຼວງຈາກເມືອງຕາລີຟູຫລືເມືອງໄຫ້ລີ ມາສ້າງເມືອງໃໝ່ຂຶ້ນທີ່ເມືອງໄຫ້ລ່ຫລືເມືອງຕ້າຫໍ ໄກຈາກເມືອງຕາລີຟູສິບລີ້ ພະອົງ

ເປັນນັກຮົບທີ່ເກັ່ງກ້າສາມາດ ເຄີຍທຳເສິກກັບຈີນແພ້ຈີນແລະທຳເສິກກັບທິເບັດແພ້ທິເບດຫຼາຍເທື່ອ. ຈົນຈີນຍອມເປັນໄມຕີກັບລາວ ແລະຍົກພະຣາຊທິດາໃຫ້ເປັນມະເຫສີຂອງກະສັດລາວ.

ອັນເປັນເຫດໃຫ້ຊາວຈີນໄຫຼຫຼັ່ງເຂົ້າມາໃນດິນແດນລາວແຫ່ງຣາຊອານາຈັກໜອງແສ. ເພາະວ່າລາວກັບຈີນເປັນໄມຕີກັນແລ້ວ ຣາຊທິດາຂອງຈີນເປັນມະເຫສີຂອງເຈົ້າແຜ່ນດິນລາວ ນັກປາດຣາຊບັນດິດ ພໍ່ຄ້າຊາວຂາຍຂອງຈີນ ກໍ່ໄຫຼຫຼັ່ງທັ່ງເທເຂົ້າມາໃນອານາຈັກໜອງແສ ຈຶ່ງເປັນເຫດໃຫ້ລາວຮຸ່ນຫຼັງໆ ພາຍລຸນມາກາຍເປັນເລືອດປະສົມລາວ - ຈີນ. ອັນເປັນເຫດໃຫ້ລາວກາຍເປັນຈີນຕໍ່ມາໃນພາຍຫຼັງ

ລາວ ສໄມອານາຈັກໜອງແສມີອານາເຂດກວ້າງໃຫຍ່ໄພສານ ມີກອງທັບທີ່ສາມາດໃນການເສິກສົງຄາມ ຈົນເຖິງກັບຈີນຍອມເປັນໄມຕີ ແລະຍົກຍ້ອງໃຫ້ກຽດເອີ້ນວ່າ "ນ່ານເຈົ້າຫລືຫວັ່ນນາມອ່ອງ" ໝາຍຄວາມວ່າ ເຈົ້າແຫ່ງຍູນານຫລືເຈົ້າແຫ່ງທິດໃຕ້ ມີຫົວເມືອງໃຫຍ່ໆ ເຖິງສິບຫົວເມືອງ ຈຶ່ງພາສາຈີນເອີ້ນວ່າ "ລົ້ມ" ຄື :-

໑. ຫວັ່ນໝານ (ບູບານ)

໒. ປ້ານຕ້ານ

໓. ປາກວ່າງ (ປຸດລົ້ງ)

໔. ໄຕ້ຫຼີ (ໄທ້ຫຼີ)

໕. ຈີວຊັບ

໖. ຈ້ຽແນ້

໗. ໜົງເສ (ໜອງແສ)

໘. ໜົງສີບ

໙. ເຕົ້ງຊັບ

໑໐ ໄຕ້ຫວໍ່ (ໄທ້ຫວໍ່ຫລືຕ້າຫໍ່)

ອານາຈັກໜອງແສເມື້ອ ສໄມແຜ່ນດິນຈີນແຫ່ງ ຣາຊວົງຖັງ ຫລື ຖັງສຽວ ພ.ສ. ໑໒໐໑–໑໔໕໐ ນັ້ນ ອານາຈັກນ່ານເຈົ້າ ໄດ້ແບ່ງການ ປົກຄອງ ອອກເປັນແບບ ສຫະພັນຣັດ ຫລື ແບບສະຫາພາບ ມີຣັດໃຫຍ່ ໆ ເຖິງສີ່ຣັດ ແຕ່ລະຣັດມີເຈົ້າຄອງນະຄອນປົກຄອງເປັນອິສຣະ ທັງສີ່ຣັດໂຮມເປັນສຫະຣາຊອານາຈັກນ່ານເຈົ້າ ຫລື ອານາຈັກໜອງແສ ຄື :-

໑. ຣັດໂກສົມພີແສນຫວີ ຈີນເອີ້ນວ່າ "ບໍ່າມີງ, ບໍ່າເມືອງ" ເປັນຣັດໜຶ່ງ.

໒. ຣດໂຍນິກຊຽງແສນ ຈີນເອີ້ນວ່າ "ຊຸນຍາງ, ຣວນຊຽງຫລືປວນຊຽງ" ເປັນຣັດໜຶ່ງ.

໓. ຣັດຈຸລະນີບະຄອນ ຈີນເອີ້ນວ່າ "ປ້າວຈີ, ເກົ້າຈີຫລືເກໂຈ" ຫຸກວັນນີ້ເອີ້ນວ່າ "ຕັງເກັງຫລືຕອງກິນ" ເປັນຣັດໜຶ່ງ.

໔. ຣັດເວສາລີຫຼວງ ຄືອາສັມ (ອາຊຸ້ມ) ຫລືມານິປຸຣະ ເປັນຣັດໜຶ່ງ.

ແຕ່ລະຣັດຫລືແຕ່ລະແຄວ້ນຍັງແຍກອອກໄປເປັນເມືອງນ້ອຍໃຫຍ່ ມີເຈົ້າເມືອງປົກຄອງຂຶ້ນກົງກັບຣັດນັ້ນແຕ່ລະຣັດກໍ່ໄປອີກເທື່ອໜຶ່ງຄື :-

໑.- <u>ຣັດໂກສັມພີແສນຫວີ.</u>

ຣັດໂກສັມພີແສນຫວີໄດ້ແຍກອອກໄປເປັນປະເທດ (ເຂດ) ສອງປະເທດຄືເຂດທາງໃຕ້ເປັນໄທໃນ (ໄທເມືອງ) ມີເມືອງໃນຊຸດ (ເມືອງຊຸດ) ໃນກອງ (ເມືອງກອງ) ໃນມຽດ (ເມືອງມີດ) ມີອານາເຂດຕິດຕໍ່ກັບດິນແດນພຸກາມປະເທດ ສ່ວນປະເທດເຂດທາງເໜືອ ໄດ້ແກ່ແວ່ນແຄວ້ນແສນຫວີຕິດຕໍ່ກັບດິນແດນຮຸນໜ່ຳ (ຄຳວ່າໃນ = ເມືອງ).

໕ - ອັຖໂບນິກຊຽງແສນຫລືບວນຊຽງ.

ອັຖໂບນິກ ຊຽງແສນ ຫລື ບວນຊຽງ ແບກອອກເປັນສອງເຂດປະເທດ ຄືທາງຝ່າຍເໜືອໄດ້ແກ່ອາລະວິອັຖະຊຽງຮຸ້ງສິບສອງພັນນາລື້. ມີອານາເຂດຕິດຕໍ່ກັບແດນຫໍ້ (ຈີນ) ມີເມືອງແສຫຼວງຕາລີຟູຮຸນໜໍາ ເປັນເຂດປະເທດໜຶ່ງ ສ່ວນເຂດປະເທດທາງໃຕ້ໄດ້ແກ່ໂບນິກຊຽງແສນ ມີອານາເຂດລົງມາທາງໃຕ້ຕິດຕໍ່ກັບແດນຫີຣີພຸນໄຊ ເມື່ອບັງເປັນເຂດແດນຂອງພວກຈາມປູ່ເປັນເຂດປະເທດໜຶ່ງ.

໖.- ອຖຈຸລະນີນະຄອນ, ຕັງເກັງ ຫລື ຕອງກິນ.

ອັຖຈຸລະນີນະຄອນ, ຕັງເກັງຫລືຕອງກິນແບກອອກເປັນສອງເຂດປະເທດ ຄືທາງຝ່າຍເໜືອໄດ້ແກ່ຂຸນບູຣົມມະຫາຣາຊ ຕັ້ງຢູ່ເຂດເມືອງແຖງ (ແຖນ) ເປັນເຂດປະເທດໜຶ່ງ ສ່ວນເຂດປະເທດທາງໃຕ້ມີເມືອງລ້ານຊ້າງທີ່ຂຸນລໍຣາຊໂອຣົສຂຸນບູລົມມະຫາຣາຊ ລົງມາສ້າງຈີນເອີ້ນວ່າ "ເລົາຊົວລັນຈຽງ" ຊຶ່ງກາຍມາເປັນເມືອງຊິວ, ຊະວາ, ອັນໄດ້ແກ່ເມືອງຫຼວງພະບາງນີ້ຊື່ເອີ້ນແຕ່

ບູຮານວ່າ "ພູຊ້າງ, ຊຽງດົງ, ຊຽງທອງ" ອັນເປັນເຂດຂອງພວກຂອມປູ່ແຕ່ກ່ອນນັ້ນ ເປັນເຂດປະເທດໜຶ່ງ.

໔ - ຣັຖເວສາລີຫຼວງ.

ຣັຖເວສາລີຫຼວງແບ່ງອອກເປັນສອງເຂດປະເທດ ຄືທາງຝ່າຍເໜືອເປັນອາສັມຫລືອາຊຸມ ທາງຝ່າຍໃຕ້ເປັນມະນິປຸຣະແລະກາສີ ຊຶ່ງຕໍ່ມາກາຍເປັນກະແຊ.

ອານາຈັກໜອງແສຈະເຣີນຮຸ່ງເຮືອງມີກະສັດເຊື້ອຊາດລາວແຫ່ງຣາຊວົງໜອງແສແທ້ປົກຄອງມາຈົນຮອດ ພ.ສ. ໑໕໐໐ ຕໍ່ຈາກນັ້ນມາເປັນກະສັດລາວເລືອດປະສົມ (ປົນ) ລາວ - ຈີນປົກຄອງ ຊົນຊາດຈີນໄດ້ໄຫຼຫຼັ່ງເຂົ້າມາໃນອານາຈັກໜອງແສຫຼາຍ ເນື່ອງຈາກກະສັດໜອງແສໄດ້ຣາຊທິດາຂອງຈີນເປັນມະເຫສີ (ເມັຽ) ທຳໃຫ້ເລືອດລາວຊາວໜອງແສເປັນເລືອດປະສົມລາວຈີນ ແລະຄວາມເປັນລາວຈາງລົງໄປທຸກທີ. ຈົນໃນທີ່ສຸດກໍ່ກາຍເປັນຈີນໄປ.

ເຖິງ ພ.ສ. ໑໘໖໒ ຄົບໄລຂ່ານກະສັດຕາດແຫ່ງຣາຊວົງຫງວນໄດ້ປົກກອງທັບໃຫຍ່ມາຮຸກຮານອານາຈັກໜອງແສ ອານາຈັກໜອງແສຈຶ່ງເສັຽເອກະຣາຊໃຫ້ແກ່ຈີນ ເມື່ອ ພ.ສ. ໑໘໖໒ ເປັນເທື່ອທີສາມທີ່ລາວ

ໄດ້ເສັຽບ້ານເສັຽເມືອງໃຫ້ແກ່ຈີນ. ໃນທີ່ສຸດອານາຈັກ
ລາວແຫ່ງໜອງແສກໍກາຍເປັນຈີນໄປ ທີ່ຍັງເຫຼືອເປັນ
ລາວຢູ່ກໍພຽງສ່ວນນ້ອຍ ຊຶ່ງບັດນີ້ເອີ້ນວ່າ "ຣັຖໄທອິສຣະ"
ຊຶ່ງຢູ່ທາງໃຕ້ຂອງດິນແດນຈີນຕິດຕໍ່ກັບດິນແດນລາວໃນ
ມິນທິນບູນານ ຣັຖໄທອິສຣະປັຈຈຸບັນນີ້ເປັນຣັຖຊົນກຸ່ມ
ນ້ອຍຣັຖໜຶ່ງຊຶ່ງຢູ່ໃນຄວາມປົກຄອງຂອງຈີນຄອມມູນິດ.

ຕາມຫຼັກຖານທີ່ ມິສເຕີ ເບີນ ກົງສູນອັງກິດໃນປະ
ເທດຈີນໄດ້ກ່າວວ່າ "ທີ່ເມືອງປິງໄມ" (Ping Mei) ຫ່າງ
ໄກຈາກມິນທິນໄກວເຈົາ ແລະ ຊາຍແດນມິນທິນ ກວາງຊີ
໒-໓ ໄມ ໄດ້ເຫັນພວກຈຸງເຈັຽ (ຊາວລາວຫຼືລາວ) ມີ
ເຄື່ອງດົນຕຣີ ຄືກະບອກໄມ້ໄຜ່ໃຊ້ປາກເປົ່າ ພາກັນ
ຢ່າງເປັນໝູ່ ບາງເປົ່າປາງໄມ້ໄຜ່ເລິງຫົວຂຶ້ນໄປປະມານ
໒-໓ ຟີຕ (ແຄນ) ສຽງທີ່ເປົ່ານັ້ນອ່ອນຫູຫາຍ" ຄົນ
ພວກນີ້ແມ່ນຊາວຈຸງເຈັຽຄື ພວກລາວທີ່ຍັງຕົກຄ້າງຢູ່ໃນ
ດິນແດນຈີນນັ້ນເອງ ແຕ່ລາວພວກນີ້ຍັງບໍ່ປະຖິ້ມປະເພ
ນີບູຮານຂອງລາວ ຄືຍັງເປົ່າແຄນຢູ່.

ເສັຽດາຍທີ່ໝໍດອດດ໌ຂຽນເຣື່ອງ "The Thai Race-The
Elder Brother of the Chinese" ບໍ່ໄດ້ບອກໄວ້ວ່າ "ພວກ
ຊາວຈຸງເຈັຽນັ້ນແມ່ນພວກເມືອງໃດ ເປັນຫຍັງຈຶ່ງເອີ້ນວ່າ

ຈຸງເຈັງ" ແຕ່ຂ້າພະເຈົ້າສັນນິດຖານວ່າ ພວກຈຸງເຈັງນັ້ນແມ່ນ "ລາວ" ເພາະວ່າຍັງບໍ່ປະຖິ້ມປະເພນີເກົ່າແກ່ຄືຍັງເປົ່າແຄນປູ່ຢ່າງດຽວກັນກັບຄົນລາວໃນປະເທດລາວນັ້ນປູ່.

ກ – <u>ການອົພະຍົບຂອງລາວ.</u>

ລາວໄດ້ເສັຽບ້ານເມືອງຫຼືອານາຈັກຂອງລາວໃຫ້ແກ່ຈີນເຖິງສາມເທື່ອ ຄື:-

໑. ເສັຽອານາຈັກລາວ ສໄມນະຄອນລຸງ, ນະຄອນປ່າ, ແລະ ນະຄອນງ້ຽວ ເມື່ອ ພ.ສ. ໓໒໑.

໒. ເສັຽອານາຈັກລາວ ສໄມນະຄອນເພງາຍຫລືອານາຈັກແຖນ ພ.ສ. ໓໒໑.

໓. ເສັຽອານາຈັກລາວ ສໄມນະຄອນໜອງແສຫລື ອານາຈັກນ່ານເຈົ້າ ພ.ສ. ໑໘໒໓.

ເມື່ອໄດ້ເສັຽບ້ານເມືອງໃຫ້ແກ່ຈີນແລ້ວ ລາວໄດ້ພາກັນອົພະຍົບລົງມາຫາບ່ອນທຳມາຫາກິນໃໝ່ ສຣຸບແລ້ວເປັນເທາງອົພະຍົບໄດ້ສາມພວກຫຼືສາມທາງຄື :-

໑.- <u>ສາຍແມ່ນ້ຳຂອງ</u> ພວກນີ້ຕັ້ງໜ້າລົງສູ່ທາງໃຕ້ຕາມຣູແມ່ນ້ຳຂອງເຂົ້າສູ່ສຸວັນນະພູມ ລາວພວກນີ້

ເອີ້ນໂຕເອງວ່າ "ໄທ" ແລະມີຈຳນວນນ້ອຍຈຶ່ງໄດ້ຊື່ເອີ້ນ ວ່າ "ໄທນ້ອຍ" ມາຮອດທຸກວັນນີ້.

໒.- ສາຍແມ່ນ້ຳຄົງຫລືສາລະວິນ ລາວພວກນີ້ ໄດ້ອົພຍົບລົງໄປ ຕັ້ງອານາຈັກ ສິບເກົ້າເຈົ້າຟ້າ ໃນຕອນ ກາງຂອງຮູແມ່ນ້ຳສາລະວິນ ລາວພວກນີ້ມີຫຼາຍກວ່າ ສາຍຮູແມ່ນ້ຳຂອງແລະເອີ້ນໂຕເອງວ່າ "ໄທ" ຈຶ່ງໄດ້ ຊື່ເອີ້ນວ່າ "ໄທໃຫຍ່" ມາຮອດທຸກວັນນີ້. ແລະລາວ ພວກທີ່ເລື່ອນເຂົ້າໄປໃນມົນທົນອາສັມກາຍເປັນ "ໄທອາ ຫົມ" ໃນທຸກວັນນີ້.

໓.- ສາຍແມ່ນ້ຳແດງ ກໍພວກທີ່ອົພະຍົບໄປ ທາງຕາວັນອອກຕາມຮູແມ່ນ້ຳແດງ ໄດ້ກາຍເປັນແກວ ຫລືວຽດນາມໄປ ຈຶ່ງໄດ້ປະກົດມີ "ເມືອງລາວກາງ" ໃນ ຮູແມ່ນ້ຳແດງ ຕອນດິນແດນ ຕັງເກ໋ງ ກັບ ດິນແດນຈີນ ມາ ຮອດທຸກວັນນີ້. ພວກນີ້ເອີ້ນຊື່ຕາມ ສໄມບູຮານຈຶ່ງໄດ້ ຊື່ເມືອງທີ່ລາວກາງໄປວ່າ "ເມືອງລາວກາງ" ແລະລາວ ລາງພວກກໍ່ເລື່ອນເຂົ້າໄປໃນມົນທົນ ກວາງຕຸ້ງ ປັຈຈຸບັນນີ້ ບາງປະກົດ ມີຊົນຊາດລາວ ຢູ່ໃນມົນທົນ ກວາງຕຸ້ງ ເປັນລາງ ບ່ອນ.

ເນື່ອງຈາກ ພວກລາວ ເມື່ອຖອຍລົງມາ ຈາກແດນຈີນໄດ້ເອີ້ນໂຕເອງວ່າເປັນພວກ "ໄທ້" ຫຼາຍທີ່ສຸດ ເພື່ອເປັນເຄື່ອງໝາຍສແດງໃຫ້ຮູ້ວ່າເປັນພວກດຽວກັນ ເມື່ອຖອຍລົງໄປຢູ່ບ່ອນໃດກໍ່ບອກວ່າຂ້ອຍ (ຂ້າເຈົ້າ) ນີ້ແມ່ນ "ໄທ້" ຈຶ່ງເກີດເປັນພວກ "ໄທ້ຫລືໄທ" ທັງຫຼາຍຂຶ້ນຄື :-

໑. ພວກໄປທາງແຄວ້ນອາສັມ ເອີ້ນໂຕເອງວ່າ "ໄທ້" ຈຶ່ງໄດ້ຊື່ເອີ້ນໃນບັດນີ້ວ່າ "ໄທອາຫົມ"

໒. ພວກໄປທາງແຄວ້ນໂກສັມພີແສນຫວີ ເອີ້ນໂຕເອງວ່າ "ໄທ້" ພວກນີ້ມີຈຳນວນຫຼາຍ ຈຶ່ງໄດ້ຊື່ເອີ້ນໃນບັດນີ້ວ່າ "ໄທໃຫຍ່" ຄຳວ່າ "ໃຫຍ່" ນັ້ນໝາຍຄວາມວ່າຫຼາຍຄື ພວກນີ້ມີໝູ່ຫຼາຍ ບໍ່ແມ່ນພວກນີ້ມີຮູບຮ່າງໃຫຍ່ໂຕແຕ່ຢ່າງໃດ.

໓. ພວກໄປທາງໂຍນົກຊຽງແສນ ຫລື ລ້ານນາ ພວກນີ້ເອີ້ນໂຕເອງວ່າ "ໄທ້" ຈຶ່ງໄດ້ຊື່ເອີ້ນໃນບັດນີ້ວ່າ "ໄທລ້ານນາ" ຊຶ່ງໄທລານນານີ້ກໍມີຊື່ເອີ້ນວ່າ "ລາວ" ຢ່າງດຽວກັນກັບພວກລານຊ້າງ.

໔. ພວກໄປທາງເມືອງເຊົາ, ເມືອງຊະວາຫລືທາງລານຊ້າງເອີ້ນໂຕເອງວ່າ "ໄທ້" ຊຶ່ງມີຊື່ເອີ້ນວ່າ

"ໄທລ້ານຊ້າງ" ຫລື ເອີ້ນວ່າ "ອານາຈັກລ້ານຊ້າງ" ແຕ່ໄທພວກນີ້ທຸກວັນນີ້ມີຊື່ຊາດເອີ້ນວ່າ "ລາວ" ເພາະເອົາຊື່ເກົ່າແກ່ມາເອີ້ນ. ແຕ່ເມື່ອບານເອີ້ນໂຕເອງກໍ່ຍັງໃຊ້ຄໍາວ່າ "ໄທ" ຢູ່ ເປັນຕົ້ນວ່າ ໄທຫຼວງພະບາງ, ໄທວຽງຈັນທນ໌, ໄທຈໍາປາສັກດິ໌, ໄທທ່າແຂກ.

໕. ພວກລົງໄປທາງເມືອງສຍາມເຖີ ຮູແມ່ນ້ຳເຈົ້າພະຍາ ເອີ້ນໂຕເອງວ່າ "ໄທ້". ຈຶ່ງເອີ້ນວ່າ "ໄທສຍາມ" ທຸກວັນນີ້ມີຊື່ຊາດ ແລະປະເທດວ່າ "ໄທ".

໖. ພວກໄທຕ່າງໆ ຫລືໄທອື່ນໆ ສ່ວນພວກໄທ້ທີ່ຖຍຽລົງໄປຕາມຮູແມ່ນ້ຳດຳແລະແມ່ນ້ຳເມົາ ກໍ່ໄດ້ຊື່ເອີ້ນວ່າ ໄທດຳ, ໄທເມົາ ຖ້າອາໄສຢູ່ຕາມຣິມແມ່ນ້ຳກໍ່ໄດ້ຊື່ເອີ້ນວ່າ "ໄທນ້ຳ" ອາໄສຢູ່ບໍາພູເຂົາກໍ່ໄດ້ ຊື່ເອີ້ນວ່າ "ໄທພູຫລືພູໄທ" ຖ້ານຸ່ງຜ້າແຕ່ງໂຕເປັນສີຕ່າງໆ ກໍ່ໄດ້ຊື່ເອີ້ນຕາມສີຜ້າ ເຊັ່ນ ນຸ່ງສີດຳ ກໍ່ເອີ້ນວ່າ "ໄທດຳ" ສີຂາວ ເອີ້ນວ່າ ໄທຂາວ ສີແດງ ເອີ້ນວ່າ ໄທແດງ ສີລາຍ ເອີ້ນວ່າ ໄທລາຍ ຯລຯ ດັ່ງນີ້.

ຄໍາວ່າ "ໄທ້, ໄທ" ໃນປັຈຈຸບັນນີ້ໝາຍຄວາມວ່າ "ຄົນ ຫລື ມະນຸສ" ທ່ານັ້ນ ສ່ວນຄໍາວ່າ "ລາວ" ໃນປັຈຈຸບັນນີ້ເປັນຊື່ຊາດເກົ່າແກ່ຂອງລາວ ຊຶ່ງມາຈາກ

ຄຳວ່າ "ອ້າງລາວ" ເອີ້ນເອົາແຕ່ຄຳຫຼັງຄືຄຳວ່າ "ລາວ" ທີ່ນັ້ນ ເຫດນີ້ພວກທີ່ລົງມາທາງຮູແມ່ນ້ຳຂອງຈຶ່ງໄດ້ມີຊື່ເອີ້ນວ່າ "ລາວ" ແລະໄດ້ກາງມາເປັນຊາດລາວປະເທດລາວໃນບັດນີ້.

ຄຳວ່າ "ໄທກັບຄຳວ່າລາວ" ຈຶ່ງຄືກັນກັບຄຳວ່າ "ເຈັກ ກັບຄຳວ່າ ຈີນ" ເຈັກກັບຈີນກໍ່ແມ່ນຄົນຊາດດຽວກັນ ແຕ່ລາງເທື່ອເຮົາກໍ່ເອີ້ນວ່າ "ເຈັກ" ແລະລາງເທື່ອເຮົາກໍເອີ້ນວ່າ "ຈີນ" ໄທກັບລາວກໍ່ປ່າງດຽວກັນ ຄືພວກຮູແມ່ນ້ຳຂອງເອີ້ນວ່າ "ລາວ" ພວກຮູແມ່ນ້ຳເຈົ້າພະຍາເອີ້ນວ່າ "ໄທ".

໙.- <u>ລາວຈົກຕັ້ງອານາຈັກລານນາ ພ.ສ. ໑໑໙໑ – ໑໙໐໐ ປາງ.</u>

ໃນທີ່ລາວຕັ້ງອານາຈັກໜອງແສຂຶ້ນເປັນຣັຖອິສຣະນັ້ນລາວພວກໜຶ່ງທີ່ຖອຍລົງມາທາງໃຕ້ ໄດ້ສ້າງອານາຈັກລາວຂຶ້ນທາງໃຕ້ເປັນອິສຣະອີກ ລາວພວກນີ້ຄືພວກລາວສະກຸນລາວຈົກ ໄດ້ສ້າງອານາຈັກຂຶ້ນ ເມື່ອປະມານ ພ.ສ. ໑໑໙໑ ແລະໄດ້ກາງເປັນອານາຈັກລານນາສືບມາ. ຊົນຊາດລາວພວກສະກຸນລາວຈົກນີ້ແມ່ນ

ຊົນຊາດອ້າງລາວພວກໜຶ່ງ ທີ່ໄດ້ເອີ້ນໂຕເອງແຕ່ "ລາວ" ຄ່າວຽວ ແລະໄດ້ຖອຍລົງມາທາງໃຕ້ກ່ອນລາວພວກໜອງແສ.

ຕາມຕໍານານຫລືພົງສາວະດານຂອງພວກລາວຈົກ ປາກົດໃນພົງສາວະດານໂຍນົກວ່າ ລາວຈົກ ລົງມາແຕ່ຟ້າ (ແຖນ) ກ່າງບັນໄດເງິນລົງມາແຕ່ບອດເຂົາດອຍຕຸງ ກໍຊົນຊາດອ້າງລາວທີ່ຖອຍລົງມາແຕ່ດິນແດນລາວ ໃນ ສໄມອານາຈັກແຖນນັ້ນເອງ ເພາະຄົນບູຮານເຂົ້າໃຈວ່າ ຖ້າລົງມາແຕ່ເໜືອແລ້ວແມ່ນມາແຕ່ຟ້າແຕ່ສວັນ (ແຖນ) ທັງນັ້ນ ລາວຈົກຫຼືລາວຈົກເທວະຣາຊ (ລາວຈັກຣາຊ) ໄດ້ເປັນກະສັດຄອງຣາຊສົມບັດໃນເມືອງເງິນຍາງຊຽງລາວ. ເປັນກະສັດອົງຕໍາອິດຂອງຣາຊວົງລາວຈົກຫຼືລາວຈັກຣາຊ.

ກະສັດສະກຸນລາວຈົກ ໄດ້ຄອງຣາຊສົມບັດສືບຣາຊວົງມາໄດ້ ໙ ຊົ່ວຣາຊວົງ ເຖິງ ສໄມພະຍາລາວຄຽງໄດ້ຍ້າຍເມືອງຫລວງໄປສ້າງໃໝ່ໃກ້ແມ່ນໍ້າສາງທາງດອຍຕຸງ ເອີ້ນວ່າໄຊບູຣີຊ້າງແສນ (ໄຊບູຣີຊຽງແສນ) ສືບຣາຊວົງຕໍ່ມາອີກຮອດ ໑໑ ຊົ່ວຣາຊວົງ ເຖິງ ສໄມຂຸນເງິນ (ລາວເງິນ) ໄດ້ຣາຊໂອຣົດສອງອົງ ຊື່ຂຸນຊົນ

ແລະຂຸນຈອມທັມ. ຂຸນຈອມທັມໄປສ້າງເມືອງໃໝ່ຢູ່ທາງຫາງດອຍດ້ວນ ເອີ້ນວ່າເມືອງພຸການບາວ ຄືເມືອງພະເຢົາບັດນີ້ ເປັນແວ່ນແຄວ້ນສ່ວນໜຶ່ງຂອງວົງລາວຈົກ ສ່ວນຂຸນຊົນໄດ້ຄອງເມືອງໄຊບູຣີຊຽງແສນ ເຖິງສໄມ ລາວເຈືອງ (ຂຸນເຈືອງ) ໂອຣົດຈອມບາເລືອງເປັນລຳດັບຣາຊວົງລາວຈົກອົງທີ ໑໙ ຂຸນເຈືອງມີເດຊາບຸພາບ ປາບໄດ້ຮອດແວ່ນແຄວ້ນລານຊ້າງ ແລະແກວອານ່າ ໄດ້ຮັບອ່ອງຈາກເຈົ້າແຜ່ນດິນຈີນແຫ່ງຣາຊວົງຊອງໃຫ້ເປັນໃຫຍ່ໃນເມືອງແກວປະກັບພູເຫົດ.

ຂຸນເຈືອງໄດ້ໃຫ້ຣາຊໂອຣົດຜູ້ອ້າຍຊື່ລາວເງິນເລືອງຄອງນະຄອນໄຊບູຣີຊຽງແສນ ໃຫ້ຣາຊໂອຣົດຜູ້ກາງຊື່ບົ້ຄ່ຳຫາວຄອງເມືອງລ້ານຊ້າງ ໃຫ້ຣາຊໂອຣົດອົງນ້ອຍຊື່ຊຸມແສງ ຄອງ ເມືອງ ນ່ານ. ແບກ ອານາຈັກ ລາວໄປປາງນັ້ນ ອອກເປັນສ່ວນ ໆ ເປັນເຂດ ປະເທດ ໃນຣາຊວົງດຽວກັນ.

ຕາມຕຳນານເຈືອງໄດ້ກ່າວຍົກຍໍຂຸນເຈືອງວ່າເປັນຜູ້ເກັ່ງກ້າໃນການເສິກສົງຄາມຫຼາຍ ເມື່ອພະຊົນມາຍຸໄດ້ ໑໖ ພັນສາໄດ້ຄອງເມືອງໄຊບູຣີຊຽງແສນ. ພະຊົນໄດ້ ໒໔ ພັນສາໄປເລວເສິກແພ້ລ້ານຊ້າງຄອງລ້ານຊ້າງສາມ

ປີ. ໄປເລວເສິກແກວແພ້ແກວໄດ້ຄອງເມືອງແກວອີກ ໑໔ ປີ. ໄດ້ຮັບອ່ອງຈາກຈີນແຜ່ນດິນຊອງ ເມື່ອ ພ.ສ. ໑໕໗໗ ພະຊຸນມາບຸໄດ້ ໗໗ ພັນລາ ບົກກອງທັບໄປເລວເສິກກັບພະຍາແກວແມນ ເຖິງແກ່ພິລາໄລໃນທ່ານກາງເສິກພວກຂ້າ, ແກວທັງຫຼາຍຍັງນັບຖືຜີເຈືອງເປັນສາຣະບະມາຈົນຮອດທຸກວັນທຸກມື້ນີ້.

ຝ່າຍລຳດັບວົງລາວຈົກແຫ່ງອານາຈັກໂຍນົກຊຽງແສນ ຕັ້ງແຕ່ລາວເງິນເຮືອງໂອຣົດຂຸນເຈືອງສືບມາໄດ້ອີກ ៥ ຊົ່ວຣາຊວົງ ມາເຖິງສໄມລາວເມັງ ລາວເມັງມີຣາຊໂອຣົດອົງໜຶ່ງຊື່ວ່າເຈົ້າເມັງຣາຍ ເຈົ້າເມັງຣາຍມີອະພິນິຫານຫຼາຍ ເມື່ອໄດ້ຣາຊສົມບັດແລ້ວໄດ້ມາສ້າງເມືອງໃໝ່ຢູ່ທີ່ຊຽງຣາຍ ປາບໄດ້ທາງເໜືອແລະໃຕ້ແລະໄດ້ມາສ້າງເມືອງຊຽງໃໝ່ເປັນມະຫານະຄອນ ເມື່ອ ພ.ສ. ໑໘໓໗.

ລຳດັບຣາຊວົງລາວຈິກຕາມຕຳນານນະຄອນຊຽງໃໝ່

ລຳດັບ	ຊື່	ພ.ສ.	ຄ.ສ.	ໝາຍເຫດ
໑	ລາວຈິກ (ລາວຈັກຣາຊ)	໑໑໘໑	໖໓໘	ສ້າງເມືອງຊຽງລາວ-
໒	ລາວເກົ້າແກ້ວ	໑໓໐໑	໗໕໘	(ຊຽງລາວ) ຄືຊຽ-
໓	ລາວເສົາ	໑໓໔໖	໘໐໓	ຊຽງຕຸງ.
໔	ລາວຕັ້ງ	໑໓໘໕	໘໔໒	
໕	ລາວກົມ	໑໔໑໑	໘໖໘	
໖	ລາວແຫຼວ	໑໔໒໙	໘໘໖	
໗	ລາວກັບ	໑໔໔໕	໙໐໒	
໘	ລາວກິມ	໑໔໖໐	໙໑໗	

໙	ລາວຄຽງ	໑໔໗໗	໙໓໔	ສ້າງເມືອງທີ່ຮັບບະ-
໑໐	ລາວຄິວ	໑໕໐໓	. ໙໖໐	ຄອບຊຽງແສນຫຼືໄຊ-
໑໑	ລາວເຫີງ	໑໕໒໓	໙໘໐	ບູຣີຊຽງແສນ.
໑໒	ລາວຫຶງ	໑໕໓໘	໙໙໕	
໑໓	ລາວຕົບ	໑໕໕໘	໑໐໑໕	
໑໔	ລາວສົມ	໑໕໗໕	໑໐໓໒	
໑໕	ລາວກວກ	໑໕໙໖	໑໐໕໓	
໑໖	ລາວກິວ	໑໖໒໓	໑໐໘໐	
໑໗	ລາວຈິງ	໑໖໓໘	໑໐໙໕	
໑໘	ລາວຜາເລືອງ (ຈອມຜາເລືອງ)	໑໖໕໔	໑໑໑໑	

ລໍາດັບ	ຊື່	ພ.ສ.	ຄ.ສ.	ໝາຍເຫດ
໑໙	ລາວເຈືອງ (ຂຸນເຈືອງ)	໑໖໗໒	໑໑໒໙	ໄປເລວເສິກແພ້ລ້ານ-
໒໐	ລາວເງິນເລືອງ	໑໖໙໖	໑໑໕໖	ຊ້າງແລະແກວ.
໒໑	ລາວຊິນ	໑໗໒໒	໑໑໗໙	
໒໒	ລາວມິ່ງ	໑໗໔໖	໑໒໐໐	
໒໓	ລາວເມືອງ	໑໗໖໔	໑໒໒໑	
໒໔	ລາວເມັງ	໑໗໘໙	໑໒໔໖	ພະ ຣາຊບິດາຂອງ- ພະເຈົ້າເມັງຣາຍ.

ລູກລາວເມັງຄືເມັງຣາຍຫຼືພະຍາເມັງຣາຍ ໄດ້ສ້າງນະຄອນຊຽງໃໝ່ເມື່ອ ພ.ສ. ໑໘໓໗ ນັບແຕ່ເມັງຣາຍມາຈຶ່ງບໍ່ມີຄໍາວ່າ "ລາວ" ນໍາໜ້າຊື່ຂອງພະເຈົ້າແຜ່ນດິນຣາຊວົງລາວຈົກ.

ລຳດັບລາຊວົງເມັງຣາຍຄອງຊຽງໃໝ່

ລຳດັບ	ຊື່	ພ.ສ.	ຄ.ສ.	ໝາຍເຫດ
໑	ພະຍາເມັງຣາຍ	໑໘໐໑	໑໒໕໘	ມາສ້າງນະຄອນ-
໒	ພະຍາໄຊສົງຄາມ	໑໘໖໐	໑໓໑໗	ຊຽງໃໝ່.
໓	ພະຍາແສນພູ	໑໘໖໒	໑໓໑໘	
໔	ເຈົ້າຄຳຟູ	໑໘໖໒	໑໓໑໙	
໕	ພໍ່ທ້າວນ້ຳທ້ວມ	໑໘໖໓	໑໓໒໐	
໖	ພະຍາແສນພູ	໑໘໖໗	໑໓໒໔	ເທື່ອທີສອງ.

ລໍາດັບຣາຊວົງເມັງຣາຍຄອງຊຽງໃໝ່ (ຕໍ່)

ລໍາດັບ	ຊື່	ພ.ສ.	ຄ.ສ.	ໝາຍເຫດ
໗	ພະຍາຄໍາພູ	໑໘໗໑	໑໓໒໘	
໘	ພໍ່ທ້າວຍາຍູ	໑໘໗໗	໑໓໓໔	
໙	ພໍ່ທ້າວກືນາ	໑໙໑໐	໑໓໖໗	
໑໐	ເຈົ້າແສນເມືອງມາ	໑໙໓໑	໑໓໘໘	
໑໑	ເຈົ້າສາມຝັ່ງແກນ	໑໙໕໔	໑໔໑໑	
໑໒	ເຈົ້າລັກຕິໂລກຣາຊ	໑໙໘໕	໑໔໔໒	
໑໓	ພະຍອດຊຽງຣາຍ	໒໐໓໐	໑໔໘໗	
໑໔	ພະເມືອງແກ້ວ	໒໐໓໘	໑໔໙໕	
໑໕	ພະເມືອງເກດເກົ້າ	໒໐໖໘	໑໕໒໕	

๑๖	ທ້າວຊາງຄຳ	๒๐๘๑	๑๕๓๘	
๑๗	ພະເມືອງເກົ້າ	๒๐๘๖	๑๕๔๓	ເທື່ອທີ່ສອງ.
๑๘	ເຈົ້າເຊດຖາວົງ	๒๐๘๙	๑๕๔๖	ມາແຕ່ລ້ານຊ້າງ ຄອງເມືອງ๒ປີແລ້ວ ຕ່າວຄືນໄປຄອງລ້ານ ຊ້າງ.
๑๙	ພະເມກຸດ	๒๐๙๔	๑๕๕๑	ພະມ້າຈັບໄປຫົງສາ ວະດີ.
๒๐	ນາງພະຍາຣາຊເທວີ	๒๑๐๗	๑๕๖๔	ໝົດວົງເມັງຣາຍ.

ໝົດຣາຊວົງເມັງຣາຍ ເພາະພະມ້າຕີໄດ້ນະຄອນຊຽງໃໝ່. ອານາຈັກລານນາຈຶ່ງຕົກເປັນເມືອງຂຶ້ນຂອງພະມ້າ ເຈົ້າຄອງລານນາຕໍ່ໄປ ຈຶ່ງແມ່ນວົງພະເຈົ້າຫົງສາວະດີລົບດຳ.

ຕ.- ລາວແຍກອອກເປັນ "ໄທແລະລາວ"

"ໄທກັບລາວ" ກໍຄໍາວ່າ "ເຈັກກັບຈີນ" ເພາະເຫດວ່າ ເມື່ອຖອຍລົງມາທາງໃຕ້ຕາມຮູແມ່ນໍ້າຂອງແລ້ວໄດ້ແຍກກັນອອກເປັນສອງພວກຄື : ພວກໜຶ່ງເອົາຊື່ບູຮານຄື "ລາວ" ມາເປັນຊື່ຊາດຊື່ປະເທດ ແລະອີກພວກໜຶ່ງ ເອົາຊື່ ທີ່ເອີ້ນກັນ ຫລື ເອີ້ນ ໂຕເອງໃນ ໝູ່ພວກລາວກໍຄໍາວ່າ "ໄທ້" ຊຶ່ງຕໍ່ມາກາງເປັນ "ໄທ" ເຫດນີ້ລາວຫລືອ້າງລາວຈຶ່ງໄດ້ແຍກອອກເປັນ "ໄທແລະລາວ" ໄດ້ ລົງມາຕັ້ງ ອານາຈັກອິສຣະ ເປັນບ້ານພື້ນເມືອງບ້ອງໃນດິນແດນສຸວັນນະພູມຫລືແຫຼມອິນໂດຈີນ (ແຫຼມທອງ) ເມື່ອພຸທະສັກກະວັດທີ ໑໗ (ພ.ສ. ໑໗໐໐) ໃນ ສໄມນີ້ໄດ້ແຍກຍ້າຍກັນເປັນຣັຖອິສຣະອອກໄປ ៤ ຣັຖ ຄື:-

໑. ອານາຈັກລ້ານນາ ມີເມືອງຫຼວງຢູ່ທີ່ນະຄອນຊຽງໃໝ່ ຫລື ກຸງລ້ານນາ.

໒. ອານາຈັກລ້ານຊ້າງ ມີເມືອງຫລວງຢູ່ທີ່ນະຄອນສີສັດຕະນາຄານະຫຸດ ຫລືກຸງລ້ານຊ້າງ.

໓. ອານາຈັກສຸໂຂໄທ (ລ້ານເພັ້ງ) ມີເມືອງຫຼວງຢູ່ທີ່ກຸງສຸໂຂໄທ.

໔. ອານາຈັກສີອະນຸທະຍາ (ລ້ານເພັງ) ມີເມືອງຫລວງຢູ່ທີ່ກຸງສີອະນຸທະຍາ.

ຕໍ່ມາເມື່ອປະມານ ພ.ສ. ໑໙໐໐ ປາຍ ອານາຈັກສີອະນຸທະຍາ ໄດ້ໂຮມເອົາອານາຈັກສຸໂຂໄທເຂົ້າເປັນອານາຈັກດຽວກັນກັບກຸງສີອະນຸທະຍາໄດ້ ເອີ້ນວ່າອານາຈັກສຍາມ. ຈຶ່ງຍັງເຫລືອຣັຖທີ່ເປັນອິສຣະສາມຣັຖ ຫລືອານາຈັກສາມລ້ານ. ຊຶ່ງເປັນຊົນຊາດດຽວກັນ ໃນ ສໄມ ພ.ສ. ໑໙໐໐ ປາຍຄື :-

໑. ອານາຈັກລ້ານນາ ມີນະຄອນຊຽງໃໝ່ເປັນເມືອງຫລວງມີຊື່ເອີ້ນໃນບັດນີ້ວ່າ "ໄທລ້ານນາ" ແລະມີຊື່ເອີ້ນໃນ ສໄມບູຮານວ່າ "ປວນ, ລາວຊຽງ, ລາວພຸງດຳ".

໒. ອານາຈັກລ້ານຊ້າງ ມີກຸງສີສັດນາຄນະຫຸດເປັນເມືອງຫລວງ ມີຊື່ເອີ້ນວ່າ "ໄທລ້ານຊ້າງຫລືໄທລາວ" ໃນ ສໄມບູຮານເອີ້ນວ່າ ລາວວຽງ, ລາວພຸງຂາວ, ເພາະບໍ່ໄດ້ສັກພຸງດຳຄືພວກ "ລາວຊຽງຫລືລາວປວນ" ປັດຈຸບັນນີ້ເອີ້ນວ່າ "ລາວຫລືໄທລາວ" ຄືພວກຊາດລາວປະເທດລາວ ແລະ ຄົນລາວໃນປັດຈຸບັນນີ້.

໓. ອານາຈັກລ້ານເພັງຫລືອານາຈັກສຍາມ ມີກຸງສີອະຍຸທະຍາເປັນຣາຊທານີ ຊຶ່ງມີຊື່ເອີ້ນວ່າ "ໄທສຍາມຫລືໄທໃຕ້" ປັດຈຸບັນນີ້ມີຊື່ເອີ້ນວ່າຊາດໄທ ປະເທດໄທແລະຄົນໄທ.

ອານາຈັກສຍາມຫລືລ້ານເພັງ ເປັນຣັຖທີ່ມີຄວາມຈະເຣີນຮຸ່ງເຮືອງກວ່າຣັຖອື່ນ ໆ ເພາະຢູ່ໃກ້ທະເລ ມີທາງອອກທະເລຕິດຕໍ່ກັບນານາປະເທດຕ່າງ ໆ ທັງຫລາຍໄດ້ຢ່າງສະດວກ ຈຶ່ງເມື່ອ ພ.ສ. ໒໓໒໐ ໄດ້ໂຮມເອົາຣັຖລ້ານນາແລະລ້ານຊ້າງ ເຂົ້າມາເປັນອານາຈັກດຽວກັນໄດ້ ເອີ້ນວ່າອານາຈັກສຍາມ ມີຄົນໄທກັບລາວເປັນເຈົ້າຂອງປະເທດຮ່ວມກັນ ແຕ່ການໂຮມກັນໃນປາງນັ້ນເປັນການໂຮມກັນໂດຍທາງອຳນາດ ຄືໄທສຍາມຍົກກອງທັບມາລົບເລວເອົາ ອານາຈັກລ້ານນາແລະລ້ານຊ້າງໄປເປັນເມືອງຂຶ້ນ. ບໍ່ໄດ້ໂຮມກັນໂດຍການສຶກສາໃຫ້ຮູ້ວ່າເປັນຊົນຊາດດຽວກັນ. ມີຄວາມເຫັນອົກເປັນໃຈກັນແລະໂຮມກັນ ເພື່ອຄວາມເປັນປຶກແຜ່ນ ຂອງຊົນຊາດດຽວກັນ ແລະເພື່ອປ້ອງກັນໄພຈາກສັຕຣູອັນຈະມາຈາກປະເທດພາຍນອກ.

ຕໍ່ມາ ເມື່ອ ພ.ສ. ໒໔໓໖ ດິນແດນທີ່ເປັນອານາຈັກລ້ານຊ້າງບາງສ່ວນ ໄດ້ຕົກໄປເປັນເມືອງຂຶ້ນຂອງຝຣັ່ງເສສ. ແລະດິນແດນສ່ວນນີ້ໄດ້ຮັບອິສຣະພາບເປັນປະເທດເອກະຣາຊຂຶ້ນມາພາຍຫລັງມະຫາສົງຄາມໂລກເທື່ອທີ່ສອງ ໄດ້ປະກາດເອກະຣາຊເມື່ອ ພ.ສ. ໒໔໘໘ ມີຊື່ວ່າ ປະເທດລາວແລະຊາດລາວ.

ຊົນຊາດອ້າຍລາວ ຫລື ລາວຈຶ່ງໄດ້ແບກອອກເປັນ "ໄທແລະລາວ" ດັ່ງນີ້.

ພາກສອງ
ວ່າດ້ວຍອານາຈັກລ້ານຊ້າງ
ແລະຊົນຊາດເຈົ້າຄອງລ້ານຊ້າງ

໑. ດິນແດນລ້ານຊ້າງ

ດິນແດນລ້ານຊ້າງໝາຍເຖິງດິນແດນບໍລິເວນຕາມ ຣແມ່ນ້ຳຂອງ ນັບແຕ່ຕອນເໜືອຂອງປະເທດລາວລົງມາ ເອີ້ນວ່າດິນແດນລ້ານຊ້າງຫລືອານາຈັກລ້ານຊ້າງ ຄຳວ່າ "ລານ" ໝາຍຄວາມວ່າ "ເດີ່ນ" ເປັນບ່ອນທີ່ຮາບລຽບ, ສະອາດ, ແປນ, ໂລ່ງ, ຖ້າ "ລານເຂົ້າ" ໝາຍຄວາມວ່າ ເດີ່ນບ່ອນໃສ່ເຂົ້າທີ່ກ່ຽວແລ້ວ "ລານບ້ານ" ໝາຍຄວາມ ວ່າ "ເດີ່ນບ້ານ" ບ່ອນເດັກນ້ອຍເຫລັ້ນ "ລານຊ້າງ" ໝາຍຄວາມວ່າ ບ່ອນຊ້າງເຫລັ້ນຫລືບ່ອນຢູ່ບ່ອນເຊົາ ຂອງຊ້າງ.

ຄຳວ່າ "ລ້ານຊ້າງ" ໝາຍຄວາມວ່າຊ້າງລ້ານໂຕ ຫລືມີຊ້າງຫລາຍຮອດລ້ານໂຕ ຈຶ່ງເອີ້ນວ່າລ້ານຊ້າງ ນັກປາດໄດ້ຜູກເປັນພາສາບາລີວ່າ "ສຕະນາຄນະຫຸຕ" ສຕະ ແປວ່າ ຮ້ອຍ, ນາຄະ ແປວ່າ ຊ້າງ, ນະຫຸຕ ແປ ວ່າ ໝື່ນ, ໂຮມກັນເຂົ້າແລ້ວແປວ່າ "ຊ້າງຮ້ອຍໝື່ນຫລື

ຊ້າງສິບແສນ" ກໍຊ້າງລ້ານໃດນັ້ນເອງ ດິນແດນຕອນນີ້ ຈຶ່ງຄູ່ກັບດິນແດນລານນາຫລືລ້ານນາ "ລ້ານນາລ້ານຊ້າງ ຫລືລານນາລານຊ້າງ"

ຄຳວ່າ "ລານນາ" ໝາຍຄວາມວ່າ "ເດີ່ນບ່ອນເຮັດນາ" ຄຳວ່າ "ລ້ານນາ" ໝາຍຄວາມວ່າມີນາຫລາຍຮອດລ້ານໄຮ່ ຈຶ່ງໄດ້ເອີ້ນວ່າ "ລ້ານນາ" ດິນແດນລານນາກັບລານຊ້າງ ຈຶ່ງໄດ້ເອີ້ນຄູ່ກັນວ່າ "ລ້ານນາລ້ານຊ້າງ ຫລື ລານນາລານຊ້າງ ຈຶ່ງບໍ່ຮູ້ວ່າຄຳໃດເປັນຂອງເກົ່າແກ່ດັ້ງເດີມມາແຕ່ກີກແຕ່ເດົ້າ ນັກການສຶກສາບາງທ່ານກໍວ່າ "ລ້ານນາລ້ານຊ້າງ" ເປັນຂອງເດີມເກົ່າແກ່ຕໍາອິດຕໍາອໍ ແຕ່ຜູ້ເອີ້ນພາຍລຸນມາລືມໄມ້ໂທໄປເສັຽຈຶ່ງກາຍມາເປັນ "ລານນາລານຊ້າງ" ແລະນັກການສຶກສາບາງທ່ານກໍວ່າຂອງເດີມເກົ່າແກ່ເປັນ "ລານນາລານຊ້າງ" ແຕ່ຜູ້ເອີ້ນມາເອີ້ນພາຍລຸນມາໃສ່ໄມ້ໂທເຂົ້າໄປເປັນ "ລ້ານນາລ້ານຊ້າງ".

ທັງສອງຢ່າງນີ້ຄຳໃດຈັກເປັນຂອງດັ້ງເດີມເກົ່າແກ່ແທ້ນັ້ນ ຂໍໃຫ້ທ່ານນັກການສຶກສາແລະນັກ ປວັດສາດພິຈາຣະນາເອົາເອງ (ຕອນນີ້ກອງວັນນະຄະດີໄດ້ໃຫ້ບັນທຶກຕື່ມມາວ່າ ບາງທີ "ລານກັບລ້ານ" ມີຄວາມໝາຍຢ່າງ

ດຽວກັນກໍໄດ້. ຄືໝາຍຄວາມວ່າ "ເດີນ, ທົ່ງ, ບ່ອນແປນ" ເປັນຕົ້ນວ່າ ຜາລ້ານ = ຫີນແປນ, ຫີນເປັນເດີນ ຫົວລ້ານ = ຫົວແປນ ສະນັ້ນລານຊ້າງກັບລ້ານຊ້າງອາດຈະແປວ່າ "ເດີນຊ້າງຫລືທົ່ງຊ້າງ" ກໍໄດ້ດັ່ງນີ້)

ດິນແດນລ້ານຊ້າງໄດ້ມີຊົນຊາດຕ່າງ ໆ ເຂົ້າຄອບຄອງໂຮມທັງລາວເປັນສາມຊາດ ຄື:-

ພວກທີ ໑ - ໄດ້ແກ່ລະວ້າຫລືລົວະ ປັດຈຸບັນນີ້ສູນແນວແລ້ວແລະເຮົາເຂົ້າໃຈວ່າພວກ "ຂ້າ"

ພວກທີ ໒ - ໄດ້ແກ່ພວກຂອມ ປັດຈຸບັນນີ້ກາຍມາເປັນຂະເມັນ.

ພວກທີ ໓ - ໄດ້ແກ່ລາວຫລືໄທລາວ ປັດຈຸບັນນີ້ເປັນລາວແລະເປັນໄທ.

ບັນທຶກ ເລື່ອງ "ຂ້າ" ນີ້ກອງວັນນະຄະດີໄດ້ອະທິບາຍວ່າ ພວກລະວ້າ ຫລື ລົວະ ບໍ່ແມ່ນຂ້າ ພວກຂ້ານັ້ນເຫັນຈະມາຈາກດິນບ້ານນອກຂອງຂອມດັ່ງນີ້

໒.- ຊົນຊາດລະວ້າ ຫລື ລົວະ

ຊົນຊາດທີ່ເປັນເຈົ້າຂອງດິນແດນສຸວັນນະພູມ ຫລື ແຫລມທອງນັ້ນ ແມ່ນພວກລະວ້າຫລືລົວະ ໄດ້ເຂົ້າ

ກອບກອງ ດິນແດນ ສຸວັນນະພູມນີ້ ກ່ອນ ພວກຂອມ ແລະ ຈາມປາ ຄື ກ່ອນຊົນຊາດອື່ນທັງຫລາຍ ນັກ ປວັດ-ສາດທັງຫລາຍໄດ້ກ່າວວ່າ ຊົນຊາດລະວ້າໄດ້ປົກຄອງ ດິນແດນສຸວັນນະພູມ ໂດຍການ ແບ່ງແຍກອອກເປັນອານາຈັກໃຫຍ່ ໆ ສາມອານາຈັກ ຊຶ່ງທັງສາມອານາຈັກຕ່າງ ກໍ່ເປັນອິສຣະແກ່ກັນ ຄື.–

໑. ອານາຈັກທວາຣາວະດີ ຢູ່ທາງຕອນໃຕ້ຂອງ ຣູແມ່ນ້ຳເຈົ້າພຣະຍາ ມີເມືອງສຳຄັນສາມເມືອງ ຄື ເມືອງນະຄອນປະຖົມເປັນຣາຊທານີ, ເມືອງລະໂວ້ຊຶ່ງ ຕໍ່ມາປ່ຽນເປັນລົບບຸຣີ ເມື່ອຂອມເຂົ້າປົກຄອງ, ເມືອງ ສຍາມປ່ຽນເປັນເມືອງສຸໂຂໄທ ເມື່ອໄທເຂົ້າປົກຄອງ.

໒. ອານາຈັກປາງຫລີໂຍນົກ ມີເມືອງເງິນຍາງ ເປັນຣາຊທານີ ຢູ່ຣິມແມ່ນ້ຳຂອງເໜືອເມືອງຊຽງແສນ ແມ່ນ້ຳລະວ້າຊຶ່ງເປັນຊື່ຂອງພວກລະວ້າ ປັດຈຸບັນນີ້ ເອີ້ນວ່າແມ່ນ້ຳສາຍ.

໓. ອານາຈັກໂຄຕະບູນຫລືພນົມ ຈີນເອີ້ນວ່າ ພູພັນ ມີເມືອງນະຄອນພະນົມເປັນຣາຊທານີ.

ໃນບັນດາອານາຈັກທັງສາມນີ້ປະກົດວ່າອານາຈັກໂຄຕະບູນ ມີຄວາມຈະເລີນຮຸ່ງເຮືອງກວ່າອານາຈັກອື່ນ ໆ

ບັນທຶກ ເລື່ອງອານາຈັກທັງສາມນີ້ ຊຶ່ງນັກປະວັດສາດທັງຫລາຍວ່າ ເປັນຂອງພວກລະວ້ານັ້ນ ຂ້າພະເຈົ້າບັງເຂົ້າໃຈວ່າ ອານາຈັກທັງສາມນີ້ແມ່ນຂອງພວກລາວຮຸ່ນຕໍາອິດທີ່ໄດ້ຖອຍ ມາ ທາງໃຕ້ ກ່ອນ ລາວພວກອື່ນ ໆ ປະມານຕົ້ນພຸທະກາບ ຂອມຈຶ່ງໄດ້ເຂົ້າມາມີອໍານາດແຍ່ງເອົາໄປຈາກພວກລາວຕໍ່ພາຍລຸນ ລາວຮຸ່ນຫລັງຈຶ່ງໄດ້ຖອຍລົງມາຍາດເອົາຈາກຂອມອີກຕໍ່ໜຶ່ງ ຄືເປັນພວກລາວແລະໄທໃນປັດຈຸບັນນີ້.

ດິນແດນລານຊ້າງສະໄໝທີ່ຊົນຊາດລະວ້າເຂົ້າປົກຄອງນັ້ນ ປະກົດໃນພົງສາວະດານລ້ານຊ້າງ ຊຶ່ງພວກລະວ້ານີ້ ລາວເຮົາເອີ້ນວ່າ ພວກຍັກມາແຕ່ອິນເດັຽ ແລະມີວົງສະກຸນປະກົດໃນພົງສາວະດານລ້ານຊ້າງວ່າ "ບັນ-ທາເມັຽຊື່ມາທາເທວີ ມີລູກສາວຊື່ນາງກາງຣີ (ເນຣີ) .... ພຸທະເສນ (ພະອິດ) ມາໄດ້ນາງກາງຣີ ....

ຄວາມຕອນນີ້ກອງວັນນະຄະດີແນະນໍາວ່າ ເປັນເລື່ອງນິທານຂອງອິນເດັຽບູຮານ. ໜັງສືຄວາມເປັນມາຂອງລາວສະບັບນີ້ເປັນ ສະບັບ ເລືອກ ເອົາແຕ່ແກ່ນຈຶ່ງບໍ່ຄວນເອົາໃສ່ໄວ້ ດັ່ງນີ້.

໓. ຊົນຊາດຂອມ ຫລື ຂະເມັນ

ຂອມໄດ້ເຂົ້າຄອງດິນແດນລ້ານຊ້າງ ເປັນພວກທີ່ສອງຖັດຈາກພວກລະວ້ານາ. ຊຶ່ງປະກົດຊື່ເຈົ້າຄອງລານຊ້າງຕາມພົງສາວະດານລ້ານຊ້າງ ດັ່ງນີ້:-

໑. ຂຸນຊະວາ

໒. ,, ບີບາ

໓. ,, ວິຣິຍາ

໔. ,, ກັນຣາງ

໕. ,, ລັກລິງ

໖. ,, ຣະວັງ

໗. ,, ບີພົງ

ວົງສະກຸນຂອມທີ່ເຂົ້າປົກຄອງດິນແດນລ້ານຊ້າງ ຕາມພົງສາວະດານ ລ້ານຊ້າງກ່າວວ່າ ມີຂຸນຊະວາ ເປັນຕົ້ນສະກຸນຕາມຂໍ້ຄວາມໃນພົງສາວະດານ ລ້ານຊ້າງ ດັ່ງນີ້ "ຍັງມີຜູ້ໜຶ່ງຊື່ວ່າຂຸນຊະວາ ມາສ້າງບ້ານແປງເມືອງໃນຊຽງດົງຊຽງທອງ ລາວເວົ່າເມືອງຊະວາຕາມວົງສາຂຸນຊະວາຈຶ່ງໄວ້ລູກຜູ້ໜຶ່ງ ຊື່ບີບາ. ຂຸນຊະວາຕາຍໄວ້ເມືອງແກ່ບີບາ ບີບາໄວ້ລູກຜູ້ໜຶ່ງຊື່ວ່າ ວິຣິຍາ ຂຸນແລ້ວ

ວິຣິບາຕາຍໄວ້ລູກຜູ້ໜຶ່ງຊື່ກັບຮາງ ຂຸນກັບຮາງໄວ້ລູກຜູ້ໜຶ່ງຊື່ລັກລິງ ຂຸນລັກລິງໄວ້ລູກຜູ້ໜຶ່ງຊື່ຣະວັງ ຂຸນຣະວັງໄວ້ລູກຜູ້ໜຶ່ງຊື່ບີຜິງ . . . . . . ເຂົາແປດຄົນພໍ່ລູກຫລານເຫລັນ ບັງເປັນຂຸນໃຫຍ່ປູ່ກິນບ້ານລ້ານຊ້າງນີ້ມາກ່ອນແລ ຯ"

ວົງສະກຸນຂຸນຊະວາສັນນິດຖານວ່າແມ່ນພວກຂອມທີ່ເຂົ້າມາມີອຳນາດປົກຄອງລ້ານຊ້າງ ກ່ອນພວກລາວວົງຂຸນບູລົມມະຫາຣາຊຈະຖອຍລົງມາຄອບຄອງດິນແດນລ້ານຊ້າງນີ້

໔. ຊົນຊາດລາວ ຫລື ໄທລາວ.

ຊົນຊາດ ລາວເປັນພວກຖ້ວນສາມທີ່ເຂົ້າມາປົກຄອງດິນແດນລ້ານຊ້າງຕໍ່ຈາກພວກຂອມ. ນັບແຕ່ປາງສໄມປູ່ລາງເຊີງ, ຂຸນເດັກ, ຂຸນຄານ, ຂຸນເດັກ ຂຸນຄານສ້າງບ້ານເມືອງບໍ່ຈະເຣີນຮຸ່ງເຣືອງ ຕາມຂໍ້ຄວາມປະກົດໃນພົງສາວະດານລ້ານຊ້າງວ່າ "ເມື່ອຂຸນທັງສອງລົງມາ ສ້າງບ້ານກໍ່ບໍ່ເປືອງ ສ້າງເມືອງກໍ່ບໍ່ກວ້າງ ສູກິນເຫລົ້າ ສູ່ມື້ສູ່ວັນ ບານມາໄພ່ຄ້າງທຸກຄ້າງປາກກໍ່ບໍ່

ດູນາ . . . . . ປາງນັ້ນພະຍາແຖນຫລວງຈຶ່ງໃຫ້ທ້າວຜູ້ມີບຸນ ຊື່ວ່າຂຸນບູລົມມະຫາຣາຊາ ອັນໄດ້ອາດຍາພະຍາແຖນແລ້ວ ກໍ່ຈຶ່ງເອົາລີພົນທັງຫລາຍລົງເມືອເມືອງລຸ່ມລົດລຽງ ເມືອງພຽງດັ່ງກ້ອຍມາຢູ່ທີ່ນານ້ອຍອ້อยໜູ. ອັນມີຫລຸ່ມເມືອງແຖນຫັ້ນກ່ອນແລ"

ຂຸນບູລົມມະຫາຣາຊາໄດ້ລົງມາສ້າງເມືອງໃນດິນ-ແດນສິບສອງຈຸໄທ ໄດ້ສົ່ງຣາຊໂອຣົດຊື່ວ່າຂຸນລໍລົງມາຄອງດິນແດນລ້ານຊ້າງ ປາງນັ້ນດິນແດນລ້ານຊ້າງຍັງຢູ່ໃນຄວາມປົກຄອງຂອງຂອມວົງຂຸນຊະວາ ຂຸນລໍຈຶ່ງໄດ້ນຳກອງທັບເຂົ້າຍາດເອົາເມືອງຊະວາຈາກພວກຂອມ ເມື່ອເລວເສີກແພ້ຂອມແລ້ວ ຂຸນລໍຈຶ່ງໄດ້ຄອງເມືອງຊະວາເປັນທ້າວເປັນພະຍາແກ່ລາວທັງຫລາຍ ກ່ອນທ້າວພະຍາລາວທັງມວນ ແລະໄດ້ປະກົດຊື່ວ່າ "ຂຸນຊະວາ" ຕາມວົງສະກຸນຂອງຂອມກ່ອນນັ້ນແລ.

ຕາມພົງສາວະດານລ້ານຊ້າງຕອນທີ່ຂຸນລໍນຳທະຫານເຂົ້າຍາດເອົາເມືອງຊະວານັ້ນດັ່ງນີ້ "ຍາມນັ້ນຂຸນລໍລ່ອງມາຮອດນ້ຳຂອງ ກໍ່ນອງພົນເຂົ້າມາເມືອງຊະວາຣົບຂ້າກັບຣາງແພ້. ເຂົາພໍ່ລູກຫລານເຫລັນກໍ່ຢູ່

ບໍ່ໄດ້ (ຂຸນກັນຮາງ, ຂຸນລັກລຶງ, ຂຸນຣະວ້າ. ຂຸນບຶພິງ) ລວດຜ່າຍໜີເມືອ ຕົກເມືອງນ້ຳຫາພຸ້ນແລ."

ຕໍ່ໄປນີ້ເປັນຊື່ຂອງວົງສະກຸນຂຸນລໍທີ່ໄດ້ເຂົ້າຄອງລ້ານຊ້າງ ນຳມາປຽບກັບເບິ່ງສາມຕຳນານ ຄື:- ພົງສາວະດານລ້ານຊ້າງ, ປະຊຸມພົງສາວະດານພາກທີ່ ໑໑ ປ. ເລີບູລັງເຍ.

໑.	ຂຸນຊະວາ	ຂຸນຊະວາ	ຂຸນຊະວາລາວ
໒.	,, ຊະວາເລົາ	,, ຊະວາຍ	,, ສູງ
໓.	,, ສູງ	,, ຄຸ	,, ເຂັດ
໔.	,, ເດັກ	,, ຄວງ	,, ຄຸນ
໕.	,, ຄຸນ	,, ຄາງ	,, ຄິບ
໖.	,, ຄຶມ	,, ແພງ	,, ຄ່ວບ
໗.	,, ຄົວ	,, ເພີນ	,, ເຄົາ
໘.	,, ຄານ	,, ພິນ	,. ຄານ
໙.	,, ແພງ	,, ອຸນ	,, ແພງ
໑໐.	,, ເພ້ງ	,, ຄານ	,, ເພ້ງ
໑໑.	,, ພົ	,, ເຄັກ	,, ເພີນ
໑໒.	,, ຄຳ	,, ຮຸງ	,, ພົ
໑໓.	,, ຮຸງ	,, ທ້າວແທນ	,, ຄຳ

໑໔.	ຂຸນຫ້າວແຫນໃນ	ຂຸນບຸງ	ຂຸນຮຸງ
໑໕.	,, ບຸງ	,, ເບືອກ	,, ຫ້າວແຫນ
໑໖.	,, ເບີກ	,, ພີນ	,, ບຸງ
໑໗.	,, ພີນ	,, ຜາດ	,, ເບີກ
໑໘.	,, ຜາດ	,, ຫລອງ	,, ພີນ
໑໙.	,, ຫວ່າງ	,, ລັງ	,, ຜາດ
໒໐.	,, ລັງ	ພະຍາສຸວັນນະຄຳຜົງ	,, ຫວ່າງ
໒໑.	ພະຍາຄຳຜົງ	–	,, ລັງ
໒໒.	–	–	ພະຍາສຸວັນນະຄຳຜົງ

໕. ຂຸນບູຣົມໄດ້ສ້າງຣາຊໂອຣົສໄປຄອງເມືອງໃດແດ່ ?

ຂຸນບູຣົມມະຫາຣາຊກະສັດເຊື້ອຊາດລາວ ຜູ້ມີສາຍຕາຍາວ, ເບິ່ງເຫັນເຫດການໄກ, ເປັນນັກຣົບທີ່ເກັ່ງກ້າສາມາດ ເປັນນັກປາດໃນທາງການເມືອງແລະທາງການປົກຄອງ ໄດ້ມີນະໂຍບາຍທີ່ຈະໃຫ້ຊົນຊາດເຈົ້າຂອງດິນແດນເກົ່າແລະພວກລົງມາຢູ່ໃໝ່ ບໍ່ໃຫ້ປຽດບຽນກັນ ຈຶ່ງໄດ້ແຕ່ງເຣື່ອງບູຣົມນິທານວ່າ ຊົນພວກນີ້ແມ່ນສະກຸນເຊື້ອຊາດດຽວກັນ ເກີດມາແຕ່ໝາກ

ບ້າເຕົ້າປຸງບໍາກັບ ມີລູກຫລານເຊື້ອສາຍອອກມາເປັນ ໄທ, ລາວ, ຫໍ້, ແກວແລະຂ້າ.

ຂຸນບູລົມໄດ້ລົງມາສ້າງເມືອງແຖງຫລືເມືອງແຖນ (ດຽນບຽນຟູ) ແລະໄດ້ຈັດສົ່ງຣາຊໂອຣົສເຈັດອົງອອກໄປສ້າງອານາຈັກຕ່າງ ໆ ທັງຫລາຍ ເປັນການຂຍາຍອານາເຂດດິນແດນຫນອງແສໃຫ້ກວ້າງໃຫຍ່ໄພສານ. ເພາະວ່າຄໍາວ່າ "ຣາຊສົມບັຕ" ໃນປາງນັ້ນກໍ່ແມ່ນຄົນສ່ວນແລະພື້ນແຜ່ນດິນ ຕາມພົງສາວະດານລ້ານຊ້າງ, ປະຊຸມພົງສາວະດານພາກທີ ໑໑ ແລະຂອງ ປ. ເລີບູລັງເຍ ທັງສາມອັນນີ້ບໍ່ກົງກັນ, ຈຶ່ງໄດ້ນໍາມາປຽບທຽບກັນໄວ້ທັງສາມສະບັບດັ່ງນີ້.

໑.- <u>ພົງສາວະດານລ້ານຊ້າງ</u>

ລູກຄົນທີ ໑ ຂຸນລໍ ໄປສ້າງ ເມືອງຊະວາ
,, ໒ ຍີ່ຜາລານ ,, ,, ຫົວແຕ
,, ໓ ສາມຈູສົງ ,, ,, ແກວຊ່ອງບົວ
,, ໔ ໄສພົງ ,, ,, ຍວນໂຍນົກ
,, ໕ ງົວອິນ ,, ,, ຊາວໄຕ້ອະໂຍທະຍາ
,, ໖ ລົກກົມ ,, ,, ຊຽງຄົມ
,, ໗ ເຈັດເຈືອງ ,, ,, ພວນ

໖ – ປະຊຸມພົງສາວະດານພາກທີ ໑໑

ລູກຄົນທີ ໑ ຂຸນລໍ ໄປສ້າງ ເມືອງຊະວາ
,, ໒ ຍີ່ຜາລານ ,, ,, ປະຄົງ
,, ໓ ສາມຈູສົງ ,, ,, ບົວຊູມ
,, ໔ ໄສພົງ ,, ,, ຫົງສາ
,, ໕ ງົວອິນ ,, ,, ອະຍຸທະຍາ
,, ໖ ລົກກົມ ,, ,, ອິນທະປັດ
,, ໗ ເຈັດເຈືອງ ,, ,, ຊຽງຂວາງ (ເມືອງພວນ)

໗– ປ. ເລບູລັງເຍ

ລູກຄົນທີ ໑ ຂຸນລໍ ໄປສ້າງ ເມືອງຊະວາ
,, ໒ ຍີ່ຜາລານ ,, ,, ສິບສອງພັນນາ
,, ໓ ສາມຈູສົງ ,, ,, ປະຄັນ (ເໜືອຕັງເກັ້ງ)
,, ໔ ໄສພົງ ,, ,, ລານນາ
,, ໕ ງົວອິນ ,, ,, ລະໂວ້
,, ໖ ລົກກົມ ,, ,, ຫົງສາ
,, ໗ ເຈັດເຈືອງ ,, ,, ພວນ

໔.- <u>ຄວາມເຫັນຮູ້ຮວບຮວມ</u>

໑. ລູກຄົນທີ່ໜຶ່ງ ຄື ຂຸນລໍ່ ໄປສ້າງເມືອງຊະວາ ຫລືເຊົ້າ ຄື ເມືອງຊຽງດົງຊຽງທອງ ແລະເປັນເມືອງຫລວງພະບາງບັດນີ້.

໒. ລູກຄົນທີ່ສອງ ຄື ຍີ່ຜາລານ ໄປສ້າງເມືອງທາງສິບສອງພັນນາ ເພາະເມືອງທ່ະເດ ໃຫ້ຫລືບັງເປັນເຂດແດນຂອງອານາຈັກໜອງແສຢູ່ໃນປາງນັ້ນ. ຍີ່ຜາລານຈຶ່ງໄປຄອງເມືອງທາງທ່ແດນະລື້ສິບສອງພັນນາ.

໓. ລູກຄົນທີ່ສາມ ຄື ສາມຈູສົງ ໄປສ້າງເມືອງປະຄັນ ຄືເມືອງຫົວພັນທັງຫ້າທັງຫົກ ຢູ່ເໜືອເຂດແດນຕັງເກັງ.

໔. ລູກຄົນທີ່ສີ່ ຄື ໄສຜົງ ໄປສ້າງເມືອງທາງລ້ານນາ ຊຶ່ງຕໍ່ມາເປັນອານາຈັກລ້ານນາ ມີນະຄອນຊຽງໃໝ່ເປັນຣາຊທານີ

໕. ລູກຄົນທີ່ຫ້າ ຄື ງົວອິນ ໄປສ້າງເມືອງທາງອະໂຍທະຍາ ຊຶ່ງຕໍ່ມາເປັນອານາຈັກສຍາມ ແລະເປັນປະເທດໄທໃນປັດຈຸບັນນີ້.

໖. ລູກຄົນທີ່ຫົກ ຄື ລົກກົມ ໄປສ້າງເມືອງມອນຫົງສາ ຊຶ່ງປາງນັ້ນກໍ່ເອີ້ນວ່າ ອິນທະປັດປ່າງດຽວກັນ

ກັບອິນທະປັດຂອງຂອມ.   ແຕ່ອິນທະປັດທີ່ລິກກົມໄປສ້າງນັ້ນແມ່ນອິນທະປັດໃນດິນແດນຂອງພະມ້າ   ບັດນີ້ຊຶ່ງແມ່ນພວກອານາຈັກໄທໃຫຍ່ຕໍ່ມາ   (ຫລືຈະເປັນເມືອງຫົງສາໃນພາກເໜືອຂອງລາວກໍ່ອາດຈະເປັນໄດ້) ບັດນີ້ຊຶ່ງແມ່ນພວກອານາຈັກໄທໃຫຍ່ຕໍ່ມາ.

ກ. ລູກຄົນທີ່ເຈັດ ຄື ເຈັດເຈືອງ ໄປສ້າງເມືອງພວນຊຽງຂວາງ   ຊຶ່ງມີອານາເຂດແຕ່ຮູແມ່ນ້ຳງຽບໄປຮອດແດນເມືອງບໍລິຄັນແລະເປັນແຄວ້ນພວນສືບຕໍ່ມາ.

໕. ໂອຣິສຂຸນບູລົມເອີ້ນສັ່ງເມືອງ

ຣາຊໂອຣິສຂຸນບູລົມ   ໄດ້ຮ້ອງສັ່ງຊາວເມືອງທັງ-ຫລາຍຕອນຈະແຍກຍ້າຍກັນໄປຄອງເມືອງຕ່າງ ໆ ເປັນໂຄງສີສຸພາບດັ່ງນີ້   (ຄຳໂຄງນີ້ຄັດກ່າຍມາຈາກໜັງສືພົງສາວະດານລ້ານຊ້າງ)

ຂຸນລໍເອີ້ນສັ່ງຊາວເມືອງວ່າ:-

ປູ່ເບີແຖນຖ່ອງບ້ານ   ເປົ່າລາ
ຈັກຈາກຈຽນໄກຕາ   ກ່ອນແລ້ວ
ສິ່ງໃສນສອດໃສພາ   ແພງໂພດ   ພໍ້ນພີ່
ຂົກພີ່ໄຫ້ບຸນແພ້ວ   ແຜ່ນພື້ນນະຄອນຊະວາ (ຫລວງພະບາງ)

ບີຜາລາວເອີ້ນສັ່ງວ່າ:-

ປູ່ເບີນາບໍ່ນ້ອຍ   ແຖນແຖງ
ຮຽນຈັກຈາກຈອມແພງ ພາກຂ້າງ
ຈັກເດີນພາຍພັນແສວງ ຊົມເພື່ອນ ພຸ້ນພີ່.
ໄປແຕ່ງບ້ານເມືອງກວ້າງ ແຫ່ງຫ້ອງຫໍແກ (ໜອງແສ)

ສາມຈູສົງເອີ້ນສັ່ງວ່າ:-

ປູ່ເບີແມ່ນບ່ອນບ້ານ   ບຸຣີ
ຈັກຈາກໄປຈຸລະນີ   ກ່ອນແລ້ວ
ສົມພານທີ່ຍັງມີ   ເມື່ອຂິ່ນເຂົາພຸ້ນ
ອົງອາດຂື້ນປາງແກ້ວ ໂກດແຫ້ແຫ່ນບົວ (ອານາມແກວ
ປະກັນພຸເຫີດ)

ໄສຜົງເອີ້ນສັ່ງວ່າ:-

ປູ່ເບີບ້າເຕົ້າປຸງ   ເດີມດີນ
ຈັກຈາກໄປເດີນຫົນ   ຫ່າງຫັ້ນ
ໂດຍຄອງທີ່ທາງຊົນ   ຊຽງໃໝ່
ບຸນຫາກມີດັ່ງນັ້ນ   ອາດສ້າງສະເວີຍເມືອງ (ລ້ານນາ)

ງົວອຶນເອີ້ນສັ່ງວ່າ:-

ປູ່ເບີພະພໍ່ເຈົ້າ   ບຸລົມ ລູກເອີຍ
ລູກເກີດມາສາຍສົມ   ສື່ບເຊື້ອ
ຈັກຈາກຈຽນຈອມຊົມ ຊາວອີນ ລະພໍ່
ໄປເສັບສຸກສະເວີຍເກື້ອ ເກີບກ້າອະໂນທະນາ. (ສຍາມ)

ລິກກິນເອິ໋ນສັ່ງວ່າ:-

ປູ່ເບີແມ່ນຊາດເຊື້ອ   ຊາວແຖງ
ລູກເກີດມີເປືອແປງ   ຝ່າຍຂ້າງ
ຈັ້ກໄປສືບບູນແປງ   ເປັນເພື່ອນ ພາຍພຸ້ນ
ເອັດໝູ່ມອບເມືອງກວ້າງ   ເກີດກ້າຊຽງຄິມ (ຄ່ຳເກີດ)

ສ່ວນເຈັດເຈືອງນັ້ນໃນພົງສາວະດານ ລ້ານຊ້າງບໍ່ປະກົດວ່າມີຄຳໂຄງເອິ໋ນສັ່ງ   ມີແຕ່ຄຳສັ່ງຂອງຂຸນບູລົມວ່າ   “ບໍ່ສາມ ເຈັດເຈືອງ ໃຫ້ໄປ ສ້າງ ເມືອງພວນ” ທໍ່ນັ້ນ.

໓

ພາກທີສາມ

ວ່າດ້ວຍລາວສໄມອານາຈັກລ້ານຊ້າງ (ນະຄອນຫລວງພຣະບາງ ແລະນະຄອນວຽງຈັນ)

---

໑. ຣັຊກາລຂຸນລໍ ຮອດຣັຊກາລທ້າວຫວ່າງ

ເມື່ອຂຸນບໍຣົມຣາຊາທິຣາຊໄດ້ສິ້ງ ໂອຣົສອົງທີ່ໜຶ່ງ ຄືຂຸນລໍໃຫ້ລົງມາສ້າງເມືອງທາງໃຕ້ໃນດິນແດນແຫລມທອງນັ້ນ ດິນແດນລ້ານຊ້າງຍັງຢູ່ໃນຄວາມປົກຄອງຂອງຂອມວົງຂຸນຊວາຢູ່ ຂຸນລໍຈຶ່ງໄດ້ນຳກອງທັບເຂົ້າແຍ່ງເອົາເມືອງຊວາຈາກຂອມ ເມື່ອພາບແພ້ໄດ້ໄຊແກ່ຂອມແລ້ວ ຂຸນລໍຈຶ່ງໄດ້ເປັນໃຫຍ່ໃນເມືອງຊວາເປັນທ້າວພຣະຍາແກ່ລາວທັງຫລາຍ ແລະໄດ້ປາກົດນາມວ່າ "ຂຸນຊວາ" ຕາມວົງຕະກູນຂອງຂອມແຕ່ກ່ອນນັ້ນ ແລ ຕາມພົງສາວະດານລ້ານຊ້າງໄດ້ກ່າວເຖິງຂຸນລໍຕອນ ຍົກທັບ ເຂົ້າຍາດ ເອົາ ເມືອງຊວາ ຈາກ ຂອມ ໄວ້ວ່າ "ຍາມນັ້ນຂຸນລໍລ່ອງມາຣອດນ້ຳ ຂອງກັບອງພົລເຂົ້າມາເມືອງຊວາຣົບຂ້າກັນຣາງແພ້ ເຂົາພໍ່ລູກຫລານເຫລນ

ກໍ່ປູ່ບໍ່ໄດ້. (ຄືວ່າພວກຂອມມີຊຸບກັບຣາງ, ຊຸບລັກລີງ, ຊຸບຣະວັງ, ຊຸບບີຜີງ,) ລວດພ່າຍໜີເມື່ອຕົກເມືອງ ນ້ຳຫາພຸ້ນແລ ເມື່ອນັ້ນຊຸບລໍຈຶ່ງໄດ້ຕັ້ງເມືອງເປັນທ້າວ, ເປັນ ພຣະຍາ ແກ່ລາວ ທັງຫລາຍ ກ່ອນ ທ້າວ ພຣະຍາ ລາວທັ້ງມວນ"

(ຕອນນີ້ ກອງວັນນະຄະດີໄດ້ໃຫ້ ບັນທຶກເພີມເຕີມ ມາວ່າ "ໃນສະບັບເດີມວ່າ ຣິບຂ້າກັບຣາງແພ້ ໝາຍຄວາມວ່າຕີຂ້າກັບຣາງ ແພ້ກັບຣາງ ເປັນຊື່ເຈົ້າຂອງເມືອງຊວາໃນສໄມນັ້ນຮຽກວ່າຊຸບກັບຣາງ. ດັງນີ້)

ຊຸບລໍໄດ້ປົກຄອງ ເມືອງຊວາຫລືຫລວງພຣະບາງ ໄດ້ມີຊື່ວ່າ "ຊຸບຊວາ" ຕາມຊື່ເກົ່າຂອງພວກຂອມ ເມື່ອຊຸບຊວາ ສວັນຄົດແລ້ວ ໄດ້ມີ ຣາຊບຸດ ປົກຄອງເມືອງຊວາ ເປັນຣາຊວົງຊຸບລໍສືບຕໍ່ ໆ ມາເປັນລຳດັບ ນັບໄດ້ ໑໔ ຊຸບ

(ລາງບ່ອນວ່າ ໑໒ ຊຸບ ລາງບ່ອນວ່າ ໑໖ ຊຸບ)

ແລະນັບທ້າວໄດ້ ໗ ທ້າວ ຄື -

໑. ຊຸບລໍ (ຊຸບຊະວາ)	໓. ຊຸບສູງ
໒. ,, ເດັກ	໔. ,, ຄຸມ
໕. ,, ຄືມ	໖. ,, ຄາບ

໗. ຂຸນເຕົາ	໑໘. ຂຸນຄານ
໘. „ ແພງ	໑໐. „ ເພັງ
໑໑. „ ເພີນ	໑໒. „ ພີ
໑໓. „ ຄ່ຳ	໑໔. „ ຮຸ່ງ
໑໕. „ ທ້າວແທນ	໑໖. „ ບຸງ
໑໗. „ ເບີກ	໑໘. „ ພີນ
໑໘. „ ຜາດ	໒໐. „ ຫວ່າງ

໒໑. ທ້າວລ້າງຫລືພະບາລັງທີ່ຣາຊ ໑໘໑໔-໑໘໕໘

ເມື່ອທ້າວຫວ່າງສວັນຄົດແລ້ວທ້າວລ້າງຜູ້ຣາຊບຸດໄດ້ຣາຊສົມບັດແທນ ມີຍົດເປັນພຣະບາເອີນວ່າ "ພຣະບາລັງ" ເມື່ອປະມານ ພ.ສ. ໑໘໑໔ ພຣະບາລັງມີຣາຊບຸດ ຄື ທ້າວຄຳຜົງ. ພຣະບາລັງສວັນຄົດເມື່ອ ພ.ສ. ໑໘໕໘ ຄອງຣາຊສົມບັດໄດ້ ໔໕ ປີ ທ້າວຄຳຜົງຈຶ່ງໄດ້ສືບຣາຊສົມບັດແທນຊຶ່ງພຣະນາມວ່າ "ພຣະບາຄຳຜົງຫລືພຣະບາສຸວັນຄຳຜົງ"

ປວັດສາດຂອງລາວນັບແຕ່ຂຸນລໍ ມາຮອດທ້າວຫວ່າງນັ້ນ ຫາສັກຣາຊແນ່ນອນເປັນຫລັກບໍ່ໄດ້ ສັກ

ຣາຊແນ່ນອນແຕ່ທ້າວລັງ ຫລືພຣະບາລັງເປັນຕົ້ນມາ
ເຫດນີ້ ຄວາມເປັນມາຂອງຊາດລາວ ນັບແຕ່ສໄມ
ພຣະບາລັງເປັນຕົ້ນມາ ຈຶ່ງນັບເປັນປວັດສາດທີ່ແນ່
ນອນໄດ້

໒໖. <u>ຣັຊກາລພຣະບາ ສຸວັນຄຳຜົງ</u> ແຕ່ ພ. ສ. ໑໘໕໙
ເຖິງ ພ. ສ. ໑໘໙ປີ

ເມື່ອພຣະບາລັງສວັນຄົດແລ້ວ ທ້າວຄຳຜົງໄດ້
ຄອງຣາຊສົມບັດໃນນະຄອນລ້ານຊ້າງສືບມາ ຊົງພຣະ
ນາມວ່າ "ພຍາສຸວັນຄຳຜົງ" ເມື່ອ ພ. ສ. ໑໘໕໙
ພຍາສຸວັນຄຳຜົງມີໂອຣົສອົງໜຶ່ງຊື່ວ່າທ້າວຜີຟ້າ ທ້າວ
ຜີຟ້າເມື່ອໃຫຍ່ໄດ້ເມັຍມີລູກ ໖ ຄົນ ຄື ຟ້າງຸ່ມ, ຟ້າ
ງ້ຽວ, ຟ້າບານ, ຄານຄຳ, ຟ້າກ່ຳ, ຟ້າຂຽວ, ແຕ່ທ້າວ
ຟ້າງຸ່ມນັ້ນ ເກີດມາມີອາເພດແປກກວ່າມະນຸດທັງຫລາຍ
ຄືມີແຂ້ວມາແຕ່ໃນທ້ອງເຕັມປາກ ໝໍໂຫນທຳນາຍ
ວ່າເຂັດຂວາງ ແພ້ບ້ານແພ້ເມືອງ ເພາະວ່າມີແຂ້ວເຕັມ
ປາກມາແຕ່ໃນທ້ອງແມ່ ຍາມນອນກໍໂກນດັງຄືສຽງ
ດົນຕຣີ ພຣະບາສຸວັນຄຳຜົງປູ່ຈຶ່ງໃຫ້ເອົາໄປໄຫລລ່ອງນ້ຳ

ເສັຽທັງພໍ່ທັງລູກ ໂດຍໃຫ້ເສນາຈັດແພລ່ອງໄປສົ່ງ ຮອດແກ້ງລີ່ຜີໃຫ້ອອກຈາກເຂດກຸງລ້ານຊ້າງ.

ເມື່ອຂຶ້ນຈາກແກ້ງລີ່ຜີແລ້ວທ້າວຜີຟ້າ ແລະຟ້າງຸ່ມ ສອງພໍ່ລູກ ໄດ້ເດີນ ທາງເຂົ້າສູ່ ກຸງອິນທະປັດນະຄອນ ຄືເມືອງນະຄອນທົມຂອງຂອມ ຫວັງຈະໄປເພິ່ງພຣະບໍຣົມໂພທິສົມພານ ຂອງພຣະເຈົ້າອິນທະປັດນະຄອນ ແລະໄດ້ໄປເຊົາຢູ່ວັດ ຊຶ່ງມີອາຈານພຣະປ່າສະມັນມະຫາເຖຣະເປັນສົມພານ ຕອນກາງຄືນ ທ້າວຟ້າງຸ່ມນອນຫລັບໂກນສຽງດັງມ່ວນຄືສຽງດົນຕຣີ ເຊົ້າຂຶ້ນພຣະປ່າສະມັນ ມະຫາເຖຣະໄດ້ເບິ່ງ ລັກສນະ ຂອງທ້າວຟ້າງຸ່ມ ແລ້ວເຫັນວ່າ ກຸມານ ອົງນີ້ ຕໍ່ໄປ ຈະມີບຸນ ໄດ້ເປັນ ກະສັດຕຣາທິຣາຊໃນພາຍໜ້າ ພຣະປ່າສະມັນມະຫາເຖຣະຈຶ່ງໄດ້ອຸປກາຣະລ້ຽງດູສອງພໍ່ລູກ ອົບຣົມສັ່ງສອນວິຊາການຕ່າງ ໆ ໃຫ້ ຈົນຟ້າງຸ່ມອາຍຸໄດ້ ໑໖ ປີ ພຣະປ່າສະມັນມະຫາເຖຣະ ຈຶ່ງໄດ້ນຳ ເຂົ້າໄປ ຝາກເປັນມະຫາດເລັກສຶກສາສິລປະ ວິຊາການຕ່າງ ໆ ໃນຣາຊສຳນັກຂອງພຣະເຈົ້າກຸງອິນທະປັດນະຄອນ.

(ຕອນ ທ້າວ ຜີຟ້າ ບິດາ ຂອງ ທ້າວຟ້າງຸ່ມນີ້ ກອງວັນນະຄະດີໄດ້ບັນທຶກທ້ວງມາວ່າດັ່ງນີ້ – "ເຣື່ອງທ້າວ

ຜີຟ້າບິດາຂອງທ້າວຟ້າງຸ່ມທ່ານິສສາຈານ ບໍ່ສົນເຫດ ຜົນ ທັງລຳດັບວົງສະກຸນກໍ່ຜິດຈາກໃບພູກອື່ນ ຄື

໑. ໜັງສືຂຸນບູຣົມພູກ ໒ (ປູ່ວັດສີສະເກດວຽງຈັນ) ກ່າວລຳດັບວົງເຈົ້າຟ້າງຸ່ມໄວ້ດັ່ງນີ້ -

- ເຈົ້າຟ້າຫລວງໂງ່ມ (ພຍາສຸວັນນະຄຳຜົງ) ມີໂອຣົສສອງອົງ ຄື ເຈົ້າຟ້າງ້ຽວ ແລະເຈົ້າຟ້າຄຳຮຽວ, ເຈົ້າຟ້າງ້ຽວ (ຂຸນຜີຟ້າ) ມີລູກ ໔ ຄົນ ຊາຍ ໒ ຍິງ ໒ ລູກຜູ້ຫລ້າບັ້ນຊື່ ຟ້າງຸ່ມ ເມື່ອເກີດມີແຂ້ວອອກມາພ້ອມ

໒. ໜັງສືຂຸນບູຣົມ ສະບັບຂອງທ່ານມຸກ ກຸງເທບ ກ່າວໄວ້ວ່າ "...ເຂົາຈຶ່ງເອົາຍາຫລວງໂງ່ມມາເປັນເຈົ້າແຜ່ນດິນ ມີລູກ ໗ ຄົນ ຍິງ ໔ ຄົນ ລູກເກົ້າຄົນນີ້ເຮົາບໍ່ຈາກ່ອນແລ ເຮົາທໍ່ແຕ່ຈັກຈາຜູ້ກິນເມືອງແທນຫລວງໂງ່ມແລ ເຂົາຈຶ່ງເອົາຍາຄຳຮຽວຜູ້ເປັນລູກອ້າຍມາເປັນເຈົ້າແຜ່ນດິນແທນ ຍາຄຳຮຽວມີລູກ ໔ ຄົນ ຍິງ ໒ ຊາຍ ໒ ຜູ້ນ້ອງຫລ້ານັ້ນມີແຂ້ວ ມີມີ ເຫລັ້ມແຕ່ໃນທ້ອງອອກມາ ເສນາອາມາດທັງຫລາຍວ່າເຂັດຂວາງຈັກແພ້ບ້ານເມືອງວ່າດັ່ງນັ້ນ ເຂົາຈຶ່ງໃສ່ແພໄຫລເສັຽ ຯລຯ..."

ຕາມເຫດນີ້ເຈົ້າຟ້າງຸ່ມຖືກໄຫລແພໄປເມືອງຂເມນແຕ່ຜູ້ດຽວ ພຣະບິດາບໍ່ໄດ້ທຳຜິດແລະບໍ່ໄດ້ໄປນຳ ເພາະໃນຕອນລຸນຜາກົດວ່າຂຸນຜີຟ້າຍັງເປັນເຈົ້າແຜ່ນດິນປູ່ຫລວງພຣະບາງ ແລະສວັນຄົດໃນເວລາເຈົ້າຟ້າງຸ່ມຍັງຢູ່ໃນປະເທດຂເມນ

ຕາມທີ່ໄດ້ຄົ້ນຄວ້າຄັກແນ່ແລ້ວເຫັນວ່າ ພຣະບິດາເຈົ້າຟ້າງຸ່ມແມ່ນເຈົ້າຟ້າງ້ຽວຫລືຂຸນຜີຟ້າ ເຈົ້າຟ້າຄຳຮຽວເປັນອາວ ເມື່ອຂຸນຜີຟ້າສວັນຄົດເຈົ້າຟ້າຄຳຮຽວໄດ້ເປັນເຈົ້າແຜ່ນດິນແທນ. ເຈົ້າຟ້າງຸ່ມກັບຈາກຂເມນໄດ້ມາຮົບກັບອາວຂອງຕົນ. ແລະຂໍໃຫ້ຕັດຕອນທີ່ບໍ່ສົມເຫດສົມຜົນອອກເສັຽ" ດັ່ງນີ້)

ຝ່າຍທ້າວຟ້າງຸ່ມ ໄດ້ຮັບ ຣາຊການໃນ ຣາຊສຳນັກຂອມໄດ້ຮັບຄວາມໂປດປານເປັນທີ່ພໍພຣະຣາຊຫະຣືໄທຂອງພຣະເຈົ້າກຸງອິນທະປັດນາກ ພຣະອົງຈຶ່ງໄດ້ຍົກພຣະຣາຊທິດາ ຊື່ວ່າ ພຣະນາງຍອດແກ້ວ ໃຫ້ເປັນມະເຫສີຂອງທ້າວຟ້າງຸ່ມ ຂນະທີ່ທ້າວຟ້າງຸ່ມຢູ່ໃນຣາຊສຳນັກຂອມນັ້ນ ເປັນສໄມທີ່ຣາຊອານາຈັກຂອມເຣີ່ມເສື່ອມອຳນາດລົງ ເພາະຂອມທາງລຸ່ມແມ່ນ້ຳເຈົ້າພຣະຍາ ກຳລັງຖືກຂັບໄລ່ຈາກໄທທາງກຸງສີອະຍຸທ

ທະບາ ຂອມຫວັງປ້ອງກັນບໍ່ໃຫ້ກຸງອິນທະປັດຖືກໄທ ຮຸກຮານຕໍ່ໄປ ຈຶ່ງຄິດໃຫ້ທ້າວຟ້າງຸ່ມຜູ້ຮາຊບຸດເຂີຍ ຂອງພຣະອົງໄດ້ຄອງກຸງລ້ານຊ້າງ (ຫລວງພຣະບາງ) ເພື່ອເອົາໄວ້ເປັນກຳລັງປ້ອງກັນ ການ ຮຸກຮານ ຂອງໄທ ທາງກຸງສີອະຍຸທະຍາຕໍ່ໄປ.

ເຖິງເມື່ອ ພ. ສ. ໑໘໙໔ ພຣະເຈົ້າກຸງອິນທະປັດ ຈຶ່ງຈັດ ກອງທັບ ມີກຳລັງພົລ ພ້ອມດ້ວຍ ອາວຸດ ໃຫ້ໝື່ນ ໜຶ່ງເພື່ອຂຶ້ນໄປຕີເອົາເມືອງຊວາ (ຫລວງພຣະບາງ) ເມື່ອທ້າວຟ້າງຸ່ມ ໄດ້ກຳລັງ ຈາກຂອມແລ້ວ ກໍໄດ້ນຳກອງ ທັບ ຕີຫົວເມືອງ ນ້ອຍໃຫຍ່ ຂຶ້ນມາ ຕາມ ລຳແມ່ນ້ຳ ຂອງ ພໍເຖິງເມືອງປາກຊັນ ທ້າວຫຽນຄຳ (ຍໍ້) ບຸດບີທັນ ເຈົ້າເມືອງພວກຊຽງຂວາງ ໜີຈາກເມືອງນາອາໄສຢູ່ ປາກຊັນ ຂໍໃຫ້ທ້າວຟ້າງຸ່ມຕີເອົາເມືອງພວນໃຫ້ ແລະ ສັນຍາວ່າຈະຕີເອົາເມືອງຊວາຊ່ວຍທ້າວຟ້າງຸ່ມ ທ້າວ ຟ້າງຸ່ມຈຶ່ງບົກໄປຕີເອົາເມືອງພວນຊຽງຂວາງໄດ້ ແລະ ມອບໃຫ້ທ້າວຫຽນຄຳເປັນເຈົ້າເມືອງເມື່ອ ພ. ສ. ໑໘໙໕ ທ້າວຟ້າງຸ່ມຈຶ່ງເຂົ້າພັກຢູ່ໃນເມືອງພວນຊຽງຂວາງ.

ເຖິງ ພ. ສ. ໑໘໙໖ ທ້າວຟ້າງຸ່ມຈຶ່ງໄດ້ຍົກກອງ ທັບໄປຕີເມືອງຊວາ ທ້າວຫຽນຄຳເກນພົລໃຫ້ໝື່ນນາ

ນຳທັບຍົກໄປຊ່ວຍ ແບກກອງທັບອອກເປັນສອງພວກ ຄືທາງນ້ຳເຊືອງ. ນ້ຳແຊງທາງໜຶ່ງ ທາງນ້ຳຄານອີກທາງໜຶ່ງ.

ຝ່າຍພຣະບາສຸວັນນະຄຳພົງ ເມື່ອໄດ້ຊາບຂ່າວວ່າທ້າວຟ້າງຸ່ມຜູ້ຫລານຍົກກອງທັບມາ ເພື່ອຕີເອົາເມືອງ ກໍໄດ້ ກຽມການ ປ້ອງກັນ ເມືອງຫລວງ ພຣະບາງໄວ້ຢ່າງສາມາດ. ຝ່າຍທ້າວຟ້າງຸ່ມເມື່ອຍົກກອງທັບມາເຖິງເຂດ ຫລວງພຣະບາງ ແລ້ວກໍສົ່ງພຣະຣາຊສານເຂົ້າໄປຖວາຍພຣະບາສຸວັນນະຄຳພົງ ພຣະເຈົ້າປູ່ມີໃຈຄວາມວ່າ " ຈະຂໍເອົາຣາຊສົມບັດ." ຝ່າຍພຣະບາສຸວັນນະຄຳພົງບໍ່ຍອມ ໄດ້ຍົກກອງທັບອອກໄປຕໍ່ສູ້ກັບກອງທັບຟ້າງຸ່ມ ໃນທີ່ສຸດກອງທັບພຣະບາສຸວັນນະຄຳພົງສູ້ບໍ່ໄດ້ ຖອຍກັບເຂົ້າເມືອງ ພຣະບາສຸວັນນະຄຳພົງບໍ່ສາມາດ ຈະເກນ ພົລ ອອກ ຕໍ່ຣົບ ກັບ ທ້າວຟ້າງຸ່ມ ຜູ້ເປັນຫລານໄດ້ ຈຶ່ງຜູກຄໍຖວາຍປູ່ທີ່ພຣະຣາຊວັງຊຽງທອງໃນຫລວງພຣະບາງ ເມື່ອ ພ. ສ. ໑໘໙໖.

໔໖. ຣັຊການ ພຣະ ເຈົ້າ ຟ້າງຸ່ມແຫລ່ງ ຫລ້າ ທໍຣະນີ ພ. ສ. ໑໘໙໖ ເຖິງ ໑໙໑໖

ພຣະເຈົ້າຟ້າງຸ່ມ ເປັນ ວີຣະກະສັດ ຂອງລາວພຣະ

ອົງແຣກ ທີ່ໄດ້ທ້ອນໂຮມລາວທີ່ຢູ່ໃນເຂດລຸ່ມແມ່ນ້ຳຂອງທັງສອງຝັ່ງ ໃຫ້ເປັນ ອັນໜຶ່ງ ອັນດຽວ ກັນໄດ້ ສຳເຣັດ ຈຶ່ງ ສົມຄວນ ໄດ້ຮັບ ກຽດ ຍົກຍ້ອງ ເປັນ "ມະຫາຣາຊ" ພຣະອົງແຣກ ຂອງ ກະສັຕລາວ ແຫ່ງ ຣາຊວົງລ້ານຊ້າງ ພຣະຣາຊປວັດຂອງສົມເດັດພຣະເຈົ້າຟ້າງຸ່ມນັ້ນ ຂໍນຳມາເລົ່າໂດຍຫຍໍ້ ໆ ດັ່ງຕໍ່ໄປນີ້ ຄື -

ສົມເດັດພຣະເຈົ້າຟ້າງຸ່ມປະສູຕເມື່ອປີ ພ. ສ. ໑໘໕໙ ທີ່ນະຄອນລ້ານຊ້າງ (ຫລວງພຣະບາງ) ເປັນໂອຣົສຂອງທ້າວຜີຟ້າ ແລະເປັນຣາຊນັດດາ (ຫລານ) ຂອງພຣະເຈົ້າສຸວັນນະຄຳຜົງ ກະສັຕຣາຊວົງລ້ານຊ້າງອົງທີສອງ ປະສູຕອອກມາທຳອິດມີແຂ້ວອອກມາເຕັມປາກ ເວລານອນຫລັບກໍມີສຽງໂກນດັງມ່ວນຄືສຽງດົນຕຣີບໍ່ວ່າແປກຕ່າງກວ່າຄົນທັງຫລາຍ ພໍ່ພຣະຊົນມາຍຸໄດ້ສິບປີໄດ້ສເດັດໄປຢູ່ປະເທດຂເມນ ໄດ້ເຂົ້າສຶກສາ ແລະ ຮັບຣາຊການ ໃນຣາຊສຳນັກ ຂອງພຣະເຈົ້າອິນທະປັດນະຄອນເມືອພຣະຊົນໄດ້ ໑໖ ພັນສາ ເປັນທີ່ໂປດປານ ຂອງ ພຣະເຈົ້າ ອິນທະປັດ ມາກ ໄດ້ ພຣະຣາຊທານທິດາຂອງຂອມ ຊື່ວ່ານາງພຣະນາງນອດແກ້ວເປັນມະເຫສີ ເຖິງ ພ. ສ. ໑໘໘໔ ໄດ້ກຳລັງທັບຈາກພຣະ

ເຈົ້າ ກຸງອິນທະປັດ ພໍ່ຕາ ຍົກມາ ຕີເອົາ ນະຄອນ ຫລວງ ພຣະບາງໄດ້ ເມື່ອ ພ.ສ. ໑໘໙໖ ເມື່ອພຣະຊົນມາຍຸໄດ້ ໓໘ ພັນສາ ຈຶ່ງໄດ້ຂຶ້ນສເວີຍຣາຊສົມບັດເປັນກະສັດລາວ ຣາຊວົງລ້ານຊ້າງອົງທີ່ຊາວສາມ ຊົງພຣະນາມວ່າ "ສົມເດັດພຣະເຈົ້າຟ້າງຸ່ມແຫລ່ງຫລ້າທໍຣະນີ" ເມື່ອໄດ້ຂຶ້ນສເວີຍຣາຊແລ້ວ ໄດ້ຊົງທໍາສົບພຣະບາສຸວັນນະຄໍາຜົງ ພຣະເຈົ້າປູ່ ແລະ ທ້າວຜີຟ້າ ພຣະ ຣາຊບິດາ ຊຶ່ງນໍາກອງທັບມາຕີຫລວງພຣະບາງທາງນໍ້າເຊືອງ ນໍ້າແຊງ ມາສວັນຄົດທີ່ປາກຫ້ວຍສານລໍານໍ້າເຊືອງ ປ່າງສົມພຣະກຽດ (ຕອນນີ້ກອງວັນນະຄະດີໃຫ້ບັນທຶກມາວ່າ "ທ້າວຜີຟ້າພຣະຣາຊບິດາບໍ່ໄດ້ໄປປະເທດຂເມນນໍາ")

ເມື່ອພຣະເຈົ້າຟ້າງຸ່ມສເວີຍຣາຊສົມບັດໄດ້ສາມປີ ໄດ້ຣາຊບຸດອົງໜຶ່ງຊົງນາມວ່າ "ທ້າວອຸ່ນເຮືອນ" ເມື່ອ ພ.ສ. ໑໘໙໙ ຂນະທີ່ສົມເດັດພຣະເຈົ້າຟ້າງຸ່ມຂຶ້ນຄອງຣາຊສົມບັດນັ້ນ ເຫດການບ້ານເມືອງສງົບຮຽບຮ້ອຍ ຫົວເມືອງນ້ອຍໃຫຍ່ທາງຝ່າຍເໜືອ ມີຄວາມສະທ້ານຢ້ານກົວ ຍອມ ເປັນ ເມືອງ ອອກ ແກ່ພຣະເຈົ້າຟ້າງຸ່ມທັງໝົດ ຍັງແຕ່ຫົວເມືອງທາງຝ່າຍໃຕ້ຊຶ່ງຍັງເປັນອິສຣະ

ແກ່ກັບປູ່ ສົມເດັດພຣະເຈົ້າຟ້າງຸ່ມໄດ້ຊົງປັບປຸງກິຈການບ້ານເມືອງຕ່າງ ໆ ໃນຣັຊການຂອງພຣະອົງ ຄື -

໑. <u>ຊົງຮວບຮວມຫົວເມືອງຕ່າງ ໆ ໃນລຸ່ມແມ່ນ້ຳຂອງໃຫ້ເປັນອັນດຽວກັນ</u> ເມື່ອໄດ້ຈັດການບ້ານເມືອງຫົວເມືອງຝ່າຍເໜືອຮຽບຮ້ອຍ ແລ້ວ ພຣະອົງຊົງຍົກກອງທັບເຮືອລົງໄປຕີຫົວເມືອງທາງຝ່າຍໃຕ້ທີ່ຍັງເປັນອິສຣະປູ່ ຄື ເມືອງໄພ່ໜານ, ເມືອງຫ້ວຍຫລວງ, ເມືອງໂຄຕະບອງ, ເມືອງສີໂຄຕະບອງ, ເຈົ້າເມືອງຫ້ວຍຫລວງ, ເມືອງໂຄຕະບອງ, ເມືອງສີໂຄຕະບອງ, ຍອມອ່ອນນ້ອມແກ່ພຣະເຈົ້າຟ້າງຸ່ມ ແຕ່ຍັງຕີເອົາເມືອງໄພ່ໜານບໍ່ໄດ້ ເພາະວ່າມີກໍໄຜ່ ອ້ອມຮອບເມືອງປ່າງແໜ້ນໜາ ພຣະເຈົ້າຟ້າງຸ່ມ ຈຶ່ງຄິດອຸບາຍນຳເອົາຄຳ ຈາກທ້ອງພຣະຄັງ ມາເຮັດເປັນລູກປືນແລ້ວຍິງເຂົ້າໄປໃນກໍໄຜ່ທີ່ອ້ອມເມືອງປູ່ ແລ້ວສັ່ງໃຫ້ເລີກທັບກັບໄປ ປ່ອຍໃຫ້ກອງສອດແນມໄວ້ຄອຍເບິ່ງເຫດການປູ່.

ຝ່າຍເມືອງໄພ່ໜານ ເມື່ອກອງທັບພຣະເຈົ້າຟ້າງຸ່ມກັບໄປແລ້ວ ຣາສດອນມາເຫັນລູກປືນເປັນຄຳກໍພາກັນຖາງກໍໄຜ່ອອກເພື່ອພາກັນຊອກຫາເອົາລູກປືນ

ກອງສອດແນມກໍນຳເຫດໄປແຈ້ງ ແກ່ພຣະເຈົ້າຟ້າງຸ່ມທີ່ກອງທັບຫລວງ ພຣະເຈົ້າຟ້າງຸ່ມຈຶ່ງຍົກກອງທັບຫລົບດ່ວນມາຕີເມືອງໄຜ່ໜານອີກ ເມືອງໄຜ່ໜານກໍເສັຽແກ່ພຣະເຈົ້າຟ້າງຸ່ມ ໃນການຕີເມືອງໄຜ່ໜານນີ້ມີຕຳນານເລົ່າວ່າ ເມື່ອພຣະເຈົ້າຟ້າງຸ່ມໄດ້ເມືອງໄຜ່ໜານແລ້ວ ພຣະເຈົ້າຟ້າງຸ່ມຈຶ່ງຖືກພຣະຍາເຜົາເຈົ້າເມືອງໄຜ່ໜານຕໍ່ວ່າ ວ່າຣົບເຮົາດ້ວຍກົນອຸບາຍ ພຣະເຈົ້າຟ້າງຸ່ມ ຈຶ່ງວ່າ ເຮົາຣົບ ດ້ວຍ ທະຫານເຮົາກໍແພ້ທ່ານເທື່ອນີ້ ເຮົາທັງສອງ ມາ ຂຶ້ນຊ້າງ ຣົບກັນຕົວຕໍ່ຕົວກໍບໍ່ມີໃຜແພ້ໃຜ ພຣະເຈົ້າຟ້າງຸ່ມຈຶ່ງໂປດໃຫ້ພຣະຍາເຜົາເປັນເຈົ້າເມືອງ ໄຜ່ໜານ ຢ່າງເດີມ ຕໍ່ຈາກນັ້ນມາເມືອງໄຜ່ໜານຈຶ່ງໄດ້ມີນາມເອີ້ນວ່າ "ເມືອງວຽງຄຳ" ເປັນອະນຸສອນໃນການໃຊ້ກະສຸນຄຳຕີເອົາເມືອງ ພາຍຫລັງຈຶ່ງໄດ້ເອີ້ນວ່າວຽງຈັນວຽງຄຳ

(ຕອນນີ້ກອງວັນນະຄະດີໄດ້ໃຫ້ບັນທຶກຕື່ມວ່າ "ຊື່ວຽງຄຳມີເອີ້ນມາກ່ອນເຈົ້າຟ້າງຸ່ມແລ້ວ ດັ່ງປາກົດຢູ່ໃນສິລາຈາຣຶກຂຸນຣາມຄຳແຫງ ທີ່ຈາຣຶກໄວ້ແຕ່ ພ ສ. ໑໘໓໕ ກ່ອນເຈົ້າຟ້າງຸ່ມເກີດຕັ້ງ ໒໔ ປີ ວ່າ ". . . . . ມີເມືອງກວ້າງຊ້າງຫລາຍ ປານເບື້ອງຕາວັນອອກຮອດ

ສະຫລວງ ສອງແຄລຸ່ມ ບາຈາບສະຄາ ເທົ້າຝັ່ງຂອງເຖິງ
ວຽງຈັນວຽງຄຳເປັນທີ່ແລ້ວ . . . . ."

ບັນທຶກຂອງຜູ້ຂຽນ

(ຫລັກທີ່ ໑ : ເປັນສິລາຈາຣຶກຂອງພໍ່ຂຸນຣາມຄຳແຫງ ຄວາມໃນຕອນຕົ້ນນັ້ນເປັນຂອງພໍ່ຂຸນຣາມຄຳແຫງເອງ ແຕ່ຄວາມໃນຕອນຕໍ່ມາຄືເປັນຄຳຂອງຜູ້ອື່ນ ຕອນປາຍທີ່ສຸດເປັນຂໍ້ຄວາມທີ່ຈາຣຶກຫ່າງເວລາຈາກຕອນຕົ້ນຕັ້ງຫລາຍປີ ເຂົ້າໃຈກັນວ່າໄດ້ຈາຣຶກເມື່ອ ພ. ສ. ໑໘໓໕ (ຂໍ້ຄວາມນີ້ຄັດ ຈາກໜັງສືປະຊຸມສິລາຈາຣຶກພາກທີ່ ໑ ທີ່ຣະລຶກໃນ ງານ ພຣະຣາຊທານ ເພີງສົບເຈົ້ານະຣະຍານຸຂມົນຕຣີ ພ. ສ. ໒໔໗໗ ໜ້າ ຄ.)

ຕາມສິລາຈາຣຶກທີ່ເປັນ ຖ້ອຍຄຳ ຂອງພໍ່ຂຸນຣາມຄຳແຫງເອງນັ້ນໄດ້ແກ່ຂໍ້ ຄວາມຕອນຕົ້ນໃນສິລາຈາຣຶກທີ່ນັ້ນ ສ່ວນດ້ານທີ່ ໔ ຄື ຕອນປາຍ ເປັນ ຖ້ອຍຄຳ ທີ່ ຈາຣຶກ ຫ່າງຈາກ ພ.ສ. ໑໘໓໕ ຫລາຍປີແລະບໍ່ແມ່ນຖ້ອຍຄຳຂອງພຣະເຈົ້າຣາມຄຳແຫງ ພຣະເຈົ້າຣາມຄຳແຫງຄອງຣາຊມາເຖິງ ພ. ສ. ໑໘໓໐ ພຣະເຈົ້າລືໄທ ຄອງ ພ. ສ. ໑໘໓໓ ເຖິງ ພ ສ. ໑໙໒໑ ພຣະເຈົ້າລືໄທຜູ້ເປັນນັກປາຊ ແລະໄດ້ແຕ່ງໜັງສືໄຕຣພູມພຣະຮ່ວງນັ້ນຄອງ

ຣາຊສົມບັດ ກົງ ກັບ ສໄມ ແຜ່ນດິນຂອງພຣະເຈົ້າຟ້າງຸ່ມ ເຫດນີ້ ຈຶງອາດສັນນິຖານໄດ້ວ່າ ສິລາຈາຣຶກ ຫລັກທີ່ ໑ ດ້ານທີ່ ໔ ຕອນປາຍຊຶ່ງມີຄຳວ່າ "ວຽງຈັນວຽງຄຳ" ນີ້ ຈັກແມ່ນ ຈາຣຶກໃນສໄມ ແຜ່ນດິນ ຂອງພຣະເຈົ້າລືໄທຊຶ່ງ ໄດ້ເອີ້ນຊື່ເມືອງໄຜ່ໜາມວ່າ "ວຽງຈັນວຽງຄຳ" ພາຍຫລັງທີ່ພຣະເຈົ້າຟ້າງຸ່ມຕີເມືອງໄຜ່ໜາມໄດ້ແລ້ວ.

ຂ້າພະເຈົ້າຈຶງໄດ້ນຳຫລັກຖານ ປວັດສາດນີ້ມາໃຫ້ຜູ້ອ່ານພິຈາຣະນາວ່າ "ວຽງຈັນວຽງຄຳ" ນັ້ນຈະເອີ້ນມາແຕ່ສໄມໃດແທ້ ທັງນີ້ເພື່ອເປັນການສຶກສາຄົ້ນຄວ້າຄວາມເປັນມາຂອງຊາຕລາວເຮົາໃຫ້ກວ້າງຂວາງຍິງຂຶ້ນ ເພື່ອລູກຫລານເຫລນລາວເຮົາຈະໄດ້ຮູ້ເຫັນບໍ່ແມ່ນການຄັດຄ້ານ ຄວາມເຫັນ ຂອງ ກອງ ວັນນະຄະດີ ແຕ່ຢ່າງໃດ ການ ທີ່ ກອງ ວັນນະຄະດີໄດ້ ບັນທຶກ ຕິກຕົ້ນ ມາໃຫ້ນັ້ນ ຂ້າພະເຈົ້າ ຮູ້ສຶກເປັນບຸນຄຸນແລະເປັນປໂຍດແກ່ການສຶກສາຫລາຍ ເພື່ອລູກຫລານເຫລນລາວຣຸ່ນຫລັງ ໆ ຈັກໄດ້ຮູ້ຄວາມເປັນມາຂອງລາວເຮົາກວ້າງຂວາງຍິງຂຶ້ນອີກ ຈຶງຂໍຂອບພຣະຄຸນກອງວັນນະຄະດີເປັນຢ່າງຍິ່ງ.

ອ. ພົມວົງສາ

໑/໓/໒໕໐໐

໖. <u>ຂຍາຍເຂດແດນລ້ານຊ້າງ</u> <u>ໃຫ້ກວ້າງຂວາງ</u> :
ອານາຈັກລ້ານຊ້າງໃນສໄມພຣະເຈົ້າຟ້າງຸ່ມມີອານາເຂດກວ້າງຂວາງມາກ ມີຫົວເມືອງນ້ອຍໃຫຍ່ແລະເຈົ້າຄອງນະຄອນຂຶ້ນຕໍ່ພຣະເຈົ້າຟ້າງຸ່ມ ຄື ແຂວງເມືອງຊວາເຂດເດີມຂອງລ້ານຊ້າງ, ແຂວງເມືອງພວນຊຽງຂວາງ, ແຂວງເມືອງໄຜ່ໜາມ, ແຂວງເມືອງຫ້ວຍ, ຫລວງ, ແຂວງເມືອງຕະບອງ, ແຂວງເມືອງສີໂຄຕະບອງ, ແຂວງເມືອງສັງ (ວັງວຽງ), ແຂວງເມືອງສະໂປນ (ເຊໂປນ) ແລະແຂວງເມືອງມີລານ (ລາວບາວ)

ຂນະທີ່ຍົກກອງທັບໄປເຖິງເມືອງມີລານ ກອງທັບລ້ານຊ້າງໄດ້ພົ້ກອງທະຫານຮັກສາເຂດແດນຂອງແກວ (ວຽດນາມ) ເຂົ້າ ກະສັດທັງສອງຈຶ່ງໄດ້ຕົກລົງແບ່ງປັນເຂດແດນກັນ ໂດຍຖືເອົາພູແດນແກວໄມ້ລົ້ມແບ່ງເປັນເຂດພົມແດນກັນລະຫວ່າງລາວກັບແກວທາງທິດຕະວັນອອກ ແລະກຳໜົດເອົາເຂດແມ່ນ້ຳດຳທາງທິດເໜືອ (ດົນບອນ) ສ່ວນທາງທິດໃຕ້ (ເບື້ອງຫົວນອນ) ນັ້ນຈົດແກ້ງລີ່ຜີຕໍ່ກັບແດນຂອມພໍ່ຕາ ຍັງເຫລືອແຕ່ທາງຕະວັນຕົກ.

24/VII

ເພື່ອໃຫ້ຫົວເມືອງລາວຕາມຣູແມ່ນ້ຳຂອງເປັນອັນດຽວກັນ ພຣະເຈົ້າຟ້າງຸ່ມຈຶ່ງໄດ້ຍົກກອງທັບເຂົ້າຍຶດເອົາເມືອງຮ້ອຍເອັດປະຕູ (ຄືເມືອງຮ້ອຍເອັດ) ແຕ່ເພື່ອບໍ່ໃຫ້ເສັຽທາງໄມຕຣີກັບກຸງສີອະຍຸທະຍາ ແຕ່ເພື່ອບໍ່ໃຫ້ທັງສອງຝ່າຍເຂົ້າໃຈຜິດຕໍ່ກັນ ພຣະອົງຈຶ່ງໄດ້ແຕ່ງຣາຊທູດ ນຳພຣະຣາຊສານ ໄປຍັງກຸງສີອະຍຸທະຍາ ໃຈຄວາມຫຍໍ້ໆ ວ່າ "ພຣະເຈົ້າຟ້າງຸ່ມແຫລ່ງຫລ້າທໍຣະນີ ກະສັດລ້ານຊ້າງຣົມຂາວຫລວງພະຣະບາງ ມີຄວາມປະສົງຈະໂຮມເອົາຣາສດອນໃນລຸ່ມແມ່ນ້ຳຂອງໃຫ້ເປັນອັນດຽວກັນ ທັງຝັ່ງຕາເວັນຕົກ ແລະ ຕາເວັນອອກ ແຕ່ບໍ່ຊາບວ່າທາງກຸງສີອະຍຸທະຍາ ຈະຂັດຂ້ອງປະການໃດ ບໍ່ໄດ້ແຈ້ງ"

ທາງຝ່າຍກຸງສີອະຍຸທະຍາ ຂນະນັ້ນເປັນສໄມກຳລັງຂຍາຍເຂດລົງໄປທາງໃຕ້ ໄດ້ທຳສົງຄາມກັບພຣະເຈົ້າກຸງອິນທະປັດນະຄອນ (ຂອມ) ຢູ່ ແລະບໍ່ຄິດຈະຂຍາຍເຂດແດນມາທາງແມ່ນ້ຳຂອງ ຈຶ່ງບໍ່ມີຄວາມຂັດຂ້ອງຄວາມປະສົງຂອງພຣະເຈົ້າຟ້າງຸ່ມ ແລະໄດ້ແຕ່ງພຣະຣາຊສານຕອບໃຈຄວາມວ່າ "ເຮົານີ້ຫາກແມ່ນ ລູກ ພໍ່ແມ່ ດຽວກັນ ມາແຕ່ສໄມ ຂຸນບູຣົມ ພຸ້ນ ແລ້ວ

ເຈົ້າປາກໄດ້ດິນແດນ ໃຫ້ເອົາແຕ່ເຂດເຂົາພູສາມເສົ້າໄປຮອດພູເຂົາພຍາພໍ່ (ຄືດົງພຍາໄຟ) ນັ້ນແລ ທາງກຸງສີອະຍຸທະຍາ ຍັງຮັກສາໄມຕຣີກັບກຸງລ້ານຊ້າງ ຢູ່ອນຶ່ງຖ້າພຣະບາງແກ້ວບອກຟ້າ ຈເຣີນຊັນສາ ມາແລ້ວຈະໄດ້ ຈັດສົ່ງມາປັກເສື້ອປູໜອນ (ຄືເປັນນະເທສີ) ເພື່ອອານາຈັກ ຂອງເຮົາ ທັງສອງ ຈະໄດ້ເປັນ ພີ່ນ້ອງກັນສືບໄປຊົ່ວກາລະນານແລ ..."

ເຫດນີ້ ພຣະເຈົ້າ ຟ້າງຸ່ມ ຈຶ່ງໄດ້ໂຮມລາວເຂົ້າເປັນອັນໜຶ່ງອັນດຽວກັນເປັນຄັ້ງແຣກໃນປວັດສາດ ນັບແຕ່ລາວໄດ້ອົພຍົບລົງມາສູ່ແມ່ນ້ຳຂອງ ຈຶ່ງສົມຄວນຈັດເປັນວີຣະກະສັດຂອງລາວພຣະອົງແຣກ ໃນຣາຊວົງລ້ານຊ້າງແຫ່ງຣາຊອານາຈັກລ້ານຊ້າງ ໃນສໄມແຜ່ນດິນຂອງເຈົ້າຟ້າງຸ່ມນັ້ນ ແຜ່ນດິນລາວຈຶ່ງມີອານາເຂດກວ້າງຂວາງ ຄື.

ທິດເໜືອ : ຮອດດິນແດນຈີນ ແລະ ແມ່ນ້ຳດຳ.

ທິດໃຕ້ : ຮອດເກາະແກ້ງຫລີຜີ ຕໍ່ແດນຂເມນ.

ທິດຕະວັນອອກ : ຮອດພູເຂົາແດນແກວ ໄມ້ລົ້ມແບ່ງ (ພູເຂົານັນທັດ)

ທິດຕະວັນຕົກ : ຮອດພູເຂົາດົງພະຍາພໍ່ (ພູ

ເຂົາດົງພະບາໄຟ) ພູສາມເສົ້າ (ພູເຂົາເພັສບູນ) ຕໍ່ແດນໄທ.

໔. <u>ພຣະອົງນຳເອົາພຣະພຸທສາສນາມາເຜີຍ ແຜ່ໃນປະເທດລ້ານຊ້າງ</u> :

ສົມເດັດພຣະເຈົ້າຟ້າງຸ່ມ ມີນິດໃສມັກການສົງຄາມ ມີການເກນຄົນໄປຣົບເລື້ອຍ ໆ ໄພ່ຟ້າປະຊາຣາສດອນໄດ້ຮັບຄວາມລຳບາກ ຂ່າວນີ້ຊາບໄປເຖິງພຣະເຈົ້າກຸງອິນທະປັດນະຄອນ ຈຶ່ງໄດ້ແຕ່ງທູດມາບັງຣາຊສຳນັກລ້ານຊ້າງ ຂໍເຊີນສົມເດັດພຣະເຈົ້າຟ້າງຸ່ມຣາຊບຸດເຂີຍໄປບັງກຸງອິນທະປັດນະຄອນ ພຣະເຈົ້າຟ້າງຸ່ມສເດັດໄປບັງປະເທດຂະເມນ ເມື່ອໄດ້ເຂົ້າເຝົ້າພຣະເຈົ້າອິນທະປັດນະຄອນແລ້ວ ພຣະເຈົ້າກຸງອິນທະປັດນະຄອນຈຶ່ງຊົງຂໍຮ້ອງພຣະເຈົ້າຟ້າງຸ່ມ ໃຫ້ຊົງປົກຄອງໄພ່ຟ້າຣາສດອນດ້ວຍຄວາມເມດຕາຈິດ ຂໍຮ້ອງບໍ່ໃຫ້ບົກກອງທັບໄປເລັວເອົາບ້ານເອົາເມືອງຜູ້ອື່ນອີກ ພ້ອມທັງແບ່ງດິນແດນລາວກັບຂະເມນນັບແຕ່ແກ້ງຫລີ່ຜີໄປເປັນເຂດແດນຂອງລາວ ແລ້ວເຊີນສເດັດພຣະເຈົ້າຟ້າງຸ່ມໄປຮັບສິນຫ້າ ຈາກພຣະອາຈານມະຫາເຖບປາສະມັນ.

ເມື່ອສເດັດຕ່ວຄືນ ພຣະເຈົ້າຟ້າງຸ່ມໄດ້ທູນຂໍພຣະບາງ ຂຶ້ນໄປ ກຸງລ້ານຊ້າງ ເພື່ອ ສັກກາຣະ ພ້ອມທັງພຣະປາສະມັນມະຫາເຖນກັບພຣະສົງຄ໌ອີກ ໔ ຕົນ ຕົນພຣະສີມະຫາໂພທິ ອີກ ຕົ້ນໜຶ່ງ ໄປຍັງ ກຸງ ລ້ານຊ້າງ ໄດ້ອັນເຊີນພຣະບາງ ປະດິສຖານ ໄວ້ທີ່ເມືອງວຽງຈັນ ວຽງຄຳກ່ອນ ຕໍ່ມາໃນຣັຊການຫລັງຈຶ່ງໄດ້ອັນເຊີນໄປປະດິສຖານໄວ້ທີ່ຫລວງພຣະບາງ.

ພຣະເຈົ້າຟ້າງຸ່ມຊົງປະກາດພຣະອົງເປັນ ພຸທມາມະກະ ແລະເປັນປະມຸກໃນການບຳຣຸງພຣະພຸທສາສນາ ພຣະພຸທສາສນາຈຶ່ງໄດ້ແຜ່ຜາຍໄປທົ່ວຣາຊອານາຈັກ ລ້ານຊ້າງ ໃນ ສໄມ ພຣະເຈົ້າຟ້າງຸ່ມໄດ້ຈະເຣີນຮຸ່ງເຮືອງຫລາຍ ສິລປະວິທຍາການຕ່າງ ໆ ຂອງຂອມໄດ້ຈະເຣີນແຜ່ຫລາຍໃນດິນແດນລ້ານຊ້າງ ຕັ້ງແຕ່ສໄມສົມເດັດພຣະເຈົ້າຟ້າງຸ່ມເປັນຕົ້ນມາ.

ຕໍ່ມາໃນປາຍຣັຊການແຜ່ນດິນຂອງພຣະອົງ ຄືເມື່ອ ພ. ສ. ໑໙໑໖ ພຣະນາງບອດແກ້ວມະເຫສີຂອງພຣະອົງສວັນຄົດ ການສູນເສັຽພຣະມະເຫສີພາໃຫ້ພຣະອົງເສັຽພຣະໄທ ບໍ່ເອົາໃຈໃສ່ໃນຣາຊກິຈການບ້ານເມືອງ ຊົງລຸ້ມຫລົງນຳສັຕຣີບໍ່ເລືອກວ່າເປັນລູກເປັນ

ເບັງຜູ້ໃດ ເສນາອຳມາດຈຶ່ງປົດອອກ. ເມື່ອສົມເດັດພຣະເຈົ້າຟ້າງຸ່ມອອກຈາກຣາຊສົມບັດ ແລະໄດ້ອອກໄປຈາກຣາຊອານາຈັກເມື່ອປີ ພ.ສ. ໑໙໑໖ ພຣະເຈົ້າຟ້າງຸ່ມໄດ້ສເດັດໄປເພິ່ງເຈົ້າເມືອງນ່ານ ແລະສວັນຄົດເມື່ອ ພ.ສ. ໑໙໑໗ ພຣະຊົນມາຍຸໄດ້ ໕໘ ພັນສາ ຢູ່ໃນຣາຊສົມບັດ ໒໐ ປີ

໒໔. ຣັຊການພຣະເຈົ້າສາມແສນໄທ ພ.ສ. ໑໙໑໖ ເຖິງ ໑໙໕໙

ເມື່ອຂັບໄລ່ພຣະເຈົ້າຟ້າງຸ່ມອອກຈາກຣາຊສົມບັດແລ້ວ ເສນາອຳມາດທັງຫລາຍຈຶ່ງໄດ້ອັນເຊີນທ້າວອຸ່ນເຮືອນ ໂອຣົດຂອງພຣະເຈົ້າຟ້າງຸ່ມ ຂຶ້ນຄອງຣາຊສົມບັດໃນນະຄອນຫລວງພຣະບາງ ຊົງພຣະນາມວ່າ "ພຣະເຈົ້າສາມແສນໄທໄຕຣພູວະນາດ" ເມື່ອ ພ.ສ. ໑໙໑໖ ພຣະເຈົ້າອຸ່ນເຮືອນມີປວັດຫຍໍ້ດັ່ງນີ້ ຄື- ເປັນໂອຣົດຂອງສົມເດັດພຣະເຈົ້າຟ້າງຸ່ມ ຊຶ່ງເກີດກັບພຣະນາງຍອດແກ້ວ ຣາຊທິດາ ຂອງພຣະເຈົ້າກຸງອິນທະປັດນະຄອນ ປະສູດເມື່ອ ພ.ສ. ໑໘໙໙ ເມື່ອເກີດມາ ໝໍໂຫນທຳນາຍວ່າກຸມານອົງນີ້ຈັກເປັນສັຕຣູຂອງພໍ່ ສົມເດັດພຣະເຈົ້າຟ້າງຸ່ມ ຈຶ່ງຊົງໃຫ້ເອົາໄປໄຫລນ້ຳເສັຽ

ເມື່ອສເດັດຕ່າວຄືນ ພຣະເຈົ້າຟ້າງຸ່ມໄດ້ທູນຂໍພຣະບາງ ຂຶ້ນໄປ ກຸງລ້ານຊ້າງ ເພື່ອ ສັກກາຣະ ພ້ອມທັງພຣະປາສະມັນມະຫາເຖນກັບພຣະສົງຄ໌ອີກ ໔ ຕົນ ຕົ້ນພຣະສີມະຫາໂພທິ ອີກ ຕົ້ນໜຶ່ງ ໄປຍັງ ກຸງ ລ້ານຊ້າງ ໄດ້ອັນເຊີນພຣະບາງ ປະດິສຖານ ໄວ້ທີ່ເມືອງວຽງຈັນ ວຽງຄຳກ່ອນ ຕໍ່ມາໃນຣັຊການຫລັງຈຶ່ງໄດ້ອັນເຊີນໄປປະດິສຖານໄວ້ທີ່ຫລວງພຣະບາງ.

ພຣະເຈົ້າຟ້າງຸ່ມຊົງປະກາດພຣະອົງເປັນ ພຸທມາມະກະ ແລະເປັນປະມຸກໃນການບຳຣຸງພຣະພຸທສາສນາ ພຣະພຸທສາສນາຈຶ່ງໄດ້ແຜ່ຜາຍໄປທົ່ວຣາຊອານາຈັກ ລ້ານຊ້າງ ໃນ ສມັຍ ພຣະເຈົ້າຟ້າງຸ່ມໄດ້ຈະເຣີນຮຸ່ງເຮືອງຫລາຍ ສິລປະວິທຍາການຕ່າງ ໆ ຂອງຂອມໄດ້ຈະເຣີນແຜ່ຫລາຍໃນດິນແດນລ້ານຊ້າງ ຕັ້ງແຕ່ສມັຍສົມເດັດພຣະເຈົ້າຟ້າງຸ່ມເປັນຕົ້ນມາ.

ຕໍ່ມາໃນປາຍຣັຊການແຜ່ນດິນຂອງພຣະອົງ ຄືເມື່ອ ພ.ສ. ໑໙໑໖ ພຣະນາງຍອດແກ້ວມະເຫສີຂອງພຣະອົງສວັນຄົດ ການສູນເສັຽພຣະມະເຫສີພາໃຫ້ພຣະອົງເສັຽພຣະໄທ ບໍ່ເອົາໃຈໃສ່ໃນຣາຊກິຈການບ້ານເມືອງ ຊົງລຸ້ມຫລົງນຳສັດຣີບໍ່ເລືອກວ່າເປັນລູກເປັນ

ເມັງຜູ້ໃດ ເສນາອຳມາດຈຶ່ງປົດອອກ. ເມື່ອສົມເດັດພຣະເຈົ້າຟ້າງຸ່ມອອກຈາກຣາຊສົມບັດ ແລະໄດ້ອອກໄປຈາກຣາຊອານາຈັກເມື່ອປີ ພ.ສ. ໑໙໑໖ ພຣະເຈົ້າຟ້າງຸ່ມໄດ້ສເດັດໄປເພິ່ງເຈົ້າເມືອງນ່ານ ແລະສວັນຄົດເມື່ອ ພ.ສ. ໑໙໑໗ ພຣະຊົນມາຍຸໄດ້ ໕໒ ພັນສາ ຢູ່ໃນຣາຊສົມບັດ ໒໐ ປີ

໒໔. <u>ຣັຊການພຣະເຈົ້າສາມແສນໄທ</u> ພ.ສ. ໑໙໑໖ ເຖິງ ໑໙໕໙

ເມື່ອຂັບໄລ່ພຣະເຈົ້າຟ້າງຸ່ມອອກຈາກຣາຊສົມບັດແລ້ວ ເສນາອຳມາດທັງຫລາຍຈຶ່ງໄດ້ອັນເຊີນທ້າວອຸ່ນເຮືອນ ໂອຣົດ ຂອງ ພຣະ ເຈົ້າ ຟ້າງຸ່ມ ຂຶ້ນ ຄອງ ຣາຊສົມບັດໃນນະຄອນຫລວງພຣະບາງ ຊົງພຣະນາມວ່າ "ພຣະເຈົ້າສາມແສນໄທໄຕຣພູວະນາດ" ເມື່ອ ພ.ສ. ໑໙໑໖ ພຣະເຈົ້າອຸ່ນເຮືອນມີປວັດຫຍໍ້ ດັ່ງນີ້ ຄື- ເປັນໂອຣົດຂອງສົມເດັດພຣະເຈົ້າຟ້າງຸ່ມ ຊົງເກີດກັບພຣະນາງຍອດແກ້ວ ຣາຊທິດາ ຂອງ ພຣະເຈົ້າ ກຸງອິນທະປັດນະຄອນ ປະສູດເມື່ອ ພ.ສ. ໑໘໙໙ ເມື່ອເກີດມາ ໝໍໂຫນທຳນາຍວ່າກຸມານອົງນີ້ຈັກເປັນສັຕຣູຂອງພໍ່ ສົມເດັດພຣະເຈົ້າຟ້າງຸ່ມ ຈຶ່ງຊົງໃຫ້ເອົາໄປໄຫລນ້ຳເສັຽ

ນັບຖືຜີ (ໄດ້ແກ່ການຊົງເຈົ້າເຂົ້າຜີ ຫລືເອີ້ນບາງຫຽນ) ຊຶ່ງໄດ້ນັບຖືກັນມາແຕ່ສໄມໂບຮານນັ້ນ ບັງຄົງມີຢູ່.

໖. <u>ການປົກຄອງຝ່າຍທະຫານ</u>: ໃນອັຊກາລຂອງພຣະເຈົ້າສາມແສນໄທຊົງມີກອງທະຫານໄວ້ປ້ອງກັນບ້ານເມືອງເຖິງແສນຫ້າໝື່ນຄົນ ແບ່ງອອກເປັນສາມພວກ ຄື -

ພວກໜຶ່ງສຳຫຣັບຮັກສາຄວາມສງົບພາຍໃນຂອງບ້ານເມືອງ.

ພວກໜຶ່ງມີໜ້າທີ່ຣົບປ່າງດຽວ (ຣົບໂດຍກົງ)

ພວກໜຶ່ງສຳຫຣັບເປັນກອງໜຸນ ເມື່ອຍາມເສິກສົງຄາມ ພວກນີ້ຈະເອີ້ນໄດ້ທັນທີໂລດ ແຕ່ຍາມປົກຕິພວກນີ້ກໍແມ່ນເປັນປະຊາຊົນທັມດາ.

ຣະບຽບການທະຫານແບ່ງອອກເປັນກອງໆມີແມ່ກອງຫລືແມ່ທັບເປັນຫົວໜ້າ ມີກອງເດີນເທົ້າ, ກອງຊ້າງ, ກອງມ້າ, ແລະກອງລຳລຽງອົບສົ່ງ.

ດ້ວຍການຈັດຣະບຽບການປົກຄອງບ້ານເມືອງໃຫ້ເປັນຣະບຽບຮຽບຮ້ອຍ ໄພ່ຟ້າປະຊາຊົນໄດ້ຮັບຄວາມຮົ່ມເຢັນເປັນສຸກ ກິຕິສັບກໍໄດ້ເລົ່າລືໄປເຖິງປະເທດຂ້າງຄຽງ ປະກອບດ້ວຍສົມເດັດພຣະເຈົ້າຟ້າງຸ່ມພຣະ

ຣາຊບິດາຈຶ່ງເຄີບເຣືອງຊື່ລືຊາໃນກາບຣົບນາແລ້ວ ປະເທດລ້ານຊ້າງ ໃນສໄມແຜ່ນດິນຂອງພຣະເຈົ້າສາມແສນໄທຈຶ່ງມີແຕ່ຄວາມສງົບສຸກ ໄພ່ພ້າປະຊາຣາສດອນບູຫ່າງຕັ້ງໜ້າທຳມາຫາກິນ ບ້ານເມືອງຈຶ່ງຮຸ່ງເຮືອງປາສຈາກການຣົບກວນ ຈາກຂ້າເສິກສັດຕຣູທັງຫລາຍ.

ໃນຣັຊການຂອງພຣະເຈົ້າສາມແສນໄທ ຄວາມສັມພັນທະໄມຕຣີຣະຫວ່າງກຸງສີສັດຕນາຄນະຫຸດ (ກຸງລ້ານຊ້າງ) ກັບກຸງສີອະຍຸທະຍາແລະອານາຈັກລານນາ (ນະຄອນຊຽງໃໝ່) ເປັນອານາຈັກບ້ານພີ່ເມືອງນ້ອງກັນ ມີສັມພັນທະໄມຕຣີສນິດສນົມກັນຍິ່ງ ການຕິດຕໍ່ໄປມາຄ້າຂາຍຂອງປະຊາຊົນລະຫວ່າງສາມອານາຈັກນີ້ ເປັນໄປດ້ວຍຄວາມສງົບສຸກແລະສດວກສະບາຍຕລອດຣັຊກາລ.

ພຣະເຈົ້າສາມແສນໄທສເວີຍຣາຊສົມບັດໄດ້ ໔໓ປີ ສວັນຄົດເມື່ອ ພ. ສ. ໑໙໕໙ ພຣະຊົນມາຍຸໄດ້ຫົກສິບພັນສາ.

໒໕. ຣັຊກາລ ພຣະເຈົ້າລ້ານຄຳແດງ ພ.ສ. ໑໙໕໙ ເຖິງ ພ.ສ. ໑໙໗໑

ເມື່ອພຣະເຈົ້າສາມແສນໄທສວັນຄົດແລ້ວ ເສນາອຳມາດຈຶ່ງອັນເຊີນທ້າວລ້ານຄຳແດງ ຣາຊໂອຣົດອົງໃຫຍ່ຂອງພຣະເຈົ້າສາມແສນໄທຊຶ່ງເກີດກັບພຣະນາງແກ້ວຍອດຟ້າ ຣາຊທິດາຂອງກຸງສີອະຍຸທະຍາ ຂຶ້ນຄອງຣາຊສົມບັດຊົງພຣະນາມວ່າ "ພຣະເຈົ້າລ້ານຄຳແດງ" ເມື່ອ ພ.ສ. ໑໙໕໙ ພຣະເຈົ້າລ້ານຄຳແດງມີຣາຊໂອຣົດສອງອົງ ທ້າວພົມທັດແລະທ້າວບຸດົບ (ພົງສາວະດານຫລວງພຣະບາງຂອງກົມພຣະບາດຳຣົງວ່າ ທ້າວປູຄອງ)

ໃນຣັຊກາລຂອງພຣະເຈົ້າລ້ານຄຳແດງ ພຣະເຈົ້າກຸງວຽດນາມ (ແກວ) ໄດ້ສົ່ງທູດນຳພຣະຣາຊສານມາບັງກຸງລ້ານຊ້າງ ຂໍກອງທັບລ້ານຊ້າງໄປຊ່ວຍຣົບກັບຈີນຊຶ່ງບຸກມາຮຸກຮານກຸງວຽດນາມ ພຣະເຈົ້າລ້ານຄຳແດງໄດ້ສົ່ງທະຫານໄປຊ່ວຍສາມໝື່ນຄົນ ໃຫ້ແມ່ທັບຄຸມໄປພ້ອມກັບຣາຊທູດແກວເພື່ອຊ່ວຍພຣະເຈົ້າເຫລລວຍພຣະເຈົ້າກຸງວຽດນາມ ແຕ່ຈະເປັນເຫດໃດບໍ່ປາກົດເຫດຜົນ ແມ່ທັບລາວທີ່ນຳທະຫານລ້ານຊ້າງ

ໄປນັ້ນກັບໄປເຂົ້າຂ້າງຝ່າຍຈີນເສັຽ ທະຫານວຽດນາມໄດ້ທຳການຮັກສາເມືອງໄວ້ຢ່າງສາມາດ ແລະທີ່ສຸດໄດ້ຂັບໄລ່ທະຫານຈີນແຕກກັບໄປ ທະຫານລ້ານຊ້າງຖືກວຽດນາມຈັບໄດ້ ພຣະເຈົ້າວຽດນາມຈຶ່ງໃຫ້ຄຸມກອງທະຫານລ້ານຊ້າງທີ່ເຫລືອຢູ່ນັ້ນ ກັບມາຍັງ ກຸງລ້ານຊ້າງ ການກະທຳຂອງແມ່ທັບລ້ານຊ້າງຄາວນັ້ນ ເປັນເຫດໃຫ້ທາງໄມຕຣີ ລະຫວ່າງ ກຸງລ້ານຊ້າງ ກັບ ວຽດນາມມົວໝອງ ຊຶ່ງຕໍ່ມາອີກຫ້າສິບປີກະສັຕວຽດນາມຊຶ່ງສືບຕໍ່ຈາກພຣະເຈົ້າເຫລລອຍ (Lè Lôi) ໄດ້ຍົກກອງທັບມາຍ່ຳຍີກຸງລ້ານຊ້າງ.

ພຣະເຈົ້າລ້ານຄຳແດງສວັນຄົດເມື່ອ ພ.ສ. ໑໙໗໑ ພຣະຊົນມາຍຸໄດ້ ໕ປີ ພັນສາ ຢູ່ໃນຣາຊສົມບັດໄດ້ ໑໒ ປີ

<u>ສໄມແຜ່ນດິນເກີດບຸກເຂັນ</u> ພ.ສ. ໑໙໗໑ ເຖິງ ໑໙໘໑

ເມື່ອພຣະເຈົ້າລ້ານຄຳແດງສວັນຄົດແລ້ວ ປະເທດ ລ້ານຊ້າງ ທີ່ເຄີຍ ຣົ່ມເຢັນ ກໍ່ເກີດ ຄວາມ ເດືອດຮ້ອນຍ້ອນຄວາມໂຫດຮ້າຍຂອງພຣະນາງແກ້ວພິມພາ ຣາຊທິດາຂອງພຣະເຈົ້າສາມແສນໄທ ຊຶ່ງມີອຳນາດໃນ

ຣາຊ ສຳນັກ ແຕ່ຕອນ ປາຍ ຣັຊກາລ ຂອງພຣະເຈົ້າລ້ານຄ່ຳແດງ (ເຣື່ອງນາງແກ້ວພິມພານີ້ກັນການວັນນະຄະດີໃຫ້ບັນທຶກມາດັ່ງຕໍ່ໄປນີ້ : "ເຣື່ອງນາງແກ້ວພິມພາຫລືນາງມະຫາເທວີນັ້ນ ຕາມນິທານຂຸນບູຣົມສະບັບທີ່ໄດ້ ຈາກ ວັດສີສະເກດບອກວ່າ ເປັນ ນ້ອງ ສາວ ຂອງພຣະຍາສາມແສນໄທ ນາມເດີມຊື່ນາງເກດແກ້ວເກສີ ສ່ວນ ສະບັບ ປູ່ທ່ສມຸດ ກຸງເທບ ກ່າວວ່າ ຊື່ເດີມຊື່ວ່າ ນາງນ້ອຍນາງຮຽວ ແລະເປັນອັຄມະເຫສີຂອງພຣະຍາສາມແສນໄທເອງ (ນາງນ້ອຍນາງຮຽວມີອາຍຸແກ່ກວ່າພຣະຍາສາມແສນໄທ ເມື່ອພຣະຍາສາມແສນໄທສວັນຄົດແລ້ວພຣະນາງມີຄວາມຮັກກັບລູກປູ່ລ້ຽງ ຈຶ່ງຕັ້ງລູກປູ່ລ້ຽງຂຶ້ນ ເປັນ ແສນຫລວງ ຊຽງລໍ ຕຳແໜ່ງ ມະຫາ ອຸປຣາຊນາງ ຈຶ່ງເປັນ ຜູ້ ມີອຳນາດ ສູງສຸດ ໃນ ຣາຊການ ແຜ່ນດິນທ່ານອງດຽວກັບ ພຣະນາງ ສີສຸດາຈັນ ຂອງໄທ ທີ່ເກີດຄວາມຮັກກັບກັບຂຸນວໍຣະວົງສາ)

ຂໍ້ ທີ່ວ່ານາງແກ້ວພິມພາ ເປັນ ລູກສາວຂອງ ພຣະຍາສາມແສນໄທນັ້ນບໍ່ແມ່ນຢ່າງແນ່ນອນ ເພາະລູກສາວ ຂອງ ພຣະຍາ ສາມແສນໄທ ມີ ແຕ່ ໕ ອົງ ແລະມີຊື່ດັ່ງນີ້ :- ໑. ນາງແກ້ວກຸມາຣີ ໒. ນາງອະໃນຊາ

໓. ບາງມະໄບຮາ ໔. ບາງສຸພັດຕາ ໔. ບາງມະຫາໄກ,ແລະອີກປະການໜຶ່ງ ເມື່ອບາງມະຫາເທວີຖືກຂ້າຕາຍນັ້ນບາງມີອາຍຸໄດ້ ໒໕ ປີ ຈຶ່ງສັນນິຖານເຊື່ອແນ່ວ່ານາງຕ້ອງເປັນນ້ອງສາວ ຫລືເປັນມະເຫສີຂອງພຣະບາສາມແສນໄທ" ດັ່ງນີ້.

໒໓. ພຣະບາພົມທັດ

ພ.ສ. ໑໐໗໑ - ໑໐໗໑ ເມື່ອພຣະເຈົ້າລ້ານຄຳແດງສວັນຄົດແລ້ວ ເສນາອຳມາດຈຶ່ງອັນເຊີນທ້າວພົມທັດຣາຊບຸດອົງໃຫຍ່ຂອງທ້າວລ້ານຄຳແດງ ຂຶ້ນສເວີຍຣາຊສົມບັດ ຊຶ່ງພຣະນາມວ່າພຣະບາພົມທັດແຕ່ຢູ່ໃນ ຣາຊສົມບັດໄດ້ພຽງ ໑໐ ເດືອນ ພຣະນາງແກ້ວພິມພາກໍ່ຈັບໄປສຳເຣັດໂທດເສັຽ ພຣະເຈົ້າພົມທັດຖືກຕັດຄໍທີ່ພາດ່ຽວໃກ້ແມ່ນ້ຳຄານ.

໒໗. ພຣະບາປາກຫ້ວຍຫລວງ

ພ.ສ. ໑໐໗໒ - ໑໐໗໒ ເມື່ອກຳຈັດພຣະບາພົມທັດໄດ້ແລ້ວ ພຣະນາງແກ້ວພິມພາຈຶ່ງໄດ້ໃຫ້ເສນາອຳມາດເຊີນເອົາອະນຸຊາຂອງພຣະນາງເອງ ຄືທ້າວຄຳເຕັມ ຊຶ່ງຂນະນັ້ນ ເປັນເຈົ້າເມືອງຢູ່ປາກຫ້ວຍຫລວງ

ຂຶ້ນຄອງຣາຊສົມບັດ ຊົງພຣະນາມວ່າພຣະຍາປາກຫ້ວຍຫລວງ ຢູ່ໃນຣາຊສົມບັດໄດ້ ໕ ເດືອນ ບໍ່ເປັນທີ່ພໍ່ພຣະໄທຂອງພຣະບາງແກ້ວພິມພາ ພຣະບາງກໍ່ໃຫ້ປົດອອກຈາກຣາຊສົມບັດເສັຽ.

໖໒. <u>ທ້າວໄສ</u>

ພ.ສ. ໑໓໗໖ – ໑໓໗໙ ພຣະບາງຈຶ່ງໃຫ້ອຳມາດໄປເຊີນເອົາໝື່ນໄຊຫລືທ້າວໄສ ໂອຣົດຂອງພຣະເຈົ້າສາມແສນໄທຂຶ້ນຄອງຣາຊສົມບັດ ຢູ່ໃນຣາຊສົມບັດໄດ້ ໘ ເດືອນ ບໍ່ເປັນທີ່ພໍ່ພຣະໄທຂອງພຣະບາງແກ້ວພິມພາ ແລະຊາບວ່າພຣະບາງແກ້ວພິມພາຈະລອບປົງພຣະຊົນ ຈຶ່ງໄດ້ປົງພຣະຊົນຕົນເອງເສັຽ ທີ່ພຣະຣາຊວັງຊຽງທອງ ເມື່ອ ພ.ສ. ໑໓໗໙

(ຕອນນີ້ກອງວັນນະຄະດີໃຫ້ບັນທຶກມາວ່າ "ທ້າວລືໄຊໂອຣົດຂອງພຣະຍາສາມແສນໄທເອງ ເວລານັ້ນເປັນເຈົ້າເມືອງຢູ່ເມືອງກະບອງມີນາມວ່າ ພຣະຍາໝື່ນບ້ານ" ດັ່ງນີ້)

໖໓. <u>ພຣະຍາໄຄ</u>

ພ.ສ. ໑໓໗໙ - ໑໓໗໘ ພຣະບາງແກ້ວພິມພາຈຶ່ງໃຫ້ເສນາອຳມາດໄປເຊີນທ້າວຟ້າໄຄ ໂອຣົດຂອງ

ທ້າວຟ້າຄືນຂບະບັ້ນກໍາລັງຄອງເມືອງໃຄປູ່ ເມື່ອໄດ້ຣາຊສົມບັດໄດ້ຊື່ວ່າພຣະຍາໃຄ ປູ່ໃນຣາຊສົມບັດໄດ້ ປ ປີ ກໍຖືກ ພຣະນາງແກ້ວພິມພາຈັບໄປສໍາເຣັດໂທດເສັຽອີກ ເມື່ອ ພ.ສ. ໑ລກຖປ.

ປ໐. พຣະຍາຊຽງສາ

ພ.ສ. ໑ລກຖປ – ໑ລກຖປ ພຣະນາງແກ້ວພິມພາຈິ່ງໃຫ້ເສນາອໍາມາດໄປເຊີນ ທ້າວກອງແກ້ວ ຣາຊໂອຣົດຂອງພຣະເຈົ້າສາມແສນໄທ ຊຶ່ງຂບະບັ້ນຄອງປູ່ເມືອງຊຽງສາຂຶ້ນຄອງຣາຊສົມບັດຊົງພຣະນາມວ່າ "ພຣະຍາຊຽງສາ" ປູ່ໃນຣາຊສົມບັດໄດ້ ກ ເດືອນ ກໍຖືກພຣະນາງແກ້ວພິມພາຈັບສໍາເຣັດໂທດອີກ.

ປ໑. ພຣະເຈົ້າບຸຄົນ

ພ.ສ. ໑ລກຖປ – ໑ລກຖຊ ເສນາອໍາມາດຈຶ່ງອັນເຊີນທ້າວ ບຸຄົນ ຣາຊໂອຣົດ ອົງທີ ໖ ຂອງ ພຣະເຈົ້າ ລ້ານຄໍາແດງຂຶ້ນຄອງຣາຊສົມບັດ ຊົງພຣະນາມວ່າ "ພຣະເຈົ້າບຸຄົນ" ປູ່ໃນຣາຊສົມບັດໄດ້ ໖ ປີ ສືບຊາບວ່າພຣະນາງແກ້ວພິມພາຈະໃຫ້ຄົນລອບປົງພຣະຊົນກໍສເດັດໜີພຣະນາງແກ້ວພິມພາ ໃຫ້ຄົນ ຕິດຕາມທັນ ປູ່ທີ່ຕອນໄດ້

ນະຄອນລ້ານຊ້າງ ພຣະບາງກໍໃຫ້ສຳເຣັດໂທດເສັຽອີກ ເມື້ອ ພ.ສ. ໑໑໗໓

໓໒. ພຣະບາຄຳເກີດ

ພ.ສ. ໑໑໗໓ – ໑໑໘໑ ເສນາອຳມາດຈຶ່ງອັນເຊີນເອົາ ທ້າວຄຳເກີດ ມະຫາດເລັກ ທີ່ໂປດປານ ຂອງ ພຣະບາງແກ້ວພິມພາຂຶ້ນຄອງຣາຊສົມບັດ ຊຶ່ງພຣະນາມວ່າ "ພຣະບາຄຳເກີດ" ຢູ່ໃນຣາຊສົມບັດໄດ້ ໓ ປີ ກໍສວັນຄົດເມື້ອ ພ.ສ. ໑໑໘໑ ພົງສາວະດານລ້ານຊ້າງວ່າເປັນລົມສວັນຄົດ.

ຂນະນັ້ນ ເສນາ ອຳມາດ ທັງຫລາຍ ບໍ່ພໍໃຈ ທີ່ຜັດປ່ຽນແຜ່ນດິນເລື້ອຍ ໆ ບ້ອນເຫດມາແຕ່ພຣະບາງແກ້ວພິມພາຜູ້ດຽວ ພໍໝົດແຜ່ນດິນຂອງພຣະບາຄຳເກີດແລ້ວເສນາອຳມາດທັງຫລາຍ ຈຶ່ງພ້ອມໃຈກັນຈັບພຣະບາງ ແກ້ວ ພິມ ພາ ຜູ້ ເປັນຕົ້ນເຫດ ໃຫ້ ບ້ານ ເມືອງເກີດບຸກເຂັນໄປສຳເຣັດໂທດເສັຽທີ່ພາດ່ຽວເມື້ອ ພ.ສ. ໑໑໘໑

໓໓. ຣັຊກາລຂອງພຣະເຈົ້າໄຊຈັກພັດ

ພ.ສ. ໑໑໘໑ ເຖິງ ໒໐໒໒ ເສນາອຳມາດຈຶ່ງອັນເຊີນທ້າວລືໄຊ ຣາຊໂອຣົດຂອງພຣະເຈົ້າສາມແສນໄທ

ຊຶ່ງປະສູດເມື່ອ ພ.ສ. ໑໙໕໗ ຂຶ້ນຄອງຣາຊສົມບັດ ຊົງພຣະນາມວ່າ "ພຣະເຈົ້າຈັກພັດແຜ່ນແຜ້ວ" ເມື່ອ ພ.ສ. ໑໙໗໑.

(ຕອນນີ້ກົມການ ວັນນະຄະດີໃຫ້ບັນທຶກມາວ່າ "ທີ່ຖືກແມ່ນທ້າວວັງບຸຣີ ເວລານັ້ນແມ່ນເຈົ້າເມືອງປູ່ວຽງຈັນ ທ້າວວັງບຸຣີປະສູດຈາກນາງແກ້ວຍອດຟ້າພຣະຣາຊທິດາ ຂອງ ພຣະເຈົ້າ ແຜ່ນດິນ ກຸງສີອະຍຸທະຍາ" ແລະປີຄອງຣາຊສົມບັດຂອງພຣະເຈົ້າໄຊຈັກພັດວ່າ "ບາງສະບັບວ່າ ພ.ສ. ໑໙໙໙")

ເມື່ອຂຶ້ນ ຄອງຣາຊສົມບັດໃໝ່ ໆ ບ້ານເມືອງບັງບໍ່ທັນສງົບຮຽບຮ້ອຍດີ ດ້ວຍວ່າຫົວເມືອງທັງຫລາຍບັງກະດ້າງກະເດື່ອງ ເນື່ອງຈາກ ພາຍໃນ ເມືອງຫລວງ ເກີດວຸ້ນວາຍກັນເຖິງສິບປີ ຂ້າງຝ່າຍເມືອງວຽງຈັນ ພຣະນາໄຊມຸນີເຈົ້າເມືອງ ໄດ້ ກຽມ ໄພ່ພົນ ໄວ້ເພື່ອ ຈະບົກໄປຕີກຸງລ້ານຊ້າງ (ຕອນນີ້ກອງວັນນະຄະດີບັນທຶກວ່າ "ບາງສະບັບຮຽກວ່າເຈົ້າຊາຍມຸ່ນ (ຊາຍມຸ່ນກັບໄຊມຸນີສຽງໃກ້ກັນ)" ດັ່ງນີ້) ຝ່າຍຂ້າຣາຊການທັງຫລາຍ ພໍໄດ້ຊາບຂ່າວວ່າພຣະເຈົ້າ ໄຊຈັກພັດ ຂຶ້ນສເວີຍຣາຊແລ້ວຈຶ່ງບໍ່ພໍໃຈ ທີ່ຈະບົກ ກອງທັບ ໄປຕີກຸງລ້ານຊ້າງ ແລະໄດ້

ລອບຂ້າພຣະບາໄຊມຸນີເສັງ ການທີ່ຈະຍົກກອງທັບ ໄປຕີກຸງລ້ານຊ້າງ ເພື່ອແຍ່ງຣາຊສົມບັດ ນັ້ນ ຈຶ່ງເປັນລົ້ມເລີກໄປ ຝ່າຍຫົວເມືອງອື່ນ ໆ ໄດ້ຊາບຂ່າວກໍພາກັນສງົບໄປບໍ່ກ້າແຂງເມືອງ ເຫດການພາຍໃນຂອງອານາຈັກລ້ານຊ້າງ ຈຶ່ງຄ່ອຍສງົບຮຽບຮ້ອຍລົງເປັນປົກຕິຕາມເດີມ.

ພຣະເຈົ້າໄຊຈັກພັດມີຣາຊໂອຣົດ ໖ ອົງ ຄື- ທ້າວກ້ອນແກ້ວ, ທ້າວແທ່ງຄຳ, ທ້າວບວນ, ທ້າວຂວດອ່ອນ, ທ້າວຈາງ, ແລະທ້າວຫລ້າ. (ໂອຣົດຂອງພຣະເຈົ້າໄຊ ຈັກພັດ ນີ້ ກອງວັນນະຄະດີໃຫ້ບັນທຶກໄວ້ ຣະບຸຊື່ດັ່ງນີ້- ທ້າວກ້ອນແກ້ວ, ທ້າວແທ່ນຄຳ, ທ້າວໝື່ນຫລວງ, ທ້າວຫລ້າແສນໄທ, ທ້າວວິຊຸລຣາຊ, ທ້າວເທພາ) ແລະມີຣາຊທິດາເຈັດອົງ ຄື ພຣະນາງສີໃວ, ພຣະນາງກາດ, ພຣະນາງຄຳປາດ, ພຣະນາງອິນ, ພຣະນາງມັງ, ພຣະນາງຂາວ, ແລະພຣະນາງພາຣາ.

ພຣະເຈົ້າໄຊຈັກພັດຊົງປີຊາສາມາດໃນການທະນຸບຳຣຸງບ້ານເມືອງ ໄດ້ທ້າວກ້ອນແກ້ວໂອຣົດອົງໃຫຍ່ເປັນກຳລັງຊ່ວຍເຫລືອ ຈຶ່ງໂປດໃຫ້ທ້າວກ້ອນແກ້ວເປັນ

ແສນເມືອງ ຕໍ່ມາໄດ້ເລື່ອນເປັນພຣະມະຫາອຸປຣາຊ ເປັນເຈົ້າຊຽງລໍ່ ສ່ວນທ້າວແທ່ນຄໍາໃຫ້ໄປຄອງຕໍາແໜ່ງ ເມືອງຊ້າຍ ກຸງລ້ານຊ້າງ ໃນສມັຍ ພຣະເຈົ້າໄຊຈັກພັດຈຶ່ງໄດ້ສງົບສຸກ ໄພ່ຟ້າປະຊາຣາສດອນຈຶ່ງມີແຕ່ຄວາມຣົ່ມເຢັນເປັນສຸກ ໃນຣັຊກາລຂອງພຣະເຈົ້າໄຊຈັກພັດໄດ້ເກີດເຫດການສໍາຄັນ ຄື -

໑. ເຊີນສເດັດພຣະບາງໄປກຸງລ້ານຊ້າງ : ໃນສມັຍ ແຜ່ນດິນ ຂອງ ພຣະເຈົ້າໄຊຈັກພັດ ໄດ້ອັນເຊີນ ພຣະບາງ ຈາກ ນະຄອນ ວຽງຈັນ ຂຶ້ນໄປ ປະດິສຖານ ທີ່ ຫລວງພຣະບາງ ແຕ່ພໍໄປຮອດແກ້ງຈັນເຮືອຫລົ້ມ ພຣະບາງຈົມນໍ້າຫາຍໄປຈຶ່ງບໍ່ໄດ້ໄປຮອດຫລວງພຣະບາງ ແລະຕໍ່ມາປາກົດວ່າ ພຣະບາງ ປາຕິຫານ ກັບຄືນມາຢູ່ໃນໂບດວຽງຈັນໃໝ່ ຊຶ່ງຕໍ່ມາສມັຍແຜ່ນດິນຫລັງຈຶ່ງອັນເຊີນໄປໄດ້ສໍາເຣັດ.

ມີເຣື່ອງເວົ້າກັນມາຕາມພາຍຫລັງ ວ່າເຫດທີ່ອັນເຊີນພຣະບາງຂຶ້ນໄປຍັງກຸງລ້ານຊ້າງ ສມັຍແຜ່ນດິນພຣະເຈົ້າໄຊຈັກພັດບໍ່ສໍາເຣັດນັ້ນ ກໍບອນວ່າພຣະບາງໄດ້ຮູ້ ແລ້ວວ່າ ແກວ ຈະຍົກກອງທັບມາຍໍ່າຍີປະເທດລາວ

ເມື່ອມາອັນເຊີນພຣະບາງຈາກນະຄອນວຽງຈັນ ພຣະບາງຈຶ່ງບໍ່ຍອມໄປ ພໍໄປຮອດແກ້ງຈັນກໍໃຫ້ເຮືອຫລົ້ມເສັຽ ແລະພຣະບາງກໍ່ສຳແດງອິທທິປາຕິຫານກັບມາສູ່ໂບດວຽງຈັນອີກ ຕໍ່ມາແຜ່ນດິນຫລັງຈຶ່ງອັນເຊີນໄປໄດ້ສຳເຣັດໃນສໄມຣັຊກາລຂອງພຣະເຈົ້າຫລ້າແສນໄທ.

໖. ເກີດເສິກແກວມາປະຊິດກຸງລ້ານຊ້າງ : ໃນສໄມແຜ່ນດິນຂອງພຣະເຈົ້າໄຊຈັກພັດ ເກີດເສິກແກວຍົກມາຣຸກຮານກຸງລ້ານຊ້າງ ຄືພຣະເຈົ້າແທລຫົ່ນຕັງກະສັດແກວ (ວຽດນາມ) ຊຶ່ງສືບຕໍ່ຈາກ ພຣະເຈົ້າແທລລອຍຍັງບໍ່ລືມເຫດການທີ່ລາວເຮັດໃຫ້ແກວໃນສໄມພຣະເຈົ້າລ້ານຄຳແດງ ເມື່ອເຫດການທາງກຸງວຽດນາມສງົບກໍໄດ້ຍົກກອງທັບມາທຳການແກ້ມືກຸງລ້ານຊ້າງ ໂດຍພຣະເຈົ້າ ແທລຫັ່ນຕັງ ໄດ້ເກັ້ງກ່ອມ ເອົາແຄວ້ນ ພວນໄວ້ເປັນພວກໄດ້ສຳເຣັດ ຈຶ່ງໃຫ້ບົວຂວາງຊຸນແລະເບີກອີງເປັນແມ່ທັບຍົກມາຕີກຸງລ້ານຊ້າງ ບົວຂວາງຊຸນ ແລະເບີກອີງໄດ້ໂຮມພົນທີ່ແຄວ້ນພວນ ແລະຍົກເຂົ້າຕີກຸງລ້ານຊ້າງ ຕີໄດ້ເມືອງຕາມສາຍທາງມາຈົນຮອດກຸງລ້ານຊ້າງ ໄດ້ຕັ້ງຄ້າຍລ້ອມກຸງລ້ານຊ້າງໄວ້.

ຝ່າຍກຸງລ້ານຊ້າງໄດ້ຕົກແຕ່ງປ້ອງກັນບ້ານເມືອງໄວ້ແລະໄດ້ຕໍ່ສູ້ຢ່າງເຂັ້ມແຂງ ເຈົ້າອຸປຣາຊຊຽງລໍໄດ້ແຕ່ງທະຫານອອກຕໍ່ສູ້ກັບກອງທະຫານແກວ ໄດ້ຕໍ່ສູ້ຣົບກັນເປັນສາມາດ ແຕ່ບໍ່ອາດຂັບໄລ່ທະຫານແກວໃຫ້ຖອຍອອກໄປໄດ້ ມີແຕ່ບັນມື້ບຸກລ້ອມໃກ້ກຸງເຂົ້າມາເລື້ອຍ ໆ ທະຫານລ້ານຊ້າງໄດ້ຮັກສາເມືອງໄວ້ຢ່າງສາມາດ ເຈົ້າອຸປຣາຊຊຽງລໍພ້ອມດ້ວຍແມ່ທັບສາມນາຍມີໝື່ນບຸບ, ໝື່ນເຮືອງ, ແລະໝື່ນຫລ້າ, ໄດ້ນຳທະຫານອອກຣົບກັບແກວດ້ວຍອາວຸດສັ້ນ ເຈົ້າອຸປຣາຊຊຽງລໍຕາຍໃນລນາມຣົບໃກ້ພຣະຣາຊວັງຊຽງທອງ ທະຫານແກວກໍເຂົ້າຍຶດກຸງລ້ານຊ້າງໄດ້ເມື່ອ ພ.ສ. ໒໐໒໑. ໃນພົງສາວະດານລ້ານຊ້າງ ຂອງກົມພຣະບາດຳຣົງວ່າເຈົ້າຊຽງລໍເຫັນທະຫານລາວເມື່ອຍຫລາຍກໍ ສເດັດລົງຈາກຄໍຊ້າງພາທະຫານລົງເຮືອຂ້າມມາທາງຝັ່ງຂວາ ແຕ່ເຮືອພຣະທີ່ນັ່ງຫລົ້ມ ເຈົ້າຊຽງລໍສວັນຄົດໃນກາງແມ່ນ້ຳຂອງ ທະຫານແກວໄດ້ຕາຍໃນກາມຣົບ ເທື່ອນີ້ມາກຫລາຍ

ຝ່າຍ ພຣະເຈົ້າໄຊຈັກພັດ ແລະ ພຣະບໍຣົມວົງສານຸວົງໄດ້ພາກັນລົງເຮືອພຣະທີ່ນັ່ງ ອອກຈາກກຸງລ້ານ

ຊ້າງລ່ອງລົງມາຕາມລຳແມ່ນ້ຳຂອງກ່ອນກຸງແຕກ ຊົງປຸກຂະບວນຟັງຂ່າວຢູ່ທີ່ຊຽງຄານ ບົວຂວາງຊຸນໄດ້ພາທະຫານບົກຕາມມາຮອດປາກນ້ຳພູນ ຝ່າຍທະຫານລາວທີ່ຖອຍມາຈາກກຸງລ້ານຊ້າງ ໄດ້ມາໂຮມກັບທີ່ຊຽງຄານ ແລ້ວຈຶ່ງໄດ້ໄປດໃຫ້ທ້າວແຫ່ງຄຳນຳກອງທະຫານໄປຕີແກວທີ່ປາກນ້ຳພູນ ທະຫານແກວສູ້ບໍ່ໄດ້ກໍແຕກຖອຍໜີໄປ ທ້າວແຫ່ງຄຳຈຶ່ງນຳທະຫານຕາມຕີແກວໄປຮອດກຸງລ້ານຊ້າງ ບົວຂວາງຊຸນແລະເນີກອິງນຳທະຫານທີ່ເຫລືອຕາຍກັບໄປຍັງກຸງວຽດນາມ ເມື່ອເຂົ້າເຂດແດນແກວບົວຂວາງຊຸນຖືກຟ້າຜ່າຕາຍ ຊຶ່ງເປັນຂໍ້ທີ່ພາກັນນຳມາເວົ້າກັນພາຍຫລັງວ່າ ແກວຜິດຄຳສາບານຂອງຂຸນບູຣົມຜູ້ເປັນຕົ້ນສະກຸນໂດຍໄດ້ນຳກອງທັບມາຕີລາວ (ກຸງລ້ານຊ້າງ) ຈຶ່ງເປັນໄປຕາມຄຳສາບານທີ່ວ່າ "ຫຽວຫາງໃຫ້ຟ້າຜ່າ ເມື່ອປ່າໃຫ້ເສືອກິນ" ນັ້ນ.

ເມື່ອໄດ້ຂັບໄລ່ກອງທັບແກວ ໃຫ້ຖອຍໄປ ຈາກດິນແດນລາວແລ້ວທ້າວແຫ່ງຄຳ (ແທ່ນຄຳ) ກໍ່ນຳທະຫານກັບມາເຝົ້າພຣະເຈົ້າໄຊຈັກພັດ ພຣະເຈົ້າໄຊຈັກພັດຊົງຊະຣາການຫລາຍແລ້ວ ແລະຊົງເສັຽພຣະໄທທີ່ແກວບົກມາຍ່ຳຍີພຣະນະຄອນ ຈົນເຈົ້າຊຽງລໍ່ອຸປຣາຊ

ເຖິງສິ້ນຊີວິດ ພຣະອົງຈຶ່ງສເດັດສວັນຄົດໃນມື້ຂຶ້ນ ໘ ຄ່ຳ ເດືອນຫ້າ ປີ ພ.ສ. ๒໐໖໖ ຣວມອາຍຸໄດ້ ໗໔ ພັນສາ ຢູ່ໃນຣາຊສົມບັດໄດ້ ໔໑ ປີ.

ທ້າວແທ່ນຄຳຈຶ່ງພາເສນາອຳມາດ ແລະໄພ່ຟ້າ ຣາສດອນທຳສົບພຣະຣາຊບິດາ ສ້າງທາດອົງໜຶ່ງ ສົມ, ແລະວິຫານ, ແລ້ວນຳອັດຖິໄປບັນຈຸໄວ້ໃນພຣະເຈດີ ໃຫ້ຊື່ວ່າ "ວັດສົບຊຽງຄານ" ຈຳໄດ້ຊື່ວ່າ "ເມືອງຊນະ ຄາມ" (ຝຣັ່ງເສດຂຽນວ່າເມືອງ SANAKHAM) ແລ້ວ ພາໄພ່ຟ້າຣາສດອນກັບຄືນສູ່ກຸງລ້ານຊ້າງ. (ຕອນນີ້ ກອງວັນນະຄະດີໃຫ້ບັນທຶກຕື່ມວ່າ "ຊນະຄາມອາດຫາຍ ມາຈາກຊນະສົງຄາມ" ດັ່ງນີ້)

໗໔. <u>ຣັຊກາລພຣະເຈົ້າສຸວັນນະບັນລັງ</u> : ພ.ສ. ๒໐໖໖ ເຖິງ ๒໐๒ລ

ເສນາອຳມາດ ຈຶ່ງ ອັນເຊີນ ທ້າວແທ່ນຄຳ ຂຶ້ນຄອງ ຣາຊສົມບັດຊົງພຣະນາມວ່າ "ພຣະເຈົ້າສຸວັນນະບັນ ລັງ" ຕລອດສໄມຣັຊກາລ ຂອງພຣະອົງຊົງຈັດການ ບຸຣະນະສ້ອມແປງພຣະຣາຊວັງຊຽງທອງ ຊຶ່ງ ຊຳຣຸດ ຊຸດ ໂຊມຍ້ອນການເສິກສົງຄາມ ໄດ້ຊົງທະນຸບຳຣຸງບ້ານ ເມືອງໃຫ້ກັບຄືນສູ່ສະພາບປົກຕິດັ່ງເດີມ ໄພ່ຟ້າປະຊາ

ຣາສດອນໄດ້ຮັບຄວາມສງົບສັນຕິສຸກຕລອດຣັຊກາລຂອງ ພຣະອົງ ບໍ່ໄດ້ມີ ຂ້າເສິກ ສັຕຣູ ຈາກ ພາຍນອກ ມາ ຣົບກວນບ້ານເມືອງເລີຍ.

ພຣະເຈົ້າ ສຸວັນນະບັນລັງ ສວັນຄົດ ເມື່ອປີ ພ.ສ. ໒໐໒໙ ພຣະຊົນມາຍຸໄດ້ ໕໑ ພັນສາ ຢູ່ໃນຣາຊສົມບັດ ເຈັດປີ.

໓໕. <u>ພຣະເຈົ້າຫລ້າແສນໄທ</u> : ພ.ສ. ໒໐໒໙ ເຖິງ ພ.ສ. ໒໐໓໙

ເສນາອຳມາດໄດ້ອັນເຊີນທ້າວຫລ້າ ໂອຣົດຂອງ ພຣະເຈົ້າໄຊຈັກພັດ ອະນຸຊາພຣະເຈົ້າສຸວັນນະບັນລັງ ຂຶ້ນຄອງຣາຊສົມບັດຊົງພຣະນາມວ່າ " ພຣະເຈົ້າຫລ້ານ້ຳແສນໄທ ຫລື ພຣະເຈົ້າ ຫລ້າແສນໄທ" ໃນ ຣັຊກາລຂອງພຣະອົງໄດ້ຊົງບຸຣະນະກຸງລ້ານຊ້າງຕໍ່ຈາກ ພຣະເຈົ້າ ສຸວັນນະບັນລັງ ແລະ ໄດ້ຊົງ ຜູກໄມຕຣີກັບກຸງສີ ອະຍຸທະຍາໃຫ້ສນິດສນົມກັນແໜ້ນນຶງຂຶ້ນອີກ.

ເຫດການທີ່ສຳຄັນກໍຄື ພຣະອົງໄດ້ສ້າງວັດແລະ ໄດ້ອັນເຊີນ ພຣະບາງ ຈາກ ນະຄອນ ວຽງຈັນ ຂຶ້ນໄປປະດິສ ຖານໄວ້ໃນນະຄອນຫລວງພຣະບາງໄດ້ສຳເຣັດ ວັດທີ່ ປະດິສຖານພຣະບາງເອີ້ນວ່າ " ວັດມະໂນຣົມ"

ພຣະເຈົ້າຫລ້າແສນໄທສວັນຄົດ ເມື່ອພ.ສ.໒໐໓໙ ພຣະຊົນມາຍຸໄດ້ ໓໓ ພັນສາຢູ່ໃນຣາຊສົມບັດສິບປີ.

໓໓. ພຣະເຈົ້າຊຸມພູ : ພ. ສ. ໒໐໓໙ ເຖິງ ພ.ສ. ໒໐໔໔

ເສນາອຳມາດຈຶ່ງອັນເຊີນເຈົ້າຊຸມພູ ໂອຣົດຂອງ ພຣະເຈົ້າຫລ້າແສນໄທຂຶ້ນຄອງຣາຊສົມບັດ ຊົງພຣະ ນາມວ່າ "ພຣະເຈົ້າຊຸມພູ" ຊຶ່ງຂນະນັ້ນມີພຣະຊົນໄດ້ ພຽງ ໗ ພັນສາ ສເວີຍຣາຊສົມບັດຢູ່ໄດ້ ໕ ປີ ເສນາ ອຳມາດທັງຫລາຍກໍປົດອອກຈາກຣາຊສົມບັດ ເມື່ອ ພ.ສ. ໒໐໔໔.

ເຈົ້າຊຸມພູ ຢູ່ໃນ ຣາຊສົມບັດໄດ້ ໕ ປີ ຖືກ ປົດອອກ ຈາກຣາຊສົມບັດ ຢູ່ມາໄດ້ອີກປີໜຶ່ງກໍສວັນຄົດເມື່ອ ພ.ສ. ໒໐໔໕.

໓໔. ພຣະເຈົ້າວິຊຸລຣາຊທິປັຕ : ພ. ສ. ໒໐໔໔ ເຖິງ ໒໐໕໓.

ເມື່ອປົດເຈົ້າ ຊຸມພູ ອອກ ຈາກ ຣາຊ ສົມບັດ ແລ້ວ ເສນາອຳມາດຈຶ່ງໄດ້ອັນເຊີນເຈົ້າວິຊຸລຣາຊ ໂອຣົດຂອງ ພຣະເຈົ້າໄຊຈັກພັດຂຶ້ນຄອງຣາຊສົມບັດ ໃນພົງສາວະ

ດານຫລວງພຣະບາງ ຂອງ ກົມ ພຣະຍາດຳຣົງ ວ່າທ້າວພູໄພ, ໃນພົງສາວະດານລ້ານຊ້າງຂອງຂ້າຣາຊການກົມພຣະຄັງວ່າ ທ້າວລຸເພໄຊ ໃນພົງສາວະດານລາວຂອງ ປ. ບູລັງເປຣ໌ ວ່າ ທ້າວເພັຊໄສ.

ຂນະ ທີ່ອະພິເສກ ຂຶ້ນຄອງ ຣາຊບັ້ນ ປາກົດເຫດການອັສຈັນ ມີຣັສມີສ່ອງໄປທຸກທິດເພາະບຸນບາຣະມີຂອງພຣະອົງຈຶ່ງໄດ້ຖວາຍພຣະນາມວ່າ "ພຣະເຈົ້າວິຊຸລຣາຊທິປັຕ" ເມື່ອສເວີຍຣາຊສົມບັດແລະໄດ້ໂອຣົດອົງໜຶ່ງປະສູດເມື່ອ ພ.ສ. ໒໐໔໙ ກ່ອນປະສູດພຣະອົງຊົງພຣະສຸບິນ (ຝັນ) ວ່າໄດ້ເຫັນຕົ້ນໂພໃຫຍ່ຕົ້ນໜຶ່ງອອກດອກອອກໜ່ວຍເຕັມຕົ້ນ ມີຝູງນົກການານາຊນິດໄດ້ອາໄສສົ່ງສຽງແຊວ ໆ ປູ່ ໝໍໂຫນໄດ້ທຳນາຍວ່າພຣະອົງຈະໄດ້ໂອຣົດ ທີ່ມີ ບຸນຍາທິການ ເປັນເຊື້ອ ພຣະໂພທິສັດ ເມື່ອໂອຣົດປະສູດຈຶ່ງຊົງພຣະນາມວ່າ "ເຈົ້າໂພທິສາຣາຊກຸມານ"

ໃນສໄມຣັຊການແຜ່ນດິນຂອງພຣະອົງ ໄພ່ຟ້າປະຊາ ຣາສດອນ ຕລອດແວ່ນ ແຄວ້ນດິນແດນຂອງ ພຣະອົງມີແຕ່ຄວາມສງົບສຸຂ ພຣະອົງໄດ້ຊົງບຳຣຸງພຣະພຸທທະສາສນາຢ່າງມາກຫລາຍ ໄດ້ສ້າງວັດຕ່າງ ໆ

ໃນພຣະຣາຊວັງຊຽງທອງ ວັດທີ່ສຳຄັນຄືວັດວິຊຸນຣາຊ, ແລະໄດ້ສ້າງສິມໃນວັດວິຊຸນ, ເສັດແລ້ວໄດ້ອັນເຊີນພຣະບາງຈາກວັດມະໂນຣົມນາ ປະດິສຖານໄວ້ໃນສິມວັດວິຊຸນຣາຊນີ້ ຕໍ່ມາພຣະອົງໄດ້ຣາຊທິດາອີກອົງໜຶ່ງແຕ່ສົນພຣະຊົນເສັງແຕ່ຍັງນ້ອຍ ເພື່ອເປັນອະນຸສອນແກ່ຣາຊທິດາ ຈຶ່ງຊົງສ້າງວັດຂຶ້ນອີກຊື່ວ່າ "ວັດໃພສົນ"

ພຣະເຈົ້າວິຊຸລຣາຊສວັນຄົຕເມື່ອ ພ.ສ. ໒໐໕໕ ຣວມພຣະຊົນມາຍຸໄດ້ ៩໕ ພັນສາ ຢູ່ໃນຣາຊສົມບັດໄດ້ ໑໙ ປີ.

ປ໗. ຣັຊກາລພຣະເຈົ້າໃພທິສາຣາຊ : ພ.ສ. ໒໐໕໕ ເຖິງ ໒໐໙໐

ເສນາອຳມາດ ຈຶ່ງ ເຊີນ ເຈົ້າໃພທິສາ ຣາຊ ກຸມານຂຶ້ນຄອງຣາຊສົມບັດ ຊົງພຣະນາມວ່າ "ພຣະເຈົ້າໃພທິສານຣາຊາທິບໍດີ" ພຣະອົງຊົງທະນຸບຳຣຸງບ້ານເມືອງ ແລະຊົງເຫລື້ອມໃສໃນພຣະພຸທທະສາສນາຍິ່ງນັກ ຊົງສ້າງວັດວິຊຸນຣາຊຕໍ່ຈາກສົມເດັດພຣະຣາຊບິດາ ແລະຊົງ ບຳຣຸງ ພຣະພຸທສາສນາເປັນການໃຫຍ່ໃນ

ສໄມ ຣັຊການຂອງພຣະອົງໄພ່ຟ້າປະຊາຣາສດອນມີແຕ່ຄວາມອິ່ມເຢັນເປັນສຸກ ມີເຫດການທີ່ສຳຄັນ ໆ ຄື :

໑. <u>ຊົງມີ ພຣະຣາຊ ກຳໜົດໃຫ້ເລີກ ການ ນັບຖືຜີການຊົງເຈົ້າເຂົ້າຜີທົ່ວຣາຊອານາຈັກ</u> ໃຫ້ບົດໝັ້ນຖືໝັ້ນໃນພຣະພຸທສາສນາແຕ່ຢ່າງດຽວ ຊົງຮັບສັ່ງໃຫ້ມ້າງສາລເຈົ້າຫລວງ ສາລເຈົ້າຜີເຊື້ອເມືອງ, ຊົງເມືອງ, ໃນພົງສາວະດານລ້ານຊ້າງວ່າຢູ່ທີ່ສັບດົງ ແລ້ວສ້າງວັດຂຶ້ນແທນ ວັດທີ່ສ້າງຂຶ້ນແທນບ່ອນສາລເຈົ້ານັ້ນເອີ້ນວ່າ "ວັດສຸວັນເທວະໂລກ" ແຕ່ຢ່າງໃດກໍ່ຕາມປະເພນີການນັບຖືຜີຊຶ່ງມີມາແຕ່ໂບຮານ ແລະໄດ້ຝັງແໜ້ນໃນຈິດໃຈ ຂອງ ຣາສດອນ ຕລອດຈົນໄພ່ຟ້າປະຊາຊົນມາຫລາຍພັນປີນັ້ນຈະໃຫ້ເລີກເດັດຂາດບໍ່ໄດ້ ເຫດນີ້ປະເພນີການນັບຖືຜີ, ການຊົງເຈົ້າເຂົ້າຜີ, ຈຶ່ງຍັງຄົງມີສືບມາຕາບເທົ້າທຸກວັນນີ້.

໒. <u>ພຣະແຊກຄຳສເດັດມາສູ່ພຣະບໍຣົມໂພທິສົມພານ</u> : ພຣະແຊກຄຳຊຶ່ງສະຖິດຢູ່ໃນວິຫານເມືອງຊຽງໃໝ່ກຸງລ້ານນາ (ລານນາ) ໄດ້ສເດັດມາຮ່ວມພຣະບໍຣົມໂພທິສົມພານ ຂອງ ພຣະເຈົ້າໂພທິສາ ຣາຊ ດ້ວຍ

ການສເດັດ ເຂົ້າໄປຢູ່ໃນວັດ ວິຊຸນຣາຊອັນເປັນບ່ອນສະຖິດຂອງພຣະບາງ ຝ່າຍພຣະເຈົ້າພິມຣາຊເຈົ້າຄອງນະຄອນຊຽງໃໝ່ຊົງຊາບວ່າພຣະແຊກຄຳຫາຍໄປ ກໍໃຫ້ບ່າວໄພ່ ທ່ຽວສືບຫາ ມາຮອດ ກຸງລ້ານຊ້າງ ໄດ້ເຫັນພຣະແຊກຄຳ ເຂົ້າໄປ ສະຖິດ ຮ່ວມ ກັບ ພຣະບາງ ຢູ່ໃນ ສິມວັດວິຊຸນຣາຊ ຈຶ່ງໄດ້ຄິດອ່ານພາກັນລັກເອົາພຣະແຊກຄຳຕ່າວຄືນໄປເມືອງຊຽງໃໝ່ ພໍເຖິງເວລາສາມຍາມກໍພາກັນເຂົ້າໄປໃນສິມລັກຍົກເອົາພຣະແຊກຄຳ ລົງຈາກແທ່ນ ພຣະແຊກຄຳກໍສແດງປາຕິຫານໃຫ້ເປັນທີ່ອັສຈັນບັນດານໃຫ້ເລກວັດ (ຄືຜູ້ຮັກສາວັດ) ພາກັນຕື່ນຂຶ້ນ ແລ້ວພາກັນອ້ອມຈັບເອົາຊາວຊຽງໃໝ່ທີ່ຄິດບໍ່ຊອບນັ້ນໄດ້ ແລ້ວນຳຂຶ້ນກາບທູນພຣະເຈົ້າໂພທິສາຣາຊ ເມື່ອພຣະອົງຊາບເຣື່ອງແລ້ວກໍບໍ່ຊົງເອົາໂທດແລະປ່ອຍໃຫ້ຊາວຊຽງໃໝ່ທັງໝົດກັບຄືນໄປ ສ່ວນພຣະແຊກຄຳຍັງຄົງໃຫ້ຮັກສາໄວ້ໃນສິມວັດວິຊຸນຣາຊນັ້ນ.

(ຕອນນີ້ ກົມການວັນນະຄະດີໃຫ້ບັນທຶກມາວ່າ "ຕາມຫລັກຖານ ແທ້ຈິງ ພຣະແຊກຄຳບໍ່ໄດ້ສະເດັດມາເອງ ພຣະໂພທິສາຣະຣາຊໄດ້ແຕ່ງຣາຊທູດໄປຂໍເອົາທາງຊຽງໃໝ່ ໄດ້ແຕ່ງໃຫ້ ພຣະເທບ ມົງຄົລເຖຣະ ເປັນຜູ້

ນຳມາພ້ອມດ້ວຍຄັມພີ ພຣະໄຕຣປິດົກ ໓໐ ຄັມພີ" ດັ່ງນີ້)

໓. <u>ເປັນບ້ານພີ່ເມືອງນ້ອງ (ຜູກສັມພັນທະໄມຕຣີ) ກັບກຸງລານນານະຄອນຊຽງໃໝ່</u>: ຝ່າຍຊາວນະຄອນຊຽງໃໝ່ທີ່ຕ່າງໄປນັ້ນ ໄດ້ນຳຄວາມທັງປວງທີ່ເກີດຂຶ້ນນັ້ນກາບທູນຕໍ່ພຣະເຈົ້າຊຽງໃໝ່ ເມື່ອພຣະອົງໄດ້ຊາບວ່າ ພຣະແຊກຄຳ ສະເດັດໄປສູ່ພຣະບໍຣົມໂພທິສົມພານຂອງກຸງລ້ານຊ້າງກໍດີພຣະໄທ ຈຶ່ງແຕ່ງພຣະຣາຊສານ ເຄື່ອງມົງຄຸນ ບັນນາການໄປ ຈເຣີນສັມພັນທະໄມຕຣີກັບພຣະເຈົ້າກຸງລ້ານຊ້າງ ແລະໄດ້ສົ່ງພຣະນາງຍອດຄຳທິບຣາຊທິດາ ພ້ອມດ້ວຍຂ້າທາສບໍຣິວານຖວາຍໃຫ້ເປັນມະເຫສີຂອງພຣະເຈົ້າກຸງລ້ານຊ້າງ ກຸງລ້ານນາ (ນະຄອນຊຽງໃໝ່) ກັບກຸງລ້ານຊ້າງ (ກຸງສີສັຕນາຄນະຫຸດ) ຈຶ່ງໄດ້ເປັນສັມພັນທະໄມຕຣີ ເປັນບ້ານພີ່ເມືອງນ້ອງສນິດສນົມກັນ ແໜ້ນແຟ້ນຍິ່ງຂຶ້ນ

໔. <u>ຊົງສ້າງພຣະຣາຊວັງຂຶ້ນທີ່ເມືອງວຽງຈັນ</u>

ໃນສໄມຣັຊການຂອງພຣະອົງໄດ້ຊົງສ້າງພຣະຣາຊວັງຂຶ້ນອີກບ່ອນໜຶ່ງທີ່ວຽງຈັນ ເອີ້ນກັນໃນສໄມນັ້ນວ່າ

24/VII ຫ້າມຈຳໜ່າຍ

"ວຽງຈັນວຽງຄຳ" ຊຶ່ງເປັນທຳເລບ່ອນເໝາະສົມແລະຢູ່ຫວ່າງກາງ ທາງເໜືອ ແລະ ທາງໃຕ້ ພຣະອົງ ເປັນກະສັດພຣະອົງແຣກ ທີ່ສເດັດມາປະທັບຢູ່ພຣະຣາຊວັງໃໝ່ທີ່ນະຄອນວຽງຈັນນັ້ນເປັນເວລາເຫິງນານ ຈຶ່ງໄດ້ສເດັດກັບໄປ ປະທັບ ທີ່ ພຣະຣາຊວັງ ຊຽງທອງ ນະຄອນລ້ານຊ້າງຫລວງພຣະບາງ.

໕. ຊົງຊ່ວຍເຫລືອເຈົ້າວຽດນາມ (ແກວ) : ຝ່າຍທາງກຸງວຽດນາມ (ແກວ) ເກີດຍາດແຍ່ງຣາຊສົມບັດກັນຂຶ້ນ ເຈົ້າວຽດນາມອົງໜຶ່ງຊື່ວ່າ "ແຫງນກ່າ =" (Nyarn Cam) ທີ່ເປັນຕົ້ນວົງຂອງກະສັດວຽດນາມໃນທຸກວັນນີ້ໄດ້ໜີມາເພິ່ງພຣະບໍຣົມໂພທິ ສົມພານຍັງກຸງລ້ານຊ້າງເມື່ອ ພ.ສ. ໒໐໗໓ ພຣະອົງກໍໃຫ້ຄວາມຊ່ວຍເຫລືອ ຈົນໄດ້ຫລົບຕ່າວໄປຄອງກຸງວຽດນາມໃນພາຍຫລັງ.

໖. ເຈົ້າເຊດວົງສາໄດ້ຄອງກຸງລ້ານນາ : ພຣະເຈົ້າໂພທິສາຣາຊມີຣາຊໂອຣົດສາມອົງ ຣາຊທິດາສອງອົງ ຊຶ່ງເກີດກັບພຣະມະເຫສີພຣະນາງຍອດຄຳທິບຣາຊທິດາພຣະເຈົ້າກຸງລ້ານນາ ຄືເຈົ້າເຊດວົງສາ,

ເຈົ້າທ່າເຮືອ, ເຈົ້າວໍຣະວົງໄສ. ພຣະຣາຊທິດາຊື່ງພຣະນາມວ່າ ເຈົ້າຍິງແກ້ວກຸມາຣີ, ເຈົ້າຍິງຄຳເຫລົາ, ແລະຍັງມີພຣະຣາຊທິດາ ເກີດກັບພຣະສນົມເອກອີກອົງນຶ່ງ ຊື່ງນາມວ່າ (ເຈົ້າຍິງຄຳໃບ)

ຕໍ່ມາ ພ.ສ. ໒໐໘໙ ເຈົ້າກຸງລ້ານນາ ນະຄອນຊຽງໃໝ່ຊື່ງເປັນ ພຣະເຈົ້າຕາ ຂອງ ເຈົ້າເຊດຖວົງສາສວັຄົຕນໍ່ມີຜູ້ສືບຣາຊສົມບັດໃນກຸງລ້ານນາ ເສນາອຳມາດຈື່ງໄດ້ປະຊຸມເຫັນພ້ອມກັນວ່າ ເຈົ້າເຊດຖວົງສາຫລືເຈົ້າເຊດຖາວົງ ສົມຄວນໄດ້ຣາຊສົມບັດໃນກຸງລ້ານນາ (ນະຄອນຊຽງໃໝ່) ເສນາບໍດີນະຄອນຊຽງໃໝ່ຈື່ງໄດ້ມາເຝົ້າພຣະເຈົ້າກຸງລ້ານຊ້າງ ຂໍເຈົ້າເຊດຖວົງສາຣາຊກຸມານຂື້ນໄປຄອງນະຄອນຊຽງໃໝ່ ເສນາອຳມາດກຸງລ້ານຊ້າງ ຈື່ງຈັດຂະບວນ ແຫ່ເຈົ້າເຊດຖວົງສາໄປຍັງນະຄອນຊຽງໃໝ່ ເມື່ອໄດ້ເຮືກແລ້ວພຣະເຈົ້າໂພທິສານພ້ອມດ້ວຍເສນາບໍດີເມືອງຊຽງໃໝ່ ແລະເສນາບໍດີເມືອງລ້ານຊ້າງ ຈື່ງໄດ້ອະພິເສກເຈົ້າເຊດຖວົງສາຂື້ນສເວີຍ ຣາຊ ສົມບັດ ໃນ ນະຄອນ ຊຽງໃໝ່ ແຫ່ງ ອານາຈັກລ້ານນາສືບຕໍ່ພຣະເຈົ້າພົມມະຣາຊ ພຣະເຈົ້າໂພທິສາຣາຊ ພ້ອມດ້ວຍ ເສນາ ອຳມາດ ຈື່ງໄດ້ ສເດັດ ຕ່ວນມາ

ບັງກຸງລ້ານຊ້າງ ແລະໃຫ້ແສນໜື້ນເມືອງຢູ່ຊ່ວຍຣາຊ ການກັບເຈົ້າເຊດວິງສາໃນນະຄອນຊຽງໃໝ່ກຸງລ້ານນາ

ພຣະເຈົ້າໂພທິສາຣາຊສວັນຄົຕເມື່ອ ພ.ສ. ໒໐໙໐ ສີຣິພຣະຊົນນາຍຸໄດ້ ໔໑ ພັນສາ ຢູ່ໃນຣາຊສົມບັດ ໒໓ ປີ ສວັນຄົຕເນື່ອງຈາກສເດັດປະພາດປ່າ ຊ້າງລົ້ມທັບ ກັບນາຣອດກຸງໄດ້ປະນານ ອາທິດໜຶ່ງກໍ່ສວັນຄົຕໃນພະຣະ ຣາຊວັງຊຽງທອງ.

໒໙. ຣັຊກາລພຣະເຈົ້າໄຊເຊດຖາທິຣາຊ : ພ.ສ. ໒໐໙໑ ເຖິງ ໒໑໑໔.

ພຣະເຈົ້າໄຊເຊດຖາທິຣາຊປະສູຕເມື່ອ ພ.ສ. ໒໐ກກ ເປັນໂອຣົດອົງຕ່ຳອິດຂອງພຣະເຈົ້າໂພທິສາ ຣາຊຊຶ່ງເກີດກັບພຣະນາງຍອດຄຳທິບ ຣາຊທິດາຂອງ ພຣະເຈົ້າກຸງລ້ານນາ ພຣະອົງເປັນວີຣະກະສັຕຂອງ ລາວພຣະອົງໜຶ່ງຊຶ່ງມີຄວາມສາມາດໃນການປົກຄອງ ບ້ານເມືອງ ແລະສາມາດໃນການເສິກສົງຄາມ ເຄີຍໄດ້ ເປັນກະສັຕປົກຄອງທັງກຸງລ້ານນາແລະລ້ານຊ້າງ ສົມ ຄວນໄດ້ຮັບກຽຕເປັນມະຫາຣາຊຂອງລາວອີກພຣະອົງ ໜຶ່ງຕໍ່ຈາກພຣະເຈົ້າຟ້າງຸ່ມມາ.

ເມື່ອພຣະເຈົ້າໂພທິສາຣາຊໄດ້ສວັນຄົຕລົງໂດຍປັດຈຸບັນທັນດ່ວນ ຈຶ່ງເປັນເຫດໃຫ້ເກີດຄວາມຫຍຸ້ງຍາກຂຶ້ນໃນຣາຊສຳນັກ ເຈົ້າທ່າເຣືອຣາຊໂອຣົດອົງທີສອງຂຶ້ນຄອງຣາຊສົມບັດສືບຕໍ່ຈາກພຣະເຈົ້າໂພທິສາຣາຊ ແລ້ວແບ່ງອານາຈັກລ້ານຊ້າງອອກເປັນສອງຕອນ ຄື ແຕ່ຊຽງຄານລົງໄປທາງໃຕ້ ໃຫ້ເຈົ້າວໍຣະວົງໂສອະນຸຊາຄອງ ຈາກຊຽງຄານຂຶ້ນໄປທາງເໜືອເຈົ້າທ່າເຣືອຄອງເອງ ເສນາອຳມາດເຫັນເຫດການບ້ານເມືອງກາຍໄປເປັນສອງຕອນ ດັ່ງນັ້ນຈຶ່ງໄດ້ແຕ່ງເສນາໄປທູນພຣະເຈົ້າໄຊເຊດຖາທີ່ນະຄອນຊຽງໃໝ່ ພຣະເຈົ້າໄຊເຊດຖາຊາບຂ່າວສວັນຄົຕ ຂອງສົມເດັດພຣະຣາຊບິດາແລະເຫດການບ້ານເມືອງ ດັ່ງນັ້ນກໍສເດັດຕ່ວນມາກຸງລ້ານຊ້າງແລະໄດ້ອັນເຊີນເອົາພຣະແກ້ວມໍຣະກົດມານຳ ເມື່ອສເດັດມາຮອດກຸງລ້ານຊ້າງແລ້ວເຈົ້າທ່າເຣືອແລະເຈົ້າວໍຣະວົງໂສກໍໄດ້ມອບຄືນຣາຊສົມບັດໃຫ້ແກ່ພຣະເຈົ້າໄຊເຊດຖາທິຣາຊເສນາອຳມາດຈຶ່ງອັນເຊີນເຈົ້າເຊດຖາວົງ (ໄຊເຊດຖາ) ຂຶ້ນຄອງຣາຊສົມບັດນະທີ່ກຸງສີສັຕນາຄນະຫຸດລ້ານຊ້າງຫລວງພຣະບາງຊົງພຣະນາມວ່າ "ພຣະເຈົ້າໄຊເຊດຖາທິຣາຊ" ເມື່ອ ພ.ສ. ໒໐໙໑.

ເມື່ອ ສົມເດັດ ພຣະເຈົ້າ ໄຊເຊດຖາ ທິຣາຊ ໄດ້ຂຶ້ນ ສເວີຍ ຣາຊ ສົມບັດ ແລ້ວພຣະອົງ ກໍ່ຊົງທະນຸບຳຣຸງ ແລະ ປັບປຸງ ກິຈການ ບ້ານເມືອງໃນ ຣັຊກາລ ຂອງ ພຣະອົງ ເກີດມີ ຂ້າເສິກ ພະມ້າ ບຸກມາ ຮຸກຮານ ດິນແດນ ລາວ ແລະມີເຫດການທີ່ສຳຄັນຕ່າງ ໆ ໃນຣັຊກາລ ຂອງພຣະ ອົງຄື :-

໑. <u>ບຸກກອງທັບໄປຕີເມືອງຊຽງໃໝ່</u> : ພ.ສ.໒໐໙໒

ຝ່າຍເຫດການທາງ ກຸງລ້ານນາ ນະຄອນ ຊຽງໃໝ່ ເມື່ອໄດ້ຊາບຂ່າວວ່າ ພຣະເຈົ້າໄຊເຊດຖາທິຣາຊ ຂຶ້ນຄອງ ຣາຊສົມບັດທາງກຸງລ້ານຊ້າງແລ້ວ ເສນາອຳມາດ ທັງຫລາຍ ກໍ່ບໍ່ພໍໃຈ ທີ່ຈະເປັນ ເມືອງອອກ ຂອງ ກຸງລ້ານ ຊ້າງ ຈຶ່ງໄປເຊີນເອົາພຣະເມກຸຕິທີ່ເມືອງນາຍມາຄອງ ນະຄອນຊຽງໃໝ່ ສືບຕໍ່ຈາກ ພຣະເຈົ້າ ໄຊເຊດຖາ ທິຣາຊ ພຣະເມກຸຕິເກງ ວ່າ ພຣະເຈົ້າ ໄຊເຊດຖາທິຣາຊ ຈະບຸກ ກອງທັບມາຕີເອົານະຄອນຊຽງໃໝ່ ຈຶ່ງແຕ່ງທູດນຳ ເຄື່ອງບັນນາການໄປຍັງກຸງຫົງສາວະດີຂໍເປັນເມືອງອອກ ຂອງປະເທດພະມ້າ

ພຣະເຈົ້າໄຊເຊດຖາ ທິຣາຊ ຊາບຂ່າວວ່າ ພຣະເມ ກຸຕິ:ແຍ່ງຣາຊສົມບັດເມືອງຊຽງໃໝ່ ແລະໄປຂໍຂຶ້ນກັບ

ພະມ້າດັ່ງນັ້ນກໍຊົງກຽມກອງທັບ ເພື່ອໄປຕີເອົາເມືອງຊຽງໃໝ່ຄືນ ເມື່ອ ພ.ສ. ໒໐໙໒ ຈຶ່ງໄດ້ຍົກກອງທັບໄປທາງເມືອງຊຽງແສນ ແສນໜື່ນເມືອງຊຶ່ງໄດ້ເລື່ອນເປັນພຣະບາກຽດ ໄດ້ນຳທະຫານ ເຂົ້າຕີເອົາ ເມືອງຊຽງແສນໄດ້ ພຣະເຈົ້າໄຊເຊດຖາທິຣາຊໄດ້ສເດັດເຂົ້າໄປປະທັບພັກພິນຢູ່ທີ່ເມືອງຊຽງແສນ ແລ້ວຍົກກອງທັບໄປຕີເມືອງຊຽງໃໝ່ ກອງທັບລ້ານຊ້າງໄດ້ພົບກັບກອງທັບພຣະເມກຸຕິ ທີ່ຫາດເມືອງ ຊຽງຂອງ ໄດ້ຕໍ່ສູ້ກັນເປັນສາມາດ ທັບຊຽງໃໝ່ສູ້ທັບລ້ານຊ້າງບໍ່ໄດ້ຖອຍຕ່າວໄປເມືອງຊຽງໃໝ່.

<u>ພະມ້າຍົກກອງທັບມາຊ່ວຍເມືອງຊຽງໃໝ່</u> : ຝ່າຍພຣະເມກຸຕິ ໄດ້ຊາບຂ່າວວ່າ ພຣະເຈົ້າ ໄຊເຊດຖາ ທິຣາຊຍົກກອງທັບມາຕີເມືອງຊຽງໃໝ່ ໄດ້ແຕ່ງມ້າໄວນຳສານ ໄປ ແຈ້ງ ແກ່ ກຸງຫົງສາວະດີ ຂໍ ກອງທັບ ມາ ຊ່ວຍປ້ອງກັນເມືອງ ທັບພະມ້າໄດ້ຍົກມາທັບປ້ອງກັນເມືອງຊຽງໃໝ່ ກ່ອນທີ່ ກອງທັບ ພຣະເຈົ້າໄຊເຊດຖາທິຣາຊຍົກມາເຖິງເມືອງຊຽງໃໝ່ ແມ່ທັບພະມ້າຈຶ່ງໄດ້ແຕ່ງສານໃຫ້ ທູດ ນຳໄປ ຖວາຍ ແກ່ພຣະເຈົ້າໄຊເຊດຖາທິຣາຊ ວ່າ

"ກຸງລ້ານນານະຄອນຊຽງໃໝ່ເປັນເມືອງອອກຂອງປະເທດພະມ້າ ຂໍໃຫ້ພຣະເຈົ້າໄຊເຊດຖາຍົກກອງທັບຕ່າວໄປເສັຽ"

ເມື່ອເຫດການ ກັບກາຍໄປເປັນ ດັ່ງນັ້ນແລ້ວ ພຣະເຈົ້າ ໄຊເຊດຖາ ທິຣາຊ ຈຶ່ງໄດ້ຖອຍ ທັບ ມາ ຕັ້ງໝັ້ນ ຢູ່ທີ່ເມືອງຊຽງຂອງແລ້ວແຕ່ງສານຕອບພະມ້າໄປວ່າ "ກຸງລ້ານນານະຄອນຊຽງໃໝ່ ເປັນສິດຂອງພຣະອົງໂດຍຊອບດ້ວຍທັມ ເພາະພຣະຣາຊມານດາຂອງພຣະອົງເປັນພຣະຣາຊທິດາຂອງພຣະເຈົ້າພິມະຣາຊ (ພຣະເຈົ້າຕາ) ກະສັດເມືອງຊຽງໃໝ່ ເມື່ອພຣະເຈົ້າພິມະຣາຊສວັນຄົດແລ້ວ ເສນາອຳມາດ ເມືອງຊຽງໃໝ່ໄດ້ໄປ ເຊີນພຣະອົງ ມາຄອງເມືອງ ໂດຍຊອບ ດ້ວຍບູຮານ ປະເພນີ" ຝ່າຍພະມ້າ ເມື່ອໄດ້ ຮັບ ສານ ຂອງ ພຣະເຈົ້າ ໄຊເຊດຖາ ແລ້ວ ຈຶ່ງໄດ້ ແຕ່ງສານ ຕອບ ເຊີນ ພຣະ ເຈົ້າ ໄຊເຊດຖາ ທິຣາຊ ເຂົ້າ ມາຄອງ ເມືອງຊຽງໃໝ່ ຕາມ ເດີມ ແຕ່ ພຣະອົງບໍ່ໄດ້ເຂົ້າໄປເມືອງຊຽງໃໝ່ ຕາມຄຳເຊີນຂອງພະມ້າເພາະວ່າຢ້ານເປັນກົລອຸບາຍຂອງພະມ້າ ເນື່ອງຈາກພະມ້າມີກອງທັບຢູ່ໃນ ກຸງລ້ານນານະຄອນຊຽງໃໝ່ເປັນຈຳນວນຫລາຍ ດັ່ງນັ້ນພຣະອົງຈຶ່ງໄດ້ຖອຍທັບ

ຕ່າວມາຍັງເມືອງຊຽງແສນ ແລ້ວຍົກກັບມາຍັງກຸງສີ ສັດນາຄນະຫຸດ ນັບແຕ່ຍົກກອງທັບອອກຈາກກຸງລ້ານຊ້າງໄປທຳເສິກກັບ ພຣະເມກຸຕິກຸງລ້ານນາໂຮມເວລາໄປແລະກັບເປັນເວລານານຮອດເກົ້າເດືອນ.

ຝ່າຍທາງພະມ້າ ເມື່ອໄດ້ຊາວຂ່າວວ່າພຣະເຈົ້າໄຊເຊດຖາ ທິຣາຊ ຍົກ ກອງທັບ ກັບຄືນ ກຸງສີ ສັດນາຄນະຫຸດແລ້ວ ຈຶ່ງໄດ້ຍົກພຣະເມກຸຕິຂຶ້ນເປັນກະສັດຄອງກຸງລ້ານນາ ນະຄອນ ຊຽງໃໝ່ ເປັນເມືອງຂຶ້ນ ຂອງພະມ້າ ຝ່າຍສົມເດັດ ພຣະເຈົ້າ ໄຊເຊດຖາ ທິຣາຊ ເມື່ອ ຕ່າວ ເຖິງກຸງລ້ານຊ້າງ ແລ້ວໄດ້ແຕ່ງອຳມາດໄປກ່ຽວ ກ່ອມ ເມືອງຊຽງຮາຍ, ເມືອງແພ່, ເມືອງນ່ານ, ແລະພຣະອົງກໍ່ກຽມກຳລັງບຳຣຸງກອງທັບໄວ້ ເພື່ອຈະຍົກໄປຮົບເອົາເມືອງຊຽງໃໝ່ອີກ ແຕ່ກໍບໍ່ໄດ້ຍົກໄປ ກຸງລ້ານນາ ນະຄອນຊຽງໃໝ່ ຈຶ່ງຕົກ ໄປເປັນ ເມືອງຂຶ້ນ ຂອງ ພະມ້າ ແຕ່ ສໄມແຜ່ນດິນຂອງພຣະເມກຸຕິເປັນຕົ້ນມາ.

໒. ຜູກ ສັມພັນທະໄມຕຣີ ກັບກຸງສີອະຍຸທະຍາ :

ພ.ສ. ໒໐໙ປີ: ການທີ່ກຸງລ້ານນານະຄອນຊຽງໃໝ່ຕົກໄປເປັນເມືອງຂຶ້ນ ຂອງພະມ້າເຮັດ ໃຫ້ອານາຈັກລ້ານ

ຊ້າງຢູ່ໃນສະພາບບໍ່ປອດໄພ ເພາະວ່າເຂດແດນລ້ານຊ້າງກັບລ້ານນາຕໍ່ກັນ ແລະຂນະນັ້ນພະມ້ານມີກຳລັງທະຫານຫລາຍ ເປັນທີ່ເລື່ອງລືວ່າເຄີຍໄປຕີກຸງສີອະຍຸທະຍາແລ້ວເຖິງສາມເທື່ອ ຄື ເມື່ອ ພ.ສ. ໒໐໗ປີ ເທື່ອໜຶ່ງ, ເມື່ອ ພ.ສ. ໒໐໘ປີ ເປັນເທື່ອທີ່ສອງ ພ.ສ. ໒໐໙໑ ຄືສົງຄາມຊ້າງເຜືອກເປັນເທື່ອທີ່ສາມ ດັ່ງນັ້ນ ພະມ້າອາດຈະບຸກມາຕີ ກຸງລ້ານຊ້າງ ໄດ້ທຸກເວລາເພາະໄດ້ເມືອງຊຽງໃໝ່ໄວ້ເປັນກຳລັງແລ້ວ.

ພຣະອົງຈຶ່ງໄດ້ຫາທາງ ຜູກສັມພັນທະໄມຕຣີໃຫ້ເປັນຄ່ຳແຜ່ນດຽວກັນກັບກຸງສີອະຍຸທະຍາ ຊຶ່ງເປັນບ້ານພີ່ ເມືອງນ້ອງ ກັນ ມາ ແຕ່ສໄມ ບູຮານນັ້ນ ໃຫ້ ສນິດສນົມຍິ່ງຂຶ້ນອີກ ແລະຊົງຄິດວ່າທາງກຸງສີອະຍຸທະຍາຄົງຈະເຈັບແຄ້ນ ທີ່ພະມ້າ ຍົກກອງທັບ ມາ ຮຸກຮານ ດິນແດນ ເຖິງ ສາມເທື່ອແລ້ວ ຄົງຈະຍິນດີຮ່ວມສັມພັນທະໄມຕຣີກັບກຸງສີສັຕນາຄນະຫຸດ ເພື່ອເປັນກຳລັງຊ່ວຍກັນຕໍ່ຕ້ານພະມ້າຕໍ່ໄປ ຈຶ່ງໄດ້ແຕ່ງພຣະອາຊສານຊົງຂໍ ພຣະເທບກະສັຕຣີ ອັນເປັນ ຣາຊທິດາຂອງສົມເດັດພຣະມະຫາຈັກພັດພຣະເຈົ້າຊ້າງເຜືອກ ຊຶ່ງເກີດກັບສົມເດັດ ພຣະສຸຣິໂຍທັຍ ທັ້ງນີ້ ເພື່ອ ຈະຜູກ ສັມພັນ

ທະໄມຕຣີໃຫ້ເປັນ ຜືນ ແຜ່ນດິນ ບ້ານພີ່ ເມືອງນ້ອງ ອັນສນິດແໜ້ນເປັນສາຍເລືອດດຽວກັນ ເພື່ອຕໍ່ໄປພາຍໜ້າຈະໄດ້ຊ່ວຍກັນຕໍ່ສູ້ກັບພະມ້າ.

ເມື່ອ ພ.ສ. ໒໐໙໓ ຈຶ່ງໄດ້ແຕ່ງທູຕານຸທູດນຳພຣະຣາຊສານ ພ້ອມດ້ວຍ ເຄື່ອງມິ່ງຄຸນ ຣາຊບັນນາການໄປຖວາຍ ແດ່ ສົມເດັດ ພຣະມະຫາຈັກພັດຣາຊາທິຣາຊພຣະເຈົ້າຊ້າງເຜືອກແຫ່ງກຸງສີອະຍຸທະຍາ ໃນພຣະຣາຊສານນັ້ນມີໃຈຄວາມດັ່ງນີ້ -

(ຈາກພຣະຣາຊພົງສາວະດານສະບັບພຣະຣາຊຫັດຖເລຂາເຫລັ້ມ ໑ ໜ້າ ໑໗໓ ເຣື່ອງພຣະເຈົ້າໄຊເຊດຖາທິຣາຊທູນຂໍພຣະເທບກະສັຕຣີ)

" ລຸສັກຣາຊ ໙໑໒ ປີຈໍ ໂທສົກ (ກົງກັບ ພ.ສ. ໒໐໙໓) ພຣະເຈົ້າກຸງສີສັດຕະນາຄນະຫຸດຊາບວ່າພຣະຣາຊບຸດຕີ ພຣະສຸຣິໂຍທັຍ ຊຶ່ງຂາດຄໍຊ້າງ ແກ່ ກຸງຫົງສາວະດີນັ້ນ ຈຳເຣີນໄວວັທນາຂຶ້ນແລ້ວ ພຣະອົງກໍ່ແຕ່ງທູຕານຸທູດ ຈຳທູນ ພຣະຣາຊສານ ຄຸມເຄື່ອງມິ່ງຄຸນຣາຊບັນນາການ ມາ ຖວາຍ ແກ່ ສົມເດັດ ພຣະມະຫາ ຈັກພັດຣາຊາທິຣາຊພຣະເຈົ້າຊ້າງເຜືອກ ໃນລັກສນະພຣະ

ຣາຊສານນັ້ນວ່າ "ຂ້າພຣະອົງຜູ້ຜ່ານພິພົບກຸງສີສັຕນາຄນະຫຸດ ຂໍກາບອະພິວາທວັທນາມາຍັງສົມເດັດພຣະປິຕຸລາທິຣາຊາທິຣາຊ ຜູ້ຜ່ານພິພົບກຸງເທບທະວາຣາວະດີ ສີອະຍຸທະຍາມະຫາດິລົກ ນົພຣັຕນະຣາຊທານີບຸຣີຣົມ ອຸດົມ ພຣະຣາຊນະທາສະຖານມະໂຫລານອັນບົງ ເປັນນິງມະກຸດດ້ວຍສັດສເວດກຸນຊອນຊາດຕົວປະເສີດ ສີເນື້ອງ. ຂ້າພຣະອົງ ບັງ ບໍ່ມີ ເອກອັຄຣາຊກັລຍານີ ທີ່ຈະ ສືບສຸຣິວົງ ໃນກຸງສີ ສັຕນາ ຄນະ ຫຸດ ຕໍ່ໄປ ຂ້າພຣະອົງ ຂໍ ພຣະຣາຊທານ ພຣະຣາຊ ທິດາ ອັນຊົງພຣະນາມວ່າ ພຣະເທບກະສັຕຣີໄປເປັນປິ່ນສຸຣາງຄະນິກອນ ກັລຍາ ໃນມະຫາ ນະຄະເຣສ ປາຈິນທິສ ເປັນທາງ ຣາຊສັມພັນ ທະໄມຕຣີ ສຸວັນນະປັດຖະພີ ດຽວກັນຊົ່ວກັລປາວະສານ

ສົມເດັດ ພຣະມະຫາ ຈັກພັດ ຣາຊາ ທິຣາຊພຣະເຈົ້າຊ້າງເຜືອກ ຊາບ ຄວາມ ໃນ ລັກສນະ ພຣະຣາຊສານ ກໍໃຫ້ປະຊຸມ ທ້າວພຣະຍາມຸຂມົນຕຣີ ປຶກສາວ່າ ກຸງເທບພຣະມະຫາ ນະຄອນ ກັບກຸງທີງສາວະດີ ກໍເປັນອຣິຊອກຊ້າຄືກັບກັບວັນນະໂຣກອັນເກີດເປັນຢູ່ໃນອົກ ຈະຮັກສາໃຫ້ຫາຍໄດ້ໂດຍຍາກ ແລະພຣະເຈົ້າກຸງສີສັຕນາຄນະ

ທຸຕກໍເປັນ ກຸງ ກະສັດ ອັນໃຫບ່ໄດ້ມີພຣະຣາຊສານ ນອບ ນ້ອມ ມາແລ້ວ ຄວນຈະຊົງ ພຣະກະຣຸນາປະທານໃຫ້ຈະ ໄດ້ເປັນທາງພຣະຣາຊສັມພັນທະໄມຕຣີ ຫາກມີຣາຊ ການງານ ສົງຄາມ ໃນພາຍໜ້າຈະໄດ້ເປັນມະຫາກຳລັງ ບຸທະບາການ ສົມເດັດພຣະມະຫາຈັກພັດອາຊາທິຣາຊ ພຣະເຈົ້າປູ່ຫົວ ກໍຊົງ ເຫັນຊອບ ນຳ ດ່ວຣລໃຫ້ຕອບ ພຣະຣາຊສານຂຶ້ນໄປວ່າ "ຊຶ່ງສົມເດັດພຣະເຈົ້າກຸງສີ ສັຕນາຄນະຫຸຕ ມີ ພຣະໄທ ຈະ ຣ່ວມ ພຣະຣາຊໂລຫິດ ເປັນມະຫາສັມພັນທະມິຕໄມຕຣີນັ້ນ ສົມເດັດພຣະ ມະຫາ ຈັກພັດ ຣາຊາ ທິຣາຊ ພຣະເຈົ້າ ຊ້າງເຜືອກ ອະນຸ ບາຕແລ້ວໃຫ້ແຕ່ງມາຣັບເຖີດ."

ຝ່າຍ ທູຕາ ນຸທູຕ ຣັບ ພຣະຣາຊ ສານ ແລ້ວ ການ ຖວາຍ ບັງຄົມ ລາຕ່າວ ໄປຍັງກຸງສີສັຕນາຄນະຫຸຕຖວາຍ ພຣະ ຣາຊສານ ການທູນ ປະພຶດເຫດ ທຸກປະການ ພຣະ ເຈົ້າ ກຸງສີ ສັຕນາ ຄນະຫຸຕຊົງຊາບ ດັ່ງນັ້ນ ດີພຣະໄທນັກ ກໍຈຶ່ງແຕ່ງທູຕານຸທູຕກັບໄພ່ພົນໄປ ໕໐໐, ທ້າວພຣະຍາ, ນາງເຖົ້ານາງແກ່, ລົງມາຣັບ ຂນະເມື່ອທູຕລົງມາເຖິງ ນັ້ນ ພໍດີສົມເດັດພຣະເຈົ້າລູກເທີ ພຣະເທບກະສັຕຣີ ຊົງປະຊວນໜັກ ສົມເດັດພຣະມະຫາຈັກພັດພຣະເຈົ້າ

ຊ້າງເຜືອກບໍ່ຮູ້ວ່າຈະຜ່ອນຜັນແນວໃດເລີຍ ຈຶງຊົງຄິດ
ວ່າເຖິງຈະມີຣາຊສານຕອບໄປໂດຍຊື່ສັດ ພຣະເຈົ້າ
ກຸງສີສັດນາຄນະຫຸດກໍ່ຄົງບໍ່ເຊື່ອ ແລະຄົງຈະຫາວ່າ
ເຮົາເວົ້າເປັນຄວາມສອງ ຈະພາໃຫ້ໝິນໝອງຄອງ
ພຣະຣາຊໄມຕຣີໄປ ໄດ້ອອກວາຈາແລ້ວຈະໃຫ້ເສັຽຄ່າ
ນັ້ນບໍ່ສົມຄວນ ພຣະອົງຈຶງຊົງບົກພຣະແກ້ວຟ້າຣາຊ
ທິດາໃຫ້ໄປແທນອົງພຣະເທບກະສັຕຣີ ພຣະຣາຊ
ທານ ເຄື່ອງ ຣາຊູປະໂພກ ສໍາລັບ ອັຄ ມະເຫສີ ກຸງ ກະສັຕ
ພ້ອມດ້ວຍສນົມສາວໃຊ້, ທາສກັມກອນ ໕໐໐, ບົງ ໕໐໐
ໄປນໍາດ້ວຍ ທູຕການຖວາຍບັງຄົມລາເຊີນສເດັດພຣະ
ແກ້ວຟ້າຣາຊບຸຕຣີຂຶ້ນໄປຖວາຍ ຝ່າຍພຣະເຈົ້າກຸງສີ
ສັດນາຄນະຫຸດແຈ້ງວ່າ ບໍ່ແມ່ນອົງພຣະເທບກະສັຕຣີ
ກໍເສັຽພຣະໄທຫລາຍ ຕຣັສວ່າ " ເດີມເຮົາຈໍານົງຂໍ
ພຣະເທບກະສັຕຣີ ຊຶ່ງເປັນພຣະຣາຊທິດາຂອງພຣະ
ສຸຣິໂຍທັຍອັນເສັຽພຣະຊົນ ແທນ ພຣະຣາຊ ສາມີ ເທົ່າ ກໍ
ຊ້າງເປັນຕະກູນວົງກະສັຕອັນປະເສີດ ຕຣັສແລ້ວຊົງ
ແຕ່ງໃຫ້ພຣະຍາແສນ, ພຣະຍານະຄອນ, ພຣະຍາ
ທິບມົນຕຣີ ເປັນ ທູຕານຸທູຕ ໃຫ້ ນາສົ່ງ ພຣະ ແກ້ວ ຣາຊ
ບຸຕຣີກືນບັງນະຄອນສີອະບຸທະຍາ ແລະມີພຣະຣາຊ

ສານເຄື່ອງຣາຊບັນນາການ ມາຖວາຍສົມເດັດພຣະ
ມະຫາຈັກພັດພຣະເຈົ້າຊ້າງເຜືອກນໍາ ໃນພຣະຣາຊ
ສານນັ້ນວ່າ "ເດີມພຣະອົງປະສາທພຣະເທບກະສັຕຣີ
ໃຫ້ກິຕຕິສັບນີ້ ຮູ້ໄປທົ່ວ ນິຄົມ ຊົນນະບົດ ຂອບຂັນທະສີມາ
ກຸງສີສັຕນາຄນະຫຸຕ ໝົດແລ້ວ ບັດນີ້ ພຣະອົງສົ່ງ
ພຣະແກ້ວຟ້າຣາຊບຸຕຣີປ່ຽນໃຫ້ແທນນັ້ນ ເຖິງມາດ
ວ່າ ພຣະແກ້ວຟ້າ ຣາຊບຸຕຣີ ຈະມີ ສີຣີ ລັກສນະ ໂສພາກ
ບໍງກວ່າພຣະເທບກະສັຕຣີຮ້ອຍທໍ່ພັນທະວີກໍດີ ບັງໄປ
ລ້າງ ກິຕິສັບ ພຣະເທບກະສັຕຣີເສັຽໄດ້ ກໍ່ຈະເປັນທີ່
ອັປປົດທົ່ວຊົ່ວກັລປາວະສານ ຂໍພຣະອົງຂໍສົ່ງພຣະ
ແກ້ວຟ້າຣາຊທິດາຄືນ ຈົ່ງພຣະຣາຊທານພຣະເທບ
ກະສັຕຣີ ແກ່ຂ້າ ພຣະອົງດັ່ງມີພຣະຣາຊສານ ອະນຸຍາຕ
ມາແຕ່ກ່ອນນັ້ນ" ສົມເດັດພຣະມະຫາຈັກພັດພຣະເຈົ້າ
ຊ້າງເຜືອກ ແຈ້ງ ໃນລາຍ ພຣະຣາຊ ສານ ແລະ ສົ່ງ ພຣະ
ແກ້ວຟ້າ ພຣະຣາຊ ທິດາ ຄືນມາ ດັ່ງນັ້ນ ກໍ່ລະອາຍ ພຣະ
ໄທນັກ ພໍ່ພຣະ ເທບ ກະສັຕຣີ ຫາຍ ປະຊວນ ພຣະ
ໂຣກ ຈຶ່ງຕົບແຕ່ງການທີ່ຈະສົ່ງພຣະຣາຊທິດາແລະ
ເຖົ້າແກ່ກ່ຳນັນສາວໃຊ້, ທາສຊາຍ ໕໐໐, ທາສຍິງ ໕໐໐

ຄັນເຖິງເດືອນຫ້າສັກຣາຊ. ໗໑ປີ (ພ.ສ. ໒໐໗໔) ປີກຸນຕຣີສົກ ຈຶ່ງມີພຣະຣາຊໂອງການດຳຣັສໃຫ້ພຣະບາແມນຄຸມໄພ່ພັນໜຶ່ງໄປສົ່ງ ພຣະບາແມນກັບຫູຕາ ບຸຫູດ ກໍເຊີນສເດັດພຣະເທບກະສັຕຣີຂຶ້ນຊົງສິວິກາການບາງບຸນາດໄປໂດຍສະຖົລມາຄສະມໍສ່ (ຄືໄປດ້ວຍບາງທາງບົກ) ຝ່າຍພຣະມະຫາທັມຣາຊາແຈ້ງວ່າ ພຣະມະຫາ ຈັກພັດ ພຣະເຈົ້າຊ້າງເຜືອກ ຈະສົ່ງ ພຣະເທບກະສັຕຣີຂຶ້ນໄປບັງກຸງສີສັດນາຄນະຫຸດ ກໍໃຫ້ມ້າໄວຖືໜັງສືໄປຖວາຍສົມເດັດພຣະເຈົ້າຫົງສາວະດີ ພຣະເຈົ້າ ຫົງສາວະດີຊາບ ກໍແຕ່ງໃຫ້ພຣະດະບະ ເປັນ ນາຍກອງ, ຜ້າເສືອດ່າງ, ມັງກອກໜໍ້, ຄຸມພົນໝື່ນໜຶ່ງລ່ວງໜ້າມາຕັ້ງສະກັດຄອຍຢູ່ຕຳບົນມະເຣິງ ບອກດ່ານເພັຊບູນ ອອກສະກັດຕີຊາວກຸງສີ ສັດນາຄນະຫຸດນັ້ນແຕກກະຈາຍໄປ ໄດ້ພຣະເທບກະສັຕຣີໄປຖວາຍພຣະເຈົ້າຫົງສາວະດີ ຝ່າຍພຣະບາລາວຊຶ່ງມາຣັບພຣະເທບກະສັຕຣີ ກໍເອົາຄະດີທັງປວງໄປກາບທູນພຣະເຈົ້າກຸງສີ ສັດນາຄນະຫຸດ ທຸກປະການ ພຣະເຈົ້າ ກຸງສີສັດນາຄນະຫຸດແຈ້ງເຫດກໍຊົງພິໂຣດວ່າ ຊຶ່ງພຣະເຈົ້າຫົງສາວະດີ ແຕ່ງຣີ້ ພົນ ມາສະກັດລັກຊິງ ເອົາພຣະເທບ

ກະສັຕຣີໄປທັງນີ້ ກໍຍ້ອນ ເມືອງ ພິສນຸໂລກ ເປັນ ດັ່ງເຫດ ຈໍາຈະຕ້ອງແກ້ແຄ້ນໃຫ້ເຖິງຂນາດ ພຣະອົງຈຶ່ງໃຫ້ ບໍາຣຸງ ຊ້າງມ້າ ຣີພົນ ຈະ ຍົກໄປ ເອົາ ເມືອງ ພິສນຸໂລກ ຝ່າຍ ສົມເດັດ ພຣະມະຫາ ຈັກພັດ ພຣະເຈົ້າ ຊ້າງເຜືອກ ແຈ້ງກໍຕຣັສຫ້າມ ພຣະເຈົ້າກຸງສີສັດຕນາຄນະຫຸດກໍງົດ ໂດຍພຣະຣາຊໂອງການບໍ່ໄດ້ຍົກໄປ.

໙. <u>ຍົກກອງທັບໄປຕີເມືອງພິສນຸໂລກ</u> (ພ.ສ. ໒໐໙໙)

ການທີ່ພຣະເທບກະສັຕຣີຕ້ອງຕົກໄປຢູ່ໃນປະເທດ ພະມ້າ ເປັນເຫດໃຫ້ສົມເດັດພຣະມະຫາຈັກພັດພຣະ ເຈົ້າຊ້າງເຜືອກເສັຽພຣະໄທ ແລະໄດ້ສລະຣາຊສົມບັດ ໃຫ້ແກ່ພຣະມະຫິນທຣາທິຣາຊ ຣາຊໂອຣົດ ພຣະອົງ ອອກ ຊົງ ຜນວດ ໃນ ພຣະພຸທສາສນາ ຝ່າຍສົມເດັດ ພຣະມະຫິນທຣາ ທິຣາຊ ຕ້ອງການ ກໍາຈັດພຣະມະຫາ ທັມຣາຊາຈຶ່ງຫັນໄປຝັກໃຝ່ນໍາພະມ້າ ຂນະນັ້ນກຸງສີ ອະຍຸທຍາເກີດແຕກກັນອອກເປັນສອງພວກຄື - ສົມເດັດ ພຣະ ມະຫິນທຣາ ທິຣາຊ ແຫ່ງ ກຸງສີ ອະຍຸທຍາ ພວກ ໜຶ່ງ, ພຣະມະຫາທັມຣາຊາແຫ່ງເມືອງພິສນຸໂລກ ຊຶ່ງເປັນຝ່າຍພະມ້າອີກພວກໜຶ່ງ ສົມເດັດພຣະມະຫິນ

ທຣາທິຣາຊ ຈຶ່ງໄດ້ ບັດແບະ ກັບສົມເດັດພຣະເຈົ້າໄຊເຊດ ຖາທິຣາຊ ໃຫ້ຍົກ ກອງທັບ ໄປຕີ ເມືອງ ພິສນຸໂລກ ເພື່ອ ກ່າຈັດ ພຣະ ມະຫາ ທັມຣາຊາ ສ່ວນ ສົມເດັດ ພຣະ ມະຫິນທຣາທິຣາຊ ຈະທຳທີ ຍົກ ກອງທັບໄປຊ່ວຍ ແລ້ວ ຍຶດເອົາເມືອງພິສນຸໂລກເສັຽ ຈຶ່ງຈັດໃຫ້ພຣະບາສີຫະ ຣາຊເດໂຊ ແລະພຣະບາທ້າຍນ້ຳຂຶ້ນໄປຊ່ວຍ ແຕ່ສັ່ງ ເປັນ ຄວາມລັບ ໄປວ່າ ຖ້າທັບກຸງສີສັຕນາຄນະຫຸຕ ລ້ອມ ເມືອງພິສນຸໂລກ ເມື່ອໃດ ກໍໃຫ້ ກຸມຕົວ ພຣະມະຫາ ທັມຣາຊາ ໃຫ້ຈົງໄດ້ ຝ່າຍພຣະບາ ສີຫະຣາຊເດໂຊ ໄປເຖິງເມືອງພິສນຸໂລກບໍ່ໄດ້ໄວ້ຄວາມຣະຫັດ ກັບນຳໄປ ບອກແກ່ພຣະມະຫາທັມຣາຊາທຸກປະການ ພຣະ ມະຫາທັມຣາຊາ ຈຶ່ງໃຫ້ອຳມາດນຳຂ່າວນີ້ໄປແຈ້ງ ແກ່ພຣະເຈົ້າກຸງຫົງສາວະດີຊາບ.

ຝ່າຍພຣະເຈົ້າກຸງສີສັຕນາຄນະຫຸຕກໍຍົກກອງທັບ ຊ້າງ, ມ້າ, ຣີພົນປະມານ ໒໐ ແສນ (ຕາມພົງສາວະ ດານໄທວ່າ ໒໐ ແສນ ຄວາມຈິງໜ້າຈະເປັນ ໒໐ ໝື່ນ) ມາທາງ ເມືອງນະຄອນໄທ ມາບັງ ເມືອງພິສນຸໂລກ ພຣະ ມະຫາ ທັມຣາຊາ ກໍກວາດຄົວ ເຂົ້າໄປ ໄວ້ໃນເມືອງ ພິສນຸໂລກ ແລະກຽມປ້ອງກັນເມືອງໄວ້ຢ່າງສາມາດ

ສົມເດັດພຣະເຈົ້າກຸງສີສັດຕນາຄນະຫຸດ ບົກມາເຖິງເມືອງພິສນຸໂລກເມື່ອເດືອນບີ ແຣມ ໑໒ ຄ່ຳ ປີສລູສົກ (ພ.ສ. ໒໐໙໗) ກໍຕັ້ງພັບພາໄຊປູ່ຕຳບົນໂພລຽງ ປູ່ຊີປະຕູສວັນທາງອອກໄປ ໕໐ ເສັ້ນ ທັບພຣະບາແສນສຸຣິນຄ່ວງຟ້າຕັ້ງປູ່ຕຳບົນເຕົາໄຫ້ ທັບພຣະບາມີໄຟປູ່ຕຳບົນວັດເຂົາພະຣາມ ທັບພຣະບາບະຄອນຕັ້ງຕຳບົນສະແກ້ວ ທັບພຣະບາມືເຫລັກຕັ້ງຕຳບົນທົ່ງສະແກລ້ອມເມືອງພິສນຸໂລກໄວ້.

ຝ່າຍສົມເດັດພຣະມະຫິນທຣາທິຣາຊ ຮູ້ກຳໜົດວ່າທັບ ກຸງສີສັດຕນາຄນະຫຸດ ບົກມາບັງ ເມືອງພິສນຸໂລກແລ້ວ ຈຶ່ງກຣີທາພົນຂຶ້ນໄປທາງຊົລມາຄ (ທາງເຮືອ) ຕັ້ງທັບຫລວງທີ່ຕຳບົນພົງ ພຣະບາຣາມແລະພຣະບາຈັກຣີ ເປັນ ກອງໜ້າ ຂຶ້ນໄປ ຕັ້ງ ຕຳບົນ ວັດ ຈຸລາມະນີທັບເຮືອຈອດແຕ່ວັດຈຸລາມະນີ ທັ່ງສອງຝັ່ງແມ່ນ້ຳແໜ້ນລົງໄປຮອດທັບຫລວງທີ່ປາກນ້ຳພົງ ແລ້ວບອກຂຶ້ນໄປວ່າ ຈະຍົກ ເຂົ້າໄປຊ່ວຍ ປ້ອງກັນ ເມືອງ ພິສນຸໂລກພຣະມະຫາ ທັມຣາຊາ ແຈ້ງ ແຜນການ ປູ່ແລ້ວ ກໍ ແຕ່ງຄົນອອກມາຫ້າມ ບໍ່ໃຫ້ກອງທັບສົມເດັດພຣະມະຫິນທຣາທິຊາຊເຂົ້າໄປໃນເມືອງ

ຝ່າຍສົມເດັດພຣະເຈົ້າໄຊເຊດຖາທິຣາຊ ພຣະເຈົ້າກຸງສີ ສັຕນາ ຄນະຫຸຕ ຊາບວ່າ ສົມເດັດ ພຣະມະຫິນທຣາ ທິຣາຊ ຍົກ ກອງທັບ ເຮືອ ຂຶ້ນມາ ຕາມ ກຳໜົດ ກໍດີ ພຣະໄທ ຕຣັສໃຫ້ຍົກພົນເຂົ້າປົນເມືອງແລະແຕ່ງທະຫານໃສ່ເສື້ອເຫລືອງສາມພັນໝຸບພົນເຂົ້າໄປ ເຈົ້າໜ້າທີ່ ເຊີງເທີນ ກໍ່ສາດ ປືນໄຟ ແລະ ແຫລມ ຫລາວ ຖືກຊາວລ້ານຊ້າງລົ້ມຕາຍຫລວງຫລາຍ ພຣະເຈົ້າກຸງສີສັຕນາຄນະຫຸຕ ເຫັນດັງນັ້ນກໍສະເດັດຍົກພົນເຂົ້າປືນຊ້າງພຣະ ທີ່ນັ່ງ ແຜງວິຫານ ປູ່ແຖບ ຣິມຄູເມືອງ ໃຫ້ທະຫານເຣັດ ຫູບ ຫູ ບັງຕົວ ຂ້າມ ຄູ ເຂົ້າໄປ ຂຸດ ເຖິງ ເຊີງ ກຳແພງເມືອງ ຊາວພິສນຸໂລກຜູ້ຮັກສາກຳແພງເມືອງພຸ້ງອາວຸດລົງມາກໍບໍ່ຖືກ ພຣະມະຫາທັມຣາຊາສັ່ງໃຫ້ຂຸນສີເອົາ ພົນ ອາສາ ຫ້າຮ້ອຍ ອອກ ທະລວງ ຟັນ ພົນ ລາວ ກໍພ່າຍໄປ ພຣະເຈົ້າກຸງສີສັຕນາຄນະຫຸຕກໍຖອຍໄປບັງຄ່າຍຫລວງ ແລະບັນຊາໃຫ້ນາຍທັບນາຍກອງຕັ້ງລ້ອມປະຊິດເມືອງເຂົ້າໄປອີກ.

ພະມ້າຍົກກອງທັບມາຊ່ວຍເມືອງພິສນຸໂລກ

ຝ່າຍພຣະເຈົ້າກຸງຫົງສາວະດີແຈ້ງຂ່າວວ່າເມືອງພິສນຸໂລກເກີດເສິກ ກໍໃຊ້ໃຫ້ພຣະຍາພຸກາມ, ພຣະ-

ບາເສືອຫານ, ເປັນນາຍກອງ ນ້າພັນໜຶ່ງ ພົນໝື່ນໜຶ່ງ ຣີບຍົກມາຊ່ວຍປ້ອງກັນເມືອງພິສນຸໂລກ ພຣະຍາພຸກາມ ແລະ ພຣະຍາ ເສືອຫານ ຍົກມາ ຮອດ ເມືອງ ພິສນຸໂລກ ເຫັນທັບ ກຸງສີສັຕນາຄ ລ້ອມເມືອງ ພິສນຸໂລກ ແລ້ວ ກໍຍົກທັບ ເຂົ້າຕີ ຫັກ ທາງດ້ານພຣະຍາມືເຫລັກທີ່ຕຳບົນບາງສະແກ ທັບພຣະຍາມືເຫລັກຕ້ານບໍ່ໄດ້ກໍພ່າຍແຕກອອກໄປ ທັບພຣະຍາເສືອຫານແລະພຣະຍາພຸກາມກໍເຂົ້າໄປໃນເມືອງພິສນຸໂລກໄດ້.

ທາງຝ່າຍກອງທັບ ສົມເດັດ ພຣະມະຫິນ ທຣາ ທິຣາຊຖືກພຣະມະຫາທັມຣາຊາ ເອົາແພໄຟເຜົາ ກອງທັບເຮືອຈຳເປັນຕ້ອງຖອຍ ພໍດີຊາບຂ່າວວ່າພະມ້າຍົກກອງທັບ ມາຊ່ວຍ ພຣະມະຫາທັມ ຣາຊາ ແລ້ວ ກໍສັ່ງໃຫ້ເລີກທັບກັບຄືນຍັງກຸງສີອະຍຸທະຍາ

<u>ພຣະເຈົ້າໄຊເຊດຖາທິຣາຊຖອຍທັບ</u>

ຝ່າຍສົມເດັດ ພຣະເຈົ້າ ກຸງສີສັຕນາຄນະຫຸດ ເຫັນວ່າ ຈະຕີເອົາ ເມືອງພິສນຸໂລກ ບໍ່ໄດ້ເພາະທັບພະມ້າເຂົ້າມາຊ່ວຍ ແລະກອງທັບສົມເດັດພຣະມະຫິນທຣາທິຣາຊກໍຖອຍໄປແລ້ວ ຈຶ່ງສັ່ງໃຫ້ຖອຍທັບກັບໄປຍັງກຸງສີ

24/VII
ຫ້າມຈຳໜ່າຍ

ສັດບາຄນະຫຸດໂດຍທາງບ້ານນຸງດອນຊຸມພູ ຝ່າຍພຣະຍາພຸການ ແລະ ພຣະຍາເສືອຫານ ຫຼູບຂໍ ບົກ ກອງທະຫານຕິດຕາມດີພຣະເຈົ້າກຸງສີສັດບາຄນະຫຸດ ພຣະມະຫາທັມຣາຊາຕຣັສຫ້າມກໍບໍ່ຟັງ ບົກກອງທັບອອກຕິດຕາມກອງທັບລ້ານຊ້າງໄປ.

ທາງກອງທັບລ້ານຊ້າງ ເມື່ອຖອຍທັບໄປນັ້ນໃຫ້ພຣະຍາແສນສຸຣິນຄ່ວງຟ້າ, ພຣະຍານະຄອນ, ພຣະຍານີໄຟ, ທັງສາມທັບຢູ່ຮັ້ງຫລັງ. ຄັນຮອດຕໍາບົນວາຣີຊິງທາງນັ້ນແຄບ ຈຶ່ງແຕ່ງທະຫານຊຸ້ມໄວ້ສອງຂ້າງທາງແລ້ວຖອຍມາຕັ້ງພົນ ຢູ່ປາຍທາງຫ່າງປະມານ ໒໐ ເສັ້ນ ຝ່າຍ ພຣະຍາ ພຸການ ແລະ ພຣະຍາ ເສືອຫານ ໄປ ຮອດຕໍາບົນວາຣີ ບໍ່ຮູ້ກົນອຸບາຍ ເຫັນແຕ່ມ້າຂອງກຸງສີສັດບາຄນະຫຸດກໍຕາມເຂົ້າໄປ ທັບກຸງສີສັດບາຄນະຫຸດທີ່ຊຸ້ມຢູ່ກໍອອກໂຈມຕີຂນາບ ໄດ້ຕໍ່ສູ້ກັນຮອດອາວຸດສັ້ນທັບພຣະຍາພຸການ ແລະພຣະຍາເສືອຫານກໍແຕກທັບລ້ານຊ້າງໄລ່ຟັນແທງທະຫານທັງສາວະດີລົ້ມຕາຍນາກນາຍຫລວງຫລາຍ ນາຍມ້າຜູ້ດີ ໆ ກໍລົ້ມຕາຍນາກນາຍຫລວງຫລາຍຄົນ ທັບພະມ້າເສັຽມ້າ ແລະ

ເຄື່ອງ ສາດຣາອາວຸດ ເປັນ ອັນມາກ ຈຶ່ງ ພ່າຍກັບ ຄືນໄປ ເມືອງພິສນຸໂລກ.

ບັນທຶກ ການຜູກສັມພັນທະໄມຕຣີກັບກຸງສີອະຍຸທະຍາ ພ.ສ. ໒໐໙໓ ພ.ສ. ໒໐໙໔ ເຊີນສເດັດພຣະເທບກະສັຕຣີມາກຸງລ້ານຊ້າງ ແລະ ພ.ສ. ໒໐໙໗ ໄດ້ຍົກກອງທັບໄປຕີເມືອງພິສນຸໂລກນັ້ນທີ່ຖືກຕ້ອງ ແລ້ວແມ່ນ ພ.ສ. ໒໑໐໕, ໒໑໐໗ ແລະ ພ.ສ. ໒໑໐໘ ເພາະພຣະ ຣາຊພົງສາວະດານ ໄທ ກໍໄດ້ ຣັບຣອງແລ້ວ ວ່າເວລາ ຄາດເຄື່ອນ ໄປຮອດ ສິບສອງປີ ແຕ່ທີ່ບໍ່ໄດ້ແກ້ສັກຣາຊໃນພຣະຣາຊສານນັ້ນ ກໍເພື່ອໃຫ້ຫລັກຖານໃນພຣະຣາຊສານຍັງຢູ່ຄືເກົ່າ

ສະນັ້ນ ສັກຣາຊ ທີ່ຖືກຕ້ອງ ໃນການຜູກສັມພັນທະໄມຕຣີກັບກຸງສີອະຍຸທະຍາ ຍົກກອງທັບ ໄປຕີເມືອງພິສນຸໂລກ ແລະພະມ້າຍົກກອງທັບມາຕີກຸງສີອະຍຸທະຍານັ້ນ ຖ້າຈັກໃຫ້ຖືກ ແລ້ວຕ້ອງເອົາ ໑໒ ປີບວກ ເຂົ້າໄປອີກ ເຊັ່ນວ່າພະມ້າຍົກກອງທັບມາຕີກຸງສີອະຍຸທະຍາ ພ.ສ. ໒໐໘໕ ເທື່ອທີ ໑ ພ.ສ. ໒໐໙໘ ເທື່ອທີສອງ ພ.ສ. ໒໑໐໓ ເທື່ອທີສາມ (ສົງຄາມຊ້າງເຜືອກ) ພ.ສ. ໒໑໑໐ ເທື່ອທີ ໔ (ກຸງແຕກ) ແລະພຣະເຈົ້າໄຊເຊດຖາ

ມະຫາຣາຊຍົກກອງທັບ ໄປຕີເມືອງພິສນຸໂລກ ນັ້ນ ແມ່ນ ພ.ສ. ໒໑໐໕ ຈຶ່ງຂໍໃຫ້ເຂົ້າໃຈຕາມນີ້ດ້ວຍ.

໔. ຍົກວຽງຈັນຂຶ້ນເປັນເມືອງຫລວງຂອງກຸງລ້ານຊ້າງ ພ.ສ. ໒໑໐໓

ສົມເດັດພຣະເຈົ້າໄຊເຊດຖາທິຣາຊຊົງດໍາຣິວ່າກຸງສີສັຕນາຄນະຫຸຕ ລ້ານຊ້າງ ຮົ່ມຂາວ (ຫລວງພຣະບາງ) ນັ້ນ ບໍ່ເໝາະດ້ວຍຢູ່ໃກ້ພະມ້າຊຶ່ງໄດ້ເມືອງຊຽງໃໝ່ໄວ້ເປັນກໍາລັງແລ້ວອາດ ຈະຍົກກອງທັບມາຮຸກຮານເອົາຍາມໃດກໍ່ໄດ້ ພຣະອົງຈຶ່ງໄດ້ສ້າງເມືອງວຽງຈັນຂຶ້ນເພື່ອໃຫ້ເປັນເມືອງຫລວງ ຂອງອານາຈັກລ້ານຊ້າງ ດ້ວຍຢູ່ຫ່າງໄກ ຈາກພະມ້າ ຢູ່ປະການໜຶ່ງ ແລະຢູ່ໃກ້ກຸງສີອະຍຸທະຍາ ຊຶ່ງເປັນ ຣາຊ ສັມພັນ ທະມິຕ ອີກປະການໜຶ່ງ ເມື່ອ ພ.ສ. ໒໑໐໓ ພຣະເຈົ້າໄຊເຊດຖາທິຣາຊຈຶ່ງແຕ່ງຕັ້ງອໍາມາດ ຢູ່ຮັກສາ ເມືອງຫລວງ ພຣະບາງ ແລ້ວພຣະອົງ ແລະເສນາ ອໍາມາດ ນ້ອຍໃຫຍ່ ຕລອດຈົນ ພຣະບໍຣົມວົງສານຸວົງກໍ່ສະເດັດມາປະທັບທີ່ພຣະຣາຊວັງໃໝ່ໃນນະຄອນວຽງຈັນ ໄດ້ອັນເຊີນພຣະແກ້ວມໍຣະກົຕມານໍາດ້ວຍ ສ່ວນພຣະບາງນັ້ນຍັງຄົງຢູ່ທີ່ຫລວງພຣະບາງຕາມເດີມ ຫລວງພຣະບາງຈຶ່ງເປັນນະຄອນຫລວງເກົ່າ

ເອີ້ນວ່າ "ກຸງສີ ສັດບາ ຄນະຫຸດ ລ້ານຊ້າງ ຮົ່ມຂາວ ຫລວງພຣະບາງ" ນະຄອນ ວຽງຈັນ ຈຶ່ງເປັນ ເມືອງຫລວງຂອງອານາຈັກລ້ານຊ້າງແຕ່ບັດນັ້ນມາ ແລະ ມີຊື່ເອີ້ນວ່າ "ກຸງສີສັດບາຄນະຫຸດລ້ານຊ້າງຮົ່ມຂາວ ວຽງຈັນ"

ໃນການສ້າງນະຄອນວຽງຈັນເປັນເມືອງຫລວງນັ້ນ ໄດ້ເກນໄພ່ພ້າ ຮາສດອນ ຊ່ວຍ ກັນ ສ້າງ ກຳແພງ ເມືອງ ວຽງຈັນ ກໍ່ດິນຈີ່ສູງແຕ່ ໔ ແມດ ຮອດ ໖ ແມດ (ແປດສອກຮອດສິບສອງສອກ) ຮອບເມືອງມີເນີນດິນ ດ້ານທາງໃນແບ່ງອອກເປັນສາມຊັ້ນ ຊັ້ນນອກມີປ້ອມນ້ອຍໃຫຍ່ສູງຮອດແປດແມດ (ສີ່ວາ) ມີປະຕູໃຫຍ່ທາງເຂົ້າປູ່ສອງຂ້າງ ຄືປະຕູໃຫຍ່ທາງຕະວັນອອກ ສູ່ ທາດຫລວງປະຕູໜຶ່ງ ແລະທາງທິດຕະວັນຕົກກົງກັບທາງໄປຫລວງພຣະບາງດຽວນີ້ປະຕູໜຶ່ງ ກຳແພງເມືອງວຽງຈັນບັງເຫລືອ ມີຊາກ ມາຮອດ ພ.ສ. ໒໔໔ປີ.

ພາຍໃນກຳແພງເມືອງໄດ້ສ້າງພຣະຣາຊວັງສວຍງາມຫລາຍ ມີວັດນ້ອຍໃຫຍ່ຮອດ ໓໐ ວັດ ວັດທີ່ສຳຄັນໄດ້ແກ່ວັດກາງ ແລະວັດພຣະແກ້ວ. ວັດພຣະແກ້ວແມ່ນວັດ ທີ່ສົມເດັດ ພຣະເຈົ້າ ໄຊເຊດຖາໄດ້ອັນເຊີນພຣະ

ແກ້ວມໍຣະກົດໄປ ປະດິສຖານໄວ້ ຈຶ່ງເອີ້ນວ່າ "ວັດພຣະແກ້ວ"

໕. ທ່າເສິກກັບພະມ້າ

ສົມເດັດພຣະເຈົ້າໄຊເຊດຖາ ມະຫາຣາຊ ເປັນວິຣະກະສັດນັກຣົບທີ່ກ້າຫານສາມາດຂອງລາວ ຊຶ່ງປົກປ້ອງອານາຈັກລາວ ບໍ່ໃຫ້ຕົກໄປເປັນ ເມືອງຂຶ້ນຂອງພະມ້າໄດ້ ໃນ ສໄມແຜ່ນດິນຂອງ ພຣະອົງ ເຖິງ ແມ່ນວ່າ ລາງ ເທື່ອພະມ້າເຂົ້າຍຶດເອົານະຄອນວຽງຈັນໄດ້ກໍ່ຕາມ ພຣະອົງກໍ່ໄດ້ທຳການຕໍ່ຕ້ານທຳເສິກກັບພະມ້າຈົນຜາບແພ້ ໄດ້ໄຊຊນະແກ່ພະມ້າ ສາມາດບັງຄັບໃຫ້ພະມ້າຖອຍແຕກພ່າຍໄປຈາກອານາຈັກລ້ານຊ້າງໄດ້ ໃນການທີ່ພຣະອົງຊົງທຳເສິກຕໍ່ຕ້ານກັບພະມ້າ ມີຣາຍການລະອຽດດັ່ງຕໍ່ໄປນີ້ :

໑. ເສິກພະມ້າເທື່ອທຳອິດ ພ.ສ. ໒໑໐໗.

ເຫດທີ່ພະມ້າຍົກກອງທັບມາຕີກຸງລ້ານຊ້າງເທື່ອທຳອິດນັ້ນ ກໍ່ເນື່ອງຈາກເຫດວ່າ ອານາຈັກລ້ານນາ ນະຄອນຊຽງໃໝ່ຊຶ່ງເປັນເມືອງຂຶ້ນຂອງພະມ້ານັ້ນ ໄດ້ພ້ອມໃຈກັບແຂວງເມືອງຕໍ່ຕ້ານພະມ້າຂຶ້ນ ຝ່າຍທາງ

ກຸງຫົງສາວະດີ ໄດ້ຈັດ ກອງທັບ ມາປາບ ນະຄອນຊຽງໃໝ່ ກອງທັບນະຄອນຊຽງໃໝ່ສູ້ບໍ່ໄດ້ກໍແຕກພ່າຍໄປ ຝ່າຍ ພະຍາສາມລ້ານ ພຣະຍາຈ່າບ້ານ ໄດ້ພາກັນອົບ ພະຍົບປະຊາຣາສດອນໜີໄພພະມ້າ ມາເພິງພຣະເຈົ້າ ໄຊເຊດຖາທີ່ກຸງລ້ານຊ້າງ.

ຝ່າຍທາງກອງທັບພະມ້າຈອບຫາເຫດທີ່ຈະຍົກ ກອງທັບມາຕີກຸງສີສັຕນາຄນະຫຸຕຢູ່ແລ້ວ ພໍພຣະຍາ ສາມລ້ານ ພຣະຍາຈ່າບ້ານ ພາຣາສດອນຊຽງໃໝ່ໜີ ເຂົ້າມາໃນອານາຈັກລ້ານຊ້າງ ພຣະເຈົ້າກຸງຫົງສາວະດີ ກໍ ຈັດ ກອງທັບ ໃຫ້ ອິນເນ ແລະ ພຣະເຈົ້າ ກຸງອັງວະ ຍົກ ກອງທັບ ຕິດຕາມ ພຣະຍາ ທັງສອງ ເຂົ້າມາ ໃນດິນແດນ ລ້ານຊ້າງທັນທີ ອານາຈັກລ້ານຊ້າງຖືກພະມ້າຂ້າເສິກ ຈູ່ໂຈມຕີເອົາໂດຍບໍ່ຮູ້ຕົວ ພຣະມະຫາອຸປະຣາຊວໍຣະວັງໂສ ຊຶ່ງ ເປັນ ຜູ້ຮັກສາ ນະຄອນ ວຽງຈັນ ໄດ້ ຈັດ ກຳລັງ ທະຫານທີ່ມີຢູ່ອອກຕໍ່ຕ້ານ ແຕ່ກໍບໍ່ສາມາດສູ້ກອງທັບ ພະມ້າໄດ້ ພະມ້າກໍຈູ່ໂຈມເຂົ້າຍຶດເອົານະຄອນວຽງຈັນ ໄດ້ ແລະຈັບເອົາພຣະມະຫາອຸປະຣາຊ ແລະເຈົ້າຍິງ ຄຳໄຄ ຂະນິຖາ ພຣະນາງແທ່ນຄຳ ແລະສນົມກຳນັນ ທັງຫລາຍໄດ້ ແລ້ວຕ່າວຄືນໄປກຸງຫົງສາວະດີ.

ຝ່າຍສົມເດັດພຣະເຈົ້າໄຊເຊດຖາພ້ອມດ້ວຍ ພຣະຍາແສນສຸຣິນ ຄ່ວງຟ້າ ແລະ ກອງ ທະຫານ ທັງຫລາຍ ຈຶ່ງ ຍາມນັ້ນ ໄດ້ຍົກ ກອງທັບ ໄປ ຢູ່ ທີ່ ເມືອງ ໜອງຫານ ແລະເຣັດບຸນສລອງພຣະທາດເມືອງໜອງຫານປູ່ ເພື່ອຄອຍຖ້າຮັບສົມເດັດພຣະເທບກະສັຕຣີ ຈຶ່ງຈະສະເດັດມາແຕ່ກຸງສີອະຍຸທະຍານັ້ນ ຄັນຮູ້ຂ່າວເສິກພະມ້າຍົກມາຕີນະຄອນ ວຽງຈັນ ກໍຣີບຟ້າວ ຍົກກອງທັບຕ່າວຄືນມາຍັງກຸງລ້ານຊ້າງ ເມື່ອມາເຖິງເມືອງແລ້ວຊາບວ່າ ພະມ້າໄດ້ຖອຍຕ່າວໄປຈາກນະຄອນວຽງຈັນແລ້ວແຕ່ມື້ເດືອນ ໗ ອອກໃໝ່ ປີ ຄ່ຳ ພ້ອມທັງຈັບເອົາພຣະມະຫາອຸປະຣາຊວໍຣະວັງໂສ ເຈົ້າບົງຄຳໄຂ ເຈົ້ານາງແທ່ນຄຳ ແລະສົມບັດກໍາບັນໄປໝົດ.

ສົມເດັດ ພຣະເຈົ້າ ໄຊເຊດຖາທິຣາຊ ຈຶ່ງບັນຊາໃຫ້ພຣະຍາ ແສນສຸຣິນ ຄ່ວງຟ້າ ຍົກ ກອງທັບ ຕິດຕາມບ່າຕີພະມ້າໄປຈົນຮອດເມືອງນ່ານ ຈຶ່ງໄດ້ຖອຍຕ່າວຄືນມານະຄອນວຽງຈັນ ສົມເດັດພຣະເຈົ້າໄຊເຊດຖາທິຣາຊໄດ້ສະເດັດເຂົ້າໃນນະຄອນວຽງຈັນ ຈຶ່ງໄດ້ພິຈາຣະນາໂທດພວກເຈົ້າ ພຣະຍາ ທັງຫລາຍ ທີ່ປ່ອຍໃຫ້ພະມ້າຈັບເອົາພຣະມະຫາອຸປະຣາຊ ແລະພຣະບໍຣົມວົງສານຸວົງ ໄປໄດ້

ນັ້ນ ໂດຍສັ່ງໃຫ້ເອົາພຣະຍາຜ້າຂາວພັນນາໄປຂ້າເສັຽ ບັນທຶກຕອນນີ້ກອງວັນນະຄະດີໃຫ້ບັນທຶກວ່າ ການທຳສົງຄາມ ກັບພະມ້າ ເທື່ອທຳອິດນີ້ ແມ່ນ ພະມ້າ ຍົກມາຕີແຕ່ໃນປີໄປຂໍພຣະເທບກະສັຕຣີ.

໒. <u>ເສິກພະມ້າເທື່ອທີ່ສອງ ພ.ສ. ໒໑໑໐</u>

ເມື່ອພະມ້າໄດ້ອານາຈັກລ້ານນາ ນະຄອນຊຽງໃໝ່ ແລະ ໄດ້ ພຣະມະຫາ ທັມະຣາຊາ ເຈົ້າເມືອງ ພິສນຸໂລກ ຊຶ່ງເປັນຜູ້ກຳອຳນາດທາງຫົວເມືອງຝ່າຍເໜືອຂອງກຸງສີອະຍຸທະຍາໄວ້ໃນອຳນາດແລ້ວ ພຣະເຈົ້າກຸງຫົງສາວະດີ ກໍ່ຍົກກອງທັບ ໃຫຍ່ມາຕີ ກຸງສີ ອະຍຸທະຍາ ເມື່ອ ພ.ສ. ໒໑໑໐ ດັ່ງລາຍລະອຽດເຣື່ອງພະມ້າຕີກຸງສີອະຍຸທະຍາໃນຕອນທີ່໑ມີ ນັ້ນ ແລະພຣະເຈົ້າກຸງຫົງສາວະດີ ໄດ້ຈັດ ກອງ ທັບ ກອງໜຶ່ງ ຍົກມາ ຕີ ອານາຈັກ ລ້ານຊ້າງ ເພື່ອປ້ອງກັນ ບໍ່ໃຫ້ ກອງທັບ ລ້ານຊ້າງ ຍົກໄປ ຊ່ວຍ ກຸງສີອະຍຸທະຍາ.

ພຣະເຈົ້າໄຊເຊດຖາຮູ້ຂ່າວເສິກພະມ້າ ໄດ້ຈັດ ກອງທັບ ອອກໄປ ຄອຍຈູ່ໂຈມຕີ ພະມ້າຕາມເສັ້ນທາງທີ່ຍົກມາ ແລະກຽມປ້ອງກັນນະຄອນວຽງຈັນປ່າງເຂັ້ມແຂງ ກອງທັບ ລາວກໍ ອອກໂຈມຕີພະມ້າຕາມເສັ້ນທາງທີ່ຍົກ

ມາ ກອງທັບພະມ້າຖືກກອງຫລອນ (ກອງໂຈນ) ຂອງ
ລາວຈູ່ໂຈມທຳລາຍ ບໍ່ສາມາດເດີນທັບມາເຖິງນະຄອນ
ວຽງຈັນໄດ້ ກໍຕ່າວຄືນໄປໂຮມກອງທັບໃຫຍ່ທາງ
ກຸງສີອະຍຸທະຍາ.

ກອງທັບພະມ້າຍົກມາຕີກຸງລ້ານຊ້າງຄາວນີ້ ເປັນ
ແຕ່ພຽງປ້ອງກັນ ບໍ່ໃຫ້ກອງທັບລ້ານຊ້າງຍົກໄປຊ່ວຍ
ກຸງສີອະຍຸທະຍາ ເປັນທັບກະບາບເທົ່ານັ້ນ ບໍ່ໄດ້ມຸ້ງ
ຫວັງທີ່ຈະເຂົ້າຍຶດເອົາກຸງລ້ານຊ້າງແຕ່ຢ່າງໃດ ພໍ່ຖືກ
ກອງທະຫານລ້ານຊ້າງໂຈມຕີຕາມເສັ້ນທາງໄດ້ຮັບ
ຄວາມລຳບາກເສັຽຫາຍ ຈຶ່ງຕ່າວຄືນໄປຕັ້ງໝັ້ນໂຮມກັບ
ກັບກອງທັບໃຫຍ່ທາງກຸງສີອະຍຸທະຍາເສັຽ.

ງ. <u>ເສິກພະມ້າເທື່ອທີ່ສາມ</u> ພ.ສ. ໒໑໑໓

ເມື່ອພະມ້າຍົກກອງທັບໃຫຍ່ມາຕີກຸງສີອະຍຸທະ
ຍາແຕກ ແລະກຸງສີອະຍຸທະຍາຕົກໄປເປັນເມືອງຂຶ້ນ
ຂອງພະມ້າແລ້ວ ຍັງເຫລືອແຕ່ອານາຈັກລ້ານຊ້າງ
ເປັນອານາຈັກອິສລະຢູ່ ພຣະເຈົ້າກຸງຫົງສາວະດີ
ປາຖນາທີ່ຈະຕີເອົາກຸງລ້ານຊ້າງໃຫ້ມາຢູ່ໃຕ້ອຳນາດ
ຂອງພຣະອົງໃຫ້ຈົນໄດ້ ຈຶ່ງໄດ້ເກນກອງທັບໃຫຍ່ຍົກ

ນາຕີ ກຸງສີສັຕນາຄນະຫຸຕ ລ້ານຊ້າງ ເປັນກອງທັບມະຫາສານກອນດ້ວຍ.

໑. ທັບພະມ້າ, ມອນ, ໄທໃຫຍ່ຂອງພຣະເຈົ້າກຸງຫົງສາວະດີກອງໜຶ່ງ.

໒. ທັບລາວຊຽງໃໝ່ (ລາວບວນ) ຂອງພຣະເຈົ້າກຸງຊຽງໃໝ່ກອງໜຶ່ງ.

໓. ທັບໄທຂອງກຸງສີອະຍຸທະຍາກອງໜຶ່ງ. ກອງທັບໄທທີ່ຍົກມາຊ່ວຍພະມ້າຕີກຸງລ້ານຊ້າງຄາວນີ້ ພຣະມະຫາ ທັມ ຣາຊາ ເຈົ້າ ກຸງສີ ອະຍຸ ທະ ຍາ ໄດ້ ບັນຊາ ໃຫ້ຣາຊໂອຣົດ ຄືສົມເດັດພຣະນາເຣສວນເປັນແມ່ທັບຄຸມກອງທັບໄທມາ ຕາມ ປວັດສາດໄທເວົ້າວ່າ ສົມເດັດພຣະນະເຣ ສວນ ຍົກກອງ ທັບ ໄປ ຮອດ ເມືອງ ໜອງບົວລຳພູ ຊົງປະຊວນເປັນໄຂ້ໝາກສຸກໃຫຍ່ (ຝີດາດ) ຈຶ່ງໄດ້ຕ່າວຄືນກຸງສອະຍຸທະຍາ.

ຝ່າຍ ສົມເດັດ ພຣະເຈົ້າ ໄຊເຊດຖາ ທິຣາຊ ຮູ້ ຂ່າວເສິກພະມ້າເມືອງຫົງສາວະດີຄາວນີ້ ແມ່ນເສິກໃຫຍ່ຫວັງຈັກຕີເອົາກຸງລ້ານຊ້າງໃຫ້ໄດ້ ຈຶ່ງໄດ້ປຶກສາກັບພຣະຍາ ແສນ ສຸຣິນ ຄ່ວງຟ້າ ແລະ ເສນາ ອຳມາດ ທັງຫລາຍໃນການຕໍ່ຕ້ານເສິກພະມ້າເທື່ອນີ້.

ຈຶ່ງໄດ້ຕົກລົງ ວາງແຜນການ ຮັບເສິກໃຫຍ່ພະມ້າ ເທື່ອນີ້ ຕາມແຜນການດັ່ງນີ້.

໑. ຈັດ ກອງຫລອນ ຫລື ກອງ ໂຈນ ອອກ ຕໍ່ສູ້ ກັບ ກອງທັບພະມ້າ.

໒. ອົບພະ ຍົບ ປະຊາຊົນ ພົລະເມືອງ ອອກ ຈາກ ກຸງລ້ານຊ້າງ.

໓. ບໍ່ຕໍ່ສູ້ພາຍໃນກຸງລ້ານຊ້າງ ປະກຸງໄວ້ໃຫ້ ເປັນເມືອງເປີດ.

ຈຶ່ງບັນຊາ ໃຫ້ ອົບພະຍົບ ປະຊາ ຣາສດອນ ໃຫ້ ໜີ ອອກໄປລີ້ຢູ່ຕາມປ່າ ຊັບສົມບັດຂອງມີຄ່າໃຫ້ຂົນໄປໄວ້ ໃນປ່າ ໃນຖ້ຳ ໃນພູ ໃຫ້ໝົດ ສ່ວນຄອບຄົວຂອງທ້າວ ພຣະຍາ ເສນາ ບໍດີ ທັງຫລາຍ ໃຫ້ໜີ ໄປຢູ່ ບ້ານໜອງພູ ວຽງ ເພາະຈັກຢືນຍັດຕໍ່ສູ້ຢູ່ພາຍໃນກຳແພງເມືອງບໍ່ໄດ້ ເນື່ອງຈາກວ່າເປັນເສິກໃຫຍ່ ສາມາດອ້ອມນະຄອນ ວຽງຈັນໄດ້ທຸກທິດທຸກທາງ.

ເມື່ອ ວາງແຜນ ອົບພະຍົບຣາສດອນ ອອກໄປຈາກ ເມືອງແລ້ວ ກໍປະນະຄອນວຽງຈັນໄວ້ເປັນເມືອງເປີດ ບໍ່ມີ ທະຫານ ຮັກສາ ປະຈຳ ມີແຕ່ ກອງ ຫລອນ (ທະຫານກອງໂຈນ) ເປັນ ໝູ່ ໆ ຄອຍ ຈອບ ຢູ່ຕາມປ່າ

ຣິມເມືອງ ຊຶ່ງມີພຣະຍາຫານຟາຍ, ພຣະຍາຫານແກ້ວ, ພຣະຍາທັນະກຸນ, ພຣະຍາແສນສຸຣິນຄ່ວງຟ້າເປັນແມ່ທັບໃຫຍ່.

ສ່ວນ ກອງທັບ ຫລວງ ຂອງ ສົມເດັດ ພຣະເຈົ້າໄຊເຊຖຖານັ້ນ ຍົກກອງທັບໃຫຍ່ຖອຍລົງໄປຕັ້ງຢູ່ເມືອງປາກງື່ມ ຄອຍໂຈມຕີກອງທັບພະມ້າທີ່ຈະຍົກຕິດຕາມພວກກອງຫລອນທີ່ວາງໄວ້.

ຝ່າຍ ກອງທັບ ພະມ້າ ເມື່ອຍົກ ເຂົ້າມາ ເຖິງ ເຂດນະຄອນວຽງຈັນ ກອງຫລອນລາວ ຊຶ່ງຈອບ ຈູ່ໂຈມຢູ່ຕາມປ່າ ກໍເຂົ້າຈູ່ໂຈມຕີທັບພະມ້າ ແລະສູ້ກອງທັບໃຫຍ່ຂອງພະມ້າບໍ່ໄດ້ ກໍຖອຍອອກຈາກເຂດນະຄອນວຽງຈັນ ລົງມາທາງເມືອງທ່າບໍ່, ວຽງຄຸກ, ພະໂຄ, ໂພນວິໄສ, ຕາມແຜນເສິກທີ່ວາງໄວ້ ພະມ້າກໍຍົກກອງທັບໃຫຍ່ເຂົ້າ ຍຶດເອົາ ວຽງຈັນໄດ້ ແລະນຳທັບອອກໂຈມຕີກອງທະຫານລາວ ລົງມາຮອດດອນສັງຄີ ຈຶ່ງເຮັດຂົວຂ້າມແມ່ນ້ຳຂອງ ໄດ້ດອນສັງຄີແລ້ວຍົກກອງທັບໄປຕັ້ງທີ່ເທິງປາກນ້ຳງື່ມ.

ສົມເດັດພຣະເຈົ້າໄຊເຊຖຖາທິຣາຊ ກໍຍົກກອງທັບຫລວງ ຊຶ່ງຈັດຕັ້ງ ໄປ ເປັນ ກອງຫລອນ ເຂົ້າໂຈມຕີ ກອງ

ທັບພະມ້າ ພະມ້າສູ້ບໍ່ໄດ້ ກໍແຕກພ່າຍຖອຍຄືນໄປນະຄອນວຽງຈັນ ແລະໂຮມພົນເປັນທັບໃຫຍ່ລົງມາຕີກອງທັບພຣະເຈົ້າໄຊເຊດຖາທີ່ປາກນ້ຳງື່ມອີກ ກອງທັບລາວໄດ້ຕໍ່ສູ້ກັບກອງທັບພະມ້າຢູ່ທີ່ປາກນ້ຳງື່ມເຖິງສາມມື້ສາມຄືນ ລາວກໍຖອຍຈາກປາກນ້ຳງື່ມເຂົ້າປ່າໄປທ້ອນໂຮມກັນອີກທີ່ບ້ານໜອງຄູວຽງ ເພື່ອຈັດໂຮມເປັນກອງຫລອນອອກໂຈມຕີພະມ້າອີກຕໍ່ໄປ.

ຝ່າຍພະມ້າເມື່ອໄດ້ເມືອງປາກງື່ມແລ້ວ ກໍບໍ່ສາມາດທີ່ຈັກຢູ່ໃນເມືອງປາກງື່ມໄດ້ ເພາະຖືກກອງຫລອນຂອງລາວຄອຍຈອບໂຈມຕີເອົາສເມີ ແລະກໍເປັນຍາມຝົນ ທະຫານກໍເກີດການເຈັບໄຂ້ ຖືກກອງຫລອນໂຈມຕີບໍ່ໄດ້ຂາດ ຈຶ່ງໄດ້ຖອຍຕ່າວໄປຍັງນະຄອນວຽງຈັນອີກ.

ຝ່າຍກອງທັບລາວ ຊຶ່ງຈັດການຕໍ່ສູ້ເສິກພະມ້າຕາມແຜນເຮວເສິກແບບກອງໂຈນ ພາຍໃນການບັນຊາຂອງແມ່ທັບພຣະຍາແສນສຸຣິນຄ່ວງຟ້າ ກໍໄດ້ຈັດແບ່ງກອງທັບລາວອອກເປັນກອງໆ ມີຫົວໜ້າທີ່ສາມາດໃຫ້ແຍກຍ້າຍກັນອອກໄປລີ້ຢູ່ຕາມປ່າຣິມເມືອງ ຄອຍຖ້າລັກໂຈມຕີກອງທະຫານພະມ້າທີ່ອອກໄປຊອກຫາສະບຽງ

ອາຫານມາລ້ຽງກອງທັບ ກອງທະຫານພະມ້າຖືກກອງທະຫານລາວໂຈມຕີບໍ່ໄດ້ຂາດ ໄດ້ຮັບຄວາມເດືອດຮ້ອນ ຖ້າແຕ່ງກອງທັບໃຫ່ອອກໄປປາບ ກອງທັບລາວກໍຖອຍອອກໄປລີ້ຢູ່ໃນປ່າເສັງ ຖ້າພະມ້າຕິດຕາມເຂົ້າໄປກໍຖືກທະຫານລາວໂຈມຕີແຕກພ່າຍຄືນມາ ເພາະບໍ່ຊຳນານປ່າແລະຮູ້ພູມີປະເທດ ຈຶ່ງເປັນຝ່າຍເສັງປຽບລາວຜູ້ເປັນເຈົ້າຂອງບ້ານ.

ເຫດນີ້ ພະມ້າ ຈຶ່ງເກີດຄວາມ ເດືອດຮ້ອນ ຂຶ້ນ ໃນກອງທັບ ບ້ອນອາຫານບໍ່ພໍກັນ ແລະເກີດການເຈັບໄຂ້ຂຶ້ນ ບໍ່ສາມາດຈັກບິກກອງທັບອອກໄປຕໍ່ສູ້ກັບກອງທັບສົມເດັດພຣະເຈົ້າໄຊເຊດຖາໄດ້ ເພາະເຫດວ່າ :

໑. ເກີດອຶດປາກອາຫານການກິນ ບໍ່ພໍລ້ຽງກັນໃນກອງທັບ ເພາະວ່າກອງຊອກຫາສະບຽງອາຫານຖືກກອງຫລອນ ລາວ ຈູ່ໂຈມ ຈອບຕີບໍ່ໄດ້ຂາດ ອາຫານສະບຽງຈຶ່ງບໍ່ພຽງພໍ.

໒. ທະຫານເກີດການເຈັບໄຂ້ ເພາະບໍ່ລຶ້ງເຄີຍກັບພູມີປະເທດ ແລະລຶ້ງເຄີຍອາກາດ ທຳໃຫ້ກອງທະຫານຂາດກຳລັງອ່ອນແອລົງ.

໓. ເມື່ອແຕ່ງກອງທະຫານ ອອກໄປຕິດຕາມຈັບເອົາພຣະເຈົ້າໄຊເຊດຖາຊຶ່ງລີ້ຢູ່ໃນປ່າ ກໍ່ຖືກກອງຫລອນລາວຈອບໂຈມຕີແຕກພ່າຍມາ ບໍ່ສາມາດຈັກປາບກອງຫລອນຂອງພຣະເຈົ້າໄຊເຊດຖາໄດ້

໔. ເກີດການ ຣະສ່ຳຣະສາຍ ປັ່ນປ່ວນ ຂຶ້ນໃນກອງທັບພະມ້າ ຍ້ອນການເຈັບໄຂ້, ອຶດປາກ, ຖືກກອງຫລອນລອບຂ້າ.

໕. ເປັນຍາມຝົນຕົກໜັກແລ້ວ ລຳບາກແກ່ການເດີນທັບ ແລະການອອກຊອກຫາສະບຽງອາຫານ.

ດັ່ງນັ້ນພຣະເຈົ້າກຸງຫົງສາວະດີຈຶ່ງບັນຊາໃຫ້ກອງທັບກຽມຕົວຖອຍຈາກນະຄອນວຽງຈັນ ເພາະວ່າຂືນຢູ່ໃນນະຄອນວຽງຈັນອີກຕໍ່ໄປ ຣອດຍາມຝົນຕົກຫລາຍຈະອຶດປາກອາຫານ, ທະຫານເຈັບໄຂ້ຫລາຍ, ກຳລັງທັບຈັກອ່ອນລົງ ອາດເສັຽທີແກ່ພຣະເຈົ້າໄຊເຊດຖາໄດ້ ຈຶ່ງໄດ້ ສັ່ງໃຫ້ຖອຍທັບ ຈາກ ກຸງລ້ານຊ້າງໄປຍັງກຸງຫົງສາວະດີ.

ຝ່າຍ ສົມເດັດ ພຣະເຈົ້າ ໄຊເຊດຖາ ຈອບ ຫາ ຍາມຖອຍທັບຂອງພະມ້າ ເພື່ອນຳ ທະຫານໂຈມຕີຕາມຢູ່ແລ້ວ ຈຶ່ງບັນຊາ ໃຫ້ພຣະຍາແສນສຸຣິນຄ່ວງຟ້າຜູ້

ບັນຊາການກອງໂຈນ ນຳກອງທັບລາວໄປຄອຍຖ້າຕີທັບ
ພະມ້າຍາມຖອຍຈາກນະຄອນວຽງຈັນ ບໍ່ໃຫ້ຖອຍໄປໄດ້
ຢ່າງສະບາຍ.

ພະມ້າຖອຍທັບຈາກນະຄອນວຽງຈັນຄາວນີ້ ຖືກກອງທະຫານລາວຕາມຕີ ເສັຽລີ້ພົນທະຫານລົ້ມຕາຍຫລາຍ ກອງທັບລາວຈັບໄດ້ຊ້າງພະມ້າຮ້ອຍປາຍ ໄດ້ຊະເລີຍພະມ້າ, ມອນ, ລາວ (ນະຄອນຊຽງໃໝ່) ໄທໃຫຍ່ ແລະອາວຸດຍຸທະພັນເປັນອັນມາກ.

ເມື່ອພະມ້າເລີກທັບຕ່າວໄປແລ້ວ ສົມເດັດພຣະເຈົ້າໄຊເຊດຖາທິຣາຊ ກໍສະເດັດຕ່າວຄືນເຂົ້າມາສເວີຍເມືອງດັ່ງເກົ່າ ອານາປະຊາຣາສດອນລາວກໍອອກຈາກປ່າຕ່າວຄືນມາທ້ອນໂຮມກັນໃນເມືອງດັ່ງເດີມ ພຣະເຈົ້າໄຊເຊດຖາທິຣາຊ ກໍທຳນຸບຳຣຸງບ້ານເມືອງທີ່ຊຳຣຸດເສັຽຫາຍ ຍ້ອນການເສິກໃຫ້ຄືນຄືງດີດັ່ງແຕ່ກ່ອນ.

ກິຕິສັບ ທີ່ພຣະອົງໄດ້ທຳເສິກສົງຄາມ ຕໍ່ສູ້ກັບພະມ້າ ຈົນພະມ້າແຕກພ່າຍຖອຍໄປຈາກນະຄອນວຽງຈັນນັ້ນ ກໍເພາະຍຸທະວິທີການເສິກຂອງພຣະອົງ ໂດຍພຣະອົງຈັດຕັ້ງການຕໍ່ສູ້ແບບກອງຫລອນ ຫລືປະຈຸບັນນີ້ເອີ້ນວ່າການລົບແບບກອງໂຈນ ຊຶ່ງທຳການລັງຄວນ

ໂຈມຕີ ກໍ່ກວນ ຈົນພະມ້າ ບໍ່ສາມາດຕັ້ງໝັ້ນຢູ່ໃນນະຄອນ ວຽງຈັນໄດ້ ແລະກິຕິສັບຄວາມເກັ່ງກ້າສາມາດຂອງ ພຣະອົງກໍໄດ້ລືຊາປາກົດໄປທົ່ວຣາຊອານາຈັກຂອງພຣະ ອົງແລະປະເທດເພື່ອນບ້ານໃກ້ຄຽງ ວ່າ " ສົມເດັດພຣະ ເຈົ້າໄຊເຊດຖາທິຣາຊ" ເປັນນັກຣົບທີ່ສາມາດຜາບແພ້ ເອົາໄຊຊນະ ແກ່ພະມ້າໄດ້ ຈຶ່ງໄດ້ມີ ຄຳກອນຍໍພຣະກຽດ ຂອງພຣະອົງມາຕາບເທົ້າເຖິງປັດຈຸບັນນີ້ວ່າ "ໄຊເຊດ ຖາທິຣາຊລ້ຳ ລືເທົ້າທົ່ວແດນ."

ກົນ ບຸທະວິທີ ການຣົບ ແບບ ກອງໂຈນ ຫລື ກອງ ຫລອນ ຂອງ ພຣະອົງ ກໍໄດ້ ນຳມາໃຊ້ ເປັນແຜນ ບຸທະວິທີ ການຣົບເສິກຮອດປັດຈຸບັນນີ້ ຊຶ່ງເຮົາເອີ້ນວ່າການສູ້ເສິກ ແບບກອງໂຈນຫລືກອງຫລອນ ຜູ້ທີ່ເປັນຕົ້ນຄິດການ ເລວເສິກ ແບບນີ້ ແລ້ວນຳ ມາໃຊ້ປ້ອງກັນ ປະເທດ ລາວ ເພື່ອປ້ອງກັນ ການຮຸກຮານຂອງພະມ້ານັ້ນ ກໍແມ່ນ ສົມເດັດພຣະເຈົ້າໄຊເຊດຖາທິຣາຊ ຜູ້ເປັນເຈົ້າຂອງບຸທະ ວິທີ ການຣົບ ເສິກ ການເລວ ເສິກ ແບບ ກອງຫລອນ ຫລື ກອງໂຈນນີ້ ຈຶ່ງໄດ້ມີຄຳກອນສະດຸດີຍໍພຣະກຽດຂອງ ພຣະອົງໄວ້ວ່າ :

ເພງໄຊເຊດຖາມະຫາຣາຊ

ພຣະເຈົ້າໄຊເຊດຖາທິຣາຊ	ພຣະເຈົ້າໄຊເຊດຖາທິຣາຊ
ປົກປ້ອງລາວມາ	ໃຫ້ພົ້ນໄພພານ
ຕໍ່ສູ້ສັດຕູ	ພວກໝູ່ໄພຣີ
ທີ່ບຸກມາຣາວີ	ໃຫ້ແຕກໜີພ່າຍໄປ
ປົກປ້ອງລາວໄວ້	ໃຫ້ປູ່ຍືນຍົງ
ໝັ້ນຄົງຣອດເຮົາ	ພວກລາວທັງຫລາຍ
ເປັນວິຣາຊົນ	ເປັນວິຣາຊົນ
ທີ່ລາວທຸກຄົນ	ບົກບ້ອງບູຊາ
ບານເສິກກໍຣົບ	ບານສງົບກຸ່ມສຸ້
ປົກປ້ອງອຸ້ມຊູ	ໝູ່ຊາວປະຊາ
ບຳຣຸງບ້ານເມືອງ	ຮຸ່ງເຮືອງວິໄລ
ລືເຫົ້າແດນໄກ	ວ່າໄຊເຊດຖາ
ນັກຣົບເກ່ງກ້າ	ວີຣະຊົນຂອງລາວ
ນັກຣົບເກ່ງກ້າ	ວີຣະຊົນຂອງລາວ.

ຝ. ສ້າງທາດສີສອງຮັກຜູກໄມຕຣີກັບ

ກຸງສີອະຍຸທະຍາ (ພ.ສ. ໒໑໐໓ ເຖິງ ໒໑໐໖)

ເມື່ອໄດ້ຂັບໄລ່ພະມ້າ ອອກ ຈາກເມືອງແລ້ວ ພຣະອົງໄດ້ທຳນຸບຳຣຸງ ບ້ານເມືອງ ແລະຜູກ ສັມພັນທະໄມຕຣີກັບກຸງສີອະຍຸທະຍາ ໃຫ້ ສນິດສນົມ ແໜ້ນ ແຟ້ນ ຍິ່ງຂຶ້ນ ເພື່ອຈັກໄດ້ໂຮມກຳລັງ ຕໍ່ສູ້ກັບພະມ້າ ໃນເວລາພາຍໜ້າ

ພຣະອົງ ຈຶ່ງໄດ້ຊົງ ຕິດຕໍ່ກັບ ສົມເດັດ ພຣະມະຫາຈັກພັດ ຣາຊາທິຣາຊ ຮ່ວມກັບສ້າງພຸທະເຈດີ ເພື່ອເປັນສັກຂີພະຍານ ໃນຄວາມ ສັມພັນ ທະໄມຕຣີ ຂອງ ກຸງສີ ສັຕນາຄນະຫຸຕແລະກຸງສີອະຍຸທະຍາຂຶ້ນ ຢູ່ທີ່ຊາຍເຂດແດນຂອງຣາຊອານາຈັກທັງສອງ ເອີ້ນວ່າ "ທາຕສີສອງຮັກ" ຫລືວ່າ "ເຈດີສີສອງຮັກ" ເພື່ອເປັນອະນຸສອນໃນ ຄວາມ ສັມພັນ ທະໄມຕຣີ ຂອງ ອານາ ຈັກ ລ້ານຊ້າງແລະກຸງສີອະຍຸທະຍາ ປັດຈຸບັນນີ້ທາຕສີສອງຮັກຢູ່ທີ່ອຳເພີດ່ານຊ້າຍ ຈັງຫວັດ ເລີຍ ປະເທດໄທ ຊຶ່ງຕັ້ງຢູ່ເຄິ່ງກາງຣະຫວ່າງແມ່ນ້ຳຂອງກັບແມ່ນ້ຳນ່ານພີ ແລະແມ່ນເປັນຊາຍເຂດແດນໃນສໄມນັ້ນ.

ທາຕສີສອງຮັກນີ້ມີຄວາມໝາຍວ່າ "ສີອະຍຸທະຍາ" ຊຶ່ງປຽບ ຄື ບ້ານພີ່ ແລະ "ສີສັຕນາຄນະຫຸຕ" ປຽບຄືບ້ານນ້ອງ ກະສັຕທັງສອງຄືສົມເດັດພຣະມະຫາຈັກພັດຣາຊາທິຣາຊພຣະເຈົ້າຊ້າງເຜືອກ ກັບສົມເດັດພຣະເຈົ້າໄຊເຊດຖາທິຣາຊ ສ້າງຂຶ້ນ ເພື່ອເປັນສັກຂີພະຍານ ໃນການເປັນ ສັມພັນທະໄມຕຣີ ແລະເປັນ ຫລັກເຂດແດນຕິດຕໍ່ກັນ ທາຕນີ້ກໍ່ດ້ວຍດິນຈີ່ຖືປູນ ຖານສ່ວນ

ລຸ່ມເປັນສິລປະຂອງກຸງສີອະຍຸທະຍາ ສ່ວນເທິງເປັນສິລປະຂອງກຸງສີສັຕນາຄນະຫຸດ ທາດນີ້ສູງ ໒໐ ແມດ ຕັ້ງຢູ່ໃນວັດທາດບ່ອນເນີນຣິມນ້ຳໝັນ.

ໃນການສ້າງນີ້ມີສິລາຈາຣຶກ ເປັນພາສາໄທຫລັກໜຶ່ງ ພາສາລາວຫລັກໜຶ່ງ ຕາມສິລາຈາຣຶກວ່າເຣີ່ມສ້າງເມື່ອ ພ.ສ. ໒໑໐໓ ກົງກັບປີວອກໂທສົກ ແລ້ວເສັດເມື່ອ ພ.ສ. ໒໑໐໖ ກົງກັບປີກຸນເບັນຈະສົກ ເດືອນຫົກ ຂຶ້ນສິບຫ້າຄ່ຳ ວັນພະຫັດ ນັບແຕ່ເຣີ່ມສ້າງມາຮອດປີ ພ.ສ. ໒໕໐໐ ນີ້ ໄດ້ ໓໙໗ ປີ.

24 / VII

ທາດສີສອງຮັກນີ້ເປັນສະຖານບູຮານອັນເປັນທີ່ເຄົາຣົບແລະສັກສິດມາກ ເປັນທີ່ເຄົາຣົບສັກກາຣະຂອງຊາວໄທແລະລາວແຕ່ໃນປາງອະດີດເປັນອັນມາກ ເຖິງຣະດູການເດືອນຫົກຂຶ້ນ ໑໕ ຄ່ຳ ພຣະມະຫາກະສັດທັງສອງອານາຈັກ ຄືກຸງສີອະຍຸທະຍາແລະກຸງສີສັຕນາຄນະຫຸດລ້ານຊ້າງ ຈະສເດັດມາຮ່ວມກັນທຳບຸນສລອງເປັນປະຈຳປີບໍ່ໄດ້ຂາດ ໃນປັດຈຸບັນນີ້ ເມື່ອຮອດເດືອນຫົກຂຶ້ນ ໑໕ ຄ່ຳ ຊາວບ້ານໄດ້ມີການທຳບຸນສລອງຢູ່ເປັນປະຈຳ

ທຸກປີ ຕາມປະວັດການສ້າງທີ່ຈາລຶກໄວ້ໃນຫລັກສີລາ ນີ້ດັ່ງນີ້ ຄື:-

"ບະມານິຣັດເຕບັງ ສັພພະສິທທິສວັສດີ ຈັກກ່າວຕຳນານສີລາເລກ ພຣະບາທັມມິກຣາຊ (ສົມເດັດພຣະເຈົ້າໄຊເຊດຖາ) ຕັ້ງແຕ່ສຸພະມັສດຸສັກຣາຊອະດີເຣກໄດ້ ໑໔໗໖ ປີ ໂຫສົກ ປີວອກ ຈຸລສັກຣາຊໄດ້ ໙໖໖ ອະດີຕະວ່ຣະພຸທສາສນາ ຕັ້ງແຕ່ພຣະພຸທເຈົ້າສະເດັດເຂົ້າສູ່ນິພານໄປແລ້ວໄດ້ ໒໑໐໐ ປີ ຈຶ່ງມີພຣະມະຫາກະສັດຣາທິຣາຊ ສອງພຣະອົງ ຊົງ ພຣະນາມວ່າ ພຣະບາ ທັມມິກຣາຊ ດົນເປັນ ອາດບາໃນ ເມືອງ ຈັນທະບຸຣີ ສີສັດນາ ຄນະຫຸດມະຫານະຄອນບ່ວອນຣາຊທານີ ແຕ່ນັ້ນບັງມີພຣະມະຫາກະສັດ ເອກອົງນຶ່ງ ຊື່ວ່າ ພຣະມະຫາຈັກພັດວ່ຣະດິດ ວ່ຣະຣາຊາທິຣາຊ ດົນເປັນອາດບາໃນເມືອງກຸງສີອະໂຍທະຍາ ມະຫາດິລົກນົພຣັດນ໌ບູຣີສີມະຫານະຄອນບ່ວອນຣາຊທານີ ເຮືອງຣົມພົມຈາຣີສີມະຫາກະສັດເຈົ້າທັງສອງ ກໍຈຶ່ງປອງທີ່ຕະປະໂຍດສະບົດຕໍ່ກັນ ຄັນຕັ້ງຄຳຕໍ່ພຣະສາສນາພຣະຕະຖາຄົດເຈົ້າທ້າພັນພຣະວັສສາ ກໍຈຶ່ງຕັ້ງເມດຕາໃນກີຈິດ ຄິດໃຫ້ເປັນປໂຍດແກ່ແຜ່ນດິນທັງສອງ ຄືຄອງຄະດີ (ຂໍ້ຄະດີ) ໃນທັມນັກຫນາ ກໍຈຶ່ງ

ໃຊ້ຣາຊາ ອຳນາດ ໄປເຖິງ ອຸປຣາຊເຈົ້າ ທັງສອງ ໃຫ້ ບຳລອງໄມຕຣີທັມປຣະມັດສຸຂເປັນຍິ່ງ ຈຶ່ງເຫັນພ້ອມກັນທັງສອງກະສັດ ໃຫ້ໄປນິມົນເອົາພຣະສົງເຈົ້າ ຕົນຊົງສີລ ອັນບໍຣິສຸດ ຝ່າຍກຸງສີສັຕນາຄນະຫຸດນີ້ :

໑. ພຣະມະຫາອຸປາລີຕົນໜຶ່ງ
໒. ພຣະອະຣິຍະກັສະປະຕົນໜຶ່ງ
໓. ພຣະທັມະເສນາບັດຕົນໜຶ່ງ
໔. ພຣະວິຣິຍາທິກະມຸນີຕົນໜຶ່ງ
໕. ພຣະພຸທະວິລາສະມະຫາເຖນຕົນໜຶ່ງ
໖. ພຣະທັມະຣັງສີມະຫາເຖນຕົນໜຶ່ງ

ພຣະເຈົ້າ ທັງ ຫົກນີ້ ມີ ລູກສິດ ບົວຣະບັດ ໑໐ ຕົນສູຕົນແລ.

ພຣະສົງເຈົ້າອັນຝ່າຍກຸງສີອະໂຍທະຍານີ້

໑. ພຣະຄູບໍ່ຣົມຈະອິຍາຕົນໜຶ່ງ
໒. ພຣະອະຣິຍະມຸນີຕົນໜຶ່ງ
໓. ພຣະສີວິສຸດທິອຸດົມຕົນໜຶ່ງ
໔. ພຣະຄູສຸເມທາດຸຣີວົນຍານຕົນໜຶ່ງ
໕. ພຣະມະຫາທັມມາດຸນຍະຕົນໜຶ່ງ
໖. ພຣະມະຫາພົມະສານຕົນໜຶ່ງ

ຖ. ພຣະມະຫາຣາຊມຸນີຕົນໜຶ່ງ

ພຣະສົງ ທັງເຈັດຕົນ ມີລູກສິດ ບົວຣະບັດ ໑໐ ຕົນ ສູຕົນແລ.

ພຣະມະຫາກະສັດຝ່າຍກຸງສີສັຕນາຄນະບຸຣີ ຄື ອົງຈັນທະ ປະສິດຣາຊພັກດີ ໜໍ່ອຸປະນະສີລູກເມັຍ ພ້ອມ ກັບສັນລິດໄມຕີຣັກແພງກັນ ມະຫາອຳມາດ ຝ່າຍ ກຸງສີ ອະໂຍທິຍາມະຫາດິລົກພົບນົພະຣັດ ມະຫາ ນະຄອນ ກໍພ້ອມ ກັບກັນ ພຣະສົງ ແລະ ອຳມາດ ທັງສອງ ກໍໝາຍມາຊຸມນຸມກັນໃນທີ່ຈະຫລັ່ງນ້ຳສັດຈາ ພຣະສົງ ຜູ້ຊົງສີນບໍຣິສຸດ ແລະຫລວງຣາຊອຳມາດ ກໍນຳເອົາ ສັດຈະໃນກະອອມແກ້ວ ແຫ່ງພຣະມະຫາກະສັດເຈົ້າ ທັງສອງ ເຈືອກັນ ເປັນ ກະອອມແກ້ວ ອັນ ດຽວກັນ ແລ້ວຈຶ່ງເອົານ້ຳໃນເມືອງທັງສາໃນກະອອມທອງແຫ່ງ ມະຫາ ກະສັດເຈົ້າ ທັງສອງ ເຈືອກັນ ເປັນ ກະອອມ ທອງ ອັນດຽວກັນແລ້ວ ຈຶ່ງເອົານ້ຳໃນກະພັງຈາ ໃນກະອອມ ແຫ່ງ ນ້ຳມະຫາ ອຸປະຣາຊເຈົ້າ ທັງສອງ ເຈືອ ປົນ ເປັນ ກະອອມອັນດຽວກັນແລ້ວ ຈຶ່ງເອົານ້ຳໃສ່ກະອອມແກ້ວ ແລ້ວ ຈຶ່ງເອົາ ນ້ຳໃສ່ ກະອອມເງິນ ແຫ່ງ ມະຫາ ອຳມາດ

ທັງສອງ ເຈືອປົນກະອອມເງິນອັນດຽວກັນ ໃຫ້ອ່ານສັຕຍາທິຖານດັງນີ້

ສົມເດັດພຣະມະຫາກະສັຕເຈົ້າ ກຸງສີສັຕນາຄນະຫຸຕ ສົມເດັດພຣະມະຫາກະສັຕເຈົ້າກຸງສີອະໂຍທິຍາມະຫາດິລົກຈຶງມີພຣະຣາຊວົງສາ ສອງພຣະອົງຈຶງຈາກັນໃຫ້ເປັນພຣະຣາຊໄມຕຣີໂດຍບຸພະປະເພນີ ເພື່ອຈັກສືບເຊື້ອຄືສຸຣິວົງພົງສາ ແລະຍາຕິວົງສາພັນທະມິຕອຸສາຣັບມາ ເພື່ອຈັກໃຫ້ເປັນບໍຣົມສຸຂສວັສດີເປັນປະໂຍດແກ່ສະມະນະພາມນາຈານເຈົ້າ ຊາວຣາສດອນທັງຫລາຍຕາບຕໍ່ເທົ້າຖ້ວນກັປປະ ອັນນີ້ເປັນເຄົ້າເປັນປະທານສາຣະຄະດີ ໃນມະຫາປັຖະພີ ສີຣິຕະ ໃນອ່ວນຫ້ວຍພູເຂົາ ສະກົນ ສິຖົນ (ເອກະສົມ) ຂໍຈົງເປັນເອກະສົມາປະຣິມົນທົນດຽວກັນ ກ້ຽງກົມງາມມົນທົນ ເທົ້າພົງພັນລູກເຕົ້າຫລານເຫລນ ຢ່າໄດ້ຊິງຊ່ວງລ່ວງແດນແສນຫນ້າ ຢ່າໄດ້ກະທຳໂລບລ້ຽວແກ່ກັນຈົນເທົ້າສ້ຽງພຣະອາທິຕ ພຣະຈັນເຈົ້າ ຕົກລົງ ມາປູ່ເໜືອນ ແຜ່ນດິນອັນນີ້ເທີນ"

ຄັນອ່ານ ສັຕຍາ ທິຖານ ທັງສອງຝ່າຍ ແລ້ວ ພຣະສົງແລະອຳມາດທັງສອງຝ່າຍ ກໍ່ຫລັ່ງນ້ຳສັຕຍາລົງໃນ

ປັຖະພີແບບສົງ ທັງສອງຝ່າຍກະສັດກໍມີໃຈອະພິຣົມ ຊົມຊື່ນບິບດີ ມີສເນໄມຕຣີຮັກແພງເທົ້າສ້ຽງ ມະຫາປັຖະພີພຸທທັນດອນກັປໜຶ່ງ ແລ້ວບໍ່ໃຫ້ກະທຳໂລບລ້ຽວແກ່ກັນເລີຍ ຕັ້ງແຕ່ອັນກະທຳສ້າງອຸທິສະເຈດີສີມະຫາທາດ ໃຫ້ ເປັນ ເອກະ ສີມາ ດຽວ ກັນ ໄວ້ໃຫ້ ເປັນ ຫລັກດ່ານ ຕັ້ງແຕ່ຫລັກດ່ານນີ້ໄປນ້ຳຂອງແລະນ້ຳນ່ານເກິງກັນແລ ແຮກກະທຳສ້າງແປງອຸທິສະເຈດີສີສອງຮັກເຈົ້າ ສ້າງປີວອກ ໂທສົກ ເຖິງປີກຸນເບັນຈະສົກ ຈຸລສັກຣາຊ ໘໖໕ ເດືອນຫົກ ຂຶ້ນ ໑໔ ຄ່ຳ ພ່າວ່າໄດ້ຈິດເລີກຣາສີ ພຣະອາທິດສິງຫະຣິຣາຊ ມີພຣະມະຫາອຸປະຣາຊເຈົ້າທັງສອງ ພຣະບາພັນຫົວເມືອງມັນທະມຸກ ແສນໝື່ນ ຊຸມນຸມ ກັນ ໄວ້ໃນ ວະບາ ສັບສີມາ ສອງຮັກເຖິງ ເດືອນຫົກ ເພັງ ວັນພະຫັດ ກໍສ້ຽງ ແລ້ວ ບໍຣະບວນພະຣືຫັດສະຖິດຣືກມັງກອນຣາສີ ພຣະອາທິດສິງຫະຣາສີ ພຣະຈັນສະຖິດຕຸລບະຣາສີ ພຣະອັງຄານສະຖິດກຸມພະຣາສີ ພຣະພຸດສະຖິດເມສະຣາສີ ພຣະເສົາສະຖິດເມຖຸນຣາສີ ພຣະຣາຫູສະຖິດ ມັງກອນຣາສີ ພຣະ ລັກຂະນາ ສະຖິດເມຖຸນຣາສີ ພໍ່ເມື່ອແລ້ວຈິດບາລີກາບາທສີເງົາເທົ້າ.

(ໃນເຣື່ອງສ້າງທາດສີສອງຮັກນີ້ ກອງວັນນະຄະດີໃຫ້ບັນທຶກມາວ່າ "ເຣື່ອງສ້າງທາດສີສອງຮັກນີ້ ໃນຕຳນານທາດໂພນ ແລະ ຕຳນານພຣະແຊກຄຳວ່າ ແມ່ນພຣະໝໍ່ເມືອງ (ຣາຊໂອຣົດຂອງພຣະເຈົ້າໄຊເຊດຖາທິຣາຊ) ເປັນຜູ້ສ້າງ ໃນຄາວກັບມາຈາກພະມ້າພ້ອມກັບພຣະນະເຣສວນກຸງສີອະຍຸທະຍາ ລາງຜູ້ກໍ່ວ່າສ້າງໃນສໄມພຣະເຈົ້າສຸຣິຍະວົງສາທັມມິກຣາຊ (ພ.ສ. ໒໒໑ປີ) ສ່ວນປີວອກ ພ.ສ. ໒໑໐ປີ ນັ້ນແມ່ນລົງມາຕັ້ງວຽງຈັນເປັນນະຄອນຫລວງ" ດັ່ງນີ້ :)

ກ. <u>ພຣະເຈົ້າໄຊເຊດຖາທິຣາຊຊົງບຳຣຸງພຣະພຸທສາສນາ</u>

ສົມເດັດພຣະເຈົ້າໄຊເຊດຖາທິຣາຊ ນອກຈາກສາມາດໃນການເສິກສົງຄາມ, ການປົກຄອງ, ແລະການເມືອງແລ້ວ ພຣະອົງຍັງຊົງບຳຣຸງພຣະພຸທສາສນາ ໃນສໄມແຜ່ນດິນຣັຊການຂອງພຣະອົງໄດ້ທຳນຸບຳຣຸງພຣະພຸທສາສນາ ສ້າງວັດ, ສ້າງທາດເຈດີ, ແລະສ້າງພຣະພຸທຮູບມາກຫລາຍ ໄພ່ຟ້າປະຊາຣາສດອນ

ບົດບາດໃນພຣະພຸທສາສນາ ການບຳຣຸງພຣະພຸທສາສນາໃນສໄມຣັຊກາລຂອງພຣະອົງ ຄື -

໑. ສ້າງພຣະທາດຫລວງ : ພຣະອົງຊົງສ້າງເສີມ ປະຕິສັງຂອນ ພຣະເຈດີ ຫຸ້ມ ພຣະເຈດີ ສີທັມໂສກຣາຊຊົງເປັນທາດນ້ອຍ ໆ ປູ່ແຕ່ກ່ອນອັນສ້າງມາແຕ່ພຸທສັດວັສທີ ໑ປີ ໃນສໄມພຣະບາສີທັມໂສກຣາຊ ເປັນທີ່ບັນຈຸ ພຣະບໍຣົມສາຣີຣິກະທາດ ຂອງອົງສົມເດັດພຣະສັມມາສັມພຸທເຈົ້າ ການເສີມສ້າງເຈດີນີ້ໄດ້ສຳເຣັດເມື່ອປີ ພ.ສ. ໒໑໐໙ ເອີ້ນວ່າ "ພຣະທາດຫລວງ" ແລະໄດ້ຊົງສ້າງພຣະທາດບາຣະມີ ສາມສິບທັດອ້ອມຮອບພຣະທາດຫລວງ ມີສີລາຈາຣຶກຢູ່ດ້ານຕະວັນອອກເປັນພາສາບາລີ ຕອນໜຶ່ງວ່າ "ພຣະສຖູປ ຂອງສົມເດັດພຣະສັມມາສັມພຸທເຈົ້າ ລູກນີ້ຊື່ໂລກ ຈຸລາມະນີ ສົມເດັດມະຫາອຸປຣາຊ ເຈົ້າໄຊເຊດຖາທິຣາຊ ໄດ້ຊົງກໍ່ສ້າງໄວ້"

ພຣະທາດຫລວງນີ້ຢູ່ຫ່າງຈາກວຽງຈັນໄປທາງຕະວັນອອກປະມານ ໔ ກິໂລແມດ ໄດ້ຖືກພວກຫໍ້ທຳລາຍເມື່ອ ພ.ສ. ໒໔໑໐ປີ ແລະໄດ້ບຸຣະນະໃໝ່ເມື່ອ ພ.ສ. ໒໔໔໐-໒໔໔໑ ເມື່ອເຖິງເທສການເດືອນສິບສອງເພັງແມ່ນມີທຳບຸນສລອງປະຈຳປີ.

໔. ເລີມສ້າງພຣະທາດພະນົມ : ພຣະເຈົ້າໄຊເຊດຖາທິຣາຊໄດ້ເລີມສ້າງພຣະທາດພະນົມ ຊຶ່ງເປັນເຈດີ ສ້າງມາ ແຕ່ສໄມ ພຣະເຈົ້າ ສີທັມໂສກຣາຊ ໃຫ້ສູງໃຫຍ່ຂຶ້ນໄປອີກດັ່ງທີ່ປາກົດ ຢູ່ຕາບເທົ່າທຸກວັນນີ້ ຊຶ່ງເອີ້ນວ່າ " ພຣະທາດພະນົມ " ເມື່ອເຖິງຣະດູເດືອນສາມເພັງ ສົມເດັດ ພຣະເຈົ້າ ໄຊເຊດຖາ ທິຣາຊ ຈະ ສເດັດໄປນະມັສການ ເປັນ ປະຈຳ ທຸກປີ ພຣະທາດ ພະນົມເປັນປູຊະນີຍະສະຖານ ທີ່ເຄົາຣົບ ຂອງປວງ ປະຊາຣາສດອນແຖບຣິມແມ່ນ້ຳຂອງທັງສອງຝັ່ງ.

໕. ເລີມສ້າງພຣະທາດບັງພວນ : ພຣະເຈົ້າໄຊເຊດຖາ ທິຣາຊ ໄດ້ຊົງ ເລີມສ້າງ ພຣະ ທາດ ບັງພວນ ຊຶ່ງ ບັນຈຸ ພຣະບໍຣົມ ສາຣີຣິກທາດ ຂອງ ພຣະສັມມາສັມພຸທເຈົ້າ (ກະດູກເຊີງການຫລືເອີ້ນວ່າກະດູກຫົວເບົ້າ) ຈຶ່ງເອີ້ນວ່າພຣະທາດບັງພວນ ຊຶ່ງສ້າງມາແຕ່ພ້ອມກັນກັບ ພຣະທາດ ພະນົມ ປັດຈຸບັນ ຕັ້ງຢູ່ໃນ ໝູ່ບ້ານທາດຕຳບົນດອນໝູອຳເພີເມືອງໜອງຄາຍ ຢູ່ຣິມທາງຣົດບັນສາຍໜອງຄາຍ-ທ່າບໍ່ ເປັນທີ່ເຄົາຣົບສັກກາຣະຂອງຊາວໜອງຄາຍ, ວຽງຈັນ ນີ້ເພັງເດືອນສາມເປັນວັນທຳບຸນສລອງຄືກັນກັບພຣະທາດພະນົມ.

໔. ຊົງສ້າງວັດແລະພຣະພຸທຮູບ : ພຣະເຈົ້າໄຊເຊດຖາທິຣາຊໄດ້ສົງສ້າງວັດແລະພຣະພຸທຮູບ ຄື

- ສ້າງພຣະອົງຕື້ຫລໍ່ດ້ວຍທອງ ໜ້າຕັກກວ້າງເຖິງສອງວາ ປຸ່ງຈັບແລະ

- ທີ່ວັດອົງຕື້ບ້ານບ້ານໄນງ ອຳເພີທ່າບໍ່ ຈັງຫວັດໜອງຄາຍ ພຣະອົງຕື້ທີ່ວັດບ້ານໄນງນີ້ຍັງມີຮອບຂວານຂອງພະນ້າຟັນປາກົດຢູ່ຈົນທຸກວັນນີ້.

ນອກຈາກນີ້ ຍັງໄດ້ ຊົງສ້າງວັດຂຶ້ນ ໃນນະຄອນວຽງຈັນເປັນຈຳນວນມາກ ຢູ່ທີ່ວັດເມືອງໜອງ (ວັດສີເມືອງ) ຈັງຫວັດໜອງຄາຍ ໄດ້ຊົງສ້າງວັດແລະສ້າງພຣະພຸທຮູບເອີ້ນຊື່ວ່າ "ຫລວງພໍ່ໄຊເຊດຖາ ເປັນທີ່ເຄົາຣົບສັກກາຣະຂອງຊາວເມືອງໜອງຄາຍຄູ່ກັບພຣະໃສ ວັດທີ່ສົມເດັດພຣະເຈົ້າໄຊເຊດຖາ ສ້າງທີ່ໜອງຄາຍນັ້ນເອີ້ນວັດເມືອງໜອງ ປັດຈຸບັນເອີ້ນວັດສີເມືອງ.

໕. ຊ່ວຍ ກຸງສີ ອະຍຸທະຍາ ຣົບ ພະມ້າ (ພ.ສ. ໒໑໑໑)

ພະມ້າຍົກກອງທັບມາຕີກຸງສີອະຍຸທະຍາ ພ.ສ. ໒໑໑໐ (ດາວເສັງກຸງເທື່ອທີ ໑) ສົມເດັດພຣະມະຫິນ

ທຣາທິຣາຊ ໄດ້ຊົງມີພຣະຣາຊສານ ຂໍກອງທັບ ຈາກກຸງລ້ານຊ້າງໄປຊ່ວຍຕີພະມ້າເປັນທັບຂນາບ ສົມເດັດພຣະເຈົ້າໄຊເຊດຖາທິຣາຊ ໄດ້ສເດັດບົກກອງທັບໄປຊ່ວຍ ດັ່ງປາກົດຄວາມໃນພຣະຣາຊສານດັ່ງນີ້.

"..... ຝ່າຍຂຸນຣາຊເສນາ, ຂຸນມະຫາວິໄຊຍ ກັບໄພ່ ໕໐ ຄົນ ພາກັນເລັດລອດຂຶ້ນໄປເຖິງເມືອງລ້ານຊ້າງຈຶ່ງເອົາສຸພະອັກສອນນັ້ນ ໃຫ້ແກ່ເສນາບໍດີ ໃນລັກສນະພຣະຣາຊສານນັ້ນວ່າ "ສຸພະອັກສອນບ່ວອນສະຖາພົລ ວິມົລເຊດຖາ ຄຸນານັນ ວິກະສິດ ວິຈິຕຄັມພີຣາອັທຍາໄສ ໃນທ່ານອັຄມະຫາເສນາບໍດີນ ນະຣິນທຣາມາດ ອັນສວາມີປະວາສ ນາທມູລກາກອນ ບ່ວອນບຸຄົລ ເຣນຸນາຕ ໃນພຣະບາດສົມເດັດບໍຣົມະບາທບໍຣົມະບໍພິຕ ພຣະພຸທໍເຈົ້າຢູ່ຫົວ ນະກຸງເທບທະວາຣາວະດີ ສີອະຍຸທະຍາ ມະຫາດິລົກພົບ ນົພຣັຕນ໌ຣາຊທານີ ບຸຣີຣົມອຸດົມພຣະຣາຊນະຫາສຖານມີມະທຸຣະຈິຕສນິດສເນຫາ ມາຍັງເສນາບໍດີນະກຸງສີສັຕນາຄນະຫຸດ ບັດນີ້ກຸງພຣະນະຄອນສີອະຍຸທະຍາມີຣາຊດັສກອນ ຄືພຣະເຈົ້າຫົງສາວະດີກອນໄປດ້ວຍໂລພະເຈຕນາ ຫາຫີຣິໂອຕຕັປປະຕໍ່ໄປ ບົກກອງທັບລົງມາ

24/VII

ກະທຳປະໄສຍະຫາການ ຍ່ຳຍີພຣະນະຄອນສີອະຍຸທະຍາ ສົມະນະພາມອາຈາຣຍ໌ ໄພ່ຟ້າປະຊາຣາສດອນໄດ້ຮັບຄວາມເດືອດຮ້ອນ ແລະກຸງເທບພຣະມະຫານະຄອນ ສີອະຍຸທະຍາ ກ່ເປັນ ເຂື່ອນເພັຊ ເຂື່ອນຂັນ ແກ່ກຸງສີສັຕນາຄນະຫຸດ ຖ້າພຣະນະຄອນສີອະຍຸທະຍາເສັຽແກ່ກອງທັບ ຫົງສາວະດີ ແລ້ວເຫັນເສິກ ຫົງສາວະດີ ຈະຕິດຮອດກຸງສີສັຕນາຄນະຫຸດນຳດ້ວຍ ເຊີນສເດັດພຣະເຈົ້າກຸງສີສັຕນາຄນະຫຸດ ນຶກພະຍຸຫະໂຍທາທັບລົງມາຊ່ວຍ ຣົນະຍຸທ ປາບປາມ ຂ້າເສິກ ໃຫ້ປຣາໄຊ ປະລາສໄປແລ້ວຈະໄດ້ຊ່ວຍກັນດຳຣິການ ຕອບແທນແກ້ແຄ້ນພຣະເຈົ້າກຸງຫົງສາວະດີໃຫ້ເຖິງຂນາດ ເສນາບໍດີເມື່ອແຈ້ງໃນສຸພະອັກສອນແລ້ວກໍພາຂຸນຣາຊເສນາ, ຂຸນມະຫາວິໄຊ, ເຂົ້າເຝົ້າທູນໂດຍສຳເນົາສຸພະອັກສອນເສັດສິ້ນທຸກປະການ.

ພຣະເຈົ້າກຸງສີສັຕນາຄນະຫຸດແຈ້ງດັ່ງນັ້ນ ກໍຊົງພຣະພິໂຣທ ຕຣັສວ່າ ພຣະເຈົ້າກຸງຫົງສາວະດີບໍ່ໄດ້ຕັ້ງຢູ່ໃນຂັຕິຍະຣາຊປະເພນີ ປະພຶດພາລທຸຈຣິຕ ໃຫ້ທະຫານ ມາສະກັດ ຊິງເອົາ ພຣະເທບ ກະສັຕຣີ ໄປເທື່ອໜຶ່ງແລ້ວ ໜຳຍັງມີໃຈກຳເຣີບ ນຶກມາກະທຳຍ່ຳຍີ

ພຣະນະຄອນສີອະຍຸທະຍາອີກດັ່ງນີ້ ຈຳເຮົາຈະຍົກໄປຕີເປັນທັບກະໜາບ ໄປເບິງໜ້າພຣະເຈົ້າກຸງຫົງສາວະດີ ຈະເຮັດປະການໃດ. ປະການໜຶ່ງ ທັ້ງທາງພຣະຣາຊໄມຕຣີກັບກຸງສີ ອະຍຸທະຍາ ກໍຈັກຖາວອນວັທນາສືບໄປ ແລ້ວຈຶ່ງມີພຣະຣາຊກຳໜົດໃຫ້ກຽມພົນຫ້າໝື່ນ ຊ້າງເຄື່ອງສາມຮ້ອຍ, ມ້າສາມພັນ, ຄັນຮອດນະວັນເສົາເດືອນສາມແຮມຫ້າຄ່ຳ ໄດ້ສຸພະວາຣະດິຖີມະຫາມົງຄຸນລືກອັນປະເສີດ ກໍສເດັດຊົງຊ້າງພຣະທີ່ນັ່ງພ້ອມດ້ວຍແສນທ້າວພະຍາລາວ ແລະພົນພະຣິບະໂຍທາຫານ ແຫ່ໂດຍ ຂະບວນ ຊ້າຍຂວາ ໜ້າຫລັງ ດັ້ງແຊງເປັນຂນັດແໜ້ນດ້ວຍເຄື່ອງສັພພະສາຕຣາວຸດ ຍົກອອກຈາກກຸງສີສັຕນາຄນະຫຸຕ ຮັ້ງແຮມມາໂດຍະດີທາງສະຖົລມາກ (ທາງບົກ) . . . . ."

ແຕ່ເປັນ ທີ່ໜ້າ ເສັຽດາຍ ທີ່ສົມເດັດ ພຣະເຈົ້າໄຊເຊຖາທິຣາຊຫລົງກົບອຸບາຍຂອງພະມ້າ ຖືກພະມ້າຕີແຕກເສັຽທີ່ທີ່ຕຳບົນໜາກສອງຕົ້ນ ແຂວງເມືອງສຣະບຸຣີ ບໍ່ທັນໄດ້ໄປຊ່ວຍຮອດກຸງສີອະຍຸທະຍາ ຖ້າກອງທັບລາວບໍ່ຫລົງກົບພະມ້າຄາວນັ້ນແລ້ວ ກຸງສີອະຍຸທະຍາ ອາດບໍ່ແຕກ ໃຫ້ແກ່ພະມ້າໄດ້ ຈຶ່ງໄດ້ມີ

ຄວາມເວົ້າ ພັງເພີຍວ່າ "ລາວຫລີງກີນ ພະມ້າລືມກາບ" ມາຈົນຮອດທຸກມື້ນີ້.

ເມື່ອພະມ້າຕີທັບລາວແຕກແລ້ວ ພຣະເຈົ້າຫງສາວະດີ ກໍປ່ອຍຊະເລີຍລາວທີ່ພະມ້າຈັບໄດ້ນັ້ນເຂົ້າໄປໃນກຸງສີອະຍຸທະຍາ ຝ່າຍ ສົມເດັດ ພຣະມະຫິນ ທຣາທິຣາຊ ຊົງຊາບວ່າ ກອງທັບ ລ້ານຊ້າງ ທີ່ຍົກມາຊ່ວຍນັ້ນເສັຽທີແກ່ພະມ້າ ແຕກກັບໄປ ແລ້ວ ກໍເສັຽ ພຣະໄທກຸງສີອະຍຸທະຍາກໍແຕກເສັຽໃຫ້ແກ່ພະມ້າ ເມື່ອວັນອາທິດ ເດືອນເກົ້າ ແຮມ ໑໑ ຄ່ຳ ປີມະເສັງ ເວລາສາມໂມງເຊົ້າ ພ.ສ. ໒໑໑໑.

຀. <u>ຍົກກອງທັບໄປປາບຫົວເມືອງຝ່າຍໃຕ້</u> ພ.ສ. ໒໑໑໔

ເນື່ອງຈາກ ມີ ເສິກ ສົງຄາມ ກັບ ພະມ້າ ສອງເທື່ອ ແລະຍົກ ກອງທັບ ໄປ ຊ່ວຍ ກຸງສີ ອະຍຸທະຍາ ຣົບ ພະມ້າ ຍົກໄປຕີເມືອງພິສນຸໂລກ ພາໃຫ້ການປົກຄອງບ້ານເມືອງ ພາຍໃນ ຂອງອານາຈັກ ລ້ານຊ້າງ ບໍ່ຄ່ອຍ ທົ່ວເຖິງ ບັນດາຫົວເມືອງໃນຣາຊອານາຈັກລ້ານຊ້າງທາງຝ່າຍໃຕ້ ມີເມືອງອັດຕະປື, ເມືອງສາລະວັນ, ແລະເມືອງຈຳປາ

ສັກ, (ໃນພົງສາວະດານລ້ານຊ້າງວ່າເມືອງຣາມລັກອົງການ) ເຈົ້ານາຍໃນເຂດເມືອງເຫລົ່ານີ້ເປັນເຜົ່າຂ້າ (ພວກລະວ້າ) ອາໄສຢູ່ຕາມພູເຂົາໃນເວລານີ້ ເມື່ອການປົກຄອງພາຍໃນບໍ່ທົ່ວເຖິງ ຫົວເມືອງທາງຝ່າຍໃຕ້ຈຶ່ງຄິດແຂງເມືອງຂຶ້ນ.

ສົມເດັດ ພຣະເຈົ້າ ໄຊເຊດຖາ ທິຣາຊ ຈຶ່ງໄດ້ ສເດັດຍົກກອງທັບໄປທາງຫົວເມືອງຝ່າຍໃຕ້ ພວກຂ້າທັງຫລາຍກໍ່ບໍ່ຍອມອ່ອນນ້ອມ ໄດ້ໂຮມສມັກພັກພວກເຂົ້າຕໍ່ສູ້ກອງທັບລ້ານຊ້າງ ຂນະທີ່ກອງທັບຂອງສົມເດັດພຣະເຈົ້າໄຊເຊດຖາພັກພົນຢູ່ໃນປ່າ ພຣະອົງໄດ້ສເດັດປະພາສປ່າ ແລ້ວຫລົງຫາຍສາບສູນໄປໃນປ່າເມື່ອວັນຂຶ້ນສາມຄ່ຳເດືອນສີ່ປີຣວາຍມົດ ກົງກັບ ພ.ສ. ໒໑໑໔ ຕາມທາງ ສັນນິຖານວ່າ ຄົງຖືກພວກຂ້າ ລອບໂຈມຕີເອົາໃນຂນະສເດັດໄປປະພາສປ່າ ແລ້ວຖືກຈັບໄປ ແຕ່ພົງສາວະດານ ບາງ ສະບັບວ່າ ສົມເດັດ ພຣະເຈົ້າ ໄຊເຊດຖາທິຣາຊໄດ້ຫາຍໄປໃນຂນະຣົບກັບພວກຂ້າເສິກທາງຝ່າຍໃຕ້ ຄືເມືອງຣາມລັກອົງການ ຊຶ່ງເປັນເຂດຂອງອົງດຳ (ພວກຂ້າ)

(ເຣື່ອງການປົກຄອງທັບໄປປາບຫົວເມືອງຝ່າຍໃຕ້ນີ້ ກອງວັນນະຄະດີໃຫ້ບັນທຶກມາວ່າ "ຕາມຫລັກຖານທີ່ຊອກໄດ້ ເຣື່ອງພຣະເຈົ້າໄຊເຊດຖາທິຣາຊໄປຕີເສິກເມືອງອິງການນັ້ນ ເພາະຖືກກົນອຸບາຍຂອງພຣະຍານະຄອນລໍ້ລວງໄປ ຜົນສຸດທ້າຍແມ່ນພຣະຍານະຄອນເອງພາເອົາພຣະອົງໄປສູນເສັຽ" ດັ່ງນີ້)

໑໐. ສຣຸບກຽຕປວັດຂອງສົມເດັດພຣະເຈົ້າໄຊເຊດຖາທິຣາຊ

ສົມເດັດພຣະເຈົ້າໄຊເຊດຖາທິຣາຊ ເປັນພຣະມະຫາກະສັດລາວທີ່ມີພຣະປັຊາສາມາດໃນການເສິກສົງຄາມ ຕລອດຈົນທາງການປົກຄອງແລະທາງການເມືອງພຣະອົງໜຶ່ງຂອງຣາຊວົງລ້ານຊ້າງ (ລາວ) ໄດ້ເປັນກະສັດຄອງແຜ່ນດິນລ້ານນາ (ນະຄອນຊຽງໃໝ່) ແລະລ້ານຊ້າງກຸງສີສັດຕະນາຄນະຫຸດ ເປັນພຣະມະຫາກະສັດທີ່ນໍາຄວາມຈເຣີນຮຸ່ງເຮືອງມາສູ່ປະເທດລາວມາກຫລາຍ ໄດ້ປ້ອງກັນອານາຈັກລ້ານຊ້າງໄວ້ບໍ່ໃຫ້ຕົກໄປເປັນຂອງພະມ້າໄດ້ ພຣະອົງໄດ້ຊົງຜູກໄມຕຣີກັບກຸງສີອະຍຸທະຍາ ຢ່າງສນິດສນົມແໜ້ນແຟ້ນເປັນປັຖພີແຜ່ນດຽວກັນ ແລະຜູກໄມຕຣີກັບປະເທດວຽດນາມ

ໄດ້ພຣະຣາຊທິດາ ຂອງພຣະເຈົ້າ ບົວຄຶກ ແຫ່ງວຽດນາມ ມາເປັນມະເຫສີອົງໜຶ່ງ ໄດ້ຣາຊທິດາເມືອງຊຽງຮຸ່ງ ເມືອງເຂັມຣັຖເປັນມະເຫສີ ໃນພົງສາວະດານຫລວງ ພຣະບາງວ່າ ໄດ້ຣາຊທິດາຂເມນເປັນມະເຫສີອີກອົງ ໜຶ່ງ ເນື່ອງຈາກພຣະອົງເປັນກະສັດທີ່ເກ່ງກ້າສາມາດ ໃນສເມັບບັ້ນ ຫລາຍ ຈິ່ງເປັນ ທີ່ເລື່ອງລື ໃນປວັດສາດ ຈົນປາກົດຄຳຍົກຍ້ອງໃນປັດຈຸບັນນີ້ວ່າ "ໄຊເຊຖຖາທິ ຣາຊລ້າລືເທົ້າທົ່ວແດນ" ສົມຄວນ ໄດ້ຮັບ ກຽດເປັນ ມະຫາຣາຊແຫ່ງຣາຊວົງລ້ານຊ້າງພຣະອົງໜຶ່ງ. ສົມ ເດັດພຣະເຈົ້າໄຊເຊຖຖາທິຣາຊ ມີຣາຊໂອຣົດອົງໜຶ່ງຊື່ງ ພຣະນາມວ່າ "ພຣະໜໍ່ແກ້ວກຸມານ" ປະສູດເມື່ອ ເດືອນສີ່ແຮມສາມຄ່ຳ ພ.ສ. ໒໑໑໔ ເປັນປີທີ່ສົມເດັດ ພຣະເຈົ້າ ໄຊເຊຖຖາ ທິຣາຊ ຫາຍໄປໃນ ເຂດ ຂອງອົງດຳ (ຂ້າ) ຈຶ່ງໄດ້ຊື່ວ່າ "ພຣະໜໍ່ແກ້ວກຸມານ" ສົມເດັດ ພຣະເຈົ້າໄຊເຊຖຖາທິຣາຊ ເປັນ ໂອຣົດອົງແຮກ ຂອງສົມ ເດັດພຣະເຈົ້າໂພທິສາຣາຊ ພຣະອົງຢູ່ໃນຣາຊສົມບັດ ຄອງກຸງລ້ານຊ້າງໄດ້ ໒໖ ພັນສາ ແລະໄດ້ຄອງຣາຊສົມ ບັດໃນກຸງລ້ານນາ ນະຄອນຊຽງໃໝ່ ໒ ພັນສາ ສວັນຄົດ ເມື່ອ ພ.ສ. ໒໑໑໔ ຣວມພຣະຊົນພັນສາໄດ້ ໓໗ ພັນສາ.

(ຕອນນີ້ພຣະຣາຊໂອຣົດພຣະເຈົ້າໄຊເຊດຖາກອງ ວັນນະຄະດີບັນທຶກມາວ່າ "ລາງສະບັບຮຽກວ່າ ພຣະ ໜໍ່ເມືອງ"

໑໑. ອະນຸສາວະຣີຂອງສົມເດັດພຣະເຈົ້າ ໄຊເຊດຖາມະຫາຣາຊ

ເມື່ອ ພວກເຮົາ ຊາວລາວ ທັງ ຫລາຍ ໄດ້ຊາບ ກຽດ ປວັດ ຂອງ ສົມເດັດ ພຣະເຈົ້າມະ ຫາ ຊີວິດ ໄຊເຊດຖາທິ ຣາຊ ມະຫາຣາຊເຈົ້າ ຫລືເອີ້ນຢ່າງສັ້ນວ່າ "ສົມ ເດັດ ພຣະເຈົ້າ ໄຊເຊດຖາມະຫາຣາຊ"; ດັ່ງໄດ້ກ່າວມາ ແລ້ວນັ້ນ ສົມຄວນ ຢ່າງຍິ່ງ ທີ່ລາວ ປັດຈຸບັນ ເຮົາຈັກ ພ້ອມໃຈກັນສ້າງ ອະນຸສາວະຣີ ຂອງ ພຣະອົງທ່ານໄວ້ໃຫ້ ສງ່າຜ່າເຜີຍສົມພຣະກຽດ ໃຫ້ສົມກັບພຣະອົງທີ່ໄດ້ ກະທຳຄຸນງາມຄວາມດີໃຫ້ແກ່ບ້ານເມືອງມາ ນຳກຽດ ຕິບັດຊື່ສຽງຂອງລາວ ໃຫ້ນາໆປະເທດຮູ້ດັ່ງກ່າວມາ ແລ້ວນັ້ນ ດ້ວຍການຈັດສ້າງໃໝ່ຫລໍ່ດ້ວຍທອງໃຫ້ໃຫຍ່ ທໍ່ຄົນອີຫລີ (ແທນອະນຸສາວະຣີຈຳລອງຊຶ່ງມີຢູ່ໃນຂນະ ນີ້ເສັຽ) ແລ້ວອັນເຊີນມາປະດິສຖານໄວ້ບ່ອນຍ່ານກາງ ໜ້າພຣະທາດຫລວງ ຊຶ່ງພຣະອົງເປັນຜູ້ສ້າງ ທັນ

ໜ້າສູ່ທາງດັດໃໝ່ ໃຫ້ເຫັນອະນຸສາວະຣີເປັນທີ່ສງ່າງາມຢູ່ໜ້າເດີ່ນທາດຫລວງ ບໍ່ແມ່ນເອົາໄວ້ບ່ອນຂ້າງທາງດັ່ງທີ່ເປັນຢູ່ຂນະນີ້ ທັງນີ້ເພື່ອເປັນກຽດແກ່ພຣະອົງທ່ານທີ່ໄດ້ລ່ວງລັບໄປແລ້ວ ເປັນການທີ່ສແດງກະຕະເວທີຕາຄຸນ ແລະ ເປັນເຄື່ອງເຕືອນໃຈ ແກ່ລູກຫລານເຫລນ ຂອງ ລາວ ຮຸ່ນຫລັງ ໆ ໃຫ້ໄດ້ເຫັນ ປະການ ໜຶ່ງ ແລະເພື່ອ ຊາວຕ່າງປະເທດ ທີ່ໄດ້ ມາຢ້ຽມຢາມ ປະເທດລາວ ຈະໄດ້ເຫັນເປັນສງ່າຜ່າເຜີຍສົມພຣະກຽດຂອງພຣະອົງອີກປະການໜຶ່ງ.

ພຣະຍາແສນສຸຣິນຄ່ວງຟ້າວິວາທ
ກັບພຣະຍາຈັນສີຫະຣາຊ

ເມື່ອ ສົມເດັດ ພຣະເຈົ້າ ໄຊເຊດຖາ ມະຫາ ຣາຊ ຫລົງຫາຍໄປໃນປ່າເມືອງໄຕ້ນັ້ນແລ້ວ ພຣະຍາແສນສຸຣິນຄ່ວງຟ້າຜູ້ເປັນແສນເມືອງແລະແມ່ທັບໃຫຍ່ ເກີດຜິດໃຈກັນຂຶ້ນກັບພຣະຍາຈັນສີຫະຣາຊ ດ້ວຍເຣື່ອງຕ່າງຝ່າຍ ຕ່າງ ກໍ່ປາກ ເປັນ ຜູ້ສຳເຣັດຣາຊການແທນອົງພຣະໜໍ່ແກ້ວກຸມານ ຣາຊາຄນະສົງທັງຫລາຍໄດ້ຫ້າມປາມໄວ້ຈຶ່ງໄດ້ ຣະງັບ ກັນໄປ ຢູ່ຕໍ່ມາອີກ ສາມເດືອນ

ພຣະຍາທັງສອງເກີດຂັດໃຈກັນຂຶ້ນອີກ ຕ່າງກໍນຳສມັກພັກພວກ ຂອງຕົນອອກຕໍ່ສູ້ກັນ ພຣະຍາແສນສຸຣິນຄ່ວງຟ້າຂຶ້ນຂີ່ຊ້າງ ຄຸມພົນ ອອກຕໍ່ສູ້ກັບພຣະຍາຈັນສິຫະຣາຊ ພຣະຍາຈັນສິຫະຣາຊຕາຍຢູ່ເທິງຄໍຊ້າງ ພັກພວກຂອງພຣະຍາຈັນສິຫະຣາຊກໍ່ພ່າຍໄປ ພຣະຍາແສນສຸຣິນ ຄ່ວງຟ້າ ຈຶ່ງໄດ້ເຊີນ ເສນາອຳມາດ ທັງຫລາຍມາປະຊຸມພ້ອມກັນໃນພຣະຣາຊວັງ ເສນາທັງຫລາຍຈຶ່ງໄດ້ ຕັ້ງໃຫ້ ພຣະຍາ ແສນສຸຣິນຄ່ວງຟ້າ ເປັນຜູ້ສຳເຣັດຣາຊການແທນພຣະອົງ ຊົງພຣະນາມວ່າ "ພຣະສຸມັງຄລະໂພທິສັຕອັບບະກາຣາຊາ" (ກອງວັນນະຄະດີບັນທຶກ ວ່າ "ພຣະສຸມັງຄລະ ອັບບະໂກ ໂພທິສັຕ" ຄຳອັບບະກາເປັນເພດຍິງດັງນີ້) ຂນະນັ້ນພຣະຍາແສນສຸຣິນຄ່ວງຟ້າອາຍຸໄດ້ ໘໐ ປີ.

ໃນພົງສາວະດານລ້ານຊ້າງກ່າວວ່າ ການທີ່ເອີ້ນວ່າ "ພຣະສຸມັງຄລະ ໂພທິສັຕອັບບະກາຣາຊາ" ນັ້ນເພາະ ພຣະຍາ ແສນສຸຣິນ ຄ່ວງຟ້າ ປາຖນາ ທີ່ຈະເປັນພຣະໂພທິສັຕ ອົງໜຶ່ງຊື່ "ສຸມັງຄລະ" ເມື່ອດຳຣົງຕຳແໜ່ງ ຜູ້ສຳເຣັດ ຣາຊການ ແຜ່ນດິນ ແທນ ພຣະໜໍ່

ແກ້ວກຸມານນັ້ນ ຈຶ່ງໄດ້ຊື່ເອີ້ນວ່າ "ອັບບະການາຊາ" ຄົນທັງຫລາຍເອີ້ນ "ພຣະເຈົ້າປູ່ຫລານ"

໔໐. ຣັຊກາລ ພຣະບາ ແສນສຸຣິນ ຄ່ວງຟ້າ ເທື່ອທໍາອິດ (ພ.ສ. ໒໑໑໔ ເຖິງ ໒໑໑໘)

ພຣະບາແສນສຸຣິນຄ່ວງຟ້າເກີດໃນຕຣະກູນ ກວານບ້ານ (ນາຍບ້ານ) ເມືອງໜອງຄາຍເມື່ອ ພ.ສ. ໒໐໕໔ ເປັນຜູ້ສລາດ ກ້າຫານ ມີສະຕິປັນຍາ ແລະ ໄຫວພິບຣິ ເຂົ້າຮັບຣາຊການໃນສໄມແຜ່ນດິນ ຂອງສົມເດັດພຣະເຈົ້າໂພທິສາຣາຊ ພຣະເຈົ້າໂພທິສາ ຣາຊ ຊົງ ຊຸບລ້ຽງໃນຖານະເປັນລູກຫລວງ ມີບັນດາສັກເປັນແສນໝື່ນເມືອງພາ ໃຫ້ໄປນັ່ງເມືອງພານໍ້າຫາ ແສນໝື່ນເມືອງພາໄດ້ຕາມສເດັດ ສົມເດັດ ພຣະເຈົ້າໄຊເຊດຖາທິຣາຊ ຊົງຂນະນັ້ນ ຍັງເປັນ ພຣະ ເຊດຖວົງສາ ປູ່ນັ້ນໄປ ກຸງລ້ານນາ ແລະ ໄດ້ຊ່ວຍ ຣາຊການ ທີ່ກຸງລ້ານນາ ນະຄອນ ຊຽງໃໝ່ ເມື່ອ ສົມເດັດ ພຣະເຈົ້າ ໄຊເຊດຖາ ມະຫາ ຣາຊກັບ ຈາກ ລ້ານນານາ ນະຄອນ ລ້ານຊ້າງຈຶ່ງໃຫ້ໄປຄອງເມືອງຫ້ວຍຫລວງ ເລື່ອນຍົດໃຫ້ເປັນພຣະບາລືກຽຕ. (ກອງວັນນະຄະດີບັນທຶກວ່າ "ພຣະບາຍົດລືກຽຕ") ຄາວສົມເດັດ

24/VII

ພຣະເຈົ້າໄຊເຊດຖາ ມະຫາຣາຊ ຍົກ ກອງທັບ ໄປຕີເມືອງຊຽງໃໝ່ຄືນຈາກພຣະເມກຸຕິນັ້ນ ພຣະຍາລືກຽຕເປັນແມ່ທັບຕີໄດ້ເມືອງຊຽງແສນ ແລະຕີທັບພຣະເມກຸຕິແຕກທີ່ຊາຍຫາດເມືອງຊຽງຂອງ ເມື່ອກັບຈາກເມືອງຊຽງແສນ ຈຶ່ງເລື່ອນຍົດ ໃຫ້ເປັນ ພຣະຍາຊ້າຍ ຄອງຕຳແໜ່ງເມືອງຊ້າຍ.

ເຖິງ ພ.ສ. ໒໑໐໙ ພະມ້າຍົກກອງທັບມາຕີກຸງສີສັຕນາຄນະຫຸດ ວຽງຈັນ ເທື່ອທີ່ ໑ ພຣະເຈົ້າໄຊເຊດຖາມະຫາຣາຊ ໄດ້ມອບໜ້າທີ່ ໃຫ້ພຣະຍາຊ້າຍເປັນແມ່ທັບໃຫຍ່ກອບຣົບກວນຈູ່ໂຈມຕີ ກອງທັບພະມ້າ ຈົນບໍ່ສາມາດຕັ້ງຢູ່ໃນກຸງລ້ານຊ້າງໄດ້ ໃນທີ່ສຸດ ກອງທັບພະມ້າຕ້ອງຖອຍກັບໄປກຸງຫົງສາວະດີ ສົມເດັດພຣະເຈົ້າໄຊເຊດຖາມະຫາຣາຊ ຈຶ່ງໄດ້ຕັ້ງໃຫ້ ພຣະຍາຊ້າຍເປັນແສນເມືອງ ມີບັນດາສັກເປັນພຣະຍາແສນສຸຣິນຄ່ວງຟ້າ ແລະເມື່ອ ພ.ສ. ໒໑໑໐ ພະມ້າຍົກກອງທັບມາຕີກຸງສີສັຕນາຄນະຫຸດເທື່ອທີ່ ໒. ພຣະຍາແສນສຸຣິນຄ່ວງຟ້າ ກໍໄດ້ເປັນ ແມ່ທັບ ໂຈມຕີ ກອງທະຫານພະມ້າ ແຕກຖອຍກັບໄປ ທັງທີ່ຍັງບໍ່ໄດ້ຍົກມາຮອດກຸງລ້ານຊ້າງເລີຍ.

ຈຶ່ງເຫັນໄດ້ວ່າພຣະຍາແສນສຸຣິນຄ່ວງຟ້າ ເປັນບອດທະຫານເອກຂອງກຸງລ້ານຊ້າງ ຊຶ່ງເປັນທະຫານຄູ່ໃຈຂອງພຣະເຈົ້າໄຊເຊດຖາມະຫາຣາຊ ເມື່ອສົມເດັດພຣະເຈົ້າ ໄຊເຊດຖາ ຈະສະເດັດບັກກອງທັບອອກໄປທຳເສິກບ່ອນໃດ ຈະຂາດແສນສຸຣິນຄ່ວງຟ້າທະຫານເອກຂອງກຸງລ້ານຊ້າງ ຄູ່ບາຣະມີຂອງພຣະອົງບໍ່ໄດ້.

ຄັ້ງສຸດທ້າຍ ເມື່ອສົມເດັດພຣະເຈົ້າໄຊເຊດຖາທີ່ຣາຊບັກກອງທັບໄປປາບເມືອງຣາມລັກອົງການ (ພວກຂ້າ) ແລະໄດ້ສູນຫາຍໄປໃນປ່ານັ້ນ ພຣະຍາແສນສຸຣິນຄ່ວງຟ້າ ໄດ້ນຳ ກອງທັບ ກັບຄືນມາຍັງ ກຸງລ້ານຊ້າງຈົນ ໄດ້ເປັນ ຜູ້ສຳເຣັດ ຣາຊການ ແທນ ພຣະອົງ ພຣະໜໍ່ແກ້ວກຸມານ ມີນາມວ່າ "ພຣະເຈົ້າສຸມັງຄລະອັຍຍະກາຣາຊາ"

ນັບວ່າ ພຣະຍາ ແສນສຸຣິນ ຄ່ວງຟ້າ ເປັນຂຸນນາງ ທີ່ໄຕ່ເຕົ້າຂຶ້ນໄປຈາກບຸກຄົນສາມັນ ຈາກຕະກູນກວານບ້ານ (ນາຍບ້ານ) ເປັນບຸກຄົນທີ່ມີຄວາມສາມາດສັດຊື່ຕໍ່ບ້ານເມືອງ ເກັ່ງກ້າໃນການເສິກສົງຄາມສົມຄວນໄດ້ກຽດ ເປັນບອດທະຫານເອກ ຂອງ ອານາຈັກລ້ານຊ້າງໄດ້ຜູ້ໜຶ່ງ ຊຶ່ງໄຕ່ເຕົ້າຂຶ້ນມາຈາກບຸກຄົນສາມັນຈົນໄດ້ເປັນ

ເຖິງພຣະເຈົ້າແຜ່ນດິນ ອັນສົມຄວນທີ່ລາວທັງຫລາຍຈັກໃຫ້ ກຽດຍົກຍ້ອງ ເປັນຍອດທະຫານເອກ ຂອງອານາຈັກລ້ານຊ້າງໄດ້.

ຝ່າຍທາງ ປະເທດພະມ້າ ພໍໄດ້ ຊາບຂ່າວວ່າສົມເດັດພຣະເຈົ້າໄຊເຊດຖາທິຣາຊຫາຍໄປ ພຣະຍາແສນສຸຣິນຄ່ວງຟ້າຂ້າພຣະຍາຈັນສີຫະຣາຊ ກໍຄິດຈັກຫາຫົນທາງເອົາກຸງລ້ານຊ້າງໄວ້ໃນອຳນາດອີກ ຈຶ່ງໄດ້ແຕ່ງທູດ ຖືພຣະຣາຊສານ ມາຍັງ ກຸງລ້ານຊ້າງ ໃຈຄວາມວ່າ "ຂໍໃຫ້ພຣະມະຫາອຸປຣາຊກຸງລ້ານຊ້າງຊຶ່ງໄປຢູ່ກຸງຫົງສາວະດີແຕ່ ພ.ສ. ໒໑໐ປີ ນັ້ນ ດຳຣົງຕຳແໜ່ງ ເປັນ ຜູ້ສຳເຣັດ ຣາຊການ ແທນ ພຣະໜໍ່ແກ້ວກຸມານເພາະເຫດວ່າເປັນເຊື້ອພຣະວົງທີ່ໃກ້ຊິດ "ແຕ່ທູດພະມ້າ ຖືກຈັບ ຂ້າເສັຽໝົດ ພຣະຍາ ແສນສຸຣິນຄ່ວງຟ້າ ໄດ້ກ່າຈັດ ຜູ້ຊຶ່ງ ຈະມາ ແຍ່ງຕຳແໜ່ງ ຜູ້ສຳເຣັດຣາຊການຢ່າງແຂງແຮງ ເພາະເຊື່ອແນ່ວ່າພະມ້າແລະພຣະມະຫາອຸປຣາຊທີ່ຢູ່ ກຸງຫົງສາວະດີນັ້ນ ບໍ່ສາມາດທີ່ຈະເຮັດຫຍັງໃຫ້ກຸງສີສັຕນາຄນະຫຸຕໄດ້ ຕາບໃດທີ່ພຣະອົງຍັງເປັນຜູ້ສຳເຣັດຣາຊການແທນພຣະອົງຢູ່.

ຝ່າຍພະມ້າ ຊາບຂ່າວວ່າ ກຸງລ້ານຊ້າງ ຈັບທູດຂ້າໝົດ ຈຶ່ງແຕ່ງໃຫ້ແມ່ທັບພະມ້າຊຶ່ງປົກຄອງເມືອງຊຽງໃໝ່ຍົກມາຕີກຸງລ້ານຊ້າງ ເພາະເວລານັ້ນກຸງລ້ານນາ ນະຄອນຊຽງໃໝ່ ເປັນເມືອງຂຶ້ນຂອງພະມ້າ ຝ່າຍກຸງລ້ານຊ້າງ ໄດ້ຊາບ ຂ່າວວ່າ ພະມ້າ ຍົກ ກອງທັບ ມາ ພຣະຍາ ແສນ ສຸຣິນ ຄ່ວງຟ້າ ແມ່ທັບໃຫຍ່ ກໍແຕ່ງ ກອງທະຫານອອກສະກັດຕີທັບພະມ້າ ແລະຊຽງໃໝ່ແຕກຖອຍໄປຈາກອານາຈັກລ້ານຊ້າງ ພະມ້າແລະຊຽງໃໝ່ຍົກມາບໍ່ທັນຮອດກຸງສີສັຕນາຄນະຫຸດ ກໍຖືກກອງທັບລ້ານຊ້າງຕີແຕກຖອຍໄປກ່ອນ.

ພະມ້າຍົກມາຕີກຸງສີສັຕນາຄນະຫຸດເທື່ອທີສີ່
(ພ.ສ. ໒໑໑໗ - ໒໑໑໙)

ເມື່ອທັບພະມ້າ ແລະ ຊຽງໃໝ່ ຖືກຕີແຕກຖອຍໄປແລ້ວ ພຣະເຈົ້າກຸງຫົງສາວະດີຈຶ່ງເກນທັບໃຫຍ່ມາຕີກຸງລ້ານຊ້າງ ພະມ້າຍົກມາເທື່ອນີ້ໄດ້ນຳເອົາພຣະມະຫາອຸປຣາຊ ລ້ານຊ້າງ ທີ່ພະມ້າ ຈັບໄປນັ້ນ ມາໃນ ກອງ ທັບດ້ວຍ ແລະການຍົກກອງທັບມາຕີກຸງລ້ານຊ້າງຄາວນີ້ພະມ້າໄດ້ເກນໃຫ້ກຸງສີອະຍຸທະຍາ ຊຶ່ງຕົກເປັນເມືອງຂຶ້ນ

ຂອງພະມ້າໃນສໄມພຣະມະຫາທັມຣາຊາ ມາຊ່ວຍຣົບ ດ້ວຍ.

ຂ້າງຝ່າຍກຸງລ້ານຊ້າງພໍໄດ້ຊາບວ່າພະມ້າຍົກມາ ພວກເສນາອຳມາຕກໍບໍ່ປອງດອງກັນ ພວກນຶ່ງນິຍົມພຣະ ຍາແສນສຸຣິນຄ່ວງຟ້າກໍມີ ພວກຫນຶ່ງໄປນິຍົມພຣະມະ ຫາອຸປຣາຊກໍມີ ບໍ່ສາມັກຄີກັນ ກຽວກັບຕໍ່ສູ້ພະມ້າດັ່ງ ສໄມສົມເດັດພຣະເຈົ້າໄຊເຊດຖາມະຫາຣາຊຍັງມີຊີວິຕຢູ່ ພຣະຍາແສນສຸຣິນຄ່ວງຟ້າໄດ້ວາງແຜນຕໍ່ສູ້ພະມ້າຕາມ ກົລຍຸທທີ່ສົມເດັດພຣະເຈົ້າໄຊເຊດຖາ ເຄີຍໃຊ້ຕໍ່ສູ້ກັບພະ ມ້າມາແລ້ວ ແຕ່ກໍບໍ່ສາມາດຕໍ່ຕ້ານພະມ້າໄດ້ ເພາະ ຂາດຄວາມສາມັກຄີກັນ ເນື່ອງຈາກມີກຳລັງພົນນ້ອຍ ເພາະພວກທີ່ຝັກໃຝ່ຂ້າງພຣະມະຫາອຸປຣາຊກໍຫນີໄປ ເຂົ້າກັບພຣະມະຫາອຸປຣາຊລ້ານຊ້າງເສັຽຫມົດ ຈຶ່ງຈຳ ເປັນຕ້ອງເສັຽກຸງລ້ານຊ້າງ ເມື່ອ ພ.ສ. ໒໑໑໘ ຝ່າຍພຣະ ຍາແສນສຸຣິນຄ່ວງຟ້າ ກໍນຳພົນອອກໄປຫລົບຊ່ອນຢູ່ໃນ ປ່າເພື່ອຄອຍໂຈມຕີພະມ້າຕໍ່ໄປ.

ຝ່າຍພະມ້າ ເມື່ອເຂົ້າກຸງໄດ້ແລ້ວກໍແຕ່ງຕັ້ງໃຫ້ ພຣະມະຫາອຸປຣາຊເປັນຜູ້ສຳເຣັດຣາຊການແຜ່ນດິນກຸງ ລ້ານຊ້າງແທນພຣະຫນໍ່ແກ້ວກຸມານ ພວກທີ່ບໍ່ເຂົ້ານຳ

ພຣະບາແສນສຸຣິນຖ່ວງຟ້າ ກໍໜີມາເຂົ້າບຳພຣະມະຫາອຸປຣາຊຈັນສ້ຽງ ພະມ້າໄດ້ຈັດການປ້ອງກັນກຸງລ້ານຊ້າງປ່າງເຂັ້ມແຂ້ງ ເພື່ອປ້ອງກັນການໂຈມຕີຂອງພຣະບາແສນສຸຣິນຖ່ວງຟ້າ ເພາະໄດ້ຮັບບົດຮຽນມາແລ້ວເຖິງສອງເທື່ອ (ພ.ສ. ໒໑໑໐ ແລະ ພ.ສ. ໒໑໑໒)

ເມື່ອພະມ້າຈັດການປ້ອງກັນກຸງລ້ານຊ້າງປ່າງ ຮຽບ. ຮ້ອຍຈົນແນ່ໃຈວ່າພຣະບາແສນສຸຣິນຖ່ວງຟ້າບໍ່ອາດຍົກກອງທັບມາຕີກຸງລ້ານຊ້າງໄດ້ແລ້ວ ກໍບົກກອງທັບກັບກຸງຫົງສາວະດີ ພ້ອມດ້ວຍໜໍ່ແກ້ວກຸມານໄປເປັນ ປະກັນຢັ້ງກຸງຫົງສາວະດີ ຂນະນັ້ນພຣະໜໍ່ແກ້ວມີພຣະຊົນມາບຸໄດ້ພຽງ ໔ ພັນສາ.

ເປັນອັນວ່າກຸງສີສັຕນາຄນະຫຸຕລ້ານຊ້າງຕົກໄປເປັນເມືອງຂຶ້ນຂອງພະມ້າ ຕ້ອງສົ່ງສ່ວຍໃຫ້ພະມ້າ ຄືສົ່ງຊ້າງປີລະ ໑໐ ຕົວ ກັບຄຳໜັກໜື່ນໜື່ງປຸ່ຮອດ ໕ ປີ ນັບ ເປັນ ເທື່ອ ທຳອິດ ທີ່ ອານາຈັກລ້ານຊ້າງ ຕົກ ໄປ ເປັນ ເມືອງຂຶ້ນຂອງຊາຕອື່ນນັບແຕ່ສຖາປະນາເປັນອານາຈັກເອກຣາຊລ້ານຊ້າງສືບຕໍ່ຈາກຂຸນລໍເປັນຕົ້ນມາ.

໔໑. <u>ຣັຊກາລເຈົ້າອຸປຣາຊ</u> (ເຈົ້າມະຫາອຸປຣາຊ ພ.ສ. ໒໑໑໘ ເຖິງ ໒໑໒໒)

ເມື່ອພຣະມະຫາອຸປຣາຊ ເປັນຜູ້ສຳເຣັດຣາຊການແຜ່ນດິນ ແທນ ພຣະໜໍ່ແກ້ວ ກຸມານ ຕອນ ທຳອິດນັ້ນເສນາອຳມາດ ເສນາທັງຫລາຍຕລອດໄພ່ຟ້າປະຊາຣາສດອນກໍພາກັນນິຍົມໃນພຣະມະຫາອຸປຣາຊຢູ່ ບ້ານເມືອງຈຶ່ງສງົບເປັນປົກຕິສຸກ ຝ່າຍຂ້າງພຣະຍາແສນສຸຣິນຄ່ວງຟ້າບໍ່ມີທາງຈະຊິ່ງເອົາອຳນາດຄືນຈາກພຣະມະຫາອຸປຣາຊໄດ້ແລ້ວ ກໍນຳສມັກພັກພວກທີ່ຫລົບເຂົ້າໄປຢູ່ໃນປ່ານັ້ນມາອ່ອນນ້ອມຕໍ່ພຣະມະຫາອຸປຣາຊ ພຣະມະຫາອຸປຣາຊຈຶ່ງສົ່ງຕົວ ພຣະຍາແສນສຸຣິນຄ່ວງຟ້າໄປຍັງກຸງຫົງສາວະດີ ທາງຝ່າຍພະມ້າກໍ່ຕ້ອນຣັບຊຸບພົນຍອດນັກຣົບທະຫານເອກລ້ານຊ້າງເປັນຢ່າງດີ.

ຝ່າຍພຣະມະຫາອຸປຣາຊ ເມື່ອໄດ້ເປັນຜູ້ສຳເຣັດຣາຊການແລ້ວ ກໍບໍ່ຄິດທີ່ຈະກອບກູ້ເອກຣາຊຫລືອິສຣະພາບຂອງບ້ານເມືອງຄືນ ເສນາອຳມາດ ນ້ອຍໃຫຍ່ຕລອດຈົນໄພ່ຟ້າປະຊາຣາສດອນກໍບໍ່ພໍໃຈ ພາກັນກະດ້າງກະເດື່ອງຂຶ້ນ ຍ້ອນ ບໍ່ຢາກຢູ່ ໃຕ້ອຳນາດ ຂອງ ພະມ້າ ພຣະ ມະຫາ ອຸປຣາຊ ກໍ ບໍ່ ສາມາດ ຈະຣະງັບ ເຫດ ຫຍຸ້ງຍາກນັ້ນໄດ້ ຈຶ່ງແຈ້ງໄປຍັງກຸງຫົງສາວະດີ ຝ່າຍພຣະເຈົ້າກຸງຫົງສາວະດີກໍແຕ່ງໃຫ້ຣາຊໂອຣົສຊຶ່ງດຳຣົງຕຳແໜ່ງເປັນອຸປຣາຊມາຣະງັບເຫດທາງ ກຸງລ້ານຊ້າງແຕ່ພໍຈະຮອດຍາມຝົນກໍຍົກທັບກັບກຸງຫົງສາວະດີ.

ຂນະທີ່ອຸປຣາຊພະມ້າ ຍົກທັບກັບໄປແລ້ວບໍ່ເທົ່າ ນານ ກໍເກີດການວຸ່ນວາຍຂຶ້ນໃນອານາຈັກລ້ານຊ້າງອີກ ຄືເມື່ອ ພ.ສ. ໒໑໒໒ ໄດ້ມີບຸກຄົນຜູ້ໜຶ່ງອ້າງຕົນວ່າເປັນ ສົມເດັດພຣະເຈົ້າໄຊເຊດຖາມະຫາຣາຊທີ່ຫລົງໄປໃນປ່າ ເມືອງຣາມລັກອົງການ (ເມືອງຂ້າ) ນັ້ນ ໄດ້ເກັ້ຍກ່ອມ ເອົາຄົນທັງເມືອງຝ່າຍໃຕ້ຕາມຣູແມ່ນ້ຳເຊກອງ ແລ້ວ ຍົກມາຕັ້ງທີ່ທົ່ງແອກະບື (ທົ່ງຂີ້ຄວາຍ) ແລ້ວຍົກກອງ ທັບມາຕີເອົາກຸງລ້ານຊ້າງ ພຣະມະຫາອຸປຣາຊໄດ້ແຕ່ງ ໃຫ້ພຣະຍາຊຽງໃຕ້ ພຣະຍາຊຽງເໜືອ ພຣະຍານະຄອນ ແສນຍົກໄປຕີທັບເມືອງໃຕ້ນັ້ນ ແຕ່ຖືກພວກຊາວໃຕ້ຕີ ແຕກ ຊາວໃຕ້ໄດ້ຍົກຕິດຕາມມາຖືງທຸກແລະຕາມ ມາຕີເມືອງວຽງຈັນໄດ້ ກຸງລ້ານຊ້າງເລີຍເສັຽໃຫ້ຊາວໃຕ້ ໃນປີ ພ.ສ. ໒໑໒໒ ນັ້ນເອງ.

ຝ່າຍ ພຣະ ມະ ຫາ ອຸປຣາຊ ກໍ ພາ ພຣະ ມະເຫສີ ແລະ ສນົມ ກຳນັນ ລອບ ລົງເຮືອໜີ ຂຶ້ນໄປ ຕາມ ຣູແມ່ນ້ຳ ຂອງ ຫວັງຈະໜີໄປເພິ່ງພຣະເຈົ້າກຸງຫົງສາວະດີ ພໍ ເຮືອພຣະທີ່ນັ່ງໄປເຖິງແກ້ງປູນານພັງ (ແກ້ງຈັນ) ເຮືອ ກໍຫລົ້ມ ພຣະມະຫາອຸປຣາຊພ້ອມດ້ວຍບໍຣິວານກໍສິ້ນ ຊີວິດທັງໝົດຢູ່ທີ່ແກ້ງຈັນນັ້ນເມື່ອ ພ.ສ. ໒໑໒໒.

໔໒. ຣັຊກາລພຣະຍາແສນສຸຣິນຄ່ວງຟ້າ ເທື່ອທີ ໒ ພ.ສ. ໒໑໒໓ ເຖິງ ໒໑໒໕

ເມື່ອຂ່າວການເສັຽກຸງລ້ານຊ້າງຕໍ່ຊາວໃຕ້ ແລະ ພຣະມະຫາອຸປຣາຊສວັນຄົດ ຊາບໄປເຖິງພຣະເຈົ້າກຸງຫົງສາວະດີ ພຣະເຈົ້າກຸງຫົງສາວະດີຈຶ່ງແຕ່ງຕັ້ງໃຫ້ພຣະຍາແສນສຸຣິນຄ່ວງຟ້າ ມາຄອງຣາຊສົມບັດໃນກຸງລ້ານຊ້າງເປັນເທື່ອທີ່ສອງ ພຣະຍາແສນສຸຣິນຄ່ວງຟ້າໄດ້ຂໍຄອບຄົວລາວທີ່ພະມ້າກວາດຕ້ອນເອົາໄປແຕ່ຄັ້ງກ່ອນ ໆ ນັ້ນຄືນມາສູ່ອານາຈັກລ້ານຊ້າງນຳ ຝ່າຍພະມ້າກໍຍອມຜ່ອນຜັນຕາມ ຄົງເອົາໄວ້ແຕ່ພຣະໜໍ່ແກ້ວກຸມານເທົ່ານັ້ນ.

ຝ່າຍພະມ້າໄດ້ຍົກກອງທັບພາຄອບຄົວລາວແລະພຣະຍາແສນສຸຣິນຄ່ວງຟ້າ ມາຣະງັບເຫດວຸ່ນວາຍທີ່ກຸງລ້ານຊ້າງ ແລ້ວກໍສຖາປະນາພຣະຍາແສນສຸຣິນຄ່ວງຟ້າຂຶ້ນເປັນຜູ້ສຳເຣັດຣາຊການແຜ່ນດິນລ້ານຊ້າງແທນພຣະໜໍ່ແກ້ວກຸມານ ເມື່ອ ພ.ສ. ໒໑໒໓.

ພຣະຍາແສນສຸຣິນຄ່ວງຟ້າໄດ້ປົກຄອງໄພ່ຟ້າປະຊາຣາສຄອບກຸງລ້ານຊ້າງມາດ້ວຍຄວາມສງົບສຸກ ເສ

ບາອຳມາດ ແລະປະຊາ ຣາສດອນໄດ້ຮັບຄວາມທຸກຍາກ ລຳບາກເນື່ອງ ມາຈາກ ບ້ານເມືອງເກີດ ວຸ່ນວາຍ ມາຫລາຍຄັ້ງຫລາຍຫົນແລ້ວ ຈຶ່ງບໍ່ພາກັນຄິດທີ່ຈະກໍ່ກວນວຸ່ນວາຍຂຶ້ນອີກ ພຣະຍາແສນສຸຣິນຖ່ວງຟ້າຄອງກຸງລ້ານຊ້າງມາໄດ້ສອງປີກໍ່ສວັນຄົດເມື່ອ ພ.ສ. ໒໑໒໕ ພຣະຊົນມາຍຸໄດ້ ໗໑ ພັນສາ.

໔໖. ຣັຊກາລພຣະຍານະຄອນນ້ອຍ ພ.ສ. ໒໑໒໕ ເຖິງ ໒໑໒໖.

ພຣະຍານະຄອນນ້ອຍຣາຊບຸດຂອງພຣະຍາແສນສຸຣິນຖ່ວງຟ້າໄດ້ຂຶ້ນຄອງຣາຊສົມບັດແທນ ຊົງພຣະນາມວ່າ " ພຣະຍານະຄອນນ້ອຍ " ຢູ່ໃນຣາຊສົມບັດໄດ້ປີໜຶ່ງບໍ່ຕັ້ງຢູ່ໃນທົສພິທຣາຊທັມ ເສນາອຳມາດຈຶ່ງປົດອອກຈາກ ຣາຊສົມບັດ ແລ້ວ ແຕ່ງທູດ ແຈ້ງໄປຍັງກຸງຫົງສາວະດີ ພຣະຍານະຄອນນ້ອຍນີ້ໄດ້ຂຶ້ນເປັນເຈົ້າຄອງກຸງລ້ານຊ້າງໂດຍຄວາມສນັບສນູນຂອງພະມ້າແຕ່ບໍ່ເປັນທີ່ເພິ່ງໃຈ ແກ່ຣາສດອນ ຈຶ່ງຖອດອອກ ແລ້ວບອກຄືນແກ່ພະມ້າ.

ທາງ ຝ່າຍ ປະເທດ ພະມ້າ ຂນະນັ້ນ ຍັງ ຫຍຸ້ງ ກັບ ກິຈການບ້ານເມືອງພາຍໃນປະເທດຢູ່ ຈຶ່ງບໍ່ໄດ້ຈັດ

ກາບກັບປະເທດລ້ານຊ້າງແຕ່ປາງໃດ ແຜ່ນດິນລ້ານຊ້າງຈຶ່ງວ່າງກະສັດມາເປັນເວລານານຮອດ ໗ ປີ ເຈົ້ານາຍຫົວເມືອງທັງຫລາຍ ຕ່າງກໍປົກຄອງບ້ານເມືອງກັນໄປຕາມລຳພັງ.

໔໔. <u>ຣັຊກາລພຣະໜໍ່ແກ້ວກຸມານ</u> (ພ.ສ. ໒໑໓໔ – ໒໑໓໙)

ເມື່ອບ້ານເມືອງວ່າງກະສັດມາຮອດແປດປີ ເສນາອຳມາດ, ພຣະຣາຊາຄນະ ຈຶ່ງໄດ້ປຶກສາຕົກລົງກັນແຕ່ງທູດໄປຂໍພຣະໜໍ່ແກ້ວກຸມານ ທີ່ກຸງຫົງສາວະດີ ຄນະທູດໄປເທື່ອນີ້ໄດ້ນິມົນເອົາພຣະຣາຊາຄນະໄປນຳໃນຂນະນັ້ນ ເປັນຄາວທີ່ປະເທດພະມ້າກຳລັງເສື່ອມອຳນາດ ເພາະພຣະນະເຣສວນແຫ່ງປະເທດໄທໄດ້ປະກາດອິສຣະພາບ ແລະພະມ້າໄດ້ພ່າຍສົງຄາມແກ່ໄທເສັຽຣີພົນ ແລະທະຫານຫລາຍ ພະມ້າເກງວ່າກຸງລ້ານຊ້າງຈະຫລຸດອອກຈາກອຳນາດພະມ້າໄປອີກ ຈຶ່ງໄດ້ຍອມໃຫ້ພຣະໜໍ່ແກ້ວກຸມານ ຕ່າວໄປຄອງກຸງລ້ານຊ້າງຕາມຄຳຂໍຂອງພຣະຣາຊາຄນະ ແລະທູດທີ່ມາຈາກກຸງລ້ານຊ້າງນັ້ນ ພຣະໜໍ່ແກ້ວກຸມານພ້ອມດ້ວຍ

ພຣະຣາຊາຄນະ ແລະທູດ ຈຶ່ງໄດ້ ພາກັນ ເດີນທາງ ຕ່າວ ມາກຸງລ້ານຊ້າງ.

ເສນາອຳມາດຈຶ່ງອັນເຊີນ ພຣະໜໍ່ແກ້ວກຸມານຂຶ້ນ ຄອງຣາຊ ສົມບັດ ໃນກຸງສີ ສັດຕະນາຄນະຫຸດ ລ້ານຊ້າງ ສືບ ຕໍ່ມາ ຊົງພຣະນາມວ່າ "ພຣະໜໍ່ແກ້ວກຸມານ" ເຫດ ການບ້ານເມືອງ ກໍ ສງົບ ຮຽບຮ້ອຍ ກັບຄືນສູ່ສະພາບ ປົກະຕິຕາມເດີມ ເມື່ອໄດ້ຈັດການປັບປຸງກິຈການພາຍ ໃນບ້ານເມືອງເປັນປົກະຕິແລ້ວ ພຣະໜໍ່ແກ້ວກຸມານຊົງ ເຫັນວ່າ ພະມ້າບໍ່ອາດສາມາດຍົກກອງທັບມາຕີອານາ ຈັກລ້ານຊ້າງໄດ້ອີກ ເພາະວ່າ ທຳ ສົງຄາມກັບ ກຸງສີອະຍຸ ທະຍາພ່າຍ (ບໍ່ແພ້) ທຸກຄັ້ງໄປ ຈົນກອງທັບກຸງສີ ອະຍຸທະຍາ ຍົກກອງທັບ ໄປຕີ ຮອດ ກຸງຫົງສາວະ ດີເມື່ອ ເຫັນເຫດການເປັນດັ່ງນັ້ນແລ້ວ ສົມເດັດພຣະໜໍ່ແກ້ວ ກຸມານ ຈຶ່ງຊົງປະກາດ ອິສຣະພາບ ຂອງ ອານາຈັກ ລ້ານ ຊ້າງເປັນອິສຣະ ບໍ່ເປັນເມືອງຂຶ້ນຂອງພະມ້າອີກຕໍ່ໄປ.

ຕັ້ງແຕ່ ກຸງລ້ານຊ້າງ ຕົກໄປເປັນ ເມືອງຂຶ້ນ ຂອງ ພະມ້າ ເມືອງພວນຊຶ່ງເປັນເມືອງຂຶ້ນຂອງກຸງລ້ານຊ້າງ ກໍຕົກໄປຢູ່ໃນອຳນາດຂອງພະມ້ານຳຄືກັນ ເມື່ອອານາ ຈັກລ້ານຊ້າງໄດ້ປະກາດອິສຣະພາບແລ້ວ ເມືອງພວນ

ກໍ່ບອນອ່ອນນ້ອມຂຶ້ນກັບກຸງສີສັຕນາຄນະຫຸຕອີກ ເຄື່ອງ ຣາຊບັນນາການ ທີ່ເຈົ້າເມືອງພວນຖວາຍແກ່ກຸງລ້ານ ຊ້າງ ຕາມບູຮານປະເພນີສາມປີເທື່ອໜຶ່ງນັ້ນມີດອກ ໄມ້ເງິນ, ດອກໄມ້ຄໍາ, ດາບ, ທວນ, ມີດພ້າ ໂຣມກັບ ໄດ້ພັນສີ່ຮ້ອຍອັນ ແຄວ້ນພວນສໄມນັ້ນຈະເຣີນຮຸ່ງເຮືອງ ຫລາຍ ນະຄອນຊຽງຂວາງເມືອງຫລວງຂອງແຄວ້ນ ພວນນັ້ນ ລ້ອມຮອບໄປດ້ວຍ ປ້ອມ, ຄູ, ປະຕູ, ທໍຣົບ, ມີພຣະຣາຊວັງທີ່ສວຍງາມ ມີວັດຮອດຫົກສິບສອງວັດ ມີພຣະທາດເຈດີສວຍງາມມາກຫລາຍ ເນື່ອງແຕ່ຖືກ ຂ້າເສິກທໍາລາຍຈຶ່ງບໍ່ມີເຫລືອມາຮອດປັດຈຸບັນນີ້.

ສໄມຂອງສົມເດັດພຣະໜໍ່ແກ້ວກຸມານ ອານາຈັກ ລ້ານຊ້າງກໍາລັງຟື້ນຟູທະນຸບໍາຣຸງປະເທດ ໄພ່ຟ້າປະ ຊາຣາສດອນກໍາລັງສ້າງເນື້ອສ້າງຕົວ ບ້ານເມືອງມີແຕ່ ຄວາມສງົບສຸກ ແຕ່ເປັນທີ່ໜ້າເສັຽດາຍທີ່ພຣະໜໍ່ແກ້ວ ກຸມານຊຶ່ງເປັນທີ່ຮັກແພງຂອງເສນາອໍາມາຕຕລອດຈົນ ໄພ່ຟ້າຣາສດອນນານັ້ນ ຟ້າວສວັນຄົຕເສັຽແຕ່ເມື່ອຍັງ ຊົງພຣະເຍົາຢູ່ດັ່ງນັ້ນ ພຣະໜໍ່ແກ້ວກຸມານສວັນຄົຕເມື່ອ ພ.ສ. ໒໑໙໘ ພຣະຊົນມາຍຸໄດ້ ໒໕ ພັນສາ ຢູ່ໃນຣາຊ ສົມບັຕໄດ້ ໕ ປີ.

໔໕. <u>ພຣະວໍຣະວົງສາທັມມິກຣາຊ</u> (ພ.ສ. ໒໑໘໖ – ໒໑໙໕)

ເມື່ອ ພຣະໜໍ່ແກ້ວ ກຸມານ ສວັນຄົຕ ໂດຍບໍ່ມີ ຜູ້ສືບຣາຊສົມບັດ ເຫດການພາຍໃນບ້ານເມືອງໄດ້ກັບເກີດຄວາມຫຍຸ້ງຍາກຂຶ້ນອີກ ແຕ່ເຈົ້າວົງຊຶ່ງເປັນພຣະບໍຣົມວົງສາຂອງສົມເດັດພຣະເຈົ້າໄຊເຊຖຖາມະຫາຣາຊ ເຮັດໃຫ້ຂຸນນາງເສນາອຳມາຕ ທັງຫລາຍ ຢູ່ໃນ ຄວາມສງົບສາມັກຄີກັນ ເສນາອຳມາຕຈຶ່ງອັນເຊີນເຈົ້າວົງຂຶ້ນຄອງຣາຊສົມບັດເມື່ອ ພ.ສ. ໒໑໘໖ ຊົງພຣະນາມວ່າ "ພຣະວໍຣະວົງສາທັມມິກຣາຊ"

ພຣະເຈົ້າທັມມິກຣາຊຂນະ ຂຶ້ນສເວີຍຣາຊສົມບັດນັ້ນມີພຣະຊົນ ໑໔ ພັນສາ ຕໍ່ມາເມື່ອໄດ້ຂຶ້ນຄອງຣາຊສົມບັດ ແລະຊົງມີ ພຣະມະເຫສີແລ້ວໄດ້ ຣາຊໂອຣົດ ອົງໜຶ່ງຊົງພຣະນາມວ່າ "ເຈົ້າອຸປເຍົາວະຣາຊ" ຕໍ່ມາໄດ້ຣາຊໂອຣົດອີກສອງອົງ ຄືໜໍ່ອນແກ້ວແລະໜໍ່ອນໄຊເຈົ້າອຸປເຍົາວະຣາຊ ເມື່ອຈເຣີນໄວຂຶ້ນໄດ້ເປັນກຳລັງຂອງສົມເດັດພຣະຣາຊບິດາ ໃນການປົກຄອງບ້ານເມືອງເປັນທີ່ຮັກແພງນັບຖືຂອງອານາປະຊາຣາສດອນຕລອດຈົນເສນາອຳມາຕທັງຫລາຍ.

ຕໍ່ມາເຖິງ ພ.ສ. ໒໑໖໔ ມີຜູ້ບຸບົງວ່າ ເຈົ້າອຸປເຫົາວະຣາຊຈະຄິດຂະບົດແຍ່ງຣາຊສົມບັຕ ເຈົ້າຫັນນົກຣາຊຈຶ່ງໃຫ້ໄປຈັບເຈົ້າອຸປເຫົາວະຣາຊ ເຈົ້າໜ່ອມແກ້ວແລະຂຸນນາງເສນາອຳມາຕສ່ວນຫລາຍບໍ່ເຫັນດີນຳໃນຂໍ້ກ່າວຫາ ເສນາອຳມາຕແລະເຈົ້າໜ່ອມແກ້ວກໍ່ພາກັນເຂົ້າຂ້າງເຈົ້າອຸປເຫົາວະຣາຊ ໃນທີ່ສຸດພຣະເຈົ້າຫັນນົກຣາຊໄດ້ເຈົ້າໜ່ອມໄຊ ແລະພຣະຍາບຸຊິດ ເປັນ ກຳລັງຝ່າຍຂ້າງເຈົ້າອຸປເຫົາວະຣາຊໄດ້ໜ່ອມແກ້ວ ແລະເສນາອຳມາຕສ່ວນຫລາຍເປັນພວກ ໃນທີ່ສຸດຝ່າຍເຈົ້າອຸປເຫົາວະຣາຊບຶດໄດ້ກຸງໃນມື້ເດືອນສີ່ຂຶ້ນຄ່ຳໜຶ່ງ ວັນອາທິດ ພ.ສ. ໒໑໖໕ ສ່ວນເຈົ້າຫັນນົກຣາຊແລະພັກພວກຖອຍລົງໄປທາງໃຕ້ ເສນາອຳມາຕຈຶ່ງເຊີນເຈົ້າອຸປເຫົາວະຣາຊ ຂຶ້ນຄອງຣາຊສົມບັຕເມື່ອເດືອນສີ່ ຂຶ້ນສີ່ຄ່ຳ ພ.ສ. ໒໑໖໕.

(ໃນຣັຊກາລພຣະເຈົ້າຫັນນົກຣາຊນີ້ ກອງວັນນະຄະດີໃຫ້ບັນທຶກມາວ່າ "ຊື່ພຣະວໍຣະວົງສາຫັນນົກຣາຊ" ແລະວ່າ "ເຫດທີ່ພຣະວໍຣະວົງສາຈະໄດ້ຄອງເມືອງນັ້ນເຫດຜົນວ່າ ພຣະວໍຣະວົງສາເປັນລູກບ້າສາວຂອງ ພຣະເຈົ້າໄຊເຊດຖາ ທິຣາຊ ພໍ່ເປັນ ຣາສດອນ

ເວລານັ້ນຖືກພະມ້າຄຸມໄວ້ ພະມ້າເຫັນວ່າພຣະວໍຣະວົງ
ສາຍັງນ້ອຍ ຈຶ່ງໃຫ້ພໍ່ເປັນຜູ້ສຳເຣັດຊີການແທນການປະ
ກາດອິສຣະພາບແມ່ນພຣະວໍຣະວົງສານັ້ນເອງ ບໍ່ແມ່ນ
ພຣະໜໍ່ແກ້ວດັ່ງນີ້")

໔໖. ຣັຊກາລພຣະເຈົ້າອຸປເນົາວະຣາຊ (ພ.ສ. ໒໑໒໕ - ໒໑໒໖)

ເມື່ອເຈົ້າອຸປເນົາວະຣາຊໄດ້ຂຶ້ນສເວີຍຣາຊສົມບັຕແລ້ວຈຶ່ງນຳພົນອອກຕິດຕາມພຣະເຈົ້າຫັມນິກຣາຊໄປພົບທີ່ເມືອງຊຽງແຕງ (ກອງວັນນະຄະດີໃຫ້ບັນທຶກມາວ່າ "ບ້ານຊຽງແຕງ" ບໍ່ແມ່ນເມືອງຊຽງແຕງ) ຈຶ່ງໄດ້ເກີດຕໍ່ສູ້ກັນຂຶ້ນ ພຣະເຈົ້າຫັມນິກຣາຊສູ້ບໍ່ໄດ້ກໍຖືກຂ້າຕາຍໝົດ . ພຣະເຈົ້າອຸປເນົາວະຣາຊຢູ່ໃນຣາຊສົມບັດໄດ້ສິບເດືອນກໍສວັນຄົດ ເມື່ອເດືອນ ໕ ຂຶ້ນ ປີຄ່າ ພ.ສ. ໒໑໒໖ ພຣະຊົນມາຍຸໄດ້ ໒໕ ພັນສາ ເຈົ້າອຸປເນົາວະຣາຊມີຣາຊໂອຣົດສອງອົງ ຄືເຈົ້າຕ່ອນຄຳແລະເຈົ້າວິໄຊ.

໔໗. ຣັຊກາລພຣະເຈົ້າບັນດິຕໂພທິສານ (ພ.ສ. ໒໑໖໖ – ໒໑໗໐)

ເສນາອຳມາດ ຈຶ່ງໄປເຊີນເອົາພຣະຍາມະຫາ ນາມຜູ້ຄອງເມືອງນະຄອນ (ນະຄອນພະນົມ) ຂຶ້ນຄອງຣາຊສົມບັດ ຊົງພຣະນາມວ່າ "ພຣະເຈົ້າບັນດິຕໂພທິສານ" ພຣະເຈົ້າບັນດິຕໂພທິສານຢູ່ໃນຣາຊສົມບັດ ໕ ປີກໍສວັນຄົດ ເມື່ອວັນອາທິດເດືອນ ໕ ຂຶ້ນ ໑໔ ຄ່ຳ ພ.ສ. ໒໑໗໐

໔໘. ຣັຊກາລເຈົ້າຕ່ອນຄຳ (ພ.ສ. ໒໑໗໐ - ໒໑໘໐)

ເຈົ້າຕ່ອນຄຳໄດ້ສເວີຍຣາຊສົມບັດສືບຕໍ່ມາ ມີຣາຊໂອຣົດ ມີ ອົງ ຄື ເຈົ້າຊົມພູ, ເຈົ້າບຸນຊູ, ເຈົ້າສຸຣິຍະກຸມານ, ສເວີຍຣາຊສົມບັດຢູ່ເທົ່າໃດປີບໍ່ປາກົດແນ່ນອນ ເຈົ້າຕ່ອນຄຳ ຖືກ ເຈົ້າວິໄຊ ແຍ່ງ ຣາຊສົມບັດ ແລະ ສເວີຍຣາຊສົມບັດມາອີກເທົ່າໃດປີ ກໍບໍ່ປາກົດແນ່ນອນອີກ ຕາມຈົນເຖິງ ພ.ສ. ໒໑໘໐ ຈຶ່ງຖືກພວກເຈົ້າສຸຣິຍະກຸມານປາບ ແລ້ວຍົກເຈົ້າສຸຣິຍະກຸມານຂຶ້ນຄອງຣາຊສົມບັດແທນເມື່ອ ພ.ສ. ໒໑໘໑ ເຈົ້າວິໄຊມີໂອຣົດສອງອົງຄື ເຈົ້າບຸນແລະເຈົ້າສ້ອນ.

ຈາກ ພ.ສ. ໒໑໗໐ ຫາ ພ.ສ. ໒໑໘໐ ເປັນເວລາ ເຖິງ ໑໐ ປີນີ້ເປັນສໄມທີ່ເຫດການພາຍໃນຣາຊອານາຈັກ ລ້ານຊ້າງຫຍຸ້ງຍາກຍ້ອນການແຍ່ງຣາຊສົມບັດກັນ ປະ ວັດສາດຂອງລາວຕອນນີ້ຈຶ່ງສັບສົນກັນຫລາຍ ຈະນັບ ວ່າເຈົ້າຕ່ອນຄຳອີງຄຽວຄອງຣາຊ ສົມບັດ ກໍໄດ້ ເພາະຖືກ ເຈົ້າວິໄຊແຍ່ງ ແລ້ວພວກເຈົ້າ ສຸຣິຍະ ກຸມານ ປາບເຈົ້າ ວິໄຊອີກຕໍ່ໜຶ່ງ ຫລືຈະນັບວ່າຕອນນີ້ວ່າງກະສັດກໍໄດ້.

ແຕ່ພົງສາວະດານ ລ້ານຊ້າງ ຂອງ ປ. ເລີບູລັງ ແປຣ໌ ວ່າມີຜູ້ແຍ່ງກັນເປັນກະສັດເຖິງ ໔ ຄົນ ຄື ເຈົ້າ ໜ່ອມແກ້ວ, ເຈົ້າອຸປະຍຸວະຣາຊ, ເຈົ້າຕ່ອນຄຳ, ແລະ ເຈົ້າວິໄຊ.

໔໙. ຣັຊການເຈົ້າສຸຣິຍະວົງສາທັມມິກຣາຊ

(ພ.ສ. ໒໑໘໐ – ໒໒໓໗)

ລະຫວ່າງ ພ.ສ. ໒໑໗໐ ເຖິງ ພ.ສ. ໒໑໘໐ ອັນ ເປັນເວລາ ໑໐ ປີ ນັ້ນ ເຫດການ ພາຍໃນ ຂອງ ອານາຈັກ ລ້ານຊ້າງ ເກີດ ວຸ້ນວາຍ ຍ້ອນ ການ ແຍ່ງ ຣາຊສົມບັດ ກັນ ໃນທີ່ສຸດພວກຂອງ ເຈົ້າສຸຣິຍະກຸມານ ຊຶ່ງເປັນຣາຊໂອຣົດ ຂອງເຈົ້າຕ່ອນຄຳ ສາມາດປາບເຈົ້າວິໄຊໄດ້ ແລ້ວອຸປ ພິເສກເຈົ້າສຸຣິຍະກຸມານຂຶ້ນຄອງຣາຊເມື່ອ ພ.ສ. ໒໑໘໐

ຊົງພຣະນາມວ່າ "ພຣະເຈົ້າສຸຣິຍະວົງສາ ທັມມິກຣາຊ" ເມື່ອໄດ້ຂຶ້ນຄອງຣາຊສົມບັດແລ້ວ ພຣະອົງໄດ້ຈັດການເຣື່ອງວົງສາຄະນະຍາດຂອງພຣະອົງ ຊຶ່ງເກງວ່າຈະແຍ່ງ ຣາຊສົມບັດ ເຮັດໃຫ້ບ້ານເມືອງເກີດຄວາມວຸ່ນວາຍດັ່ງທີ່ເປັນມາແລ້ວເຖິງ ໑໐ ປີ ແລະເພື່ອຄວາມໝັ້ນຄົງໃນຣາຊບັນລັງຂອງພຣະອົງ ຈຶ່ງໄດ້ຈັດການເຣື່ອງຍາດພີ່ນ້ອງຄື: -

໑. ເຈົ້າຊົມພູ ພີ່ຊາຍຄົນໃຫຍ່ກັບຊາຍາ ແລະແສນທິບນາບົວ ໃຫ້ໄປຢູ່ເມືອງເວ້ (ປະເທດວຽດນາມ) ເຈົ້າຊົມພູມີໂອຣົດອົງໜຶ່ງມີນາມວ່າ "ເຈົ້າໄຊອົງເວ້" ເມື່ອເຈົ້າຊົມພູສິ້ນພຣະຊົນ ຊາຍາໄດ້ອຸປພິເສກກັບແສນທິບນາບົວ ໄດ້ໂອຣົດອົງໜຶ່ງຊົງນາມວ່າ "ທ້າວລອງ"

໒. ເຈົ້າບຸນຊູ ພີ່ຊາຍຄົນທີ່ສອງ ໃຫ້ໄປຢູ່ພູຫຳພູໂຮງ.

໓. ເຈົ້ານຸ ໂອຣົດຂອງເຈົ້າວິໄຊ ໃຫ້ພາຄອບຄົວໄປຢູ່ເມືອງນະຄອນພະນົມ.

໔. ເຈົ້າສ້ອຍອະນຸຊາຂອງເຈົ້ານຸ ໜີໄປຢູ່ທີ່ສະພືຫລວງ.

ເມື່ອພຣະອົງໄດ້ຈັດການບ້ານເມືອງ ພາຍໃນຣາຊສຳນັກຮຽບຮ້ອຍແລ້ວ ໄດ້ຊົງທຳນຸບ້ານເມືອງໃຫ້ຈເຣີນຮຸ່ງເຮືອງ ບ້ານເມືອງມີແຕ່ຄວາມສງົບສຸກ ບໍ່ໄດ້ມີຂ້າເສິກສັດຕຣູມາຮົບກວນ ໄພ່ຟ້າປະຊາຣາສດອນມີແຕ່ຄວາມຮົ່ມເຢັນເປັນສຸກ ໃນຣັຊການ ຂອງພຣະອົງໄດ້ທະນຸບຳຣຸງບ້ານເມືອງດັ່ງ :-

໑. ໃນດ້ານການພຣະພຸທະສາສນາແລະການສຶກສາ : ພຣະອົງໄດ້ຊົງສົ່ງເສີມການສຶກສາໃຫ້ຈເຣີນແຜ່ຫລາຍ ມີນັກປຣາຊຣາຊບັນດິດລາວ ສາມາດແຕ່ງການ ກອນ ວັນນະຄະດີຕ່າງ ໆ ເປັນຕົ້ນວ່າ ໜັງສືສິນໄຊ, ປູ່ສອນຫລານ, ຫລານສອນປູ່, ແລະໜັງສືອື່ນ ໆ ອີກມາກຫລາຍ.

໒. ໃນດ້ານການທະນຸບຳຣຸງບ້ານເມືອງ :- ພຣະອົງພາໄພ່ຟ້າ ປະຊາຣາສດອນ ສ້າງບ້ານ ແປງເມືອງໃຫ້ຈເຣີນຮຸ່ງເຮືອງຂຶ້ນກວ່າແຕ່ກ່ອນຫລາຍ ດ້ວຍວ່າໃນສມັຍພຣະອົງຂຶ້ນຄອງຣາຊ ມີເວລາເຫິງນານເຖິງ ໕໗ ປີ ບໍ່ມີຣັຊການໃດຄອງຣາຊ ຍາວນານ ເທົ່າຣັຊການຂອງພຣະອົງ ແລະ ໃນສມັຍກ່ອນ ຣັຊການ ຂອງພຣະອົງ

ບ້ານເມືອງ ກໍ່ຊຸດໂຊມ ຫລາຍຍ້ອນ ເກີດແຍ່ງຊີງ ຣາຊສົມບັດ ແລະ ຂ້າຟັນ ກັນເອງ ພໍເຖິງສໄມ ແຜ່ນດິນ ຂອງພຣະອົງ ພຣະອົງຈຶງພາຣາສດອນບ່າວໄພ່ສ້າງບ້ານແປງເມືອງ ບໍ່ໄດ້ມີຂ້າເສິກສັຕຣູມາຣົບກວນເລີຍ ຈົນໄດ້ມີຄຳກ່າວຍໍພຣະກຽຕມາເຖິງປັດຈຸບັນນີ້ວ່າ "ສຸຣິຍະວົງສາພາໄພ່ສ້າງເມືອງລາວວິໄລຍິງ" ຫລືວ່າ "ສຸຣິຍະວົງສາພາໄພ່ສ້າງເມືອງລາວຮຸ່ງເຮືອງຍິງ" ດັ່ງນີ້.

໓. ພຣະອົງເປັນກະສັຕທີ່ຕັ້ງໝັ້ນຢູ່ໃນຄວາມຍຸຕິທັມຍິງຣອດພຣະຣາຊໂອຣົດ ຂອງພຣະອົງເອງ ກໍ່ຣັບສັ່ງໃຫ້ປະຫານຊີວິຕຍ້ອນການເຮັດຄວາມຊົ່ວ.

໔. ໄດ້ຊົງທຳສັນຍາທາງພຣະຣາຊໄມຕຣີກັບປະເທດຮອລລັງດ໌ (ຮອນແລນດ໌ຫລືຮອລລັງດາ) ເມື່ອ ພ.ສ. ໒໑໘໔ ໄດ້ຕັ້ງແຖວກຽຕິຍົດຕ້ອນຮັບຣາຊທູຕແລະຄນະທູຕານຸທູຕຊາວຮອລລັງດ໌ ທີ່ເດີນໜ້າພຣະທາຕຫລວງ.

໕. ຊົງຜູກສັມພັນທະໄມຕຣີ ກັບກຸງສີອະຍຸທະຍາໃຫ້ສນິດສນົມແໜ້ນຂຶ້ນອີກ ໄດ້ສົ່ງຄນະທູຕໄປຈເຣີນສັມພັນທະໄມຕຣີ ກັບ ກຸງສີອະຍຸທະຍາ ເມື່ອ ພ.ສ. ໒໒໑໓.

ໃນຣັຊກາລຂອງພຣະເຈົ້າສຸຣິຍະວົງສາ ພວກຫໍ້ (ຈີນຫໍ້) ໄດ້ຍົກກອງທັບມາຕີເມືອງຊຽງຮຸ່ງ ເຈົ້າອິນທະກຸມານ: ເຈົ້າເມືອງຊຽງຮຸ່ງໄດ້ພານ້ອງສາວຊື່ເຈົ້າຍິງຈັນທະກຸມາຣີ ລົງມາເພິ່ງພຣະໂພທິສົມພານທີ່ນະຄອນວຽງຈັນ ເຈົ້າຣາຊບຸດຈຶ່ງໄດ້ອຸປພິເສກກັບເຈົ້າຍິງຈັນທະກຸມາຣີຂະນິດຖາຂອງເຈົ້າອິນທະກຸມານ ໄດ້ຣາຊໂອຣົດສອງອົງຄື ເຈົ້າກິງກິສຣາຊ ແລະເຈົ້າອິນທະໂສມ ສ່ວນເຈົ້າອິນທະກຸມານໄດ້ອຸປພິເສກກັບເຈົ້ານາງກ່ຳ ຣາຊທິດາຂອງໄພບໍ່ປາກົດ ໄດ້ໂອຣົດອົງໜຶ່ງຊົງນາມວ່າ "ເຈົ້າອິນກ່ຳ" (ເຈົ້າອົງນົກ).

ພຣະເຈົ້າສຸຣິຍະວົງສາທັມມິກຣາຊມີໂອຣົດແລະທິດາສາມອົງຄື ເຈົ້າຣາຊບຸດ, ເຈົ້າຍິງກຸມາຣີ, ເຈົ້າຍິງສຸມັງຄລະ, ຕໍ່ມາເຈົ້າຣາຊບຸດໄດ້ປະພຶດຜິດລູກເມັຽຂອງມະຫາດເລັກ ມະຫາດເລັກໄດ້ເປັນໂຈດທູນດີກາຟ້ອງ ສົມເດັດພຣະເຈົ້າສຸຣິຍະວົງສາທັມມິກຣາຊສອບສວນໄດ້ຄວາມຈິງ ຈຶ່ງໄດ້ໃຫ້ນຳເຈົ້າຣາຊບຸດໄປປະຫານເສັຽທີ່ພາລ້າງ ເພື່ອບໍ່ໃຫ້ເປັນຢ່ຽງຢ່າງແກ່ຄົນອື່ນ ໆ ຕໍ່ໄປ ອັນນີ້ສແດງໃຫ້ເຫັນວ່າ ພຣະເຈົ້າສຸຣິຍະວົງສາ

ເປັນກະສັດທີ່ຊົງ ຄວາມບໍລິຫັນບັງບອດ ຣາຊໂອຣົດຂອງພຣະອົງເອງກະທຳຜິດກໍ່ຖືກປະຫານຊີວິດ.

ສົມເດັດພຣະເຈົ້າ ສຸຣິຍະວົງສາ ທັມມິກຣາຊປູ່ໃນຣາຊສົມບັດໄດ້ ៥៧ ພັນສາ ສວັນຄົຕເມື່ອ ພ.ສ. ໒໒໓໗ ບໍ່ມີໂອຣົດສືບຣາຊສົມບັຕແທນ ເມື່ອສິ້ນຣັຊກາລຂອງພຣະອົງແລ້ວ ຈຶ່ງເຮັດໃຫ້ບ້ານເມືອງເກີດຄວາມຫຍຸ້ງຍາກອີກ.

៥០. <u>ຣັຊກາລພຣະເຈົ້າອົງຫລ່ ແລະພຣະບາເມືອງຈັນ</u> (ພ.ສ. ໒໒໓໗ ເຖິງ ໒໒៥໒)

ເມື່ອພຣະເຈົ້າສຸຣິຍະວົງສາ ທັມມິກຣາຊສວັນຄົຕແລ້ວ ບໍ່ມີຣາຊໂອຣົດສືບຣາຊສົມບັຕ ມີແຕ່ຣາຊນັດດາຄືເຈົ້າກິງກິສຣາຊແລະເຈົ້າອິນທະໂສມ ຂນະນັ້ນພຣະບາເມືອງຈັນຊຶ່ງເປັນເສນາບໍດີ ໄດ້ແຍ່ງຣາຊສົມບັຕໄດ້ຄອງແຜ່ນດິນລ້ານຊ້າງໃນປີ ພ.ສ. ໒໒໓໗ ແລະຈະເອົາພຣະນາງ ສຸມັງຄລະຣາຊທິດາຂອງພຣະເຈົ້າສຸຣິຍະວົງສາຊຶ່ງເປັນໝ້າຍມີໂອຣົດຊື່ເຈົ້າອົງຫລ່ ກັບບັງຊົງຄັນປູ່ອີກນັ້ນເປັນມເຫສີ ແຕ່ພຣະນາງບໍ່ຍິນຍອມ ພຣະບາເມືອງຈັນ ຈຶ່ງຄິດ ກຳຈັດ ເຈົ້າອົງຫລ່ ແລະ ພຣະນາງສຸມັງຄລະ ອຳມາດທີ່ເປັນພວກຂອງເຈົ້າອົງຫລ່ ຈຶ່ງ

ພາເຈົ້າອົງຫລໍ່ໜີໄປເມືອງພານພູຊູນປະເທດວຽດນາມ ສ່ວນພຣະນາງສຸມັງຄລະ ໜີໄປເພິ່ງ ພຣະຄຣູຍອດແກ້ວ ວັດໂພນສະເມັກ

ຝ່າຍ ພຣະຍາ ເມືອງຈັນ ເຫັນ ຄົນ ນັບຖື ພຣະຄຣູຍອດແກ້ວຫລາຍ ກໍເກງວ່າທ່ານພຣະຄຣູຈະຄິດແຍ່ງຣາຊສົມບັດ ຈຶ່ງຄິດ ກໍາຈັດທ່ານພຣະຄຣູຍອດແກ້ວ ທ່ານ ພຣະຄຣູ ຮູ້ຕົວກ່ອນ ຈຶ່ງໄດ້ ພາ ຍາດໂຍມ ປະມານ ສາມພັນ ພ້ອມດ້ວຍພຣະນາງສຸມັງຄລະໜີຈາກວຽງຈັນລ່ອງໄປຕາມຣູແມ່ນ້ຳຂອງ ເຖິງບ້ານງິ້ວພັນລຳໂສມສນຸກ ກໍພາຍາດໂຍມຂຶ້ນພັກເຊົາທີ່ນັ້ນ ສ່ວນພຣະນາງສຸມັງຄລະໜີໄປລີ້ຢູ່ພູລະງ້ ທ່ຄໍາ ແລະໄດ້ປະສູດໂອຣົດຊົງນາມວ່າ "ເຈົ້າໜໍ່ກະສັດ"

ສ່ວນ ພຣະຍາ ເມືອງຈັນ ຄອງຣາຊ ສົມບັດ ມາໄດ້ຫົກເດືອນ ກໍຖືກ ພັກພວກຂອງເຈົ້າອົງຫລໍ່ຍົກພົນມາຈັບຂ້າເສັຽ ແລະອະພິເສກພຣະເຈົ້າອົງຫລໍ່ຂຶ້ນເປັນກະສັດຄອງກຸງລ້ານຊ້າງສືບຕໍ່ມາ ເຈົ້າອົງຫລໍ່ຄອງຣາຊສົມບັດໄດ້ ໔ ປີ ກໍຖືກ ເຈົ້ານັນທະຣາຊ ຍົກ ກອງທັບມາຈາກເມືອງນະຄອນ ພະນົມ ຈັບປະຫານຊີວິດ ເສັຽ ເມື່ອ ພ.ສ. ໒໒໔໒.

໕໑. <u>ຣັຊກາລເຈົ້າບັນທະຣາຊ</u> (ພ.ສ. ໒໒໔໒–໒໒໔໓)

ເຈົ້າບັນທະຣາຊໂອຣົດຂອງເຈົ້າບຸ ຊຶ່ງໜີໄປຢູ່ເມືອງນະຄອນພະນົມ ໃນສໄມແຜ່ນດິນສຸຣິຍະວົງສາທັມມິກຣາຊນັ້ນ ເມື່ອໄດ້ຊາບຂ່າວວ່າທາງວຽງຈັນເກີດການວຸ້ນວາຍແຍ່ງຣາຊສົມບັດກັນ ກໍນຶກກອງທັບຂຶ້ນມາຕີນະຄອນວຽງຈັນ ຈັບເຈົ້າອົງຫລໍ່ໄດ້ ກໍຂ້າເສັຽ ແລ້ວຂຶ້ນຄອງຣາຊສົມບັດແທນ ເຈົ້າບັນທະຣາຊຄອງຣາຊສົມບັດໄດ້ໜຶ່ງປີກໍຖືກເຈົ້າໄຊອົງເວ້ຈັບຂ້າ ເມື່ອ ພ.ສ. ໒໒໔໓.

໕໒. <u>ຣັຊກາລພຣະເຈົ້າໄຊອົງເວ້</u> (ພ.ສ.໒໒໔໓–໒໒໕໐)

ພຣະເຈົ້າໄຊອົງເວ້ຫລືພຣະເຈົ້າໄຊເຊດຖາທິຣາຊທີ ໒. ເປັນໂອຣົດຂອງເຈົ້າຊົມພູທີ່ໜີໄປຢູ່ໃນປະເທດແກວ (ວຽດນາມ) ໃນສໄມແຜ່ນດິນຂອງພຣະເຈົ້າສຸຣິຍະວົງສາທັມມິກຣາຊ ເມື່ອໄດ້ຊາບຂ່າວວ່າວຽງຈັນເກີດຍາດແຍ່ງຣາຊສົມບັດກັນຂຶ້ນດັ່ງນັ້ນ ພຣະອົງກໍນຳທັບມາຍຶດເອົານະຄອນວຽງຈັນ ຈັບເຈົ້າບັນທະຣາຊໄດ້

ກໍສຳເຣັດໂທດເສັຽ ເສນາອຳມາດ ຈຶ່ງອັນເຊີນເຈົ້າໄຊ ອົງເວ້ຂຶ້ນຄອງຣາຊສົມບັດ ຊົງພຣະນາມວ່າ "ສົມເດັດພຣະເຈົ້າໄຊເຊດຖາທິຣາຊທີ່ ໒." ຫລືເອີ້ນກັນວ່າ "ເຈົ້າໄຊອົງເວ້" ເພາະໜີໄປຢູ່ເມືອງເວ້ປະເທດແກວ ເມື່ອໄດ້ຂຶ້ນຄອງຣາຊສົມບັດແລ້ວ ຈຶ່ງໄດ້ຕັ້ງເຈົ້າລອງ ອະນຸຊາຮ່ວມແມ່ດຽວກັນ ຂຶ້ນເປັນອຸປຣາຊຄອງເມືອງ ຫລວງພຣະບາງ.

ເຖິງປີສລູຈຸລະສັກຣາຊ ໑໐໖໗ ເຖິງ ໒໒໔໘ ສົມເດັດພຣະເຈົ້າໄຊເຊດຖາທິຣາຊໄດ້ອັນເຊີນພຣະບາງມາ ປະດິດສະຖານໄວ້ທີ່ນະຄອນວຽງຈັນ ເມື່ອເດືອນ ໔ ແຮມ ໔ ຄ່ຳ ວັນອັງຄານແລະອັນເຊີນໄປປະດິດສະຖ ນໄວ້ທີ່ວັດ ປ່າສະຫລວງ ຂນະທີ່ເຈົ້າໄຊອົງເວ້ຂຶ້ນຄອງຣາຊສົມບັດ ນັ້ນ ເຈົ້າກິງກິສຣາຊກັບເຈົ້າອິນທະໂສມ ເຈົ້າອົງນົກ ຣາຊບັດດາຂອງພຣະເຈົ້າສຸຣິຍະວົງສານັ້ນ ເກງວ່າ ພຣະເຈົ້າໄຊອົງເວ້ຈະທຳຮ້າຍ ຈຶ່ງໄດ້ອົພພະຍົບໜີໄປ ເຈົ້າກິງກິສຣາຊໄປຢູ່ເມືອງພົງ ເຈົ້າອິນທະໂສມໄປຢູ່ ເມືອງແພ່.

ເຖິງ ພ.ສ. ໒໒໔໙ ເຈົ້າກິງກິສຣາຊແລະເຈົ້າອົງ ນົກໄດ້ຍົກກອງທັບມາຕີເອົາເມືອງຫລວງພຣະບາງໄດ້

ເຈົ້າລອງສູ້ບໍ່ໄດ້ ໄດ້ໜີລົງເຮືອມາວຽງຈັນ ສ່ວນເຈົ້າກິງກິສຣາຊ ເມື່ອຕີໄດ້ ເມືອງຫລວງ ພຣະບາງແລ້ວກໍ່ບົກກອງທັບລົງມາຕີນະຄອນວຽງຈັນ ພຣະເຈົ້າໄຊອົງເວ້ເຫັນທ່າວ່າຈະສູ້ບໍ່ໄດ້ ຈຶ່ງແຕ່ງທູຕໄປຂໍກອງທັບ ກຸງສີອະຍຸທະຍາມາຊ່ວຍ ຝ່າຍກຸງສີອະຍຸທະຍາໃນແຜ່ນດິນສົມເດັດພຣະເພດຣາຊາ ໄດ້ໃຫ້ແມ່ທັບບົກກອງທັບມາຊ່ວຍ ແມ່ທັບໄທ ໄກ່ເກັ່ງໃຫ້ເຈົ້າກິງກິສຣາຊແລະເຈົ້າໄຊອົງເວ້ປອງດອງກັນ ກະສັດທັງສອງຈຶ່ງຕົກລົງແບ່ງດິນແດນລາວ (ອານາຈັກລ້ານຊ້າງ) ອອກເປັນຣັດອິສຣະສອງຣັດເມື່ອ ພ.ສ. ໒໒໕໐ ດັ່ງ.

໑. ອານາຈັກລ້ານຊ້າງຫລວງພຣະບາງ ມີອານາເຂດແຕ່ປາກນ້ຳເຫືອງ ຂຶ້ນໄປເປັນດິນແດນຂອງອານາຈັກລ້ານຊ້າງຫລວງພຣະບາງ.

໒. ອານາຈັກລ້ານຊ້າງວຽງຈັນ ມີອານາເຂດນັບແຕ່ປາກນ້ຳເຫືອງລົງມາ ເປັນດິນແດນຂອງອານາຈັກລ້ານຊ້າງວຽງຈັນ.

ອານາຈັກລ້ານຊ້າງ ຫລວງພຣະບາງ ແລະອານາຈັກລ້ານຊ້າງວຽງຈັນ ຈຶ່ງຕ່າງມີ ພຣະເຈົ້າ ແຜ່ນດິນປົກຄອງເປັນອິສຣະຕໍ່ກັນ ຕໍ່ມາເຖິງ ພ.ສ. ໒໒໕ປີ ອາ

ບາຈັກ ລ້ານຊ້າງວຽງຈັນໄດ້ແຍກອອກໄປເປັນ ຣັຖອິສຣະ ອີກຣັຖໜຶ່ງ ຄືນະຄອນຈໍາປາສັກ ອານາຈັກລ້ານຊ້າງ ເດີມ ຈຶ່ງແຍກອອກເປັນຣັຖອິສຣະເຖິງສາມຣັຖ ຄື :-

໑. ອານາຈັກລ້ານຊ້າງຫລວງພຣະບາງ ມີອາ ນາເຂດແຕ່ແມ່ນໍ້າເຫືອງຂຶ້ນໄປ ເອີ້ນວ່າ "ລາວເໜືອ"

໒. ອານາຈັກລ້ານຊ້າງວຽງຈັນ ມີອານາເຂດແຕ່ ແມ່ນໍ້າເຫືອງລົງມາຮອດທ່າແຂກເອີ້ນວ່າ "ລາວກາງ"

໓. ອານາຈັກລ້ານຊ້າງນະຄອນຈໍາປາສັກ ມີອາ ນາເຂດແຕ່ສວັນນະເຂດລົງໄປຮອດແດນຂແມນ ເອີ້ນວ່າ "ລາວໃຕ້"

ທັງສາມຣັຖນີ້ໂຮມກັນເຂົ້າ ເອີ້ນວ່າ "ອານາຈັກ ລ້ານຊ້າງ ຫລື ອານາຈັກລາວໃນປັດຈຸບັນນີ້"

(ຄໍາບັນທຶກຂອງຜູ້ຮວບຮວມ :-

"ໃນພຣະຣາຊພົງສາວະດານ ສະບັບ ພິສດານ ເຫລັ້ມສອງ ພ.ສ. ໒໔໘໒ ຂອງໄທ ປາກົດວ່າພຣະເຈົ້າ ກຸງສີສັດນາຄນະຫຸດ ໃຫ້ແສນ ສຸພົຈນາໄມຕຣີ ເປັນ ຣາຊ ທູດ ໄປຂໍ ກອງທັບໄທ ມາຊ່ວຍ ຕໍ່ສູ້ ກັບ ທັບຫລວງ ພຣະ ບາງນັ້ນເປັນປີກຸນສັປຕະສົກຈຸລະສັກຣາຊ ໑໐໕໗ ກົງ ກັບ ພ.ສ. ໒໒໓໘ ເທົ່ານັ້ນ ແຕ່ພົງສາວະດານຂອງໄທ

ທາງຝ່າຍໄທກໍໄດ້ກ່າວໄວ້ວ່າ ເວລາຄາດເຄື່ອນຜິດໄປຈາກຄວາມຈິງຕັ້ງ ໑໒ ປີ ເຫດນີ້ຂ້າພະເຈົ້າຜູ້ຮວບຮວມຈຶ່ງໄດ້ຖືເອົາປີທີ່ ຣາຊອານາຈັກລ້ານຊ້າງແຍກອອກເປັນຣັຖອິສຣະສອງຣັຖໃນປີ ພ.ສ. ໒໒໕໐ ຊຶ່ງກົງກັບພົງສາວະດານຫລາຍສະບັບ ແລະປີທີ່ສົມເດັດພຣະເຈົ້າໄຊອົງເວ້ ອັນເຊີນພຣະບາງລົງມາປະດິດສະຖານໄວ້ທີ່ນະຄອນວຽງຈັນນັ້ນເປັນປີສລູ ຈຸລສັກຣາຊ ໑໐໖໗ ຊຶ່ງກົງກັບ ພ.ສ. ໒໒໔໗.

ເຫດທີ່ອານາຈັກລ້ານຊ້າງແຍກອອກເປັນຣັຖອິສຣະສອງຣັຖນັ້ນຈຶ່ງຄວນເປັນ ພ.ສ. ໒໒໕໐ ແນ່ນອນກວ່າ ພ.ສ. ໒໒໖໗)

ພາກທີ່ສີ່
ວ່າດ້ວຍອານາຈັກລ້ານຊ້າງ ຫລວງພຣະບາງ

---

໑. <u>ຣັຊກາລເຈົ້າກິງກິສຣາຊ</u> ພ.ສ. ໒໒໕໐ ເຖິງ ໒໒໕ປີ.

ເມື່ອອານາຈັກລ້ານຊ້າງໄດ້ແບກອອກເປັນຣັຖອິສຣະສອງຣັຖຄືຣັຖຫລວງພຣະບາງ ແລະຣັຖວຽງຈັນ ຫລືເອີ້ນວ່າ "ລ້ານຊ້າງຮົ່ມຂາວຫລວງພຣະບາງ" ແລະ "ລ້ານຊ້າງຮົ່ມຂາວວຽງຈັນ" ເມື່ອ ພ.ສ. ໒໒໕໐ ໃນສໄມຂອງພຣະເຈົ້າໄຊອົງເວ້ (ພຣະເຈົ້າໄຊເຊດຖາທີສອງ) ເປັນກະສັດຄອງອານາຈັກລ້ານຊ້າງ ເຈົ້າໄຊອົງເວ້ໄດ້ໃຫ້ເຈົ້າລອງອະນຸຊາ ເປັນອຸປຣາຊຂຶ້ນໄປຄອງຫລວງພຣະບາງ ຂນະນັ້ນເຈົ້າກິງກິສຣາຊ, ເຈົ້າອິນທະໂສມ, ເຈົ້າອົງບົກ, (ເຈົ້າອົງຄຳ) ປ້ານເຈົ້າໄຊອົງເວ້ຂ້າ ຈຶ່ງໜີໄປຢູ່ເມືອງພົງ ສ່ວນເຈົ້າອິນທະໂສມໜີໄປຢູ່ເມືອງແພ່ ຕໍ່ມາເຈົ້າກິງກິສຣາຊແລະເຈົ້າອົງບົກຊຶ່ງໜີໄປຢູ່ເມືອງພົງໄດ້ບົກກອງທັບມາຕີເອົາ

ເມືອງຫລວງພຣະບາງ ເຈົ້າອຸປຣາຊລອງເຫັນວ່າຈະສູ້ບໍ່ໄດ້ຈຶ່ງໄດ້ອົພຍົບລົງມາວຽງຈັນ.

ຝ່າຍເຈົ້າກິງກິສຣາຊແລະເຈົ້າອິງນົກ ເມື່ອໄດ້ຫລວງພຣະບາງແລ້ວຈຶ່ງໄດ້ຍົກກອງທັບ ຕາມລົງມາຕີວຽງຈັນ ເຈົ້າໄຊອົງເວ້ສູ້ບໍ່ໄດ້ ຈຶ່ງແຕ່ງຣາຊທູດຈຳທູນພຣະຣາຊສານໄປຖວາຍແກ່ສົມເດັດພຣະເຈົ້າກຸງສີອະຍຸທະຍາ ທາງກຸງສີອະຍຸທະຍາຈຶ່ງໄດ້ໃຫ້ແມ່ທັບໄທນຳທະຫານມາຊ່ວຍພຣະເຈົ້າໄຊອົງເວ້ ແລະໄດ້ຂໍຮ້ອງໃຫ້ເຈົ້າຫລວງພຣະບາງ ແລະວຽງຈັນສາມັກຄີປອງດອງກັນ ບໍ່ໃຫ້ຣົບເຮົວຂ້າຟັນກັນເອງຕໍ່ໄປອີກ ເຫດນີ້ອານາຈັກລ້ານຊ້າງຈຶ່ງໄດ້ແບກອອກເປັນຣັຖອິສຣະສອງຣັຖ ຄືທາງຝັ່ງຂວາແມ່ນ້ຳຂອງ ແຕ່ເໜືອແມ່ນ້ຳເຫືອງຂຶ້ນໄປແລະ ຝັ່ງຊ້າຍແມ່ນ້ຳຂອງ ແຕ່ເຂດແມ່ນ້ຳມີຂຶ້ນໄປເປັນອານາເຂດຂອງຫລວງພຣະບາງ (ລ້ານຊ້າງຮົ່ມຂາວຫລວງພຣະບາງ) ໃຕ້ແມ່ນ້ຳເຫືອງ ນ້ຳມີລົງມາເປັນເຂດແດນວຽງຈັນ (ລ້ານຊ້າງຮົ່ມຂາວວຽງຈັນ) ເຈົ້າກິງກິສຣາຊສວັນຄົດເມື່ອ ພ.ສ. ໒໒໕໐

(ບັນທຶກ : ຕາມພຣະຣາຊສານໃນພົງສາວະດານໄທເປັນປີ ໒໒໐໗ ແຕ່ພົງສາວະດານໄທ ສັກຣາຊກໍ່

ເດືອນໄປເຖິງ ໑໒ ປີ ເຊັ່ນໃນພົງສາວະດານໄທວ່າ ເສັງ ກຸງສີອະບຸທະຍາຄັ້ງແຣກກົງກັບ ພ.ສ. ໑໐໙໙ ແຕ່ ຄວາມຈິງ ກຸງສີອະບຸທະຍາ ເສັຽແກ່ພະມ້າ ເທື່ອ ທຳອິດ ນັ້ນເມື່ອ ພ.ສ. ໒໑໑໑.

ພົງສາວະດານໄທສະບັບສັງເຂບເຫລັ້ມ ໑ ພ.ສ. ໒໔໘໒ ໜ້າ ໑໒ ວ່າ "ເມື່ອເສັຽກຸງເທບພຣະມະຫາ ນະຄອນແກ່ພຣະເຈົ້າຫົງສາວະດີນັ້ນ ແມ່ນວັນເສົາ ເດືອນເກົ້າແຮມ ໑໑ ຄ່ຳ ສັກຣາຊ ໙໑໘ ປີມະໂຣງອັຖະ ສົກເວລາເຊົ້າສາມບາລິກາ (ຈຸລສັກຣາຊ ໙໑໘ ກົງກັບ ພ.ສ. ໑໐໙໙ = ຜູ້ຂຽນ.)

໖. ຣັຊກາລເຈົ້າອົງບົກຫລືເຈົ້າອົງດຳ (ສົມເດັດ ພຣະບໍຣົມຂັດຕິຍະວົງສາ)

ພ.ສ. ໒໒໕໐ ເຖິງ ໒໒໐໐

ເມື່ອເຈົ້າກິງກິສຣາຊສວັນຄົດແລ້ວ ເຈົ້າອົງບົກ ອຸປຣາຊໄດ້ຄອງຣາຊສົມບັດຕໍ່ມາ ຊົງພຣະນາມວ່າ ສົມເດັດພຣະບໍຣົມຂັດຕິຍະວົງສາ ຝ່າຍເຈົ້າອິນທະໂສມ ຊຶ່ງໜີໄປຢູ່ເມືອງແພ່ນັ້ນ ໄດ້ກ້ຽວກ່ອນເອົາຊາວເມືອງ ຫລ້າເມືອງພົງ ແລ້ວຍົກກອງທັບມາຕີເອົາເມືອງຫລວງ

ພຣະບາງ ຝ່າຍສົມເດັດພຣະບໍຣົມຂັດຕິຍະວົງສາເຫັນວ່າ ເປັນພີ່ນ້ອງກັນບໍ່ປາກຣົບເຮົວຂ້າພັນກັນເອງ ຈຶ່ງແຕ່ງຕັ້ງໃຫ້ອຳມາດ ແລະ ພຣະຣາຊາຄນະ ອອກໄປ ຫາເຈົ້າ ອິນທະໂສມ ເຊີນມາປົກຄອງ ບ້ານເມືອງ ຊ່ວຍກັນ ເຈົ້າອິນທະໂສມຈຶ່ງໄດ້ເຂົ້າຢູ່ຫລວງພຣະບາງເຖິງ ພ.ສ. ໒໒໖໖ ເຈົ້າອິນທະໂສມແຍ່ງຣາຊສົມບັດຈາກສົມເດັດພຣະບໍຣົມຂັດຕິຍະວົງສາ ຂນະທີ່ ພຣະອົງສເດັດ ອອກໄປຕໍ່ນົກ ແລ້ວປິດປະຕູເມືອງບໍ່ໃຫ້ສົມເດັດພຣະບໍຣົມຂັດຕິຍະວົງສາກັບເຂົ້າເມືອງໄດ້.

ຝ່າຍສົມເດັດພຣະບໍຣົມຂັດຕິຍະວົງສາຊາບວ່າເຈົ້າອິນທະໂສມແຍ່ງຣາຊສົມບັດ ກໍໜີຈາກເມືອງຫລວງພຣະບາງໄປເມືອງຊຽງໃໝ່ ແລະໄດ້ອຸປສົມບົດ (ບວດ) ເປັນພິກສຸຢູ່ໃນວັດເມືອງຊຽງໃໝ່ ຕໍ່ມາກໍ່ໄດ້ເປັນກະສັດຄອງເມືອງຊຽງໃໝ່ ແລະສິ້ນພຣະຊົນຢູ່ໃນກຸງລ້ານນາ ເຫດທີ່ຈະ ໄດ້ເປັນ ກະສັດ ຄອງກຸງລ້ານນາ ກໍເນື່ອງ ຈາກພະມ້າຍົກທັບມາຕີເມືອງຊຽງໃໝ່ ພໍດີກະສັດເມືອງຊຽງໃໝ່ສວັນຄົດ ເສນາອຳມາດຈຶ່ງສຽງຫາກະສັດທີ່ຈະຄອງກຸງລ້ານນາຕໍ່ໄປ ໂດຍຈາຣຶກນາມຂອງເຈົ້າອົງນົກ ແລະໂອຣົດ ພຣະເຈົ້າ ຊຽງໃໝ່ ໃສ່ຂັນທອງຄຳ ອົງ ລະໃບ

ອະທິຖານແລ້ວເອົາໄປລອຍລົງແມ່ນ້ຳປິງ ປາກົດວ່າຂັນ
ທີ່ຈາຣຶກ ນາມ ຂອງເຈົ້າອົງນົກນັ້ນ ລອຍຂຶ້ນໄປທາງເໜືອ
ນ້ຳ ເສນາອຳມາດຈຶ່ງມີຄວາມໂສມະນັດ ອັນເຊີນເຈົ້າ
ອົງນົກລາຜນວດ ແລະຂຶ້ນຄອງຣາຊສົມບັດກຸງລ້ານນາ
ເມື່ອຂຶ້ນ ຄອງຣາຊ ສົມບັດ ແລ້ວ ພຣະອົງກໍນຳ ກອງທັບຕີ
ທັບພະມ້າແຕກຖອຍໄປ ພຣະອົງສເວີຍ ຣາຊສົມບັດໃນ
ນະຄອນຊຽງໃໝ່ ຈົນສິ້ນພຣະຊົນ.

໓. <u>ຣັຊກາລເຈົ້າອິນທະໂສມ</u> (ພ.ສ. ໒໒໓໓ -
໒໒໔໒)

ພ.ສ. ໒໒໓໓ ເຈົ້າອິນທະໂສມກັບພຣະຍາເມືອງ
ຊ້າຍ ຄົບຄິດ ກັນແບ່ງ ຣາຊສົມບັດ ໂດຍ ປິດປະຕູເມືອງ
ບໍ່ໃຫ້ ສົມເດັດ ພຣະບໍຣົມຂັດຕິຍະວົງສາ ຊຶ່ງອອກໄປ ຕີນົກ
ນັ້ນກັບ ເຂົ້າເມືອງໄດ້ ເສນາອຳມາດຈຶ່ງຣັບເຊີນເຈົ້າ
ອິນທະໂສມຂຶ້ນຄອງຣາຊສົມບັດ ເຈົ້າອິນທະໂສມຄອງ
ຣາຊສົມບັດໄດ້ ໒໑ ປີ ສວັນຄົດເມື່ອ ພ.ສ. ໒໒໔໒ ມີ
ພຣະຣາຊໂອຣົດ ໙ ອົງ ຄື ເຈົ້າໂຊຕິກະ, ເຈົ້າອະນຸ
ຣຸດ, ເຈົ້ານາກ, ເຈົ້ານາຣັທະ, ເຈົ້າເຊດຖາວົງ, ເຈົ້າ
ອົງເອກ, ເຈົ້າສຸຣິຍະວົງ, ເຈົ້າສຸຣະວົງ, ເຈົ້າອິນທະວົງ
ແລະຍັງມີຣາຊທິດາຫົກອົງຄື: ເຈົ້າບົງແກ້ວຣັຕນະ

ພິມພາ, ເຈົ້າຍິງສີຄຳກອງ, ເຈົ້າຍິງສຸຊາດາ, ເຈົ້າຍິງສຸທັມມາ, ເຈົ້າຍິງສຸບັນທາ, ແລະເຈົ້າຍິງແວ່ນແກ້ວ.

໔. <u>ຣັຊກາລເຈົ້າໄຊຕິກະ</u> (ພ.ສ. ໒໒໙໓-໒໓໑໔)

ຂນະທີ່ເຈົ້າອິນທະໂສມສວັນຄົດນັ້ນ ບັງວ່າງແຜ່ນດິນຢູ່ ພໍດີມີເສິກແກວມາຕີຫລວງພຣະບາງ ເສນາອຳມາດ ຈຶ່ງສົ່ງທະຫານໃດ້ເຈົ້າອິນທະວົງ ເປັນແມ່ທັບ ຍົກໄປຕີແກວ (ວຽດນາມ) ແຕກໄປ ເສນາອຳມາດຈຶ່ງອັນເຊີນເຈົ້າອິນທະວົງຂຶ້ນຄອງຣາຊສົມບັດ ຢູ່ໃນຣາຊສົມບັດໄດ້ແປດເດືອນ ເຈົ້າອິນທະວົງຢ້ານພຣະເຊດຖາທັງແປດ ຈັກທຳອັນຕຣາຍ ຈຶ່ງໄດ້ມອບຣາຊສົມບັດແກ່ເຈົ້າໄຊຕິກະຄອງຕໍ່ໄປ ຕໍ່ມາພະມ້າຍົກກອງທັບມາຕີຫລວງພຣະບາງເຈົ້າໄຊຕິກະສູ້ບໍ່ໄດ້ ຈຶ່ງອົພຍົບອອກຈາກເມືອງໄປ ພະມ້າເຂົ້າເມືອງໄດ້ຈັບເອົາເຈົ້າສຸຣິຍະວົງສາແລະອະນຸຊາ ພ້ອມດ້ວຍໄພ່ຣາສດອນໄປປະເທດພະມ້າ ເມື່ອພະມ້າອອກຈາກເມືອງໄປແລ້ວເຈົ້າໄຊຕິກະຈຶ່ງໄດ້ຫລົບຄືນມາຄອງຫລວງພຣະບາງສືບຕໍ່ໄປອີກ.

ຕໍ່ມາເຈົ້າສຸຣິຍະວົງສາ ຊຶ່ງພະມ້າ ຈັບໄປໄດ້ນັ້ນ ໄດ້ຊັກຊວນ ເອົາ ທະຫານຊຽງໃໝ່ ແລະໄພ່ພົນຫລວງ

ພຣະບາງທີ່ພະມ້າຈັບໄປນັ້ນໜີພະມ້າໄປຢູ່ເມືອງແຖງ ແລ້ວເກັ້ຽກ່ອມ ຊັກຊວນ ເອົາ ຫົວເມືອງ ຕ່າງ ໆ ຍົກມາຕີເອົາຫລວງພຣະບາງໄດ້ ເຈົ້າໄຊຕິກະໜີຈາກເມືອງໄປ ພຣະບາງສີຄໍາກອງຊຶ່ງບໍ່ຍອມໜີໄປນໍາເຈົ້າໄຊຕິກະ ໄດ້ອອກໄປວ່າກ່າວຫ້າມປາມບໍ່ໃຫ້ພີ່ນ້ອງຂ້າກັນເອງ ເຈົ້າໄຊຕິກະຈຶ່ງຍອມກັບເຂົ້າມາໃນເມືອງ ແລ້ວມອບຣາຊສົມບັດໃຫ້ແກ່ເຈົ້າສຸຣິຍະວົງສາເມື່ອ ພ.ສ. ໒໓໑໔

໕. ຣັຊກາລເຈົ້າສຸຣິຍະວົງສາ (ພ.ສ. ໒໓໑໔ - ໒໓໓໔)

ເຈົ້າສຸຣິຍະວົງສາຂຶ້ນຄອງຫລວງພຣະບາງໄດ້ ສອງປີ ໄດ້ຍົກກອງທັບມາຕີເມືອງວຽງຈັນ ເມື່ອ ພ.ສ. ໒໓໑໖ ຕັ້ງຄ່າຍລ້ອມວຽງຈັນຢູ່ສອງເດືອນກໍ່ຍັງຕີເອົາບໍ່ໄດ້ ເຈົ້າສີຣິບຸນສານ ເຈົ້ານະຄອນວຽງຈັນຈຶ່ງໄດ້ແຕ່ງຣາຊທູດໄປຂໍກອງທັບພະມ້າທີ່ນະຄອນຊຽງໃໝ່ຍົກໄປຕີເອົາຫລວງພຣະບາງ (ຊຽງໃໝ່ຂນະນັ້ນຍັງຕົກເປັນເມືອງຂຶ້ນຂອງພະມ້າຢູ່) ເຈົ້າສຸຣິຍະວົງສາຊາບຂ່າວເສິກພະມ້າກໍ່ຖອຍທັບກັບໄປຫລວງພຣະບາງແລະຍອມທໍາສັນຍາສງົບເສິກກັບພະມ້າ ຝ່າຍພະມ້າ

ກໍບໍ່ຍອມຕາມເພາະຂນະນັ້ນ ພະມ້າກຳລັງທຳສົງຄາມຕິດພັນກັບໄທຢູ່ (ໄທກຳລັງທຳສົງຄາມກັບພະມ້າເນື່ອງຈາກ ການ ກູ້ເອກຣາຊ ຄັ້ງທີ່ສອງ ໃນສໄມ ຂອງ ສົມເດັດພຣະເຈົ້າຕາກສິນ)

ຕໍ່ມາເຈົ້າສຸຣິຍະວົງສາ ເຫັນວ່າ ພະມ້າ ທຳສົງຄາມ ພ່າຍໄທ ທຸກເທື່ອ ຈຶ່ງໄດ້ ເອົາໃຈ ອອກຫ່າງ ຈາກພະມ້າ ມາ ຝັກໃຝ່ ເປັນຝ່າຍໄທ ເມື່ອ ພ.ສ. ໒໓໒໐ ກອງທັບໄທຍົກມາຕີນະຄອນວຽງຈັນ ເຈົ້າສຸຣິຍະວົງສາເຫັນເປັນໂອກາດທີ່ຈະແກ້ແຄ້ນ - ວຽງຈັນ ຈຶ່ງຮັບອາສາກອງທັບໄທ ເຂົ້າຕີ ນະຄອນ ວຽງຈັນ ທາງດ້ານ ທິດເໜືອຊ່ວຍກອງທັບໄທ ຈົນນະຄອນວຽງຈັນຕ້ອງແຕກເສັຽທີແກ່ກອງທັບໄທເມື່ອ ພ.ສ. ໒໓໒໑ ວຽງຈັນແລະຫລວງພຣະບາງ ຈຶ່ງຕ້ອງ ຕົກໄປເປັນ ປະເທດຣາຊ ຂອງໄທແຕ່ ພ.ສ. ໒໓໒໑ ເປັນຕົ້ນມາ ເຈົ້າສຸຣິຍະວົງສາສວັນຄົດເມື່ອ ພ.ສ. ໒໓໓໔ ຢູ່ໃນຣາຊສົມບັດ ໒໐ ປີ.

໓. ຣັຊກາລເຈົ້າອະນຸຣຸທະ (ພ.ສ. ໒໓໓໔ - ໒໓໖໐)

ນະຄອນຫລວງພຣະບາງຕົກໄປເປັນປະເທດຣາຊຂອງໄທ:ແຕ່ ພ.ສ. ໒໓໒໑ ເມື່ອເຈົ້າສຸຣິຍະວົງສາສວັນ

ຄິດແລ້ວ ເສນາອຳມາດຈຶ່ງໄດ້ແຈ້ງຂ່າວລົງໄປບາງກອກ ຂໍຕັ້ງເຈົ້າອະນຸຣຸທະ ໂອຣົດອົງທີສອງຂອງເຈົ້າອິນທະໂສມຂຶ້ນຄອງຣາຊສົມບັດ ໃຫ້ເຈົ້ານາກອະນຸຊາຂອງເຈົ້າອະນຸຣຸທະເປັນອຸປຣາຊ ເຈົ້າມັນທາຕຸຣາຊໂອຣົດເຈົ້າອະນຸຣຸທະເປັນຣາຊວົງ.

ເມື່ອ ພ.ສ. ໒໓໓໔ ເຈົ້າບັນທະເສນເຈົ້າຄອງນະຄອນວຽງຈັນ ໄດ້ຍົກ ກອງທັບ ຂຶ້ນມາຕີ ຫລວງພຣະບາງ ຈັບເອົາເຈົ້າອະນຸຣຸທະ, ເຈົ້ານາກ, ເຈົ້າມັນທາຕຸຣາຊ ສົ່ງລົງໄປຍັງບາງກອກ ເຈົ້າອະນຸຣຸທະຖືກກັກຕົວຢູ່ບາງກອກ ໔ ປີຈຶ່ງໄດ້ຫລົບຕ່າວຂຶ້ນມາຄອງຫລວງພຣະບາງຕາມເດີມເມື່ອ ພ.ສ. ໒໓໓໘ ທາງບາງກອກໂປດໃຫ້ເຈົ້າອຸປຣາຊນາກ ມີຕຳແໜ່ງ ອີກຕຳແໜ່ງໜຶ່ງ ເອີ້ນວ່າ "ເຈົ້າຫໍໜ້າ" ເຈົ້າອະນຸຣຸທະສິ້ນພຣະຊົນເມື່ອ ພ.ສ. ໒໓໕໐ ພຣະຊົນມາຍຸໄດ້ ໗໒ ພັນສາ ມີຣາຊໂອຣົດ ໕ ອົງ ຄື ເຈົ້າມັນທາຕຸຣາຊ, ເຈົ້າສຸທຳຣາຊ, ເຈົ້າໄຊຍະຣາຊ, ເຈົ້າຣາຊພົນ, ເຈົ້າອຸ່ນແກ້ວ. ເຈົ້າຊ້າງ, ແລະມີຣາຊທິດາສາມອົງ ຄື ເຈົ້າບົງປະທຸມມາ, ເຈົ້າບົງຫລ້າ, ເຈົ້າບົງໄວຍະກາ.

ງ. <u>ຣັຊກາລເຈົ້າມັນທາຕຸຣາຊ</u> (ພ.ສ. ໒໓໗໐-໒໓໗໙)

ເຈົ້າອະນຸຣຸທະສວັນຄົດແລ້ວ ເຈົ້າອຸປຣາຊນາກ ກໍໄດ້ສວັນຄົດໃນເວລາໃກ້ ໆ ກັນ ເຈົ້າມັນທາຕຸຣາຊຈຶ່ງ ໄດ້ຄອງຣາຊສົມບັດ ເຈົ້າສຸທິຣາຊເປັນອຸປຣາຊ ເຈົ້າ ໄຊຍະຣາຊເປັນຣາຊວົງເຖິງ ພ.ສ. ໒໓໗໒ ສົມເດັດ ພຣະພຸທະເລີດຫລ້ານະພາໄລ ຣັຊການທີ່ສອງຂອງ ໄທສວັນຄົດ ເຈົ້າມັນທາຕຸຣາຊໄດ້ມອບຣາຊສົມບັດໃຫ້ ເຈົ້າອຸປຣາຊຮັກສາການແທນ ພຣະອົງສເດັດໄປບາງ ກອກຂໍອຸປສົມບົດຕໍ່ໜ້າພຣະເພິ່ງສົບ ໄດ້ອຸປສົມບົດຢູ່ ວັດພຣະແກ້ວ ແລ້ວໄປຈໍາພັນສາຢູ່ວັດມະຫາທາດ ຮອດ ພ.ສ. ໒໓໗໙ ຈຶ່ງໄດ້ຕ່າວໄປຄອງຫລວງພຣະ ບາງຕາມເດີມ.

ເຈົ້າມັນທາຕຸຣາຊມີໂອຣົດ ໘ ອົງຄື ເຈົ້າສຸກເສີມ, ເຈົ້າຈັນທະຣາຊ, ເຈົ້າໂພເນື້ອທອງ, ເຈົ້າອຸ່ນຄໍາ, ເຈົ້າ ບົວຣະພັນ, ເຈົ້າສຸທິສານ, ເຈົ້າໂພທິສານ, ເຈົ້າສຸພັນ ແລະມີຣາຊທິດາ ໓ ອົງຄື ເຈົ້ານາງບອດຄໍາ, ເຈົ້ານາງ

ສົມນາ, ເຈົ້າຍິງທອງທິບ, ເຈົ້າຍິງເມັງຄຳ, ເຈົ້າຍິງສົມພິ, ເຈົ້າຍິງທອງສຸກ.

ພ.ສ. ໒໓໗໐ ເຈົ້າອະນຸວົງເຈົ້າຄອງນະຄອນວຽງຈັນໄດ້ຄິດກອບກູ້ເອກຣາຊແຍກເປັນອິສຣະອອກຈາກໄທ ໄດ້ແຕ່ງພຣະຣາຊສານໄປຂໍຄວາມຮ່ວມມືຈາກເຈົ້າມັນທາຕຸຣາຊຫລວງພຣະບາງ ເຈົ້າມັນທາຕຸຣາຊສແດງອາການເຮັດຄືດີໃຈ ແຕ່ວ່າພໍທູດກັບໄປແລ້ວໄດ້ແຕ່ງໃຫ້ເຈົ້າສຸກເສີມຣາຊໂອຣົດອົງໃຫຍ່ລົງໄປບາງກອກ ແຈ້ງເຫດໃຫ້ພຣະເຈົ້າແຜ່ນດິນໄທຊາບ ແລະເຈົ້າມັນທາຕຸຣາຊໄດ້ຈັດກຳລັງ ໕໐໐໐ ຄົນ ຮ່ວມມືກັບກອງທັບໄທມາຕີວຽງຈັນ ໃຫ້ເຈົ້າສຸທິສານເປັນແມ່ທັບ ເມື່ອແລ້ວເສິກ ເຈົ້າສຸທິສານຖືກຟ້ອງວ່າປິດບັງຄອບຄົວວຽງຈັນໄວ້ ຈຶ່ງໄດ້ຖືກສົ່ງຕົວລົງໄປກຸງເທບ (ບາງກອກ) ແລະໄດ້ເຖິງແກ່ກັມຢູ່ທີ່ບາງກອກ ເຈົ້າມັນທາຕຸຣາຊສວັນຄົດເມື່ອ ພ.ສ. ໒໓໗໒ ຢູ່ໃນຣາຊສົມບັດໄດ້ ໒໐ ປີ ພຣະຊົນມາຍຸໄດ້ ໗໔ ພັນສາ.

ຊ. <u>ເຈົ້າສຸກເສີມ</u> (ພ.ສ. ໒໓໘໑ – ໒໓໙໓)

ເມື່ອເຈົ້າມັນທາຕຸຣາຊສວັນຄົດແລ້ວ ທາງບາງກອກໄດ້ຕັ້ງໃຫ້ເຈົ້າອຸ່ນແກ້ວຮັກສາຣາຊການແຜ່ນດິນ

ມາຮອດ ພ.ສ. ໒໓໘໑ ຈຶ່ງໄດ້ອຸປພິເສກເຈົ້າສຸກເສີມ ຂຶ້ນຄອງຣາຊສົມບັດ ເປັນພຣະເຈົ້າແຜ່ນດິນຫລວງພຣະບາງ ແລະຊົງແຕ່ງຕັ້ງເຈົ້າອຸ່ນແກ້ວເປັນອຸປຣາຊ ເຈົ້າຈັນທະຣາຊເປັນຣາຊວົງ ເຈົ້າແກ່ນຄຳເປັນຣາຊບຸດ ສ່ວນເຈົ້າຣາຊອະໄພ ຊົງແຕ່ງຕັ້ງໃຫ້ເປັນເຈົ້າຣາຊອະໄພສຸຣິບະວົງສາ ຕໍ່ມາເຈົ້າຣາຊອະໄພສຸຣິບະວົງສາມີເຣື່ອງຖືກຟ້ອງວ່າຕິດຕໍ່ກັບແກວ (ວຽດນາມ) ຖືກຈັບສົ່ງຕົວໄປກຸງເທບ (ບາງກອກ) ແລະໄດ້ເຖິງແກ່ກັມປູ່ທີ່ບາງກອກ.

ເຈົ້າສຸກເສີມມີຣາຊໂອຣົດ ໖ ອົງຄ໌ ເຈົ້າຄຳເຫຼົ້າ, ເຈົ້າບຸນເພັດ, ເຈົ້າພິມະຈັກ. ເຈົ້າຄຳແສງ, ເຈົ້າພິມມາ, ເຈົ້າອິນທະຈັກ, ແລະມີຣາຊທິດາ ໗ ອົງຄ໌ ເຈົ້ານາງກັລຍາ, ເຈົ້ານາງຄຳອິ້ນ, ເຈົ້ານາງບຸສດີ, ເຈົ້ານາງບັບພາ, ເຈົ້ານາງຄຳສອນ, ເຈົ້ານາງອຸ່ນຄຳ, ເຈົ້ານາງຄຳປ້ອງ

ເຈົ້າອຸປຣາຊອຸ່ນແກ້ວມີຣາຊໂອຣົດ ໔ ອົງຄ໌ ເຈົ້າສີຣິສາ, ເຈົ້າສຸວັນພິມມາ, ເຈົ້າທອງຄຳ, ເຈົ້າຄຳມາ, ມີຣາຊທິດາສາມອົງຄ໌ ເຈົ້ານາງສຸພັນ, ເຈົ້ານາງປິ່ນຄຳ, ເຈົ້ານາງຄຳຊາວ.

ຕໍ່ມາເຖິງ ພ.ສ. ໒໓໙໐ ເມືອງຊຽງຮຸ່ງເກີດການວຸ້ນວາຍ ເຈົ້າສຸກເສີມຍົກກອງທັບຂຶ້ນໄປຣະງັບການວຸ້ນວາຍ ເພາະວ່າເມືອງຊຽງຮຸ່ງແລະຫລວງພຣະບາງເປັນເມືອງທີ່ມີຄວາມສຳຄັນ ເປັນພີ່ນ້ອງກັນມາແຕ່ສໄມພຣະເຈົ້າສຸຣິຍະວົງສາທັມມິກຣາຊ ແລະເຈົ້າອິນທະກຸມານ ໄດ້ຮັບເອົາເຈົ້າອຸປຣາຊຊຽງຮຸ່ງພ້ອມຄອບຄົວຕລອດຈົນໄພ່ຟ້າປະຊາຣາສດອນ ອົພ ຍົບລົງມາຢູ່ຫລວງພຣະບາງເປັນຈຳນວນມາກ.

ເຈົ້າສຸກເສີມຢູ່ໃນຣາຊສົມບັດໄດ້ ໑໒ ພັນສາ ສວັນຄົດເມື່ອ ພ.ສ. ໒໓໙໓ ພຣະຊົນມາຍຸໄດ້ ៥໓ ພັນສາ.

ໜ. <u>ຣັຊກາລເຈົ້າຈັນທະຣາຊ</u>: (ພ.ສ. ໒໓໙៥ - ໒໔໑໕)

(ເຈົ້າ ຈັນທຣະ ເທພ ປະພາ ຄຸນະ ສຸພະ ສຸນທອນ ທັມະທາດາ)

ເຈົ້າຈັນທະຣາຊໂອຣົດ ອົງທີ່ ໒ ຂອງເຈົ້າມັນທາຕຸຣາຊໄດ້ຂຶ້ນຄອງຣາຊສົມບັດໃນປີ ພ.ສ. ໒໓໙៥ ເຈົ້າອຸ່ນຄຳໂອຣົດ ອົງ ທີ່ ໔ ຂອງເຈົ້າ ມັນທາຕຸຣາຊ ເປັນ ອຸປຣາຊ ແລະເຈົ້າ ບົວຄຳໂອຣົດອົງ ທີ່ ៥ ຂອງເຈົ້າມັນທາຕຸຣາຊເປັນຣາຊວົງ.

ເຖິງ ພ.ສ. ໒໗໙໗ ເຈົ້າຈັນທະຣາຊໄດ້ຈັດກອງທັບໄປຊ່ວຍກອງທັບໄທ ໄປຕີນະຄອນຊຽງຕຸງໂດຍໃຫ້ເຈົ້າສີຣິສາແລະເຈົ້າຄຳນ້າວໂອຣົດຂອງເຈົ້າອຸປຣາຊອຸ່ນແກ້ວ ເປັນແມ່ທັບນຳທະຫານ ໗໐໐໐ ຄົນ ເຈົ້າສີຣິສາສິ້ນພຣະຊົນໃນສນາມຣົບ ເຈົ້າຄຳນ້າວຫາຍສາບສູນໄປ.

ພ.ສ. ໒໗໙໘ ເຈົ້າຈັນທະຣາຊໄດ້ຈັດກອງທັບໄປສົ່ງອຸປຣາຊຊຽງຮຸ່ງຊື່ງອົພຍົບມາຢູ່ຫລວງພຣະບາງແກ່ແຜ່ນດິນຂອງເຈົ້າສຸກເສີມ ເຈົ້າຈັນທະຣາຊສວັນຄົດ ພ.ສ. ໒໔໑໕ ຢູ່ໃນຣາຊສົມບັດໄດ້ ໒໐ ປີ.

໑໐. ຣັຊກາລເຈົ້າອຸ່ນຄຳ (ເຈົ້າມະຫິນທອນເທພນິພາກອນ)

(ພ.ສ. ໒໔໑໕ – ໒໔໗໒)

ເຈົ້າອຸ່ນຄຳໄດ້ຂື້ນຄອງຣາຊສົມບັດສືບຕໍ່ມາ ໃນຣັຊກາລຂອງພຣະອົງເກີດເສິກຫໍ້ (ຈີນຫໍ້) ຍົກກອງທັບມາຮຸກຮານອານາຈັກລາວ ຄຳວ່າ "ຫໍ້" ກໍພວກຈີນຊື່ງຍົກມາທາງບົກໄດ້ແກ່ພວກອົພຍົບມາແຕ່ ໑໒ ຈຸ

ໄທຕໍ່ກັບດິນແດນຈີນ ເຮົາເອີ້ນວ່າ "ຫໍ້" ພວກທີ່ມາທາງທະເລ ແລ້ວມາຂຶ້ນ ແຜ່ນດິນເຮົາ ເອີ້ນວ່າ "ເຈັກຫລືຈີນ"

ເສິກຫໍ້ເຣີ່ມເກີດຂຶ້ນເມື່ອປີ ພ.ສ. ໒໔໑໕ ເກີດມີຫໍ້ພວກຕ່າງ ໆ ຂຶ້ນເອີ້ນວ່າ ຫໍ້ທຸງເຫລືອງ, ຫໍ້ທຸງແດງ, ຫໍ້ທຸງດຳ, ຫໍ້ທຸງລາຍ. ໄທ, ລາວ, ແລະຝຣັ່ງເສດ (ແກວ) ໄດ້ຊ່ວຍກັນປາບຢູ່ດົນນານເຖິງ ພ.ສ. ໒໔໓໐ ເສິກຫໍ້ຈຶ່ງໄດ້ສງົບ ແລະໄດ້ສ້າງອະນຸສາວະຣີປາບຫໍ້ຂຶ້ນຢູ່ທີ່ເມືອງໜອງຄາຍເອີ້ນວ່າ "ອະນຸສາວະຣີປາບຫໍ້" ມາຈົນທຸກມື້ນີ້ (ອະນຸສາວະຣີປາບຫໍ້ນີ້ເດີມຢູ່ຫລັງສຖານີຕຳຣວດໜອງຄາຍ ໄດ້ຍ້າຍມາສ້າງໃໝ່ຢູ່ຫລັງທີ່ວ່າການອຳເພີເມືອງໜອງຄາຍໃນທຸກວັນນີ້ ມີຄຳຈາຣຶກໄວ້ເປັນພາສາໄທ, ລາວ, ອັງກິດ, ຈີນ ເຣື່ອງການປາບຫໍ້ນັ້ນ ມີຣາຍລະອຽດພິສດານຫລາຍ ຈະໄດ້ຂຽນເປັນເຣື່ອງໜຶ່ງອີກຕ່າງຫາກ : ຜູ້ຂຽນ)

ເມື່ອເສັດເສິກຫໍ້ແລ້ວ ພຣະເຈົ້າແຜ່ນດິນສຍາມ (ໄທ) ຈຶ່ງຍົກພຣະເຈົ້າອຸ່ນຄຳຂຶ້ນເປັນພຣະເຈົ້າແຜ່ນດິນຈາງວາງແລ້ວອະພິເສກເຈົ້າຄຳສຸກ ຣາຊໂອຣົດຂຶ້ນເປັນພຣະເຈົ້າແຜ່ນດິນຫລວງພຣະບາງແທນ ເມື່ອ ພ.ສ.

໒໔໓໘ ເຈົ້າອຸ່ນຄຳສວັນຄົຕເມື່ອ ພ.ສ. ໒໔໓໗ ພຣະຊົນມາຍຸໄດ້ ໗໔ ພັນສາ ຢູ່ໃນຣາຊສົມບັດ ໑໙ ປີ ເຈົ້າອຸ່ນຄຳມີຣາຊໂອຣົດ ໕ ອົງ ຄື ເຈົ້າຄຳສຸກ, ເຈົ້າສີສຸພັນ, ເຈົ້າຄຳຫລ້າ, ເຈົ້າຄຳປານ, ເຈົ້າສົນໄຊ.

໑໑. ຣັຊກາລເຈົ້າຄຳສຸກ: (ເຈົ້າສັກະຣິນຣິທ)

(ພ.ສ. ໒໔໓໘ - ໒໔໔໗)

ເຈົ້າຄຳສຸກໄດ້ຂຶ້ນຄອງຣາຊສົມບັດ ເມື່ອ ພ.ສ. ໒໔໓໘ ແທນພຣະຣາຊບິດາຊຶ່ງຊົງຊະຣານາກແລ້ວ ແລະໄດ້ຍົກຂຶ້ນເປັນພຣະເຈົ້າແຜ່ນດິນຈ່າງວາງເຈົ້າຄຳສຸກ ໄດ້ຮັບພຣະຣາຊທານພຣະນາມຈາກບາງກອກວ່າ "ເຈົ້າສັກະຣິນຣິທ ພຣະເຈົ້າ ລ້ານຊ້າງ ຫົ່ມຂາວ ຫລວງພຣະບາງ" ເຈົ້າສັກະຣິນຣິທສເວີຍຣາຊສົມບັດເຖິງ ພ.ສ. ໒໔໓໖ ຣັຖບານສຍາມຍົກດິນແດນຝັ່ງຊ້າຍແມ່ນ້ຳຂອງຊຶ່ງເປັນປະເທດລາວປັດຈຸບັນນີ້ໃຫ້ແກ່ຝຣັ່ງເສດ ຝຣັ່ງເສດຈຶ່ງໄດ້ປົກຄອງດິນແດນຫລວງພຣະບາງ, ວຽງຈັນ, ຈຳປາສັກ, ເອີ້ນວ່າ "ແຄວ້ນລາວ" ຕໍ່ມາເຈົ້າສັກະຣິນຣິທ ສວັນຄົຕ ເມື່ອ ພ.ສ. ໒໔໔໗.

๑๒. ຣັຊກາລ ພຣະ ບາທສົມເດັດ ພຣະເຈົ້າ ສີສວ່າງວົງທັມມິກຣາຊ ພ.ສ. ๒๔๔๗ - ๒๕๐๒

ພຣະບາທສົມເດັດ ພຣະເຈົ້າສີສວ່າງວົງ ຂຶ້ນຄອງຣາຊສົມບັດ ຕັ້ງແຕ່ ພຣະຣາຊ ອານາຈັກລາວ ຕົກຢູ່ໃນຄວາມປົກຄອງຂອງຝຣັ່ງເສດ ຕໍ່ມາລາວໄດ້ປະກາດອິສຣະພາບ ເມື່ອປີ ພ.ສ. ๒๔๘๘ ໃນປີ ພ.ສ. ๒๔๘๙ ຝຣັ່ງເສດໄດ້ກັບມາມີອຳນາດໃນອິນໂດຈີນອີກ ເມື່ອເສັດມະຫາສົງຄາມໂລກເທື່ອທີສອງ

ພຣະບາທສົມເດັດພຣະເຈົ້າສີສວ່າງວົງ ໄດ້ເຈຣະຈາກັບປະເທດຝຣັ່ງເສດ ຂໍໃຫ້ລາວປົກຄອງຕົນເອງເປັນປະເທດເອກຣາຊ ຝຣັ່ງເສດໄດ້ຍິນຍອມໃຫ້ລາວປົກຄອງ ຕົນເອງ ເປັນປະເທດ ເອກຣາຊ ໃນເຄືອສະຫະພາບຝຣັ່ງເສດ ໃນປີ ພ.ສ. ๒๔๙๒ ແລະໄດ້ນຳປະເທດລາວເຂົ້າເປັນສະມາຊິກຂອງອົງການສຫະປະຊາຊາດ ເມື່ອ ພ.ສ. ๒๔๙๘

ພຣະອົງສວັນຄົດເມື່ອ ພ.ສ. ๒๕๐๒ ຢູ່ໃນຣາຊສົມບັດເປັນເວລາ ๕๕ ປີ.

ສມັຍລາວເອກຣາຊ

ປະກາດເອກຣາຊ ພ.ສ. ໒໔໘໘

ພຣະຣາຊອານາຈັກລາວ ໄດ້ສູນເສັຽເອກຣາຊຕົກໄປເປັນເມືອງຂຶ້ນຂອງໄທ ແຕ່ປີ ພ.ສ. ໒໓໒໐ (ຕົກໄປເປັນເມືອງຂຶ້ນຂອງຣັຖບານສຍາມໃນສມັຍກຸງທົນບຸຣີ) ແລະຕໍ່ມາໄດ້ຕົກໄປເປັນເມືອງຂຶ້ນຂອງຝຣັ່ງເສດ ເມື່ອປີ ພ.ສ. ໒໔໓໖ ໂດຍຣັຖບານສຍາມໄດ້ຍົກດິນແດນຝັ່ງຊ້າຍຂອງແມ່ນ້ຳຂອງ ແລະຝັ່ງຂວາຂອງແມ່ນ້ຳຂອງ ດອນຈຳປາສັກແລະໄຊຍະບຸຣີ ໃຫ້ແກ່ຝຣັ່ງເສດ ດິນແດນດັ່ງກ່າວຈຶ່ງໄດ້ກາຍມາເປັນຊາຕລາວ ປະເທດລາວຢູ່ໃນປັດຈຸບັນນີ້.

ລາວໄດ້ປະກາດເອກຣາຊ ເມື່ອ ວັນທີ ໑໒ ຕຸລາ ພ.ສ. ໒໔໘໘ (໑໒ ອົກຕົບ ໑໙໔໕) ໂດຍຄນະລາວອິສຣະໄດ້ຈັດຣັຖບານລາວອິສຣະປົກຄອງແຜ່ນດິນ ໂດຍທຳການ ປະຕິວັດ ປ່ຽນແປງ ການປົກຄອງ ໃຫ້ເປັນຣະບອບປະຊາທິປະໄຕ ຊຶ່ງມີອົງພຣະບາທສົມເດັດພຣະເຈົ້າມະຫາຊີວິຕຢູ່ໃຕ້ກົດໝາຍ ມີຣັຖທັມນູນປົກຄອງປະເທດ.

໑. ພຣະບາທສົມເດັດພຣະເຈົ້າ ສີສວ່າງວົງທັມມິກຣາຊ

ພ.ສ. ໒໔໘໘ - ໒໕໐໒

ພຣະອົງເປັນພຣະມະຫາກະສັຕຕາທິຣາຊ ທີ່ໄດ້ນຳຄວາມເປັນເອກຣາຊມາໃຫ້ປະຊາຊົນຊາວລາວແລະຊາຕລາວ ຊຶ່ງຄວນໄດ້ຮັບພຣະກຽຕເປັນພຣະມະຫາກະສັຕຕາທິຣາຊ ເປັນ "ມະຫາຣາຊ" ພຣະອົງໜຶ່ງ ເພາະພຣະອົງຊົງນຳຊາຕລາວຈາກການເປັນເມືອງຂຶ້ນຂອງຝຣັ່ງເສດ ມາເປັນປະເທດເອກຣາຊ ແລະນຳຄວາມໝັ້ນແກ່ນຖາວອນມາສູ່ຊາຕລາວປະເທດລາວ ດ້ວຍການນຳປະເທດລາວເຂົ້າເປັນສະມາຊິກຂອງອົງການໂລກ (ອົງການສຫະປະຊາຊາຕ) ຊຶ່ງນານາຊາຕທົ່ວໂລກໄດ້ຮັບຮູ້ວ່າ ຊາຕລາວປະເທດລາວເປັນຊາຕໜຶ່ງປະເທດໜຶ່ງໃນໂລກ.

(ຕອນນີ້ຈະໄດ້ຂຽນຣາຍລະອຽດສ່ວນໜຶ່ງຫລືອາດພິມເປັນເຫລັ້ມພິສດານອີກເຫລັ້ມໜຶ່ງຕ່າງຫາກ ນັບແຕ່ລາວໄດ້ປະກາດໂຮມດິນແດນລາວທັງໝົດເຂົ້າເປັນອັນໜຶ່ງອັນດຽວກັນ ແລ້ວປະກາດເອກຣາຊແຕ່ປີ ພ.ສ. ໒໔໘໘ ແລະໄດ້ທຳການຕໍ່ສູ້ຈົນໄດ້ຮັບເອກຣາຊອັນສົມ

ບູນ ສະເພາະຕອນດັງກ່າວຈະໄດ້ຮວບຮວມຮາຍລະອຽດຕ່າງ ໆ ຂອງຄນະ ລ. ປ. ລ. (ລາວເປັນລາວ) ຄນະຣັຖບານລາວອິສຣະ ແລະຄນະປະເທດລາວ ເປັນປະວັດສາດລາວອີກຕອນໜຶ່ງຕ່າງຫາກ : ຜູ້ແຕ່ງ)

໒. <u>ພຣະບາທສົມເດັດພຣະເຈ້າສີສວ່າງວັທນາ</u>

ພ.ສ. ໒໕໐໒

ພຣະເຈົ້າມະຫາຊີວິດພຣະອົງປັດຈຸບັນ.

ຂໍຈົງຊົງພຣະຈະເຣີນຍິ່ງຍືນນານຕລອດການ.

ພາກທີ່ຫ້າ

ວ່າດ້ວຍອານາຈັກລ້ານຊ້າງວຽງຈັນ

໑. ຣັຊການພຣະເຈົ້າໄຊເຊດຖາ ທີຣາຊທີ ໒ (ພຣະເຈົ້າໄຊອົງເວ້)

ພ.ສ. ໒໒໕໐ ເຖິງ ໒໒໗໘

ອານາຈັກລ້ານຊ້າງໄດ້ແບກອອກເປັນຣັດອິສຣະສອງຣັດແລ້ວນັ້ນ ຝ່າຍອານາຈັກລ້ານຊ້າງວຽງຈັນ ສົມເດັດພຣະເຈົ້າໄຊອົງເວ້ໄດ້ຄອງຣາຊສົມບັດ ສືບຕໍ່ມາເຖິງ ພ.ສ. ໒໒໕໒ ພຣະບໍຣົມຣາຊາ ເຈົ້າເມືອງນະຄອນພະນົມ ແຂງເມືອງ ບໍ່ຍອມອ່ອນນ້ອມ ແລະໄດ້ຍົກກອງທັບມາຕີເຂດແດນວຽງຈັນ ເຖິງເຂດແດນວຽງຄຸກ (ບ້ານວຽງຄຸກໃນເຂດເມືອງໜອງຄາຍດຽວນີ້) ແລະເມືອງຊາຍຟອງ, ແຕ່ຖືກກອງທັບພຣະເຈົ້າໄຊອົງເວ້ຕີແຕກພ່າຍຫລົບໄປ ເຖິງ ພ.ສ. ໒໒໕໓ ພຣະບໍຣົມຣາຊາເຖິງແກ່ກັມ ຈຶ່ງໄດ້ເມືອງນະຄອນ ມາໂຮມກັບອານາຈັກລ້ານຊ້າງວຽງຈັນ ແລະແຕ່ງຕັ້ງໃຫ້ທ້າວຄຳສິງລູກເຂີຍພຣະບໍຣົມເຈົ້າເມືອງນະຄອນຄອງເມືອງ ສ່ວນທ້າວ

ກູ່ແກ້ວ ລູກຊາຍ ພຣະບໍຣົມ ໜີໄປຢູ່ເມືອງ ນະຄອນ ຈຳປາສັກ.

ສົມເດັດ ພຣະເຈົ້າ ໄຊອົງເວ້ ສວັນຄົຕ ເມື່ອ ພ.ສ. ໒໒໗໖ ຢູ່ໃນຣາຊສົມບັດໄດ້ ໒໖ ປີ.

໒. ຣັຊກາລເຈົ້າລອງ : ພ.ສ. ໒໒໗໔ ເຖິງ ໒໒໗໘

ເມື່ອພຣະເຈົ້າໄຊອົງເວ້ສວັນຄົຕແລ້ວ ເຈົ້າລອງ ອະນຸຊາເຈົ້າໄຊອົງເວ້ ຈຶ່ງຄອງ ຕຳແໜ່ງ ເປັນອຸປຣາຊໄດ້ ຣາຊສົມບັດກອງ ນະຄອນວຽງຈັນສືບ ຕໍ່ມາ ຈົນເຖິງ ພ.ສ. ໒໒໗໘ ເຈົ້າລອງຈຶ່ງສວັນຄົຕ.

໖. ຣັຊກາລເຈົ້າສິຣິບຸນສານ : (ເຈົ້າອົງບຸນ)

ພ. ສ. ໒໒໗໘ ເຖິງ ພ.ສ. ໒໖໒໔

ເມື່ອເຈົ້າລອງສວັນຄົຕແລ້ວ ເຈົ້າອົງບຸນໂອຣົດ ເຈົ້າໄຊອົງເວ້ໄດ້ຂຶ້ນຄອງຣາຊສົມບັດ ຊົງພຣະນາມວ່າ "ສົມເດັດພຣະມະຫາບຸນ ໄຊຊຸຖາທິຣາຊ" ແຕ່ ຄົນທັງຫລາຍເອີ້ນວ່າ ເຈົ້າສິຣິບຸນສານ ແຕ່ງຕັ້ງເຈົ້າ ດວງໜ້າເປັນອຸປຣາຊ ໃນຣັຊກາລຂອງພຣະເຈົ້າສິຣິ ບຸນສານ ໄດ້ເກີດເຫດການສຳຄັນໆ ຈົນໃນທີ່ສຸດກຸງ ລ້ານຊ້າງວຽງຈັນຕ້ອງສູນເສັຽເອກຣາຊ ແລະຕົກເປັນ

ເມືອງຂຶ້ນຂອງໄທໃນປີ ພ.ສ. ໒໓໒໑ ລຳດັບເຫດການສຳຄັນຕ່າງ ໆ ໃນສໄມແຜ່ນດິນຂອງເຈົ້າສິຣິບຸນສານ ຄື

໑. ທ້າວກູ່ແກ້ວເມືອງນະຄອນພະນົມແຂ້ງເມືອງ

ຝ່າຍທ້າວກູ່ແກ້ວລູກຊາຍພຣະບໍຣົມຣາຊາເຈົ້າເມືອງນະຄອນພະນົມທີ່ໜີໄປປູ່ເມືອງນະຄອນຈຳປາສັກນັ້ນ ເມື່ອໄດ້ຊາບວ່າ ອ້າຍເອີຍ ໄດ້ເປັນ ເຈົ້າເມືອງ ນະຄອນ ພະນົມ ຈຶ່ງຂຶ້ນມາຕາມລຳນ້ຳເຊບັ້ງໄຟ ທ່ຽວກຽ້ວກ່ອມຊັກຊວນເອົາຣາສດອນແດວເມືອງຜາຣົມບັງ ເມືອງເຊກະບອງ ເມືອງຄຳເກີດຄຳມ່ວນ, ໄດ້ຜູ້ຄົນເປັນກຳລັງມາກຫລາຍແລ້ວກໍແຂ້ງເມືອງ ທ້າວຄຳສິງພີ່ເອີຍຊຶ່ງຄອງເມືອງນະຄອນພະນົມບໍ່ສາມາດຜາບໄດ້ ຈຶ່ງໃຫ້ທ້າວມະຫາໄຊເປັນທູດນຳຊ້າງພູ້ສອງຕົວ. ນໍແຣດສອງນໍ, ກັບເງິນ ໔໐ ແໜ້ນລົງໄປຖວາຍເຈົ້າພູຊູນເມືອງແກວ ເພື່ອຂໍກຳລັງແກວ ມາຊ່ວຍ ຜາບ ທ້າວກູ່ແກ້ວ ແລະ ທ້າວມະຫາໄຊຫລັບມາກ່ອນ.

ຝ່າຍເຈົ້າແຜ່ນດິນແກວເມືອງພູຊູນ ໄດ້ແຕ່ງທະຫານໃຫ້ ໓໐໐໐ ຄົນຂຶ້ນມາຊ່ວຍທ້າວຄຳສິງ ພໍມາຮອດເມືອງຄຳເກີດ ທ້າວກູ່ແກ້ວຈຶ່ງແຕ່ງທູດກັບບ່າວໄພ່

໑໐໐ ຄົນ, ຊ້າງ ໑ ຕົວ, ບໍແຮດ ໑ ບໍ່ ໄປຕ້ອນຮັບ ແລະ ບອກວ່າຕົນເປັນພວກທ້າວມະຫາໄຊໃຫ້ມາຄອຍຕ້ອນຮັບ ແລ້ວ ນຳກອງ ທະຫານ ແກວ ໄປເຂົ້າ ເປັນພວກ ທ້າວກູ່ແກ້ວ ເມື່ອ ທ້າວກູ່ແກ້ວ ໄດ້ກຳລັງ ພົນແກວ ໓ ພັນ ແລະລາວ ໓ ພັນຄົນ ເປັນກຳລັງແລ້ວກໍ່ບຸກເຂົ້າມາຕີ ເມືອງນະຄອນພະນົມ (ທ່າແຂກເກົ່າ) ທ້າວຄຳສິງ ສູ້ບໍ່ໄດ້ໜີອອກຈາກເມືອງໄປຢູ່ດົງເຊກາ ແຕ່ງທູດໄປ ຂໍກຳລັງ ຈາກພຣະເຈົ້າ ສິຣິບຸນສານ ເມື່ອ ພ.ສ. ໒໓໐໗

ເຈົ້າສິຣິບຸນສານໄດ້ແຕ່ງໃຫ້ ພຣະຍາ ຊຽງສາເປັນ ແມ່ທັບ ຖືພົນໜື່ງໜື່ງລົງໄປຕີກັບແກວທີ່ເມືອງນະ ຄອນພະນົມ ກອງທັບແກວໄດ້ແຕ່ງແພໄມ້ເຮັ້ຽຂ້າມ ນ້ຳຂອງມາຕີກອງທັບວຽງຈັນທາງຝັ່ງຕະວັນຕົກ ຝ່າຍ ພຣະຍາຊຽງສາໄດ້ຈັດທະຫານລາວລົງໄປຄອຍລີ້ຖ້າຢູ່ທີ່ ຫາດກອງ ຂນະທີ່ທະຫານແກວລົງແພຂ້າມຂອງມາ ນັ້ນທະຫານລາວ ກໍ່ລົງມາ ຕັດເຊືອກແພ ທາງຝັ່ງຕະວັນ ຕົກເສັຽ ແພໄມ້ເຮັ້ຽຂອງທະຫານແກວກໍ່ໄຫລລົງໄປຕິດ ຫາດກອງ ທະຫານລາວທີ່ລົງໄປຖ້າຈອບຢູ່ທີ່ຫາດ ກອງໄດ້ທີ ກໍ່ເຂົ້າ ໂຈມຕີ ທະຫານແກວ ທີ່ໄປ ນຳແພ ນັ້ນ ຕາຍເກືອບໝົດ ຈຶ່ງໄດ້ເອີ້ນຊື່ຫາດກອງວ່າ "ຫາດ

ແກວກອງ" ມາຈົນທຸກວັນນີ້ ພວກແກວທີ່ເຫລືອຕາຍ ກໍແຕກພ່າຍໜີຫລົບຄືນເມືອເມືອງພູຊຸນ ທ້າວກູ່ແກ້ວນັ້ນພຣະບາຊຽງສາຈັບໄດ້ ຈຶ່ງຕັ້ງໃຫ້ເປັນເຈົ້າເມືອງນະຄອນພະນົມ ແລະໄດ້ນຳເອົາທ້າວຄຳສິງພ້ອມດ້ວຍຄອບຄົວບ່າວໄພ່ຂຶ້ນໄປນະຄອນວຽງຈັນ ເຫດການທາງເມືອງນະຄອນພະນົມຈຶ່ງໄດ້ສງົບ.

໒. <u>ພຣະວໍຣະຣາຊ ພັກດີແຍ້ງເມືອງ</u> (ພ.ສ. ໒໓໑໑)

ເຖິງ ພ.ສ. ໒໓໑໑ ພຣະວໍຣະຣາຊພັກດີ ແລະ ພຣະຕາເສນາບໍດີນະຄອນວຽງຈັນ ເກີດຜິດໃຈກັນຂຶ້ນກັບພຣະເຈົ້າສິຣິບຸນສານ ມູນເຫດທີ່ພຣະວໍພຣະຕາເກີດຂັດໃຈກັນຂຶ້ນກັບພຣະເຈົ້າສິຣິບຸນສານ ອັນເປັນເຫດໃຫ້ເກີດຣົບເຣົວ ຂ້າຟັນ ກັນລະຫວ່າງພວກລາວກັນເອງຈົນໃນທີ່ສຸດ ບ້ານເມືອງຕ້ອງສູນເສັຽເອກຣາຊນັ້ນ ຕາມພົງສາວະດານທັງຫລາຍກ່າວໄວ້ບໍ່ຄືກັນ ລາງບ່ອນວ່າພຣະຕາ ພຣະວໍນັ້ນ ເປັນຜູ້ອຸປກາຣະ ເຈົ້າສິຣິບຸນສານ ສນັບສນຸນຈົນໄດ້ເປັນພຣະເຈົ້າແຜ່ນດິນຄອງນະຄອນ ວຽງຈັນແລ້ວ ພຣະວໍຂໍຕຳແໜ່ງ ອຸປຣາຊ ແຕ່ເຈົ້າ ສິຣິບຸນສານ ບໍ່ຍອມ ເພາະຈະເອົາ ຕຳແໜ່ງອຸປ

ຣາຊໄວ້ໃຫ້ອະນຸຊາຂອງພຣະອົງ ໃຫ້ພຣະວໍພຣະຕາມີ
ຕຳແໜ່ງເປັນພຽງເສນາບໍດີ ລາງບ່ອນກໍ່ກ່າວວ່າເຈົ້າ
ສິຣິບຸນສານ ຂໍລູກສາວ ພຣະວໍພຣະຕາ ໄປເປັນ ໜ່ອມ
ຫ້າມ ທັງນີ້ຄົງຈະເກງວ່າພຣະວໍ, ພຣະຕາ, ເປັນຜູ້
ທີ່ຄົນນັບຖືຫລາຍ ເຈົ້າສິຣິບຸນສານຢ້ານພຣະວໍພຣະຕາ
ຍາດເອົາເມືອງ ຈຶ່ງຫາທາງຜູກມັດໃຫ້ພຣະວໍພຣະຕາ
ສົ່ງລູກສາວໄປເປັນໜ່ອມ ພຣະວໍພຣະຕາບໍ່ພໍໃຈຫາ
ວ່າເຈົ້າສິຣິບຸນສານດູໝິ່ນຖິ່ນແຄນ ລາງບ່ອນກໍ່ກ່າວ
ວ່າເຈົ້າສິຣິບຸນສານບໍ່ໄວ້ວາງໃຈພຣະວໍພຣະຕາ ຊຶ່ງເປັນ
ຜູ້ເຄີຍຝັກໃຝ່ທາງຫລວງພຣະບາງ ເພາະພຣະວໍພຣະ
ຕາເຄີຍຊ່ວຍເຈົ້າກິງກິສຣາຊ, ເຈົ້າອິນທະໂສມແລະ
ເຈົ້າອົງນົກໃຫ້ໜີໄປຢູ່ເມືອງຫລ້າເມືອງພົງ ຊຶ່ງຂນະນັ້ນ
ພຣະວໍ, ພຣະຕາເປັນນາຍກອງຢູ່ບ້ານຫີນໂງມ ເມື່ອ
ເຈົ້າໄຊອົງເວ້ ຂຶ້ນຄອງ ຣາຊສົມບັດ ເຫັນວ່າ ພຣະວໍ,
ພຣະຕາ ເປັນຜູ້ໃຫຍ່ ມີຄົນນັບຖື ແລະ ມີພັກມີພວກ
ຫລາຍ ຈຶ່ງໄດ້ຍົກຍ້ອງໃຫ້ເປັນເສນາບໍດີ ເມື່ອເຈົ້າໄຊ
ອົງເວ້ສວັນຄົຕແລ້ວ ດ້ວຍຄວາມສນັບສນຸນຂອງພຣະວໍ
ພຣະຕາ ເຈົ້າສິຣິບຸນສານຈຶ່ງໄດ້ເປັນກະສັຕຂຶ້ນຄອງ
ນະຄອນວຽງຈັນສືບຕໍ່ມາ.

ເມື່ອພຣະວໍພຣະຕາ ແລະເຈົ້າສິຣິບຸນສານເກີດ ຂັດໃຈກັນຂຶ້ນ ພຣະວໍພຣະຕາບໍ່ພໍໃຈຢູ່ໃຕ້ອຳນາດຂອງ ເຈົ້າສິຣິບຸນສານ ຈຶ່ງໄດ້ພາບ່າວໄພ່ປະຊາຣາສດອນ ໜີໄປສ້າງເມືອງໃໝ່ ຂຶ້ນທີ່ໜອງບົວລຸ່ມພູສ້າງປ້ອມ ຄູ ປະຕູ ທຳຣົບ ປ້ອງກັນເມືອງໄວ້ຢ່າງແຂງແຮງ ໃຫ້ຊື່ວ່າ " ເມືອງຈຳປານະຄອນຂວາງກາບແກ້ວບົວບານ " ເຈົ້າສິຣິບຸນສານ ເຫັນ ພຣະວໍ ພຣະ ຕາ ໜີໄປສ້າງ ເມືອງໃໝ່ ເປັນທ່ານອງແຂ່ງເມືອງດັ່ງນັ້ນ ຈຶ່ງໄດ້ໃຫ້ແມ່ທັບຍົກ ກອງທັບໄປຜາບ ແຕ່ກໍຖືກພຣະວໍພຣະຕາຕີແຕກພ່າຍ ຫລົບຄືນມາ ໄດ້ທຳການຕໍ່ສູ້ຣົບເຣັ້ວຂ້າຟັນກັນເອງຢູ່ ຮອດສາມປີ ເຈົ້າສິຣິບຸນສານກໍບໍ່ສາມາດຜາບພຣະວໍ ພຣະຕາໄດ້ ຝ່າຍພຣະວໍພຣະຕາເຫັນວ່າເຈົ້າສິຣິບຸນ ສານໄດ້ຍົກກອງທັບ ມາຄອບຣົບເຣັວ ຂ້າຟັນຢູ່ຮອດສາມ ປີແລ້ວ ບ້ານເມືອງບໍ່ໄດ້ມີຄວາມສງົບສຸກ ຈຶ່ງໄດ້ແຕ່ງ ທູຕໄປຂໍກອງທັບກຸງອັງວະມາຕີນະຄອນວຽງຈັນ ໜ່ອງ ລະແງ ແມ່ທັບພະນ້າ ຍົກກອງທັບ ຖືພົລມາ ໔໐໐໐ ຄົນ ຈະມາຕີນະຄອນວຽງຈັນ ເຈົ້າສິຣິບຸນສານຮູ້ຂ່າວກໍແຕ່ງ ທູຕໄປຫາພະນ້າ ແລະນຳທັບໄປຕີພຣະວໍພຣະຕາທີ່ ໜອງບົວລຸ່ມພູ ພະນ້າຍອມເຫັນເຈົ້າສິຣິບຸນສານດີກວ່າ

ພຣະວໍ ພຣະຕາ ຝ່າຍພຣະວໍ ພຣະຕາ ເຫັນວ່າ ຈະເປັນເສິກໃຫຍ່ ຈະຕັ້ງຮັບໃນເມືອງບໍ່ໄດ້ຈຶ່ງສັ່ງໃຫ້ຖອຍຈາກ ເມືອງໜອງບົວ ລຸ່ມພູ ການສູ້ຣົບເທື່ອນີ້ ພຣະວໍພຣະຕາ ສູ້ພາງ ຖອຍພາງ ໃນທີ່ສຸດ ພຣະຕາ ຕາຍໃນສນາມຣົບ.

ສ່ວນ ພຣະວໍ ກັບ ທ້າວຝ່າຍໜ້າ, ທ້າວ ຄຳຜົງ, ທ້າວທິດພົມ ລູກພຣະຕາ, ແລະທ້າວກ່ຳ ລູກພຣະວໍ, ໄດ້ພາຄອບຄົວບ່າວໄພ່ປະຊາຣາສດອນ ອົພຍົບໜີລົງໄປເພິ່ງ ເຈົ້າໄຊຍະກຸມານ ເມືອງນະຄອນ ຈຳປາສັກ ເມື່ອ ພ.ສ. ໒໓໑໔ ເຈົ້າໄຊຍະກຸມານໃຫ້ໄປຕັ້ງຢູ່ບ້ານດູ່ ບ້ານແກ ຫລືຕຳບົນວຽງດອນກອງ ແຂວງເມືອງນະຄອນຈຳປາສັກ ເຈົ້າສິຣິບຸນສານຈຶ່ງແຕ່ງໃຫ້ອັຄຣາດທຳຫອງນົກກອງທັບຕາມລົງໄປຕີພຣະວໍອີກ ເຈົ້າໄຊຍະກຸມານຈຶ່ງໄດ້ແຕ່ງກອງທັບ ໄປຫ້າມທັບກຸງລ້ານຊ້າງວຽງຈັນບໍ່ໃຫ້ທຳຮ້າຍແກ່ພຣະວໍ ແລະໄດ້ມີສຸພະອັກສອນໄປຂໍໂທດພຣະວໍຕໍ່ພຣະເຈົ້າສິຣິບຸນສານ ກອງທັບລ້ານຊ້າງ ວຽງ ຈັນ ໃນຄວາມ ຄວບຄຸມ ຂອງ ອັກຣາດ ທຳຫອງຈຶ່ງໄດ້ຫລົບຕ່າວເມືອບັງກຸງສີສັດຕນາຄນະຫຸດ.

ກາລະຕໍ່ມາ ພຣະວໍເກີດຂັດໃຈກັບຂຶ້ນກັບເຈົ້າໄຊຍະກຸມານ ຈຶ່ງໄດ້ອົພຍົບຄອບຄົວຂຶ້ນມາຢູ່ບ້ານດອນມົດແດງໃນທ້ອງທີ່ຈັງຫວັດອຸບົນບັດນີ້ ແລ້ວໄດ້ແຕ່ງທູດ ຖືສານເຄື່ອງ ຣາຊນີງຄຸນ ບັນນາການ ໄປຍັງ ເມືອງນະຄອນຣາຊສີມາຂໍເປັນ ເມືອງຂຶ້ນຂອງກຸງທົນບຸຣີສືບໄປ ພຣະເຈົ້າກຸງທົນບຸຣີ (ພຣະເຈົ້າຕາກສິນມະຫາຣາຊ) ຈຶ່ງໂປດເກົ້າໃຫ້ພຣະວໍ ກັບພວກ ຕັ້ງບ້ານເຮືອນ ຢູ່ບ້ານດອນມົດແດງເປັນຂອບຂັນທະສີມາຂອງກຸງທົນບຸຣີ.

໓. <u>ພຣະເຈົ້າສິຣິບຸນສານຟື້ນຟູສັມພັນທະໄມຕຣີກັບກຸງທົນບຸຣີ</u>:

ເມື່ອເຫດການພາຍໃນບ້ານເມືອງສງົບຮຽບຮ້ອຍແລ້ວ ເຈົ້າສິຣິບຸນສານຈຶ່ງໄດ້ຟື້ນຟູສັມພັນທະໄມຕຣີກັບກຸງທົນບຸຣີ ໃຫ້ກັບມີສັມພັນທະໄມຕຣີເປັນດັ່ງແຕ່ກ່ອນ ເຊັ່ນສໄມແຜ່ນດິນກຸງສີອະຍຸທະຍາ ຈຶ່ງໄດ້ໃຫ້ທູດຈຳທູນ ພຣະຣາຊສານ ພ້ອມດ້ວຍເຄື່ອງ ຣາຊນີງຄຸນບັນນາການໄປຍັງກຸງທົນບຸຣີ ເມື່ອ ພ.ສ. ໒໓໑໒ (ສຳເນົາພຣະຣາຊສານຢູ່ທ້າຍເຫລັ້ມ)

໔. ເຈົ້າສິຣິບຸນສານຫັນໄປຄົບກັບພະມ້າ :

ຝ່າຍ ພຣະເຈົ້າ ສິຣິ ບຸນສານ ມີພຣະໄທ ບໍ່ໜັກແໜ້ນຄັກແນ່ ດວງເຫດການວ່າທາງກຸງທົນບຸຣີຈະບໍ່ສາມາດຕໍ່ຕ້ານທັບພະມ້າໄດ້ ຈຶ່ງເມື່ອໄດ້ຮັບພຣະຣາຊສານຕອບຈາກທາງພຣະເຈົ້າກຸງທົນບຸຣີ ແລ້ວກໍບໍ່ໄດ້ຕອບພຣະຣາຊສານ ເພື່ອເປັນການຜູກສັມພັນທະໄມຕຣີໃຫ້ແໜ້ນແຟ້ນຂຶ້ນອີກ ກັບປ່ອຍປະລະເລີຍເພີກເສີຍເສັຽບໍ່ໄດ້ຕອບພຣະຣາຊສານຂອງພຣະເຈົ້າກຸງທົນບຸຣີແທນທີ່ ຈະດຳເນີນ ນະໂຍບາຍ ການເມືອງ ຮ່ວມກຳລັງກັບກຸງທົນບຸຣີ ຕໍ່ສູ້ກັບ ກອງທັບ ພະມ້າ ຄືດັ່ງສໄມ ແຜ່ນດິນສົມເດັດ ພຣະເຈົ້າໄຊເຊດຖາ ມະຫາຣາຊ ກັບ ແຜ່ນດິນຂອງ ສົມເດັດ ພຣະ ມະຫາ ຈັກພັດ ພຣະເຈົ້າ ຊ້າງເຜືອກແຕ່ເຈົ້າສິຣິບຸນສານຫັນໄປຝັກໄຝ່ໃນພວກພະມ້າ ຄືພ.ສ. ໒໓໑໔ ເຈົ້າສຸຣິຍະວົງສາເຈົ້າແຜ່ນດິນຫລວງພຣະບາງໄດ້ຍົກກອງທັບລົງມາຕີວຽງຈັນ ຕີລ້ອມເມືອງຢູ່ສອງເດືອນ ເຈົ້າສິຣິບຸນສານ ບໍ່ສາມາດຕີກອງທັບຫລວງພຣະບາງໃຫ້ຖອຍໄປຈາກເມືອງໄດ້ ແລະແທນທີ່ຈະຂໍກອງທັບໄທ ໃຫ້ມາຊ່ວຍ ດັ່ງ ເຈົ້າແຜ່ນດິນ ກຸງສີສັຕນາຄນະຫຸດອົງກ່ອນ ໆ ເຄີຍເຮັດມາ ເຈົ້າສິຣິບຸນ

ສາບ ກັບແຕ່ງທູດ ໄປບອກ ພະມ້າ ຂໍກໍາລັງ ພະມ້າ ຢູ່ທີ່ເມືອງຊຽງໃໝ່ ໃຫ້ຍົກໄປຕີເອົາຫລວງພຣະບາງ ເຈົ້າສຸຣິບະວົງສາຊາບຂ່າວເສິກພະມ້າ ຈຶ່ງໄດ້ຖອຍຫລີບໄປບັງບະຄອບ ຫລວງພຣະບາງ ແລະໄດ້ທໍາສັນຍາສງົບເສິກກັບພະມ້າ ຂນະນັ້ນຝ່າຍພະມ້າຍັງກໍາລັງທໍາເສິກກັບກຸງທົນບຸຣີຢູ່ ຈຶ່ງຍອມທໍາສັນຍາສງົບເສິກກັບເຈົ້າສຸຣິບະວົງສາ ແລ້ວເລີກທັບຖອຍໄປບັງບະຄອບຊຽງໃໝ່.

ຕໍ່ມາເຖິງ ພ.ສ. ໒໓໑໘ ໂປສຸພະລາແມ່ທັບພະມ້າທີ່ເມືອງຊຽງໃໝ່ ໄດ້ມີໜັງສືລັບ ໃຫ້ໄປນະບຸວ້ນກັບທະຫານ ໓໐໐ ຄົນຖືມາການທູນເຈົ້າສິຣິບຸນສານກໍາໜົດໃຫ້ເຈົ້າສິຣິບຸນສານຍົກກອງທັບໄປຕີກຸງທົນບຸຣີທາງເມືອງນະຄອນຣາຊສີມາ ສ່ວນພະມ້າຈະຍົກໄປຕີທາງເມືອງຕາກແລະເມືອງກໍາແພງເພັຊ ພຣະເຈົ້າສິຣິບຸນສານໄດ້ຮັບໜັງສືແລ້ວກໍເພີກເສີຍ ບໍ່ໄດ້ຍົກກອງທັບໄປຕາມສານພະມ້າ ການຕິດຕໍ່ຂອງພະມ້າກັບເຈົ້າສິຣິບຸນສານນີ້ ຮູ້ໄປຮອດສົມເດັດພຣະເຈົ້າກຸງທົນບຸຣີໂດຍທາງເຈົ້າສຸຣິບະວົງສາ ເຈົ້າແຜ່ນດິນຫລວງພຣະບາງທາງໜຶ່ງ ແລະໄທຈັບທະຫານພະມ້າໄດ້ອີກທາງໜຶ່ງ.

ห้ามจำหน่าย

໔. ສັມພັນທະໄມຕຣີໄທ - ລາວສໄມແຜ່ນດິນເຈົ້າສິຣິບຸນສານ ເສືອມ :

ເມື່ອພຣະເຈົ້າສິຣິບຸນສານ ຫັນໄປຝັກໄຝ່ທາງພະມ້າ ບໍ່ຮ່ວມກຳລັງກັບກຸງທົນບຸຣີຊ່ວຍກັນຕໍ່ຕ້ານພະມ້າ ດັ່ງທີ່ໄທກັບລາວເຄີຍເຮັດກັນມາໃນສໄມກ່ອນ ໆ ນັ້ນ. ດ້ວຍວ່າໄທກັບລາວນັບແຕ່ຕັ້ງກຸງລ້ານຊ້າງ ຄື ກຸງສີສັຕນາຄນະຫຸຕແລະກຸງສີອະຍຸທະຍາມາ ໄທກັບລາວມີແຕ່ເປັນສັມພັນທະໄມຕຣີ ເປັນບ້ານພີ່ເມືອງນ້ອງຕໍ່ກັນມາທຸກຍຸກທຸກສໄມ ຖ້າກຸງສີອະຍຸທະຍາເດືອດຮ້ອນມີຂ້າເສິກສັຕຣູມາຕິດບ້ານຕິດເມືອງ ກໍຫັນມາຂໍໃຫ້ກຸງສີສັຕນາຄນະຫຸຕຊ່ວຍເຫລືອ ດັ່ງໃນສໄມ ພ.ສ. ໒໑໑໑ ເປັນຕົ້ນ ແລະຖ້າກຸງສີສັຕນາຄນະຫຸຕເດືອດຮ້ອນ ກໍຫັນໄປເພິ່ງກຸງສີອະຍຸທະຍາ ດັ່ງໃນສໄມ ພ.ສ. ໒໒໕໐ ເປັນຕົ້ນ.

ແຕ່ພໍມາຮອດແຜ່ນດິນຂອງເຈົ້າສິຣິບຸນສານ ກັບໄປຝັກໄຝ່ທາງພະມ້າເສັຽ ເຫັນຜູ້ອື່ນດີກວ່າຍາດພີ່ນ້ອງ ຫລືເຊື້ອຊາດດຽວກັນ ດັ່ງສຸພາສິດລາວເຮົາວ່າ "ຢ່າໄດ້ໄລຊາດເຊື້ອພົງສາພີ່ນ້ອງເກົ່າ ຢ່າໄດ້ໄລເຜົ່າເຊື້ອໜີໄປນ້ອງຜູ້ອື່ນດີ" ເມື່ອສົມເດັດພຣະເຈົ້າກຸງທົນບຸຣີຈັບ

ໄດ້ວ່າເຈົ້າສິຣິບຸນສານໜີໄປຄົບກັບພະມ້າ ສົມເດັດພຣະເຈົ້າກຸງທົນບຸຣີ ຈຶ່ງໄດ້ມີ ພຣະຣາຊສານຕໍ່ວ່າ ມາຍັງເຈົ້າສິຣິບຸນສານເມື່ອ ພ.ສ. ໒໓໑໗ ໂດຍໃຫ້ພຣະບາຫລວງເມືອງເປັນຜູ້ຖືພຣະຣາຊສານ (ພຣະຣາຊສານປູ່ຫ້າບເຫລັ້ມ)

ການຟື້ນຟູທາງສັມພັນທະໄມຕີ ຣະຫວ່າງກຸງທົນບຸຣີ (ໄທ) ກັບກຸງສີສັຕນາຄນະຫຸດ (ລາວ) ໃນສໄມແຜ່ນດິນເຈົ້າສິຣິບຸນສານ ແລະສົມເດັດພຣະເຈົ້າຕາກສິນໄດ້ເຣີ່ມແຕ່ປີ ພ.ສ. ໒໓໑໒ ເຖິງ ໒໓໑໙ ຈາກນັ້ນມາ ກໍບໍ່ໄດ້ຕິດຕໍ່ກັນອີກ ຄືວ່າທາງສົມເດັດພຣະເຈົ້າສິຣິບຸນສານ ເມື່ອໄດ້ຮັບພຣະຣາຊສານຕໍ່ວ່າຈາກສົມເດັດພຣະເຈົ້າກຸງທົນບຸຣີແລ້ວ ກໍບໍ່ໄດ້ຕອບພຣະຣາຊສານຕົກລົງໃຈຮ່ວມກຳລັງກັບກຸງທົນບຸຣີຢ່າງຄັກແນ່ ເພື່ອຈະເຊື່ອມສັມພັນ ທະໄມຕຣີ ຣະຫວ່າງ ກຸງສີສັຕນາຄນະຫຸດແລະກຸງທົນບຸຣີ ໃຫ້ມີສັມພັນທະໄມຕຣີຮັກແພງເປັນບ້ານພີ່ເມືອງນ້ອງກັນຄືດັ່ງແຕ່ກ່ອນນັ້ນ ດັ່ງນີ້ຈຶ່ງເປັນເຫດໃຫ້ສັມພັນທະພາບໄທ - ລາວຫ່າງເຫີນກັນໄປ ຈົນໃນທີ່ສຸດກໍບາດໝາງຜິດໃຈກັນ ແລະ ຮົບເຣົ້າຂ້າຟັນພວກດຽວກັນເອງ ດັ່ງໃນປີ ພ.ສ. ໒໓໒໐ ຈົນເຖິງກັບກຸງສີສັຕນາຄນະ

ທຸດ ຕ້ອງສູນເສັຽເອກຣາຊ ທັງນີ້ກໍຍ້ອນຄວາມບໍ່ແນ່ນອນ ຂອງສົມເດັດພຣະເຈົ້າສິຣິບຸນສານ ໃນການ ດຳເນີນນະໂຍບາຍທາງການເມືອງ ບໍ່ຮ່ວມມືກັບສົມເດັດພຣະເຈົ້າກຸງທົນບຸຣີຕໍ່ຕ້ານກັບພະມ້າດັ່ງໃນສໄມແຜ່ນດິນລ້ານຊ້າງອົງກ່ອນ ໆ ເຄີຍປະຕິບັດມາປະການໜຶ່ງ ແລະເພາະເຫດ ຈາກການ ແຕກສາມັກຄີ ຂອງພວກລາວເຮົາປະການໜຶ່ງ ຈຶ່ງເປັນເຫດໃຫ້ເສັຽບ້ານເສັຽເມືອງ ຕົກໄປເປັນເມືອງຂຶ້ນຂອງເພິ່ນ.

ປ. <u>ການ ສົງ ຄາມ ຣະຫວ່າງ ລາວ ກັບ ໄທ ເທື່ອ ທຳອິດ</u> :

ໄທກັບລາວຄືວ່າ ກຸງສີອະຍຸທະຍາກັບກຸງສີສັຕນາຄນະຫຸດ ເປັນບ້ານພີ່ເມືອງນ້ອງກັນມາ ບໍ່ເຄີຍພິດຖຽງຣົບເຣົ້າກັນຈັກເທື່ອ ນັບແຕ່ສ້າງກຸງສີອະຍຸທະຍາແລະກຸງສີສັຕນາຄນະຫຸດມາ ຈົນຮອດ ພ.ສ. ໒໓໒໐ ເປັນເວລານັບໄດ້ປະມານ ໕໐໐ ປີເສດ ຈຶ່ງໄດ້ຣົບເຣົ້າກັນເປັນເທື່ອທຳອິດ ອັນມີມູນເຫດດັ່ງນີ້ຄື

ເຖິງ ພ.ສ. ໒໓໑໙ ສົມເດັດເຈົ້າສິຣິບຸນສານໄດ້ຊາບຂ່າວວ່າ ພຣະວໍ ເກີດ ພິດໃຈກັນກັບ ເຈົ້າໄຊຍະກຸມານເຈົ້າຄອງນະຄອນຈຳປາສັກ ແລະໄດ້ຖອຍຂຶ້ນມາຢູ່ບ້ານ

ດອນມົດແດງ ຈຶ່ງແຕ່ງໃຫ້ພຣະບາສໂພເປັນແມ່ທັບ ລົງໄປຕີພຣະວໍທີ່ດອນມົດແດງ ພຣະວໍສູ້ບໍ່ໄດ້ຖອຍລົງ ໄປຢູ່ບ້ານດູ່ບ້ານແກອີກ ແລະໄດ້ຂໍກຳລັງຈາກເຈົ້າໄຊຍະ ກຸມານຂຶ້ນມາຊ່ວຍ ແຕ່ເຈົ້າໄຊຍະກຸມານກໍບໍ່ຍົກກອງ ທັບມາຊ່ວຍ ພຣະບາສໂພຈັບພຣະວໍໄດ້ກໍໃຫ້ຂ້າເສັຽ. ທ້າວກ່ຳ, ທ້າວທິດພົມ, ທ້າວຄຳຜົງ, ແລະທ້າວຝ່າຍ ໜ້າ ໄດ້ແຕ່ງໜັງສືໄປແຈ້ງຂ່າວ ແກ່ເຈົ້າເມືອງນະຄອນ ຣາຊສີມາຂໍກອງທັບຂຶ້ນໄປຊ່ວຍ ຝ່າຍສົມເດັດພຣະເຈົ້າ ກຸງທົນບຸຣີ ຊາບເຣື່ອງ ກໍຊົງພຣະພິໂຣດ ວ່າສົມເດັດ ພຣະເຈົ້າກຸງສີສັດຕະນາຄນະຫຸດດູໝິ່ນ ໃຫ້ທະຫານໄປທຳ ຮ້າຍ ຂ້າໄພ່ຟ້າປະຊາຣາສດອນຊຶ່ງຢູ່ໃນພຣະບໍຣົມໂພ ທິສົມພານຂອງພຣະອົງ.

ເຖິງ ພ.ສ. ໒໓໒໐ ສົມເດັດພຣະເຈົ້າກຸງທົນບຸຣີ ຈຶ່ງໂປດໃຫ້ສົມເດັດເຈົ້າພຣະຍາມະຫາກະສັດສຶກ ເປັນ ແມ່ທັບໃຫຍ່ ກັບເຈົ້າພຣະຍາສຸຣະສີຂຶ້ນໄປຊຸມນຸມທັບ ໃຫຍ່ຢູ່ທີ່ເມືອງນະຄອນຣາຊສີມາ ສ່ວນເຈົ້າພຣະຍາສຸ ຣະສີນັ້ນແຍກໄປທາງກຸງກັມພູຊາ (ເມືອງຂເມນ) ເກນ ພົລຂເມນໝື່ນນຶ່ງ ໃຫ້ຕໍ່ເຮືອຮົບຍົກພົລຂຶ້ນໄປຕາມຣແມ່ ນ້ຳຂອງ ຂຸດຄອງອ້ອມແກ້ງລີຜີ ກຳໜົດໃຫ້ໄປພົບກັບ

ກັບທັບສົມເດັດເຈົ້າພຣະຍາ ມະຫາກະສັດສຶກທີ່ນະຄອນວຽງຈັນ ຂນະນັ້ນ ເມືອງຂເມນ ຕົກເປັນ ເມືອງຂຶ້ນຂອງໄທແລ້ວ.

ຝ່າຍສົມເດັດ ເຈົ້າ ພຣະຍາ ມະຫາກະສັດສຶກ ແມ່ທັບໃຫຍ່ ຍົກທັບຈາກເມືອງນະຄອນຣາຊສີມາໄປຍັງແດນເມືອງ ນະຄອນ ຈຳປາສັກ ປາກົດວ່າ ກອງທັບພຣະຍາສຸໂພດອນຫລັບເມືອ ນະຄອນວຽງຈັນແລ້ວ ເຈົ້າໄຊນະກຸມານ ເຈົ້າຄອງ ນະຄອນ ຈຳປາສັກ ໄດ້ນອມອ່ອນນ້ອມ ແລ້ວຈຶ່ງໄດ້ຍົກກອງທັບຈາກນະຄອນຈຳປາສັກໄປຍັງກຸງສີສັດຕະນາຄນະຫຸດ ໃຫ້ກອງທັບໜ້າຍົກລ່ວງເຂົ້າໄປໃນດິນແດນລ້ານຊ້າງກ່ອນ ຕີໄດ້ຫົວເມືອງນ້ອຍໃຫຍ່ຕາມຣາຍທາງໄດ້ຫລາຍເມືອງ ແລ້ວກອງທັບຫລວງຈຶ່ງຍົກຕາມໄປນຳຫລັງ.

ຝ່າຍກອງທັບເຈົ້າພຣະຍາສຸຣະສີ ເມື່ອເກນພົນຂເມນຕໍ່ເຮືອຣົບແລ້ວ ກໍເກນພົລລາວ ພົລຂເມນຂຸດຄອງອ້ອມແກ້ງລີ່ຜີ ແລ້ວຍົກ ທັບເຮືອ ຂຶ້ນມາ ຕາມ ຄອງທີ່ຂຸດໃໝ່ ມາຮອດເມືອງນະຄອນຈຳປາສັກ ແລ້ວຈຶ່ງຍົກມາຕີເອົາເມືອງນະຄອນພະນົມ ໄດ້ເມືອງນະຄອນ

ພະນິນແລ້ວຍົກມາຕີເອົາເມືອງໜອງຄາຍໄດ້ ຊຶ່ງທັງສອງເມືອງນັ້ນຂຶ້ນກັບກຸງສີສັດຕະນາຄນະຫຸດ.

ຝ່າຍ ສົມເດັດ ພຣະເຈົ້າ ກຸງສີ ສັດນາ ຄນະຫຸດ ໄດ້ຊາບວ່າກອງທັບໄທຍົກມາຕີເມືອງ ຈຶ່ງໄດ້ແຕ່ງໃຫ້ແສນທ້າວພຣະຍາລາວທັງຫລາຍ ຍົກກອງທັບອອກໄປຕໍ່ສູ້ເປັນຫລາຍທັບຫລາຍຕຳບົນ ໄດ້ຕໍ່ສູ້ກັນເປັນສາມາດກອງທັບລາວ ສູ້ໄທບໍ່ໄດ້ ກໍ່ພ່າຍແຕກໄປ ຫລາຍເມືອງຝ່າຍກອງທັບໄທ ທັງທັບບົກແລະທັບເຮືອ ເມື່ອຕີເມືອງໜອງຄາຍໄດ້ແລ້ວ ກໍແຕ່ງກອງທະຫານຍົກທັບໃຫຍ່ໄປຕີເມືອງພຣະໂຄ, ເມືອງວຽງຄຸກ, ຕັ້ງຄ້າຍລ້ອມໄວ້ທັງສອງເມືອງ ເຈົ້າເມືອງພຣະໂຄ ແລະເຈົ້າເມືອງວຽງຄຸກໄດ້ນຳທະຫານອອກຕໍ່ສູ້ເປັນສາມາດ ຝ່າຍໄທບໍ່ສາມາດເຂົ້າຕີຫັກເອົາເມືອງໄດ້ (ເມືອງພຣະໂຄ ຄືບ້ານພຣະໂຄ ເມືອງວຽງຄຸກ ຄືບ້ານວຽງຄຸກ ຊຶ່ງປັດຈຸບັນນີ້ເປັນຕຳບົນຢູ່ໃນຈັງຫວັດໜອງຄາຍ ປາກົດວ່າຍັງມີຊາກກຳແພງເມືອງເຫລືອຢູ່ທີ່ບ້ານວຽງຄຸກ)

ຂນະທີ່ເຈົ້າ ສຸຣິຍະວົງສາ ເຈົ້າລ້ານຊ້າງ ຣົມຂາວຫລວງພຣະບາງຊຶ່ງເປັນສັດຣູກັບປູ່ກັບເຈົ້າສິຣິບຸນສານຈັກນຳທັບພະມ້າໄປຕີຫລວງພຣະບາງ ເມື່ອໄດ້ຊາບ

ຂ່າວວ່າ ກອງທັບໄທ ຍົກມາຕີນະຄອນ ວຽງຈັນ ກໍແຕ່ງ
ໃຫ້ແມ່ທັບ ນຳກອງທະຫານລົງມາຊ່ວຍຕີນະຄອນວຽງ
ຈັນ ສົມເດັດ ເຈົ້າພຣະຍາ ມະຫາ ກະສັດສຶກ ຈຶງໃຫ້
ທັບຫລວງພຣະບາງເຂົ້າຕີທາງດ້ານເໜືອຂອງນະຄອນ
ວຽງຈັນ.

(ຂໍ້ຄວາມ ຕອນຕໍ່ໄປນີ້ ຄັດຈາກ ໜັງສື ພົງສາວະ
ດານໄທ ສະບັບພຣະຣາຊຫັດຖເລຂາ ແລະໜັງສື
ພຣະຣາຊ ພົງສາວະດານ ສະບັບ ພິສດານ ເຫລັ້ມສອງ
ພ.ສ. ໒໔໗໒ ໜ້າ ໓໕໐ ທັງສອງເຫລັ້ມມີໃຈຄວາມ
ກົງກັນຄືວ່າ "ຝ່າຍເຈົ້າພຣະຍາສຸຣະສີເຂົ້າໄປຕັ້ງຢູ່
ເມືອງໜອງຄາຍ ໃຫ້ຕັດສີສະລາວຊາວເມືອງເປັນອັນ
ມາກ ເອົາສີສະໃສ່ລົງໃນເຮືອ ແລ້ວໃຫ້ແມ່ຍິງລາວ
ພາຍເຮືອຂຶ້ນໄປ ໃຫ້ຮ້ອງຂາຍ ສີສະລາວ ໜ້າເມືອງ
ພຣະໂຄ ຊາວເມືອງເຫັນກໍມີໃຈຫົດຫູ່ ປ່ອຍລົງ ທັບ
ໄທ ກໍເຂົ້າ ເອົາເມືອງ ພຣະໂຄ ແລະ ວຽງຄຸກ ໄດ້ທັງສອງ
ເມືອງ ສົມເດັດເຈົ້າພຣະຍາມະຫາກະສັດສຶກຈຶ່ງໃຫ້ຍົກ
ກອງທັບ ໃຫຍ່ໄປຕີ ເມືອງ ພານພ້າວ ຊຶ່ງຕັ້ງ ຢູ່ ຟາກຝັ່ງ
ຕະວັນຕົກກົງໜ້າເມືອງລ້ານຊ້າງ ຊາວເມືອງອອກ
ຕໍ່ຮົບເປັນສາມາດ ພົລທະຫານໄທເຂົ້າປີນປ້ອມເອົາ

ເມືອງໄດ້ຂ້າລາວລົ້ມຕາຍເປັນອັນມາກ ແລ້ວໃຫ້ທັບ
ເຮືອຮັບກອງທັບທັງປວງຂ້າມໄປຟາກຕະວັນອອກພ້ອມ
ກັນ ເຂົ້າຕັ້ງຄ້າຍອ້ອມເມືອງລ້ານຊ້າງ (ກຸງສີສັດຕນາ
ຄນະຫຸດ) ພຣະເຈົ້າກຸງສີສັດຕນາຄນະຫຸດກໍເກນພົລ
ທະຫານ ຂຶ້ນປະຈໍາຮັກສາ ໜ້າທີ່ເຊີງເທີນ ຮອບເມືອງ
ປ້ອງກັນເມືອງເປັນສາມາດ ແລ້ວໃຫ້ເຈົ້າບັນທະເສນ
ຣາຊບຸດຂຶ້ນຂີ່ຊ້າງພາຍຄ່ຽງອີກ ສູງທັກສອກສາມນິ້ວ
ຄຸມພົລທະຫານ ບຸກອອກຈາກເມືອງ ມາຕີທັບໄທຊຶ່ງຕັ້ງ
ຄ້າຍລ້ອມປູ່ຄ້າຍຂ້າງທ້າຍເມືອງນັ້ນ ພົລທະຫານໄທ
ບຸກອອກຕີທັບເຈົ້າບັນທະເສນ ແຕກພ່າຍກັບເຂົ້າເມືອງ
ທັງສອງຝ່າຍລົ້ມຕາຍເປັນອັນມາກ ແຕ່ຣົບກັນປູ່ເຖິງ
ສີເດືອນເສດ ພຣະເຈົ້າກຸງສີສັດຕນາຄນະຫຸດເຫັນເຫລືອ
ກໍາລັງ ຈະຕໍ່ຣົບ ຈະຕ້ານທານທັບໄທບໍ່ໄດ້ ກໍປະເມືອງເສັຽ
ພາເຈົ້າອິນ, ເຈົ້າພົມ, ຣາຊບຸດ ແລະ ຂ້າຫລວງຄົນ
ສນິດລອບລົງເຮືອ ໜີໄປ ເມືອງຄໍາເກີດ ອັນເປັນເມືອງຂຶ້ນ
ແກ່ລ້ານຊ້າງ ກອງທັບໄທກໍເຂົ້າເມືອງໄດ້ ຈັບໄດ້ເຈົ້າ
ອຸປຣາຊ, ເຈົ້າບັນທະເສນ, ແລະຣາຊບຸດຣີ, ວົງສາ
ນຸວົງ, ຊະແມ່ສນົມກໍານັນແລະຂຸນນາງຜູ້ໃຫຍ່ຜູ້ນ້ອຍ
ທັງປວງ ກັບທັງຊັບສົມບັດ ເຄື່ອງສາດຕຣາອາວຸດປືນ

ໃຫຍ່ນ້ອຍເປັນອັນມາກ ສົມເດັດເຈົ້າພຣະຍາມະຫາ ກະສັດສຶກ ໃຫ້ກວາດຂົນຂ້າມມາໄວ້ໃນເມືອງພານພ້າວ ຟາກຕາວັນຕົກ ກັບຄອບຄົວລາວ ຊາວເມືອງ ທັງໝົດ ແລ້ວໃຫ້ອັນເຊີນ ພຣະພຸທະປະຕິມາກອນແກ້ວມໍຣະກົດ ແລະພຣະບາງຊຶ່ງສຖິດຢູ່ໃນວິຫານໃນວັງຂອງພຣະເຈົ້າ ລ້ານຊ້າງນັ້ນ ອາຣາທນາ ລົງເຮືອ ຂ້າມ ຟາກ ມາ ປະດິສ ຖານໄວ້ທີ່ເມືອງພານພ້າວດ້ວຍ ແລ້ວໃຫ້ສ້າງພຣະ ອາຣາມຂຶ້ນໃໝ່ທີ່ເມືອງພານພ້າວອາຣາມໜຶ່ງ ແລະ ແຕ່ງໃຫ້ຂຸນບາງໄທ - ລາວ ໄປກ້ຽວກ້ອມ ຫົວເມືອງລາວ ທັງປວງຝ່າຍຕາວັນອອກໄດ້ໝົດສິ້ນ.

ເຈົ້າພຣະຍາ ມະຫາ ກະສັດສຶກ ຈຶ່ງແຕ່ງ ໃຫ້ ຂຸນ ໝື່ນຖືໜັງສືມາຍັງກຸງທົນບຸຣີ ກາບທູນຂໍຣາຊການ ຊຶ່ງຕີກຸງສີສັດຕະນາຄນະຫຸດໄດ້ ແລະໄດ້ພຣະພຸທະປະ ຕິມາກອນແກ້ວມໍຣະກົດແລະພຣະບາງ ແຕ່ພຣະເຈົ້າ ລ້ານຊ້າງນັ້ນໜີໄປໄດ້ ພຣະເຈົ້າກຸງທົນບຸຣີຊົງຊາບກໍ່ ໂສມະນັສ ດຳຣັດໃຫ້ມີທ້ອງຕຣາຣຽກກອງທັບກັບພຣະ ນະຄອນ ພຣະຍາມະຫາກະສັດສຶກໄດ້ແຕ່ງໃຫ້ພຣະຍາ ສຸໂພ ຂຸນບາງ ເມືອງລ້ານຊ້າງ ຢູ່ຮັກສາເມືອງ ແລ້ວ ກວາດຄົວລາວ ຊາວລ້ານຊ້າງ ກັບພຣະບໍຣົມວົງສານຸວົງ,

ຂຸນນາງ, ທ້າວເພັນທັງຫລາຍ, ກັບຊັບສິນບັດສາດຕຣາ ອາວຸດແລະຊ້າງມ້າເປັນອັນມາກ ພ້ອມດ້ວຍອັນເຊີນ ພຣະແກ້ວ ມໍຣະກົດ ແລະພຣະບາງ ລົງໄປ ກຸງທົນບຸຣີ ຮອດເມືອງສຣະບຸຣີ ໃນເດືອນສີ່ ປີກຸນ ເອກສົກຈຸລສັກຣາຊ ໑໑໔໑ ກົງກັບ ພ.ສ. ໒໓໒໒.

ກຸງລ້ານຊ້າງ (ກຸງສີສັດຕນາຄນະຫຸດລ້ານຊ້າງ ຮົ່ມຂາວ ວຽງຈັນ) ຈຶ່ງເສັຽ ເອກຣາຊ ໃຫ້ແກ່ໄທ ໃນປີ ພ.ສ. ໒໓໒໑ ໃນແຜ່ນດິນຂອງສົມເດັດເຈົ້າສີຣິບຸນສານ ນັບເປັນຄັ້ງທີ່ສອງ ທີ່ກຸງສີ ສັດຕນາຄນະຫຸດ ເສັຽເອກຣາຊ.

ຕໍ່ມາພຣະບາງໄດ້ຖືກອັນເຊີນຫລົບໄປຍັງນະຄອນຫລວງພຣະບາງ ເນື່ອງຈາກບາງກອກເກີດແລ້ງຝົນບໍ່ຕົກເຖິງສາມປີ ບ້ານເມືອງອຶດຢາກເນື່ອງຈາກພຣະແກ້ວກັບພຣະບາງມາຢູ່ຮ່ວມກັນ ເຫດນີ້ພຣະບາງຈຶ່ງໄດ້ຖືກ ອັນເຊີນ ຫລົບໄປຍັງ ນະຄອນ ຫລວງພຣະບາງຕາມເດີມ ແລະຍັງໄດ້ປະດິສຖານຢູ່ຍັງນະຄອນຫລວງພຣະບາງຕໍ່ມາຈົນຕາບເທົ່າທຸກວັນນີ້.

ຕອນເປັນເມືອງຂຶ້ນຂອງໄທ

໔. ຣັຊກາລເຈົ້ານັນທະເສນ: ພ.ສ. ໒໓໒໕ ເຖິງ ໒໓໔໐

(ສໄມເປັນເມືອງຂຶ້ນຂອງໄທ)

ເມື່ອເຈົ້າສິຣິບຸນສານ ເສັຽນະຄອນວຽງຈັນໃຫ້ແກ່ ກອງທັບໄທນັ້ນ ພຣະອົງມີຣາຊໂອຣົດ ໔ ອົງຄື ເຈົ້ານັນທະເສນ, ເຈົ້າອິນທະວົງ, ເຈົ້າອະນຸວົງ, ແລະເຈົ້າພົມວົງ, ມີຣາຊທິດາອົງໜຶ່ງຄື ພຣະນາງແກ້ວຍອດຟ້າ (ເຈົ້າບົວຂຽວຄ້ອມ) ຂນະທີ່ກຸງລ້ານຊ້າງເສັຽແກ່ ກອງທັບໄທນັ້ນ ເຈົ້າສິຣິບຸນສານໜີໄປຢູ່ເມືອງຄຳເກີດແມ່ທັບໄທໄດ້ນຳເອົາເຈົ້ານັນທະເສນ, ເຈົ້າອິນທະວົງ, ເຈົ້າອະນຸວົງ, ແລະພຣະຣາຊທິດາແກ້ວຍອດຟ້າລົງໄປບາງກອກ ເມື່ອກອງທັບໄທໄດ້ຍົກຫລັບຕ່າວລົງໄປແລ້ວ ເຈົ້າສິຣິບຸນສານ ໄດ້ຊາບວ່າ ໄທບໍ່ໄດ້ທຳຮ້າຍ ບຸດທິດາ ທີ່ຈັບໄປ ແລະຍັງຊົງຊຸບລ້ຽງເປັນຢ່າງດີ ພໍເຖິງເດືອນອ້າຍ ປີ ພ.ສ. ໒໓໒໓ ເຈົ້າສິຣິບຸນສານຈຶ່ງໄດ້ຫລັບຄືນມາຍັງ ນະຄອນວຽງຈັນ ຂໍເປັນປະເທດຣາຊຂອງໄທ ເຈົ້າສິຣິ

ບຸນສານ ຄອງຣາຊສົມບັດ ຕໍ່ມາໄດ້ອີກ ໑ ປີ ກໍສວັນຄົດໃນປີ ພ.ສ. ໒໓໒໔.

ເຈົ້າແຜ່ນດິນໄທ ຈຶ່ງຊົງ ແຕ່ງຕັ້ງ ໃຫ້ ເຈົ້ານັນທະເສນຂຶ້ນມາຄອງນະຄອນວຽງຈັນໃນປີ ພ.ສ. ໒໓໒໕ ຊົງພຣະນາມວ່າ "ເຈົ້ານັນທະເສນພົມລາວ" ຕັ້ງເຈົ້າອິນທະວົງເປັນອຸປຣາຊ ສ່ວນເຈົ້າອະນຸວົງແລະເຈົ້າພົມວົງໃຫ້ປູ່ທີ່ບາງກອກ ແລະໃນປີດຽວກັນນັ້ນເຈົ້າໄຊຍະກຸມານກໍໄດ້ຫລົບຂຶ້ນເມືອຄອງນະຄອນຈຳປາສັກ ເຈົ້າສຸຣິຍະວົງສາກໍໄດ້ຫລົບຂຶ້ນໄປຄອງນະຄອນຫລວງພຣະບາງ ແລະໄດ້ຊົງຂໍພຣະບາງຂຶ້ນໄປຍັງນະຄອນຫລວງພຣະບາງນຳ.

ໃນປີ ພ.ສ. ໒໓໓໐ ເຈົ້ານັນທະເສນໄດ້ຍົກໄປຕີເມືອງຊຽງຂວາງ ເພາະວ່າເຈົ້າເມືອງແກວໄດ້ຍົກກອງທັບມາຕີເອົາເມືອງຊຽງຂວາງ ເຈົ້າເມືອງຊຽງຂວາງຍອມສົ່ງສ່ວຍໃຫ້ແກ່ແກວ ເຈົ້ານັນທະເສນຕີໄດ້ເມືອງຊຽງຂວາງ ແລະນຳເອົາເຈົ້າເມືອງຊຽງຂວາງມາຍັງນະຄອນວຽງຈັນ ເຈົ້າແຜ່ນດິນແກວ ຈຶ່ງໃຫ້ ແມ່ທັບແກວຄຸມທະຫານແກວ ໓໐໐໐ ຄົນ, ຊາວຊຽງຂວາງ ໓໐໐໐ ຄົນ, ລົງມາຕີນະຄອນວຽງຈັນໃນປີ ພ.ສ. ໒໓໓໑ ເຈົ້ານັນທະເສນ ຈຶ່ງໄດ້ຍອມ ປອງດອງກັບແກວ ສົ່ງ

ເຈົ້າຊຸມພູກັບໄປເມືອງຊຽງຂວາງຕາມເດີມ ແຕ່ເຈົ້າຊຸມພູ ຕ້ອງ ສົ່ງສ່ວຍ ໃຫ້ແກ່ລາວ ປ່າງ ຖຽວ ກັບສົ່ງ ໃຫ້ແກວ.

ໃນປີ ພ.ສ. ໒໓໓໕ ເຈົ້າບັນທະເສນຍົກກອງທັບໄປຕີຫລວງພຣະບາງ ເພາະເຫດເຈົ້າຫລວງພຣະບາງ ສົມຄົບ ກັບພະມ້າ ແລະ ເຈົ້າເມືອງ ຊຽງຮຸ່ງ ແຂງເມືອງຕໍ່ໄທ ເຈົ້າບັນທະເສນອ້ອມເມືອງຢູ່ໄດ້ ໑໕ ມື້ກໍເຂົ້າເມືອງໄດ້ແລ້ວນຳເອົາເຈົ້າອະນຸຣຸທທະ ເຈົ້າຄອງນະຄອນຫລວງພຣະບາງ, ເຈົ້ານັນທາດຸຣາຊ ອຸປຣາຊ ສົ່ງລົງໄປບາງກອກ ເຈົ້າອະນຸຣຸທທະຖືກກັກຕົວຢູ່ບາງກອກເຖິງ ໔ ປີ ຈຶ່ງໄດ້ຫລົບ ມາຄອງ ເມືອງຫລວງພຣະບາງ ແລະໃນປີ ພ.ສ. ໒໓໓໖ ທາງບາງກອກໄດ້ເກນລາວຊາວລ້ານຊ້າງຫລາຍໝື່ນຄົນສົ່ງໄປຂຸດຄອງໃນບາງກອກ ແລະທີ່ປ່ວຍເປັນໂຣກພະຍາດຕາຍກໍຫລວງຫລາຍ.

ເຖິງ ພ.ສ. ໒໓໓໙ ເຈົ້າອະນຸຣຸທທະໄດ້ຫລົບຂຶ້ນມາຄອງນະຄອນຫລວງພຣະບາງ ແລະໃນປີ ພ. ສ. ໒໓໓໙ ນັ້ນເອງ ໄດ້ຟ້ອງ ເຈົ້າບັນທະເສນ ເຈົ້າແຜ່ນດິນວຽງຈັນລົງໄປກຸງເທບວ່າ ສົມຄົບກັບເຈົ້າເມືອງນະຄອນພະນົມ ທ່າກາບ ຕິດຕໍ່ ກັບແກວ ຈະ ແຂງເມືອງ ຕໍ່

ບາງກອກ ເຈົ້າບັນທະເສນໄດ້ລີ້ໄປສູ້ຄະດີຢູ່ບາງກອກ ແລະສິ້ນພຣະຊົນເມື່ອ ພ.ສ. ໒໓໔໐ ທີ່ບາງກອກ ເຈົ້າບັນທະເສນ ພົມລາວ ຄອງນະຄອນ ວຽງຈັນ ຢູ່ໄດ້ ໑໔ ປີ ສວັນຄົດທີ່ບາງກອກເພາະ ລີ້ໄປສູ້ຄວາມທີ່ຖືກກ່າວຫາວ່າຕິດຕໍ່ກັບແກວຈະແຂ້ງເມືອງ.

໕. <u>ເຈົ້າອິນທະວົງ</u>: ພ.ສ. ໒໓໔໐ ເຖິງ ໒໓໕໒

ເຈົ້າອິນທະວົງໄດ້ຂຶ້ນຄອງອາຊສົມບັດໃນນະຄອນວຽງຈັນເມື່ອ ພ.ສ. ໒໓໔໐ ຕັ້ງເຈົ້າອະນຸວົງເປັນອຸປຮາຊ ໃນປີ ພ.ສ. ໒໓໔໑ ໄດ້ຍົກກອງທັບໄປຕີເມືອງແຖງ (ດຽນບຽນຟູ) ແລະໃນປີ ພ.ສ. ໒໓໔໖ ໄດ້ໃຫ້ເຈົ້າອະນຸວົງອຸປຮາຊ ນຳກອງທັບ ໄປຊ່ວຍ ໄທຮົບກັບພະມ້າ ແລະໃນປີ ພ.ສ. ໒໓໔໘ ແຕ່ງໃຫ້ເຈົ້າອະນຸວົງຍົກກອງທັບໄປຮົບກັບພະມ້າທີ່ເມືອງຊຽງແສນ ເຈົ້າອິນທະວົງສວັນຄົດເມື່ອ ພ.ສ. ໒໓໕໒ ເຈົ້າອິນທະວົງມີຮາຊທິດາ ເປັນເຈົ້າຈອມ ໃນ ຣັຊກາລທີ່ ໑ ແຫ່ງ ກຸງຣັຕນະໂກສິນ (ບາງກອກ) ແລະໄດ້ມີພຣະຮາຊທິດາຊົງພຣະນາມວ່າ "ເຈົ້າຟ້າກຸນທົນທິພຍະວະດີ"

໓. <u>ຣັຊກາລເຈົ້າອະນຸວົງ</u> : ພ.ສ. ໒໓໔໓ ເຖິງ ໒໓໗໐

ເຈົ້າອະນຸວົງໄດ້ຄອງຣາຊສົມບັດນະຄອນວຽງຈັນ ສືບຕໍ່ມາຊົງພຣະນາມວ່າ "ພຣະເຈົ້າໄຊເຊດຖາທິຣາຊທີ່ສາມ" ແຕ່ຄົນທັງຫລາຍເອີ້ນວ່າ "ເຈົ້າອະນຸວົງ" ເຈົ້າອະນຸວົງເປັນກະສັດທີ່ເຂັ້ມແຂງໃນການເສິກສົງຄາມ ເຄີຍນຳກອງທັບໄປຊ່ວຍໄທຣົບພະມ້າ ແລະນຳກອງທັບໄປຕີເມືອງຊຽງໃໝ່ສໄມພະມ້າປົກຄອງຢູ່ ຈົນຕີໄດ້ເມືອງຊຽງແສນ ເມື່ອເຈົ້າອະນຸວົງຂຶ້ນຄອງຣາຊສົມບັດເປັນເຈົ້າຄອງກຸງລ້ານຊ້າງຮົ່ມຂາວວຽງຈັນ ແລ້ວໄດ້ຊົງປັບປຸງກິຈການບ້ານເມືອງ ຄື -

໑. ໄດ້ສ້າງພຣະຣາຊວັງຂຶ້ນໃໝ່ທີ່ນະຄອນວຽງຈັນເມື່ອ ພ.ສ. ໒໓໕໑.

໒. ໄດ້ຊົງສ້ອມແຊມພຣະທາດພະນົມ ແລະໄດ້ສເດັດໄປສລອງເມື່ອປີ ພ.ສ. ໒໓໕໐.

໓. ໄດ້ຊົງສ້າງວັດສີບຸນເຮືອງຂຶ້ນທີ່ເມືອງໜອງຄາຍເມື່ອປີ ພ.ສ. ໒໓໕໑.

໔. ໄດ້ຊົງສ້າງຂົວຂ້າມແມ່ນ້ຳຂອງບ່ອນຊື່ກັບວັດຊ້າງເຜືອກບ້ານສີຊຽງໃໝ່ຈັງຫວັດໜອງຄາຍ ເມື່ອປີ ພ.ສ. ໒໓໔໕.

໕. ໄດ້ຊົງສ້າງຫໍພຣະແກ້ວແລະຫໍໄຕຣຂຶ້ນໃນນະຄອນວຽງຈັນເມື່ອປີ ພ.ສ ໒໓໔໗.

໓. ໄດ້ສເດັດໄປປາບ ຂະບົດ ສາຂຽດໂງ້ງ ທີ່ນະຄອນຈຳປາສັກໃນປີ ພ.ສ. ໒໓໓໑ ເຈົ້າຣາຊບຸດໂຍ້ຣາຊໂອຣົດຂອງເຈົ້າອະນຸວົງເປັນຜູ້ນຳຈັບສາຂຽດໂງ້ງໄດ້

ກ. ຊົງຂໍແຕ່ງຕັ້ງເຈົ້າຣາຊບຸດໂຍ້ຜູ້ມີຄວາມຊອບປາບສາຂຽດໂງ້ງໄດ້ໃຫ້ຂຶ້ນຄອງ ນະຄອນຈຳປາສັກ ສືບແທນ ເຈົ້າໜານ້ອຍ ຕໍ່ເຈົ້າແຜ່ນດິນໄທ ທີ່ບາງກອກທາງບາງກອກ ກໍໄດ້ໃຫ້ເຈົ້າຣາຊບຸດໂຍ້ເປັນເຈົ້າຄອງນະຄອນຈຳປາສັກ.

ເຈົ້າອະນຸກອບກູ້ເອກຣາຊ ເປັນ ອິສຣະ ແຍກຈາກໄທ

ເຈົ້າອະນຸວົງເປັນກະສັດລາວທີ່ມີຄວາມເຂັ້ມແຂງໃນການເສິກ ສົງຄາມ ມີຄວາມ ຮັກຊາດ ບ້ານເມືອງຫລາຍພຣະອົງນຶ່ງ ເຄີຍຍົກກອງທັບໄປຊ່ວຍໄທຣົບພະມ້າ ປາບໄດ້ໄຊຊະນະແກ່ພະມ້າຫລາຍເທື່ອ ເປັນ

ທີ່ສນິດສນົມຮັກແພງແກ່ພຣະເຈົ້າແຜ່ນດິນໄທ ຣັຊການທີ່ສອງແລະທີ່ສາມເປັນຢ່າງດີ.

ເນື່ອງຈາກ ເຈົ້າອະນຸ ເປັນກະສັດລາວ ທີ່ມີ ຄວາມຮັກຊາດບ້ານເມືອງຫລາຍ ພໍເຈົ້າຣາຊບຸດໂຍ້ໄດ້ຄອງນະຄອນຈຳປາສັກແລ້ວ ກໍ່ໄດ້ຄິດຫາທາງກອບກູ້ບ້ານເມືອງໃຫ້ເປັນອິສຣະພາບບໍ່ຂຶ້ນກັບໄທອີກ ໂດຍໄດ້ຍົກກຳລັງໄປຍຶດເອົາເມືອງນະຄອນຣາຊສີມາໄດ້ ແລະໃຫ້ເຈົ້າຣາຊວົງ ຍົກເລີຍໄປ ກວາດເອົາ ຄອບຄົວ ລາວແຖວເມືອງສຣະບຸຣີຫລັບຄືນມາຍັງນະຄອນວຽງຈັນ.

ຝ່າຍທາງ ບາງກອກ ໄດ້ຊາບ ຂ່າວວ່າ ເຈົ້າອະນຸແຂງເມືອງໃນເມື່ອເຈົ້າອະນຸວົງຍຶດໄດ້ເມືອງນະຄອນຣາຊສີມາແລ້ວ ຈຶ່ງໄດ້ກຽມປ້ອງກັນບາງກອກ ແຕ່ເຈົ້າອະນຸບໍ່ໄດ້ຍົກລົງໄປຕີຮອດບາງກອກ ພຽງແຕ່ຍຶດເອົາເມືອງນະຄອນຣາຊສີມາ ແລ້ວກວາດເອົາຄອບຄົວລາວຄືນໄປວຽງຈັນເທົ່ານັ້ນ ທາງບາງກອກຈຶ່ງເກນກອງທັບໃຫຍ່ຂຶ້ນມາປາບເຈົ້າອະນຸ ເຈົ້າອະນຸໄດ້ທຳການຕໍ່ສູ້ເປັນສາມາດ ໃນທີ່ສຸດເຈົ້າອະນຸສູ້ບໍ່ໄດ້ ຖືກຈັບໄປຂັງແລະສິ້ນພຣະຊົນຢູ່ທີ່ບາງກອກ.

ເຈົ້າອະນຸເຣີ່ມກູ້ເອກຣາຊແຕ່ ພ.ສ. ໒໓໖໙ ໄດ້ທຳການຕໍ່ສູ້ກັບກອງທັບໄທຈົນຮອດ ພ.ສ. ໒໓໗໑ ຈຶ່ງຖືກຈັບໄດ້ ແລະໄດ້ສິ້ນພຣະຊົນທີ່ບາງກອກດັ່ງກ່າວແລ້ວ.

ການທີ່ ກອງທັບໄທ ຕີນະຄອນ ວຽງຈັນ ໄດ້ເທື່ອທີ່ສອງນີ້ ເຈົ້າຊີວິດບາງກອກໄດ້ສັ່ງໃຫ້ທຳລາຍນະຄອນວຽງຈັນ ເສັຽ ເພື່ອບໍ່ໃຫ້ ຊາວລາວ ລ້ານຊ້າງ ຕັ້ງຕົວໄດ້ອີກ ແລະໄດ້ເລີກອານາຈັກລ້ານຊ້າງວຽງຈັນ ເຈົ້າຄອງນະຄອນກໍບໍ່ໄດ້ຊົງແຕ່ງຕັ້ງ ໃຫ້ມີອີກ ຕໍ່ໄປ ເຈົ້າຄອງນະຄອນ ແຫ່ງຣາຊວົງ ລ້ານຊ້າງ ຣົ່ມຂາວ ວຽງຈັນ ຈຶ່ງສິ້ນສຸດລົງ ແຕ່ພຽງ ຣັຊການ ເຈົ້າອະນຸວົງ ຫລືເຈົ້າໄຊເຊດຖາທິຣາຊທີ່ສາມເທົ່ານັ້ນ.

ທາງບາງກອກໄດ້ຊົງບົກເລີກປະເທດຣາຊວຽງຈັນເສັຽ ວຽງຈັນຈຶ່ງໄດ້ກາຍເປັນເມືອງຮ້າງນັກັນການຮັກສາປູ່ທີ່ເມືອງໜອງຄາຍ ທາງບາງກອກໄດ້ໂຮມເອົາດິນແດນນະຄອນວຽງຈັນໄປເຂົ້າກັບອານາຈັກສຍາມ (ໄທ) ແຕ່ປີ ພ.ສ. ໒໓໗໑ ເປັນຕົ້ນມາ.

(ສະເພາະຣັຊການຂອງເຈົ້າອະນຸວົງຈະຂຽນຢ່າງລະອຽດເປັນອີກຕອນນຶ່ງຕ່າງຫາກ : ຜູ້ຂຽນ)

ພາກທີ່ຫົກ
ວ່າດ້ວຍອານາຈັກລ້ານຊ້າງ
ນະຄອນຈຳປາສັກ

---

໑. <u>ຣັຊກາລເຈົ້າສ້ອຍສີສມຸດພຸທທາງກູຣ</u> ພ.ສ. ໒໒໕໐ ເຖີງ ໒໒໗໑

ເມືອງນະຄອນຈຳປາສັກນັ້ນ ເດີມເປັນຂອງພວກຈາມຊຶ່ງເອີ້ນວ່າ "ເມືອງຈາມປານະຄອນ" ມີທ້າວຄັທະນາມເປັນເຈົ້າເມືອງ ຕໍ່ມາເມື່ອພວກຈາມເສື່ອມອຳນາດແລ້ວຂອມເຂົ້າປົກຄອງ ມີພຣະຍາກັມະທາເປັນເຈົ້າເມືອງ ເມື່ອພຣະຍາກັມະທາສວັນຄົດແລ້ວບໍ່ມີຣາຊໂອຣົດສືບແທນ ຕໍ່ມາມີເຈົ້າຂເມນອົງໜຶ່ງຍົກພົນ ມາຕັ້ງບ້ານເມືອງຢູ່ບ່ອນ ທີ່ພຣະຍາ ກັມະທາ ສ້າງໄວ້ແຕ່ກ່ອນ ແມ່ນບ້ານກະຕືນ ທ່າເມືອງກາງ ດຽວນີ້ ແລ້ວປ່ຽນຊື່ເມືອງໃໝ່ວ່າ "ນະຄອນກະລະຈຳ ນາກນາຄບຸຣີສີ" ຫລືວ່າ "ນະຄອນຈາມນາກນາຄບຸຣີສີ"

ເຈົ້າຂເມນອົງນີ້ມີໂອຣົດຜູ້ໜຶ່ງຊື່ວ່າ "ເຈົ້າສຸທັດຣາຊາ" ເມື່ອສິ້ນພຣະຊົນພຣະຣາຊບິດາແລ້ວ ເຈົ້າ

ສຸທັດຣາຊາໄດ້ຄອງເມືອງສືບຕໍ່ມາຈົນຮອດ ພ.ສ. ໒໑໘໑ ຈຶ່ງສິ້ນພຣະຊົນ ເຈົ້າສຸທັດຣາຊາບໍ່ມີຣາຊໂອຣົດ ເສນາອຳມາດຈຶ່ງໄດ້ໄປເຊີນເອົາຜູ້ມີສະກຸນຜູ້ໜຶ່ງຂຶ້ນຄອງເມືອງມາໄດ້ ໓ ປີກໍ່ເຖິງແກ່ກັມ ນາງເພົາລູກສາວໄດ້ປົກຄອງແທນພໍ່ຕໍ່ມາ.

ເຈົ້າປາງຄຳ ເຈົ້າຄອງເມືອງໜອງບົວລຳພູ ຜູ້ແຕ່ງໜັງສືສິນໄຊ (ໃນສໄມແຜ່ນດິນເຈົ້າສຸຣິຍະວົງສາທັມມິກະຣາຊ) ໄດ້ລົງໄປຄ້ອງຊ້າງທາງເມືອງຈຳປາສັກ ໄປໄດ້ກັບນາງເພົາຈົນໄດ້ລູກສາວຜູ້ໜຶ່ງ ຊື່ວ່ານາງແພງ ແລ້ວໄດ້ຕ່າວຄືນມາເມືອງໜອງບົວລຳພູ ພໍນາງເພົາຕາຍ ນາງແພງໄດ້ປົກຄອງເບິ່ງແຍງບ້ານເມືອງຕໍ່ມາ

ເຖິງ ພ.ສ. ໒໒໓໗ ເຈົ້າສຸຣິຍະວົງສາທັມມິກະຣາຊເຈົ້າແຜ່ນດິນລ້ານຊ້າງວຽງຈັນສວັນຄົດ ພຣະບາເມືອງຈັນໄດ້ແຍ່ງເອົາຣາຊສົມບັດ ແລ້ວຈະເອົາພຣະນາງສຸມັງຄລະ ຣາຊທິດາ ຂອງ ພຣະເຈົ້າ ສຸຣິຍະ ວົງສາເປັນເມັຽ ແຕ່ພຣະນາງບໍ່ຍອມຈຶ່ງໄດ້ໜີໄປເພິ່ງປູ່ກັບພຣະຄູຍອດແກ້ວວັດໂພນສະເມັກ ຂນະນັ້ນພຣະນາງກຳລັງຊົງຄັນແລະເປັນໜ້າຍ ພຣະຄູຍອດແກ້ວຈຶ່ງໄດ້ສົ່ງໄປປູ່ພູຊະງໍ້ທຳຄຳ (ສົງໃສວ່າຈະແມ່ນແຖວບໍ່ຣິເວນ

บ້ານທໍ່ຄໍາໃນອໍາເພີບຶງກາລຖງວນີ້)   ແລ້ວໄດ້ປະສູຕ
ອາຊໄອຣິດຊິງນາມວ່າ "ເຈົ້າໜໍ່ກະສັຕ"

ຝ່າຍພຣະບາເມືອງຈັນ   ເຫັນປະຊາຊົນຣາສ
ດອນນັບຖືທ່ານ ພຣະຄູຍອດແກ້ວຫລາຍ ຈຶ່ງຄິດກໍາຈັດ
ເສັຽ ທ່ານພຣະຄູ ຈຶ່ງໄດ້ພາປະຊາຊົນ ບ່າວໄພ່ ຣາສດອນ
ບາດໂປມປະມານ ๓໐໐໐ ຄົນ   ພາກັນໜີອອກຈາກ
ແຂວງ ລ້ານຊ້າງ ວຽງຈັນ ໄປຢູ່ ບ້ານງິ້ວພັນລໍາ ສົມສນຸກ
ເມືອງນະຄອນພະນົມ   ແລ້ວໃຫ້ຄົນໄປເຊີນເອົາເຈົ້າໜໍ່
ກະສັຕແລະພຣະມານດາຈາກ ພູຊະງໍ້ຫໍ່ຄໍາລົງໄປຢູ່ນໍາທີ່
ບ້ານງິ້ວພັນລໍາສົມສນຸກ.

ສ່ວນ ທ່ານພຣະຄູຍອດແກ້ວ ໄດ້ລົງໄປທາງໃຕ້ໄປ
ຮອດບ່ອນໃດ ກໍ່ມີ ຣາສດອນນັບຖືໄປນໍາ ທ່ານພຣະຄູເປັນ
ຈໍານວນມາກຫລາຍ   ທ່ານພຣະຄູໄດ້ພາຄອບຄົວຣາຊ
ດອນ ລົງໄປຮອດ ແດນຂເມນ ແຂວງເມືອງ ປັນທາຍເພັຊ
ຈະຂໍອາໄສຢູ່ໃນເຂດແດນຂເມນ   ແຕ່ເຈົ້າໜ້າທີ່ຂເມນ
ຈະຮຽກເອົາເງືອງຈາກຣາສດອນຄົວລະ ๒ ບາດ   ທ່ານ
ພຣະຄູເຫັນວ່າຈະເປັນການເດືອດຮ້ອນ ແກ່ບ່າວໄພ່ຣາສ
ດອນ   ຈຶ່ງໄດ້ພາຫລົບຄືນມາຕາມຣູແມ່ນໍ້າຂອງ   ມາ
ຮອດເມືອງນະຄອນກາລະຈາມປາກປາກບຸຣີສີ   ໄດ້ພາ

ບ່າວໄພ່ຣາສດອນເຂົ້າປູ່ເມືອງນັ້ນ ຣາສດອນກໍພາກັນແຍກຍ້າຍໄປປູ່ຕາມໝູ່ບ້ານຕ່າງ ໆ ປະປົນກັບພວກຂ້າພວກສ່ວຍ, ຊຶ່ງເປັນເຈົ້າຂອງບ່ອນປູ່ມາແຕ່ກ່ອນນັ້ນ.

ຝ່າຍບາງແພງເຫັນບ່າວໄພ່ຣາສດອນນັບຖືທ່ານພຣະຄູຍອດແກ້ວຫລາຍ ຈຶ່ງໄດ້ນິມົນທ່ານພຣະຄູຍອດແກ້ວເຂົ້າໄປປູ່ໃນເມືອງ ແລ້ວມອບການປົກຄອງບ່າວໄພ່ປະຊາຣາສດອນໃຫ້ແກ່ທ່ານພຣະຄູ ທ່ານພຣະຄູເຂົ້າປູ່ໃນເມືອງມາຈົນຮອດປີ ພ.ສ. ໒໒໕໒ ເກີດໂຈນຜູ້ຮ້າຍອ້າຍຂະໂມຍຫລາຍແລະໄດ້ເກີດມີການຜິດຖຽງຂ້າຟັນແທງກັນຂຶ້ນ ທ່ານພຣະຄູເຫັນວ່າບໍ່ແມ່ນກິດການຂອງສົງ ທີ່ຈະທຳໂທດຜູ້ຮ້າຍ ຊາຍໂຈນ ຈຶ່ງໄດ້ໃຫ້ອຳມາດ ໄປເຊີນເອົາ ເຈົ້າໜໍ່ກະສັດ ກັບ ພຣະມານດາ ປູ່ບ້ານງິ້ວພັນລຳສົມສນຸກນັ້ນລົງໄປຍັງເມືອງຈຳບາກນາຄບຸຣີສີ.

ທ່ານພຣະຄູພ້ອມດ້ວຍເສນາອຳມາດຈຶ່ງເຊີນເຈົ້າໜໍ່ກະສັດຂຶ້ນຄອງຣາຊສົມບັດ ເປັນເມືອງເອກຣາຊຕາມປະເພນີກະສັດ ປຸງນາມເມືອງເປັນ "ນະຄອນຈຳປາສັກນັດຄະບຸຣີ" ເມື່ອປີມະເສັງເປັນຈະສົກຈຸລະສັກຣາຊ ໑໐໗໕ ກົງກັບ ພ.ສ. ໒໒໕໗ ຊົງພຣະນາມວ່າ

"ເຈົ້າສ້ອຍສີສມຸດ ພຸທທາງກູຣ" ຕໍ່ມາຈຶ່ງໄດ້ ເອີ້ນຊື່ເມືອງວ່າ "ເມືອງຈໍາປາສັກ" ຈົນຮອດທຸກວັນນີ້.

ເຈົ້າສ້ອຍສີສມຸດພຸທທາງກູຣ ໄດ້ຈັດການປົກຄອງ ບ້ານເມືອງ ຕັ້ງຕໍາແໜ່ງ ເສນາອໍາມາດ ຊ້າຍຂວາ ຕາມແບບຢ່າງ ຂອງກຸງສີສັດຕນາຄນະຫຸດ ຄົບຖ້ວນທຸກຕໍາແໜ່ງ ແລະໄດ້ຊົງສ້າງວັດໃໝ່ຂຶ້ນເອີ້ນວ່າ "ວັດຫລວງ" ແລ້ວນິມົນທ່ານພຣະຄູຍອດແກ້ວໂພນສະເມັກເຂົ້າໄປຢູ່ໃນວັດນັ້ນ ເຈົ້າສ້ອຍສີສມຸດມີໂອຣົດສາມອົງຄືເຈົ້າໄຊຍະກຸມານ, ເຈົ້າທັມະເທໂວ, ເຈົ້າສຸຣິໂຍ, ແລະໄດ້ຈັດທູດແຕ່ງພຣະຣາຊສານໄປຂໍພຣະຣາຊທິດາຂອງຂເມນນະເມືອງປັນທາຍເພັຊມາເປັນມະເຫສີ ມີຣາຊໂອຣົດອົງໜຶ່ງຊື່ວ່າ "ເຈົ້າໂພທິສານ" ພຣະອົງໄດ້ຊົງປັດປຸງກິດການບ້ານເມືອງຄື

໑. ໃຫ້ຈານຫວດໄປຮັກສາດ່ານ ດອນໂຂງໃຫ້ເປັນເຈົ້າເມືອງໂຂງ.

໒. ໃຫ້ທ້າວສຸດຕາເປັນ ພຣະໄຊເຊດຖາໄປຮັກສາບ້ານທາງໂຕ ປາກນ້ໍາເຊກອງ ຝັ່ງກ້າຕາວັນອອກ ຄືເມືອງຊຽງແຕງດຽວນີ້ ເປັນເຈົ້າເມືອງຊຽງແຕງ.

໓. ໃຫ້ ຈານແກ້ວ ໄປເປັນ ເຈົ້າເມືອງ ຮັກສາບ້ານ ຫົງ ຄືເມືອງສຸວັນະພູມບັດນີ້ ເປັນເຈົ້າເມືອງສຸວັນະພູມ.

໔. ໃຫ້ທ້າວໝັ້ນ ອ້າຫລວງເດີມ ຂອງບາງແພງ ເປັນຫລວງເອກໄປຮັກສາບ້ານໂພນ ຄືເມືອງສາຣະວັນດຽວນີ້.

໕. ໃຫ້ຈານຊຽງໄປເປັນເຈົ້າເມືອງສີນະຄອນເຂດ ຢູ່ໃນເຂດຈັງຫວັດສີສະເກດປະເທດໄທບັດນີ້ (ໃນຈັງຫວັດສີສະເກດມີຮູບເມືອງນະຄອນລຳດຳດວນຢູ່)

໖. ໃຫ້ທ້າວພົມ ເປັນຣາຊບຸດໂຄດ ໄປຮັກສາດ່ານບ້ານແກ້ວອາເຮີມ ຕໍ່ມາເອີ້ນວ່າເມືອງຄຳທອງຫລວງ ຄືເມືອງຄຳທອງດຽວນີ້ ເປັນເຈົ້າເມືອງຄຳທອງ.

໗. ໃຫ້ຈັນສຸຣິຍະວົງໄປຮັກສາດ່ານບ້ານໂພນສິມ ຄືເມືອງຕະໂປນ ເປັນເຈົ້າເມືອງຕະໂປນ.

໘. ໃຫ້ຈານໂສມໄປຮັກສາດ່ານບ້ານທົ່ງຣິດກະປື ຄືເມືອງອັຕະປືດຽວນີ້ ເປັນເຈົ້າເມືອງອັຕະປື.

໙. ໃຫ້ລູກພະລະງຸມ ເປັນຂຸນໜັກເຖົ້າ ໄປຮັກສາບ້ານໂຂງຈຽງ ເປັນເຈົ້າເມືອງຊຽງຈາງ.

໑໐. ໃນປີ ພ.ສ. ໒໒໖໙ ໃຫ້ເຈົ້າໂພທິສານຊຶ່ງເປັນ ຣາຊບຸດ ເກີດຈາກ ພຣະຣາຊທິດາຂເມນນັ້ນ ໄປເປັນເຈົ້າເມືອງຄວບຄຸມຂເມນຢູ່ບ້ານທົ່ງບົວສີ ແລະຍົກບ້ານທົ່ງບົວສີຂຶ້ນເປັນເມືອງສີຈຳບັງ.

ເຈົ້າສ້ອຍ ສີສມຸດ ພຸທທາງກູຣ ສວັນຄົດ ປີ ພ.ສ. ໒໒໗໑ ຢູ່ໃນຣາຊສົມບັດໄດ້ ໒໕ ປີ.

໒. <u>ຣັຊກາລເຈົ້າໄຊຍະກຸມານ</u> : ພ.ສ. ໒໒໗໑ ເຖິງ ໒໓໓໔

ເສນາອຳມາດ ຈຶ່ງອຸປພິເສກ ເຈົ້າໄຊຍະກຸມານຂຶ້ນເປັນກະສັດ ຄອງນະຄອນ ຈຳປາສັກ ເມື່ອ ພ.ສ. ໒໒໗໑ ເຈົ້າໄຊຍະກຸມານໄດ້ຕັ້ງເຈົ້າທັມເທໂວເປັນອຸປຣາຊ ຕັ້ງເຈົ້າສຸຣິໂຍເປັນຣາຊວົງ ໃນຣັຊກາລຂອງເຈົ້າໄຊຍະກຸມານມີເຫດການທີ່ສຳຄັນ ຄື -

໑. ພ.ສ. ໒໓໐໑ ເຈົ້າໄຊຍະກຸມານແລະເຈົ້າອຸປຣາຊທັມເທໂວຜູ້ນ້ອງຜິດໃຈກັນ ເຈົ້າອຸປຣາຊຈຶ່ງຄົບຄິດກັນກັບເຈົ້າສີຫາຕບຸດຈານທວດເຈົ້າເມືອງໂຂງສ້ອງສຸມຜູ້ຄົນໄວ້ ແລ້ວຍົກມາຕີເອົາເມືອງນະຄອນຈຳປາສັກ ເຈົ້າໄຊຍະກຸມານບໍ່ໄດ້ຕໍ່ສູ້ໜີໄປຢູ່ດອນມົດແດງ ເຈົ້າທັມເທໂວ ເຂົ້າຄອງ ເມືອງຈຳປາສັກ ແລ້ວເກນພົລ

ຈະໄປ ຂັບໄລ່ ບໍ່ໃຫ້ ເຈົ້າໄຊຍະກຸມານ ຢູ່ໃນ ແຂວງເມືອງນະຄອນຈຳປາສັກ ຝ່າຍພຣະຣາຊມານດາຈຶ່ງໄດ້ຫ້າມ ແລະອິບອິນ ໄກ່ເກັ່ງ ໃຫ້ອ້າຍນ້ອງປອງດອງ ສາມັກຄີກັບເຈົ້າອຸປຣາຊທັນເຫໂວຣູ້ສຶກຄວາມຜິດ ຈຶ່ງໄດ້ແຕ່ງໃຫ້ອຳມາດ ໄປເຊີນເຈົ້າ ໄຊຍະກຸມານ ໃຫ້ມາ ຄອງ ເມືອງຕາມເດີມ.

໒. ພ.ສ. ໒໓໑໔ ພຣະວໍໜີມາຈາກເມືອງໜອງບົວລຸ່ມພູ ມາຂໍອາສັຍຢູ່ໃນເຂດເມືອງຈຳປາສັກ ເຈົ້າໄຊຍະກຸມານກໍຍອມໃຫ້ຢູ່ໃນບ້ານດູ່ບ້ານແກ ຫລືເອີນວ່າ ຕຳບົນວຽງດອນກອງ.

໓. ພ.ສ. ໒໓໑໕ ໄດ້ໄປຫ້າມກອງທັບວຽງຈັນບໍ່ໃຫ້ທຳຮ້າຍພຣະວໍຕ໌ພຣະເຈົ້າສິຣິບຸນສານ ກອງທັບກຸງລ້ານຊ້າງວຽງຈັນ ຈຶ່ງໄດ້ຖອຍຫລົບຄືນໄປ ຍັງກຸງລ້ານຊ້າງວຽງຈັນ.

໔. ພ.ສ. ໒໓໒໐ ພຣະວໍຜິດໃຈກັນກັບເຈົ້າໄຊຍະກຸມານ ແລ້ວໜີຂຶ້ນໄປຢູ່ດອນມົດແດງ (ຜິດໃຈກັນເຣື່ອງສ້າງພຣະຣາຊວັງຊ່ວຍເຈົ້າໄຊຍະກຸມານ ລາຍລະອຽດ ໃນການຜິດໃຈກັນ ມີຢູ່ ໃນເຣື່ອງປວັດ ເມືອງອຸບົນ

ນັ້ນແລ້ວ) ຈຶ່ງໄປຂໍເປັນຂ້າຂອບຂັນທະສີມາຂອງພຣະເຈົ້າກຸງທົນບຸຣີ.

໕. ພ.ສ. ໒໓໒໐ ເຈົ້າສິຣິບຸນສານໄດ້ຊາບຂ່າວວ່າ ພຣະວໍ ຜິດໃຈ ກັບກັບ ເຈົ້າໄຊບະກຸມານແລະຂຶ້ນມາຢູ່ດອນມົດແດງແລ້ວ ຈຶ່ງໃຫ້ພຣະບາສຸໂພຍົກກອງທະຫານມາຕາມຕີພຣະວໍ ແລ້ວຈັບພຣະວໍໄດ້ໃຫ້ຂ້າເສັຽ (ລາຍລະອຽດເຣື່ອງນີ້ ມີຢູ່ໃນການຕໍ່ສູ້ກັນ ຣະຫວ່າງກອງທັບລ້ານຊ້າງວຽງຈັນ ກັບພຣະວໍໃນໜັງສືປວັດສາດເມືອງອຸບົນ)

ພ.ສ. ໒໓໒໐ ກອງທັບໄທຍົກມາຕີເມືອງນະຄອນຈຳປາສັກໄດ້ ນະຄອນຈຳປາສັກຈຶ່ງຕົກເປັນເມືອງຂຶ້ນຂອງໄທແຕ່ ພ.ສ. ໒໓໒໑ ເຈົ້າໄຊບະກຸມານຖືກຄຸມຕົວລົງໄປຢູ່ບາງກອກ ຮອດ ພ.ສ. ໒໓໒໔ ຈຶ່ງໄດ້ຫລົບຄືນມາຄອງນະຄອນຈຳປາສັກຕາມເດີມ.

ອານາຈັກນະຄອນຈຳປາສັກເປັນເອກຣາຊໄດ້ພຽງ ໖໕ ປີ ຄືນັບແຕ່ເມື່ອເປັນເອກຣາຊເມື່ອ ພ.ສ. ໒໒໕໖ ເສັຽເອກຣາຊ ເປັນປະເທດຣາຊຂອງໄທ ເມື່ອ ພ.ສ. ໒໓໒໑. ເມື່ອເຈົ້າໄຊບະກຸມານ ໄດ້ຫລົບ ຂຶ້ນມາຄອງ

ນະຄອນຈຳປາສັກແລ້ວ ໄດ້ຕັ້ງເຈົ້າໜັນເຫໂວຂຶ້ນເປັນອຸປຮາຊ ແລະຕັ້ງເຈົ້າສຸຣິໂຍເປັນຮາຊວົງຕາມເດີມ ເຈົ້າໄຊຍະກຸມານມີໂອຣົດອົງໜຶ່ງຄື ເຈົ້າໜໍ່ເມືອງ ມີຮາຊທິດາ ໒ ອົງຄື ເຈົ້າບົງກຸມາຣີ, ເຈົ້າບົງກ້ອນແກ້ວ.

ພ.ສ. ໒໓໒໔ ຊຽງແກ້ວເປັນກະບົດໄດ້ຍົກກຳລັງມາຕີນະຄອນຈຳປາສັກ ເຈົ້າໄຊຍະກຸມານພຣະຊົນໄດ້ ໘໑ ປີ ຊະຣານາກໍແລ້ວຈຶ່ງຕົກໃຈ ສເດັດໜີອອກຈາກເມືອງແລະສວັນຄົດ ຊຽງແກ້ວໄດ້ເມືອງຈຳປາສັກ ທ້າວຝ່າຍໜ້າບຸດພຣະຕາປູ່ບ້ານສິງທ່າ (ອຳເພີເມືອງຍະໂສທອນຈັງຫວັດອຸບົນຖຽວນີ້) ກັບພຣະປະທຸມສຸຣະຮາຊ (ທ້າວຄຳຜົງ) ເຈົ້າເມືອງອຸບົນຍົກກອງທັບໄປຕີເອົາເມືອງນະຄອນຈຳປາສັກຄືນໄດ້ ຈັບຊຽງແກ້ວໄດ້ກໍຂ້າເສັຽ ເປັນອັນວ່ານະຄອນຈຳປາສັກຕົກໄປເປັນປະເທດຮາຊຂອງໄທ ແຕ່ ພ.ສ. ໒໓໒໑ ໃນແຜ່ນດິນເຈົ້າໄຊຍະກຸມານ.

໓. <u>ພຣະວິຊັຍຂັດຕິຍະວົງສາ</u> : ພ.ສ. ໒໓໒໔ ເຖິງ ໒໓໔໐

ທາງບາງກອກໄດ້ແຕ່ງຕັ້ງທ້າວຝ່າຍໜ້າຊຶ່ງຜາບກະບົດຊຽງແກ້ວນັ້ນ ໃຫ້ເປັນເຈົ້າຄອງນະຄອນຈຳປາ

ສັກ ຊົງພຣະນາມວ່າ "ພຣະວິຊັຍຂັຕິຍະວົງສາ" ເຖິງ ພ.ສ. ໒໓໔໘ ໄດ້ຕັ້ງບ້ານບາຂະບອມຂຶ້ນເປັນເມືອງ ເອີ້ນວ່າເມືອງສະພາດ ໃຫ້ລູກຈານຫວດເຈົ້າເມືອງໂຂງເປັນເຈົ້າເມືອງ ຊື່ວ່າ "ພຣະສີອັດຣາຊ"

ພຣະວິຊັຍຂັຕິຍະວົງສາມີໂອຣົດອົງນຶ່ງຊື່ວ່າ ເຈົ້າບຸດຕະ ມີຣາຊທິດາສາມອົງຄື ເຈົ້າຍິງແດງ, ເຈົ້າຍິງຄຳໃດ, ເຈົ້າຍິງຄຳແກ້ວ, ພຣະວິຊັຍຂັຕິຍະວົງສາເຖິງແກ່ພິລາລັຍ (ຕາຍ) ເມື່ອ ພ.ສ. ໒໓໕໐ ທາງບາງກອກ ໄດ້ຕັ້ງເຈົ້າໜໍ່ເມືອງ ໂອຣົດ ເຈົ້າໄຊຍະກຸມານ ເປັນເຈົ້າຄອງນະຄອນຈຳປາສັກຢູ່ໄດ້ ປີ ນີ້ ກໍ່ເຖິງແກ່ພິລາລັຍອີກ.

ໃນຣັຊການຂອງພຣະວິຊັຍຂັຕິຍະວົງສາ ເຈົ້າພຣະຍາກະລາໂຫມຣາຊເສນາ ຂ້າຫລວງມາຈາກບາງກອກເພື່ອເຝົ້າເຈົ້າຂັຕິຍະວົງສາ ເມື່ອເວລາຫລົບເມືອບາງກອກໄດ້ນຳເອົາພຣະແກ້ວຜລຶກ ຊຶ່ງເມືອງນະຄອນຈຳປາສັກ ໄດ້ມາຈາກ ພວກຂ້າບ້ານສົ້ມປ່ອຍ ລົງໄປຖວາຍພຣະເຈົ້າແຜ່ນດິນໄທທີ່ບາງກອກ ແລະປະດິສຖານໄວ້ທີ່ວັດສະປະທຸມຈົນຮອດທຸກມື້ນີ້.

໔. <u>ເຈົ້າໜານ້ອຍ</u> : ພ.ສ. ໒໓໕໖ ເຖິງ ໒໓໖໐

ເຖິງ ພ.ສ. ໒໓໕໖ ທາງບາງກອກຈຶ່ງໄດ້ຕັ້ງເຈົ້າໜານ້ອຍ ໂອຣົດເຈົ້າຣາຊວົງສຸຣິໂຍ ຫລານເຈົ້າສ້ອຍສີສມຸດພຸທທາງກູຣ ເປັນເຈົ້າຄອງນະຄອນຈຳປາສັກ ໃຫ້ເຈົ້າຫັມກິຕິກາ ລູກຊາຍອຸປຣາຊຫັມເທໂວເປັນອຸປຣາຊ ຕໍ່ມາເຈົ້າໜານ້ອຍກັບເຈົ້າອຸປຣາຊກິຕິກາຜິດໃຈກັນ ເຈົ້າແຜ່ນດິນສຍາມຈຶ່ງຮຽກເອົາເຈົ້າອຸປຣາຊຫັມກິຕິກາໄປໄວ້ບາງກອກ.

ພ.ສ. ໒໓໕໘ ເກີດຂະບົດສາຂຽດໂງ້ງ ໂດຍມີພຣະພິກສຸຕົນນຶ່ງ ຊື່ສາ ຢູ່ພູເຂົາຂຽດໂງ້ງ ອ້າງຕົນວ່າເປັນຜູ້ວິເສດເອີ້ນໄຟຈາກດວງອາທິດໄດ້ ໂດຍເອົາແກ້ວບູບ (ແວ່ນບູບ) ສ່ອງກັບແສງແດດເຮັດໃຫ້ເກີດໄຟໄດ້ ຣາສດອນຫລົງເຊື່ອວ່າເປັນຜູ້ວິເສດ ມາຍອມເຂົ້າເປັນພວກຫລວງຫລາຍ ສາຂຽດໂງ້ງຈຶ່ງນຳເອົາພັກພວກເຂົ້າມາຕີນະຄອນຈຳປາສັກ ເຈົ້າໜານ້ອຍໜີເຂົ້າປ່າ ສາຂຽດໂງ້ງໄດ້ເມືອງແລ້ວກໍເອົາໄຟເຜົາເມືອງ ທາງບາງກອກສົ່ງກອງທັບຂຶ້ນມາຜາບ ສາຂຽດໂງ້ງຮູ້ຂ່າວກໍຫລົບລົງໄປຢູ່ພູເຂົາແຂວງເມືອງອັດຕະປື ແມ່ທັບໄທຈຶ່ງໄດ້ນຳເອົາເຈົ້າໜານ້ອຍລົງໄປບາງກອກ ເຈົ້າໜານ້ອຍໄດ້

ເຖິງແກ່ພິລາລັຍທີ່ບາງກອກເມື່ອ ພ.ສ. ໒໓໖໐ ເຈົ້າໜານ້ອຍມີຣາຊໂອຣົດ ໖ ອົງຄື - ເຈົ້າອຸ່ນ, ເຈົ້າບຸດຕະ, ເຈົ້າແສງ, ເຈົ້າບຸນ, ເຈົ້າຈຸ່ນ, ເຈົ້າຈູ.

໕. <u>ເຈົ້າຣາຊບຸດໂຍ້</u> : ພ.ສ. ໒໓໖໒ ເຖິງ ໒໓໗໐

ຂນະທີ່ສາຍຽດໂງ້ງຫລົບໜີລີ້ຢູ່ໃນເຂດແຂວງອັຕະປືນັ້ນ ເຈົ້າຣາຊບຸດໂຍ້ຣາຊໂອຣົດຂອງເຈົ້າອະນຸວົງເຈົ້າຄອງ ນະຄອນ ລ້ານຊ້າງ ວຽງຈັນ ໄດ້ນຳທະຫານ ຕາມຈັບສາຍຽດໂງ້ງໄດ້ ຈຶ່ງໄດ້ນຳຕົວສົ່ງລົງໄປບາງກອກ ທາງບາງກອກ ຈຶ່ງໄດ້ແຕ່ງຕັ້ງ ເຈົ້າຣາຊບຸດໂຍ້ ເປັນເຈົ້າ ຄອງນະຄອນຈຳປາສັກໃນປີ ພ.ສ. ໒໓໖໒ ເຈົ້າຄຳປ້ອມເປັນອຸປຣາຊ ເຈົ້າຣາຊບຸດໂຍ້ໄດ້ສ້າງກຳແພງເມືອງກໍ່ດ້ວຍດິນຈີ່ອ້ອມຮອບເມືອງ ເພື່ອປ້ອງກັນ ຂ້າເສິກບໍ່ໃຫ້ຍົກມາຕີໄດ້.

ເຖິງ ພ.ສ. ໒໓໗໐ ເຈົ້າອະນຸວົງກູ້ເອກຣາຊຂອງນະຄອນວຽງຈັນໃຫ້ເປັນອິສຣະບໍ່ຂຶ້ນກັບໄທ ເຈົ້າຣາຊບຸດໂຍ້ ເຈົ້ານະຄອນຈຳປາສັກໄດ້ຍົກກອງທັບໄປຕີເມືອງສັງຂະ, ສຸຣິນ, ຂຸຂັນ, ກວາດຕ້ອນເອົາປະຊາຣາສດອນໄປຢູ່ເມືອງນະຄອນຈຳປາສັກ ເມື່ອກອງທັບໄທຍົກຂຶ້ນໄປຜານ ເຈົ້າຣຸບຊົ່ງເປັນບຸດຂອງເຈົ້າໂອໄດ້ຕາມຈັບເຈົ້າ

ຣາຊບຸດໂປ້ໄດ້ ທາງບາງກອກຈຶງໃຫ້ເຈົ້າຮຸຍໄດ້ເປັນເຈົ້າຄອງນະຄອນຈຳປາສັກຕໍ່ໄປ.

ຍ. <u>ເຈົ້າຮຸຍ</u> : ພ.ສ. ໒໓໗໑ ເຖິງ ພ.ສ. ໒໓໘໔

ເມື່ອເສັດສົງຄາມແລ້ວ ເຈົ້າຮຸຍໄດ້ເປັນເຈົ້າຄອງນະຄອນຈຳປາສັກ ເຈົ້າບາກເປັນອຸປຮາຊ ເຖິງ ພ.ສ. ໒໓໘໐ ເກີດໄຟໃໝ້ເມືອງນະຄອນຈຳປາສັກ ເຈົ້າຮຸຍຈຶງໄດ້ພາບ່າວໄພ່ຣາສດອນ ມາຕັ້ງເມືອງໃໝ່ຢູ່ທີ່ບ້ານທົບລອດ.

ເຈົ້າຮຸຍມີໂອຣົດ ໗ ອົງ ຄື- ເຈົ້າໂສມ, ເຈົ້າອິນ, ເຈົ້າຄຳໃຫຍ່, ເຈົ້າຄຳສຸກ, ເຈົ້າຄຳສຸ້ຍ, ເຈົ້ານ້ອຍ, ເຈົ້າພົມະບຸດ, ມີຣາຊທິດາ ໗ ອົງຄື - ເຈົ້າຍິງພົມພາ, ເຈົ້າຍິງເຂັມຄຳ, ເຈົ້າຍິງຄຳສິງ, ເຈົ້າຍິງທຸມມາ, ເຈົ້າຍິງໄຂຄຳ, ເຈົ້າຍິງຄຳແພງ, ເຈົ້າຍິງດວງຈັນ.

ເຈົ້າຮຸຍຄອງນະຄອນຈຳປາສັກໄດ້ ໑໓ ປີ ກໍເຖິງແກ່ພິລາລັຍໃນປີ ພ.ສ. ໒໓໘໔.

ຎ. <u>ເຈົ້າບາກ</u> : ພ.ສ. ໒໓໘໔ ເຖິງ ໒໓໙໔

ເຈົ້າອຸປຮາຊບາກໄດ້ຄອງນະຄອນ ຈຳປາສັກສືບຕໍ່ມາ ຕັ້ງເຈົ້າເສືອງເປັນອຸປຮາຊ ຕັ້ງເຈົ້າເສນແລະເຈົ້າ

ສາໂອຣົດເປັນຣາຊວົງແລະຣາຊບຸດຕາມລຳດັບ ເຈົ້ານາກມີໂອຣົດ ໙ ອົງ ຄື- ເຈົ້າຣາຊວົງເສນ, ເຈົ້າຣາຊບຸດສາ, ເຈົ້າໂພທິສານ, ເຈົ້າອິນທະຊິດ, ເຈົ້າຄຳສິງ, ເຈົ້າຄຳນ້ອຍ, ມີຣາຊທິດາ ໔ ອົງຄື- ເຈົ້າຍິງດວງຈັນ, ເຈົ້າຍິງສີນ, ເຈົ້າຍິງຈຽງ, ເຈົ້າຍິງເຂັມຄຳ.

ເຖິງ ພ.ສ. ໒໓໗໔ ເຈົ້ານາກໄດ້ໄປບາງກອກປ່ວຍເປັນໂຣກຫ່າ (ອະຫິວາ) ເຖິງແກ່ພິລາລັຍຢູ່ທີ່ບາງກອກ ພຣະຊົນມາຍຸໄດ້ ໖໙ ພັນສາ ທາງບາງກອກໄດ້ຕັ້ງເຈົ້າບົວ ເປັນເຈົ້າຄອງນະຄອນຈຳປາສັກໃນປີ ພ.ສ. ໒໓໗໙ ເຈົ້າບົວຍັງບ່ທັນໄດ້ຂຶ້ນມາຄອງນະຄອນຈຳປາສັກເກີດປ່ວຍ ແລະເຖິງແກ່ພິລາລັຍຢູ່ທີ່ບາງກອກໃນປີ ພ.ສ. ໒໓໗໙ ນັ້ນເອງ.

໘. <u>ເຈົ້າບຸຕິທັມສູນທອນ</u> : (ຄຳໃຫຍ່) ພ.ສ. ໒໓໗໘ ເຖິງ ພ.ສ. ໒໔໐໒

ທາງບາງກອກໄດ້ແຕ່ງຕັ້ງໃຫ້ເຈົ້າຄຳໃຫຍ່ ໂອຣົດຂອງເຈົ້າຣຸຍເປັນເຈົ້ານະຄອນຈຳປາສັກ ຊົງນາມວ່າ "ເຈົ້າບຸຕິທັມສູນທອນ" ເມື່ອ ພ.ສ. ໒໓໗໘ ໃຫ້ເຈົ້າອຸເປັນອຸປຣາຊ ເຈົ້າບຸຕິທັມສູນທອນຄອງນະຄອນຈຳປາສັກມາໄດ້ ໔ ປີ ກ່ເຖິງແກ່ພິລາລັຍໃນປີ ພ.ສ. ໒໔໐໒.

ເຈົ້າຍຸຕິທັມສູນທອນມີພຣະຣາຊທິດາ ໒ ອົງ ຄື - ເຈົ້າຍິງຄຳຜິວ, ແລະເຈົ້າຍິງມາລາ.

ຌ. <u>ເຈົ້າຍຸຕິທັມທອນ</u> (ຄຳສຸກ) : ພ.ສ. ໒໔໐໕ ເຖິງ ໒໔໔໔

ເຈົ້າຄຳສຸກໂອຣົດຂອງເຈົ້າຣຸຍ ໄດ້ຄອງນະຄອນຈຳປາສັກ ຊົງພຣະນາມວ່າ "ເຈົ້າຍຸຕິທັມທອນ" ຕັ້ງເຈົ້າແສງໂອຣົດເຈົ້າໜານ້ອຍເປັນອຸປຣາຊ ເຖິງ ພ.ສ. ໒໔໐໙ ເຈົ້າຄຳສຸກໄດ້ຍ້າຍເມືອງຈາກເມືອງເກົ່າຫີນລອດ ໄປຕັ້ງຢູ່ຣະຫວ່າງໂພນບົກກັບວັດລະຄອນ ຣິມຝັ່ງຂອງດ້ານຕາວັນຕົກ ເປັນເມືອງນະຄອນຈຳປາສັກມາຈົນເທົ້າທຸກວັນນີ້.

ເຈົ້າຍຸຕິທັມທອນ (ຄຳສຸກ) ເຈົ້ານະຄອນຈຳປາສັກໄດ້ສເດັດໄປບາງກອກເມື່ອ ພ.ສ. ໒໔໔໐ ໄດ້ນຳໂອຣົດສາມອົງ ຄື ເຈົ້າຫຍຸຍ, ເຈົ້າເບັງ, ເຈົ້າອຸຍ, ໄປນຳ ເຈົ້າຫຍຸຍໄດ້ຣັບ ພຣະຣາຊທານ ບັນດາສັກເປັນເຈົ້າຣາຊດະນັຍ ຫລັບ ມາຊ່ວຍ ຣາຊການ ທີ່ ນະຄອນຈຳປາສັກ ສ່ວນເຈົ້າເບັງ ແລະ ເຈົ້າອຸຍ ໄດ້ຣັບການ ສຶກສາ ຕໍ່ຢູ່ບາງກອກ ຕໍ່ມາເຈົ້າເບັງໄດ້ອັບບັນດາສັກເປັນເຈົ້າສັກປະສິດ

ໄດ້ເປັນເຈົ້າເມືອງລຳປາງ ແລະໄດ້ເຖິງແກ່ພິລາລັຍ ທີ່ເມືອງລຳປາງປະເທດໄທ.

ສ່ວນເຈົ້າອຸຍໄດ້ຮັບບັນດາສັກເປັນເຈົ້າສັກປະເສີດ ໄດ້ຮັບ ຣາຊການ ເປັນ ເລຂານຸການ ກົມ ມະຫາດໄທ ໃນ ບາງກອກ ຈົນຄົບກະສຽນອາຍຸຣາຊການຈຶ່ງໄດ້ອອກຮັບ ພຣະຣາຊທານບຳນານ. ປັດຈຸບັນນີ້ເຈົ້າສັກປະເສີດ ໄດ້ດຳຣົງຕຳແໜ່ງອົງຄະມົນຕຣີ (ທີ່ປຶກສາພຣະເຈົ້າ ແຜ່ນດິນລາວ) ຢູ່ທີ່ນະຄອນວຽງຈັນ.

ເຈົ້າບຸດີທັມທອນ (ຄຳສຸກ) ເຖິງແກ່ພິລາລັຍ ພ.ສ. ໒໔໔໓ ຄືຫລັງຈາກຜານຂະບົດຜີບຸນຜີບ້າແລ້ວ ສີຣິຣວມຊົນມາຍຸໄດ້ ໗໙ ພັນສາ ຢູ່ໃນສົມບັດ ໓໙ ປີ.

໑໐. <u>ເຈົ້າຣາຊດະນັຍ</u> (ຫຍຸ່ຍ) : ພ.ສ. ໒໔໔໓ປີ ເຖິງ ໒໔໘໙.

ເຈົ້າບຸດີທັມທອນເຖິງແກ່ພິລາລັຍແລ້ວ ເຈົ້າອຸປ ຣາຊບົວຣະພັນເປັນຜູ້ຮັກສາຣາຊການແທນ ທາງບາງ ກອກຍັງບໍ່ທັນໄດ້ແຕ່ງຕັ້ງຜູ້ໃດເປັນເຈົ້າຄອງນະຄອນຈຳ ປາສັກ ເຖິງ ພ.ສ. ໒໔໔໕ປີ ນະຄອນຈຳປາສັກຕົກໄປ ເປັນຂອງຝຣັ່ງເສດ ເຈົ້າອຸປຣາຊບົວຣະພັນບໍ່ພໍໃຈຢູ່

ກັບຝຣັ່ງເສດໄດ້ເຂົ້າໄປ ປຸ່ທີ່ເມືອງອຸບົນ ຈົນເຖິງແກ່ພິລາ ລັບປູ່ທີ່ເມືອງອຸບົນນັ້ນ.

ຈຶ່ງບັງເຫລືອປູ່ທີ່ນະຄອນຈຳປາສັກ ແຕ່ເຈົ້າຣາຊ ດະນັຍ (ຫນຸຍ) ແລະເຈົ້າຣາຊພາຄີນັຍ (ຄຳໜຸນ) ເຈົ້າຣາຊດະນັຍໄດ້ຄອງຕຳແໜ່ງເຈົ້ານະຄອນຈຳປາສັກ ເມື່ອ ພ.ສ. ໒໔໔ປີ ຕັ້ງເຈົ້າຄຳຜາຍເປັນອຸປຣາຊ ເຈົ້າຄຳ ພັນເປັນຣາຊບຸດ ເຖິງ ພ.ສ. ໒໔໘໔ ດິນແດນນະຄອນ ຈຳປາສັກຫລົບມາເປັນຂອງໄທອີກ ທາງຣັຖບານໄທ ໄດ້ແຕ່ງຕັ້ງເຈົ້າຣາຊດະນັຍ ເປັນເຈົ້າຄອງນະຄອນຈຳປາ ສັກຕາມເດີມ ເຈົ້າຣາຊດະນັຍເຖິງແກ່ພິລາລັບເມື່ອ ເດືອນມີນາ ໒໔໘໙.

໑໑. <u>ເຈົ້າບຸນອຸ້ມ ນະຈຳປາສັກ</u> : ພ.ສ. ໒໔໘໙

ເມື່ອເດືອນພຶສຈິກາຍົນ ໒໔໘໙ ຣັຖບານໄທໄດ້ຍົກ ດິນແດນ ຕອນນະຄອນຈຳປາສັກ ຄືນໃຫ້ແກ່ຝຣັ່ງເສດອີກ ເມື່ອເລີກສົງຄາມໂລກເທື່ອທີ່ສອງແລ້ວ ຝຣັ່ງເສດໄດ້ ຕັ້ງເຈົ້າບຸນອຸ້ມ ໃຫ້ມີຖານັນດອນສັກເປັນ "ສເດັດເຈົ້າ ບຸນອຸ້ມ ນະຈຳປາສັກ"

ປັດຈຸບັນນີ້ສເດັດເຈົ້າບຸນອຸ້ມ ນະຈຳປາສັກ ຊົງດຳຣົງຕຳແໜ່ງ ກວດຣາຊການ ທົ່ວໄປ ແທນອົງພຣະບາທສົມເດັດພຣະເຈົ້າມະຫາຊີວິດແຫ່ງປະເທດລາວ.

ອັນໜຶ່ງໃນສັນຍາປຣັ່ງເສດ - ລາວ ຊຶ່ງພຣະບາທສົມເດັດພຣະເຈົ້າສີສວ່າງວົງ ໄດ້ຊົງລົງພຣະປະຣະມາພິໄທນັ້ນ ໄດ້ຮັບຮອງເອົາວ່າ ສເດັດເຈົ້າບຸນອຸ້ມ ນະຈຳປາສັກ ເປັນຜູ້ຊົງສັກສູງໃນແຜ່ນດິນລາວ ເປັນທີສາມ ຮອງຈາກພຣະເຈົ້າແຜ່ນດິນແລະສົມເດັດອົງນົງກຸດຣາຊກຸມານ.

໑. ພຣະຣາຊສານກຸງສີສັຕນາຄນະຫຸຕ ນິມາຍັງກຸງທົນບຸຣີ

---

໑ ພຣະຣາຊສານສາຂີນທະສີຂາຣວ່ຣຊົມພູພຣົກ ສະ ອະທິຄຸນກມົນທົລບຸນຜົດ ວິກະສິຕະວິຣະຈຕິປະ ພາຫາ ນັນຕະມະຫັນຕະຄຸນ ວິບຸລມະນູນ ສຸນທອນ ສຸຂັດກະປຣະມັຖະ ອຖະທີຕະ ກໍຣະນັດຖະທັສນາການ ສານສຸນໄສໄບບະທັມມາ ຄຳພີຣະໄຊຕີນະທໍຣະສຳພາ ຣາຕິເອກອະເນກອະນັນ ມະຫັນຕະມະໂຫຣານພິສານ ພິສິດ ພິພິທຣັຕນະຣາໄຊນະ ປະຕິມັນທິຕະພິຈິຕວິໄຣ ໄຊຕິມັນທະ ຈັນທຈອນວໍຣະຣັກສອັຄປ່ຣະມາສາຣະສິທ ທິທີຕະທັມໄມຕຣີ ໃນພຣະບາທສົມເດັດບໍຣົມບໍພິຕ ພຣະມຫາບຸນໄຊນະເຊຖາຈັກຣພັດິພູມິນທອນ ທັມ ມິກຣາຊາ ທິຣາຊ ພຣະເຈົ້າ ກຸງສີ ສັຕນາຄນະຫຸຕ ອຸດມ ຣາຊທານີບຸຣີຣົມຍ໌ ບໍຣົມນາຖບໍຣົມບໍພິຕຣ ຈິຕນາ ສຸພາ ວິຕສັຕບາ ນິຕນະ ທັມໄມຕຣີ ສີຣສະ ພຈົນຸດມະສະ ນາຄົມສົມເດັດພຣະມະຫາເອກາທຸສຣຸທອິສວນ ມຫາ ກຣະສັຕຣາທິຣາຊບໍຣົມນາຖບໍພິຕຣ ພຣະມຫານະ

ພາກທີ່ເຈັດ

ວ່າດ້ວຍພຣະຣາຊສານ

ພຣະຣາຊສານ ຂອງ ພຣະເຈົ້າ ມະຫາຊີວິດພຣະເຈົ້າຕາກສິນກຸງທິນບຸຣີ ແລະພຣະເຈົ້າມະຫາຊີວິດພຣະເຈົ້າສີຣິບຸນສານ ກຸງສີສັຕນາຄນະຫຸດ ໄດ້ມີໂຕ້ຕອບ ກັບໄປມາ ໂຣມທັງຂອງ ເສນາບໍດີ ແລະ ສານ ຂອງພຣະສມະນາພຣະສັງຄຣາຊ ມີ ໑໐ ສະບັບ ທີ່ໄດ້ນຳມາພິມນີ້ພຽງ ໕ ສະບັບ ຄືເອົາແຕ່ພຣະຣາຊສານຂອງພຣະເຈົ້າຕາກສິນ ແລະ ພຣະເຈົ້າສີຣິບຸນສານ ເທົ່ານັ້ນ ແລະໄດ້ສຳເນົາເອົາຕາມ ການຊຽນໜັງສືໃນໜັງສືພຣະຣາຊວິຈານຣັຊກາລທີ່ ໕ (ພຣະບາທສົມເດັດພຣະຈຸນຈອມເກົ້າເຈົ້າຢູ່ຫົວ) ສຳນັກພິມສຍາມບັນນາການຈັດພິມ ພ.ສ. ໒໔໖໑.

ຄອນຫວາຣາວະດີ ສືອບທະຍານທາດີລິກພິພົນພິພຣັຕນ໌ ຣາຊບຸຣີຣົມຍ໌ສອນ ດັ່ງອຸພັນນະຫານະຄອນບ່ວອນ ຣາຊທານີ ສີສຸທາກທາກເປັນສຸພັນປັຕຕິເຣກ ເອກສັນ ທະອັນມັນບັ້ງຊຶ່ງກັນ ແຕ່ພຣະມຫາກຣະສັຕຣທີຣາຊ ແຕ່ໃນກາລກ່ອນສືບ ໆ ມາດັ່ງກຸງສີອບຸທະຍາກໍເກີດ ເປັນແຕ່ເວນກັນ ບ້ານເມືອງ ຈຶ່ງຂາດເສັ້ຍທາງພຣະຣາຊ ໄມຕຣີ ດັ່ງຂ້າກະບົຖໃນຂອບຂັນທເສມາກຸງສີສັຕນາ ຄນະຫຸດ ກໍເກີດຂັດສິນຊອກທາງມິໄດ້ຂາດເຖິງມືເຈົ້າ ພຍານະຄອນຣາຊສີມາ ກໍໄດ້ເຂົ້າຊິດຊ່ວຍກະທຳການ ຊ່ວຍເອົາຣາຊພ້ອມກັບຟາດດີເສັ້ຍບ້າງຂ້າກະບົຖນັ້ນ ກໍ ຈຶ່ງປຣາໄຊຍໄປບ້າງຕ້ອງປູ່ດອນມິດແດງ ດັ່ງພຣະຣາຊ ໄມຕຣີ ຈຶ່ງເປັນຫວະຫວ່າງ ຈຶ່ງແຈ້ງວ່າພຣະມຫາກະ ສັຕຣາທີຣາຊບ້າງຕ້ອງປູ່ປັກໄຄນະທະວໍຣະພຸທະສາສນາ ແລະຣັສະດາປະຊາຣາສດອນຂ້າໄພ່ດັ່ງນັ້ນ ຈຶ່ງໄດ້ຊົງ ພຣະຣາຊຈິນດາປຣາໂມທ ເຖິງທຳນອງຄອງພຣະຣາຊ ປຣະເພນີບໍ່ໃຫ້ຂາດຣາຊໄມຕຣີ ຈຶ່ງໄດ້ເປລີຕາຣາຊທູຕ ພຣະຍາໄຊຊົງບົສ ທິສບຸຣີ ພຣະຍາສີ ຣັຕນາທີເດຊ

ໄມຕຣີ ຈຳທູລ ພຣະສຸພັນນບັຕຣ ນຳ ຣາຊສານແລະເຄື່ອງ
ມົງຄົລບັນນາການມາວັຕນະສວັສດາ ສົມເດັດພຣະ
ມຫາກຣະສັຕທິຣາຊເຈົ້າ ໃນກຸງສີອຍຸທະຍາມຫາດິລົກ
ພົພນົພຣັຕນ໌ຣາຊທານີບຸຣີຣົມຍ໌ ເພື່ອໃຫ້ຂອດພັນທະ
ມິຕຣ ສນິທ ສເນ່ຫາ ຊຶ່ງ ພຣະມຫາ ກຣະສັຕຣາ ທິຣາຊ
ສືບ ໆ ມາ ກິຈຣາຊການກຸງສີສັຕນາຄນະຫຸຕ ຫາກ
ເກີດມີເບື້ອງໃດ ກໍ່ຢ່າໃຫ້ ກຸງເທພ ມຫານະຄອນ ປະວາງ
ກິຈຣາຊ ກຸງເທພ ມຫາ ນະຄອນ ຫາກ ເກີດມີ ເບື້ອງໃດ
ກຸງສີສັຕນາຄນະຫຸຕກໍບໍ່ປະວາງ ບັດປຣະການໜຶ່ງດັ່ງ
ເຈົ້າພຣະຍານະຄອນຣາຊສີມາ ອັນໄດ້ພາຂ້າໄພຣ່ເອົາ
ເຂົ້າມາຊ່ວຍ ຣາຊການ ດັ່ງນັ້ນ ຫາກແລ້ວ ຣາຊການ ໃນ
ກຸງສີສັຕນາຄນະຫຸຕ ເມື່ອໃດ ກໍ່ຈະໃຫ້ຄືນ ເມື່ອຕ້ອງບ້ານ
ເມືອງດັ່ງເກົ່າ ຊຶ່ງປະການໃດ ກຸງສີ ສັຕນາ ຄນະຫຸຕ
ແລະກຸງເທພມຫານະຄອນ ຈະເປັນ ເອກສັນທຈິຕ ສນິທ
ສເນ່ຫາ ຊຶ່ງພຣະມຫາກຣະສັຕຣາທິຣາຊເຈົ້າ ແຕ່ໃນ
ກາລເມື່ອກ່ອນ ໃຫ້ວໍຣະ ພຸທະ ສາສນາ ອະພັນມຫານະ
ຄອນຈັກໄຊຕນາ ນາວະບັນຈະ ວັສສະຫັສ ໄດ້ສຸຂາສມານຸ

ສຸຂບັ້ນ ໄວ້ໃນທີ່ປັນຍາພຣະເຈົ້າກຸງເທພມຫານະຄອນ ບໍວອນທວາຣາວດີ ສີອຍຸທະຍາ ມຫາດີລິກ ພິພບິພຣັດນ໌ ຣາຊທານີບຸຣີຣິມບ໌ຈົ້ງທຸກປຣະກາຣ ເສດັຈສຫັດະກຣ້າ ຄະໄນ ສຸໄສຍະຣາຊພັດະນາບຸສັນທິສັງກາສ ຣ້ອຍສາມ ສິບສອງຕົວເດືອນບີ ຂຶ້ນສິບຫ້າຄ່ຳ ວັນຈັນ.

໖. ພຣະຣາຊສານກຸງທົນບຸຣີ ເຖິງ ກຸງສີສັຕນາຄນະຫຸຕ

---

໑ ວັນ ໓ $\overset{໓}{໑}$ ໓ ຄ່ຳ ຈຸລສັກຣາຊ ໑໑໓໓ ປີເຖາະຕຣີ ນິສົກຊົງແຕ່ງພຣະຣາຊສານສຸພະອັກສອນ ຕອບແລ້ວ ຊົງພຣະກະຣຸນາ ດຳຣັສເໜືອເກລົ້າ ฯ ສັ່ງໃຫ້ພຣະ ສຸນທອນໄມຕຣີຣາຊຊຸນພິຈນາພິມົລຕຣີ ຫລວງພັກດີ ວາຈາ ອຸປທູຕຈຳທູລພຣະສຸພັນບັຕຣັຕນພຣະຣາຊ ສານ ແລະສຸພອັກສອນຂຶ້ນໄປຍັງກຸງສີສັຕນາຄນະຫຸຕ ໃນໃຈຄວາມນັ້ນວ່າ.

໑ ພຣະຣາຊສານ ສີສດີຣັກສ ສຸນທອນ ບໍວອນ ນິງ ກິລສກິລໂລເກສ ບໍວະເຣສ ຂຕນະ ສະສຣີ ຣັກສໄມຕຣີໃນ ສົມເດັດພຣະພຸທະເຈົ້າກຸງເທພມຫານະຄອນບໍວອນທະ ວາຣາວະດີສີອຍຸທະຍາມຫາດິລົກນົພຣັຕນ໌ຣາຊທານີບຸຣີ ຣົມຍ໌ ມີປະດິວາກະຍະພຣະຣາຊສານເປສິຕາກາຣ ໃຊ້ ໃຫ້ ພຣະສຸນທອນໄມຕຣີຣາຊ ຊຸນພິຈນາພິມົລຕຣີ ຫລວງພັກດີວາຈາ ອຸປທູຕ ຈຳທູລ ພຣະສຸພັນບັຕ ຣັຕນ ຣາຊສາຣບຳເຖື່ອງນິງດິລຣາຊບັນນາກາຣ ມາຈຳເຣີນ

ພຣະຣາຊສັດຍາບຸສັດບ໌ ແດ່ສົມເດັດພຣະເຈົ້າກຸງສີ
ສັດນາຄນະຫຸດ ສຸດທີ່ຣັດນະຣາຊທານີບຸຣີຣົມຍ໌ ດ້ວຍ
ພຣະເຈົ້າ ກຸງສີສັດນາຄນະຫຸດ ໃຊ້ໃຫ້ພຣະຍາໄຊຊົງບົສ
ທິສບຸຣີ ເປັນຣາຊທູດ ພຍາສີຣັດນາ ທີເດຊໄມຕຣີ ມາຈໍາ
ທູລພຣະສຸພັນບັດຣັດນະຣາຊສາຣ ແລະເຄື່ອງມົງຄົລ
ຣາຊບັນນາການ ມາຈໍາເຣີນພຣະຣາຊສັດຍາບຸສັດບ໌
ພາບພຣະຣາຊ ສັມພັນທະມິດຣໄມດຣີ ຕາມບູຣານຣາຊ
ປຣະເພນີ ຄັ້ນແຈ້ງໃນອັດຖະລັກສນະນັ້ນ ກໍ່ມີໃນພຣະ
ຣາຊກະມົລຫະຣີໄທໃຫ້ໂສສຸດ ອຸດົມໂສມນະນັດສາກາບ
ຍິນດີເປັນອັນຍິ່ງໜັກໜາ ດວນທີ່ຈະເປັນອັກຄະມິດສັນ
ທວະ ແຕ່ວ່າສົມເດັດພຣະເຈົ້າກຸງສີສັດນາຄນະຫຸດກໍ
ປະກອບດ້ວຍຂັດຕິບະວົງຊົງພິພົບອັນສູງໃຫຍ່ ແລະອັນ
ກຸງມຫານະຄອນສີອຍຸທະຍາທຸກວັນນີ້ ກໍອັບປາງຢູ່
ຈະຂໍໃຫ້ພຣະເຈົ້າກຸງສີສັດນາຄນະຫຸດຊ່ວຍທະນຸບໍາຣຸງ
ໃຫ້ເປັນສີສຸວັນປັດຕະພົດງວ ຈໍາເຣີນ ພຣະຣາຊວົງສືບໄປ
ເຖິງນາດວ່າ ຈະມີປັຈຈາມິດ ຂ້າເສິກມາປຣະການໃດໃນ
ກຸງສີອຍຸທະຍາ ກໍຈະເກຼງພຣະເດຊານຸພາບ ກຸງສີສັດນາ
ຄນະຫຸດ ເພາະພຣະເດຊະປົກເພື່ອເຈືອໄປ ແລະຊຶ່ງ
ມີປັຈຈາມິດຂ້າເສິກມາບຽດບຽນກຸງສີສັດນາຄນະຫຸດນັ້ນ

ກໍ່ຊິເປັນພາຣະທຸຣະແຫ່ງກຸງສີອຍຸທະຍາ ແລະຊຶ່ງ ຂ້າເສິກໄປຕັ້ງຢູ່ດອນມິດແດງ ແລະຈະຂໍເຈົ້າພຣະຍາ ນະຄອນຣາຊສີມາໄວ້ຊ່ວຍ ຣາຊການນັ້ນ ກໍ່ແລ້ວແຕ່ພຣະ ຣາຊດຳຣິຫ໌ ສົມເດັດ ພຣະເຈົ້າ ກຸງສີສັຕນາຄນະຫຸຕເຖິດ ແຕ່ວ່າຖ້າເຫັນຈະໄດ້ຝ່າຍດຽວຈຶ່ງກະທຳການ ຖ້າເຫັນ ຈະໄດ້ສ່ວນໜຶ່ງສອງສ່ວນຈະເສັຽ ແຕ່ສ່ວນໜຶ່ງກໍ່ຢ່າໃຫ້ ກະທຳໄວ້ພາຣະທຸຣະກຸງສີອຍຸທະຍາຈະໄດ້ກະທຳສືບໄປ ອັນໜຶ່ງຊຶ່ງຣາຊການບ້ານເມືອງກຸງສີອຍຸທະຍາທຸກວັນນີ້ ເດີນມີລີປູຕ້າທັງອັຄມະຫາເສນາທີ່ບໍ່ມີສົມເດັດພຣະເຈົ້າ ກຸງຕ້າລີງຜູ້ໃຫຍ່ ນະເມືອງກຸງຈີນເຂົ້າມາເຖິງກຸງສີອຍຸ ທະຍາວ່າໃຫ້ເຣັດແຜນທີ່ທ່າທາງ ຊຶ່ງຈະໄປກຸງອັງວະ ນັ້ນສົ່ງອອກໄປ ແລະມີເນື້ອຄວາມວ່າພະມ້າຍົກກອງທັບ ມາ ເມືອງສີສວນ ເມືອງຫ້ວຍຫລຳ ປາຍແດນ ກຸງຈີນ ໆ ຣົບພຸ່ງພະມ້າແຕກກລັບໄປ ຝ່າຍກອງທັບຈີນຍົກໄປ ຕິດແວ່ນແຄວ້ນ ກຸງອັງວະຢູ່ ແລ້ວຈະຂໍໃຫ້ກອງທັບ ຈີນມາຂຶ້ນນະກຸງສີອຍຸທະຍາອີກທາງໜຶ່ງນັ້ນໄດ້ມີໜັງສື ອອກໄປ ແຕ່ກ່ອນວ່າຂັດສົນດ້ວຍເຂົ້າປາອາຫານ ແລະ ບັດນີ້ພະມ້າມາກະທຳແກ່ເມືອງຖລາງ ເມືອງກາບບຸຣີ ເມືອງ ສີສະວັດ ເມືອງ ອຸໄທ ທານີ ເມືອງ ສວັນຄະໂລກ

ເມືອງພິໄຊ ປາກໄຕ້ ຝ່າຍເໜືອຕາວັນຕົກຕາວັນອອກຊຶ່ງ ຂຶ້ນແກ່ກຸງສີຣຍຸທະຍາ ກອງທັບ ຫົວເມືອງ ດີ ກອງທັບ ພະມ້າແຕກເລີກໄປ ຝ່າຍກຸງສີອຍຸທະຍາຍັງບໍ່ໄດ້ຈິດຝີມື ດູຄວາມຄິດປຣະກາຣໃດຫາມິໄດ້ ຈຶ່ງສເດັດພຣະຣາຊ ດຳເນີນ ຍົກກອງທັບ ຂຶ້ນໄປ ຈິດຝີມື ດູຄວາມຄິດພະມ້າທີ່ ເມືອງຊຽງໃໝ່ ບັດນີ້ ເຫັນແຈ້ງ ຢູ່ແລ້ວ ພໍກະທຳ ຕອບ ແທນ ແກ່ກຸງອັງວະໄດ້ຝ່າຍດຽວ ແລະບັດນີ້ເຂົ້າປາ ອາຫາຣພໍມີຢູ່ແລ້ວ ແລະຈະໃຫ້ມີສຸພະອັກສອນອອກ ໄປເຖິງ ລິບູຕ້າ ທັງອັກຄະ ມະຫາ ເສນາບດີ ໃຫ້ນຳເອົາ ກຣາບບັງຄົມທູລແດ່ສົມເດັດພຣະເຈົ້າຕ້າສິງຜູ້ໃຫຍ່ນະ ເມືອງກຸງຈີນ ໃຫ້ຍົກກອງທັບມາຂຶ້ນກຸງສີຣຍຸທະຍາ ໆ ກໍຈະເກນກອງທັບຍົກໄປກະທຳແກ່ກຸງອັງວະ ແຕ່ວ່າ ບັດນີ້ຂັດສົນດ້ວຍມ້າໄດ້ມີສຸພະອັກສອນຂຶ້ນມາດ້ວຍແຈ້ງ ຢູ່ແລ້ວ ເນື້ອຄວາມອັນອື່ນນອກກວ່ານີ້ມີມາໃນສຸພະອັກ ສອນ ເປັນຫລາຍ ປຣະກາຣ ແລ້ວ ປຣະກາຣໃດ ກຸງສີອຍຸ ທະຍາກັບກຸງສີ ສັດນາຄນະຫຸດ ຈະວັຖະນາກາຣຈຳເຣີນ ເປັນ ມະຫາມິຕຣ ສນິດສເນ່ຫາ ສືບໄປກໍໄວ້ໃນພຣະປີຊາ ບານ ແຫ່ງ ສົມເດັດພຣະເຈົ້າກຸງສີສັດນາຄນະຫຸດ ຈະມີ

ພຣະຣາຊດໍາຣິທີ່ໃຫ້ຊອບທຸກປຣະກາຣ ພຣະຣາຊສາຣ
ສມິທ ທິເປລີຕະ ພາວະພູມ ວາຣະວິລາ ຂະນາດກາລ
ປັກຂະ ທຸຕິຍະ ດິຖີຕະ ບຸລ ສັກຣາຊ ຣ້ອຍສາມ ລິບສາມ
ສັສະສັງວັດສະຣະຕິຣິບີສິກສີຣີລວັດດີທີຄາບຸສິນ.



ແຜນທີ່ລາວ ສມັຍລ້ານຊ້າງ